ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບົດສະຫຼຸບການເຄື່ອນໄຫວທຸລະກິດ ປະຈຳປີ 2019

ບົດລາຍງານການເຄື່ອນໄຫວປະຈຳປີ 2019
ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

I. ສະພາບລວມຂອງ ທຄຕລ

1. ວິໄສທັດ

ທຄຕລ ໄດ້ປັບປຸງວິໄສທັດຂອງຕົນຄືນໃໝ່ ເພື່ອພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: " ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ກ້າວສູ່ມາດຕະຖານສາກົນ".

2. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ແລະ ກ້າວສູ່ມາດຕະຖານສາກົນ, ພາລະກິດ ທີ່ສຳຄັນຂອງ ທຄຕລ ມີຄື: ພັດທະນາລະບົບບໍລິຫານອົງກອນທີ່ເຂັ້ມແຂງ ເນັ້ນການປັບປຸງທຸລະກິດທະນາຄານໃຫ້ ແທດເໝາະກັບສະພາບການປ່ຽນແປງໃນໄລຍະໃໝ່ ຖືເອົາການສ້າງວັດທະນະທຳຄຸ້ມຄອງບໍລິຫານຄວາມສ່ຽງໃຫ້ ເຂັ້ມແຂງ ແລະ ສອດຄ່ອງຕາມຫລັກການ Basel II, ຍົກສູງປະສິດທິພາບການດຳເນີນທຸລະກິດ, ສ້າງ ແລະ ພັດທະນາ ລະບົບຂໍ້ມູນຂ່າວສານບໍລິຫານທີ່ມີສັກກາຍະພາບ, ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ, ໄດ້ມາດຕະຖານສາກົນ ທາງ ດ້ານລະບົບລາຍງານ, ນຳໃຊ້ລະບົບເທັກໂນໂລຊີທີ່ທັນສະໄໝ ແລະ ຍົກລະດັບຄວາມຮູ້, ຄວາມຊ່ຽວຊານສະເພາະດ້ານ ໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ.

- **ເປົ້າໝາຍການດຳເນີນງານໃນປີ 2019**

ໃນການສືບຕໍ່ຈັດຕັ້ງຜັນຂະຫຍາຍພາລະກິດໄລຍະຍາວຂອງ ທຄຕລ ເພື່ອຮອງຮັບ ການປັບປຸງບໍລິການ ພັດທະນາ ລະ ບົບການຄຸ້ມຄອງບໍລິຫານ ໃນປີ 2019 ບັນດາວຽກງານຕົ້ນຕໍແມ່ນຍັງສືບຕໍ່ແຜນງານ 6 ແຜນງານຫລັກ (ຮັກສາ ເດີມ); 32 ໂຄງ ການໃຫຍ່ 273 ແຜນວຽກ. ປີນີ້ໄດ້ຮັບເອົາແຜນວຽກຍ່ອຍຂອງແຕ່ລະພາກສ່ວນເຂົ້າມາເພີ່ມຈຳນວນ 143 ແຜນວຽກຍ່ອຍ.

❖ **ບັນດາໂຄງການຂອງແຕ່ລະແຜນງານມີຄື :**

- ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຕະຖານສາກົນ: 3 ໂຄງການ ແລະ ມີ 4 ແຜນວຽກ.
- ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ປະຕິບັດຫຼັກເກນ ບາເຊ II ລວມມີ: 4 ໂຄງການ ແລະ ມີ 22 ແຜນ ວຽກ.
- ສ້າງລະບົບຂໍ້ມູນເພື່ອການບໍລິຫານ: 6 ໂຄງການ ມີ 40 ແຜນວຽກ.
- ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ ມີ: 5 ໂຄງການ ແລະ ມີ 47 ແຜນວຽກ.

- ການບໍລິຫານ ແລະ ພັດທະນາ ບຸກຄະລາກອນ ລວມມີ: 4 ໂຄງການ ແລະ ມີ 57 ແຜນວຽກ.
- ພັດທະນາການບໍລິຫານການເງິນ, ການບໍລິການທີ່ທັນສະໄໝ ແລະ ປະສິດທິພາບການດຳເນີນທຸລະກິດໃຫ້ສູງຂຶ້ນ : ມີ 10 ໂຄງການ ແລະ ມີ 103 ແຜນວຽກ.

ນອກຈາກໂຄງການຫຼັກນີ້ແລ້ວ, ຍັງຈະມີໂຄງການສະໜັບສະໜູນຕື່ມອີກຫລາຍໂຄງການຍ່ອຍເພີ່ມຕື່ມເຊັ່ນ: ລາຍງານກ່ຽວກັບວຽກງານ CG ເພື່ອສະເໜີຂໍທິດປັບປຸງການບໍລິຫານຕາມຫຼັກການ CG, ສືບຕໍ່ດຳເນີນການຄົ້ນຄວ້າຄວາມເປັນໄປໄດ້ໃນການສ້າງຫ້ອງການຕົວແທນ ທຄຕລ ໃນຕ່າງປະເທດ, ດຳເນີນການຂາຍຮຸ້ນ 19% ຂອງ ທຄຕລ ທີ່ກະຊວງການເງິນຖືຄອງ, ໂຄງການ ສືບຕໍ່ LOS, ບັນດາໂຄງການຍ່ອຍຂອງ Basel II, ໂຄງການທີ່ຕິດພັນບັນຊີແມ່ນ ການກະກຽມຄວາມພ້ອມໃນການ ຈັດຕັ້ງປະຕິບັດ IFRS 9, ໂຄງການຂອງການພັດທະນາຜະລິດຕະພັນ, ໂຄງການປຸກສ້າງ ແລະ ອື່ນໆ. ຊຶ່ງການເພີ່ມຂຶ້ນ ຫຼື ຫຼຸດລົງຂອງບັນດາໂຄງການ ແມ່ນສົມທຽບໃສ່ບັນດາແຜນຈັດຕັ້ງປະຕິບັດໂຄງການຂອງປີຜ່ານມາ.

II. ຖານະການເງິນ ແລະ ຜົນດຳເນີນງານ

1. ສະພາບເສດຖະກິດສາກົນ ແລະ ເສດຖະກິດພາຍໃນປະເທດ

➢ **ເສດຖະກິດສາກົນ ແລະ ພາກພື້ນ:**

ໃນປີ 2019 ສະພາບເສດຖະກິດໂລກຂະຫຍາຍໂຕຊ້າລົງຈາກທີ່ຄາດຄະເນໄວ້ຢູ່ໃນລະດັບ 3,3% ເປັນ 2,9%, ປັດໄຈທີ່ສົ່ງຜົນກະທົບມາຈາກຫຼາຍດ້ານ ເຊັ່ນຄວາມຂໍ້ຂັດແຍ່ງລະຫວ່າງສະຫະລັດອາເມລິກາ-ຈີນ, ຂໍ້ຂັດແຍ່ງດ້ານການເມືອງໃນຕາເວັນອອກກາງ, ຄວາມບໍ່ສະຫງົບພາຍໃນປະເທດເຊັ່ນ ຮອງກົ່ງ, ຜົນກະທົບຈາກໄພທຳມະຊາດ ແລະ ບັນຫາທາງດ້ານເສດຖະກິດ-ການເງິນຂອງຫຼາຍປະເທດ.

ເສດຖະກິດ ສປ ຈີນ ຂະຫຍາຍໂຕຊ້າລົງຈາກ 6,6% ເປັນ 6,1% ແລະ ໃນປີ 2020 ອາດຈະຂະຫຍາຍໂຕຊ້າລົ ງ 5,8% ເຊິ່ງຜົນກະທົບຕົ້ນຕໍ່ມາຈາກຂໍ້ຂັດແຍ່ງທາງການຄ້າກັບສະຫະລັດອາເມລິກາ ແລະ ນະໂຍບາຍຂອງລັດຖະບານໂດຍປັບປຸງໂຄງສ້າງເສດຖະກິດຈາກການສົ່ງອອກ ເປັນການກະຕຸ້ນການບໍລິໂພກພາຍໃນ ເພື່ອສ້າງຄວາມໝັ້ນຄົງທາງດ້ານເສດຖະກິດ.

ເສດຖະກິດໄທ ຂະຫຍາຍໂຕຊ້າລົງຈາກ 4,1% ເປັນ 2,9% ໃນປີ 2019. ເນື່ອງຈາກການສົ່ງອອກໄດ້ຮັບຜົນກະທົບຈາກສົງຄາມການຄ້າລະຫວ່າງ ສະຫະລັດອາເມລິການ ແລະ ສປ ຈີນ. ນອກຈາກນີ້, ການແຂງຄ່າຂອງເງິນບາດຍັງກະທົບຕໍ່ລາຍໄດ້ຈາກການສົ່ງອອກຂອງໄທ. ເຖິງຢ່າງໃດກໍ່ຕາມຂະແໜງທ່ອງທ່ຽວຍັງສືບຕໍ່ຂະຫຍາຍໂຕຢ່າງຕໍ່ເນື່ອງ.

- **ສະພາບເສດຖະກິດຂອງ ສປປ ລາວ**

ເສດຖະກິດລາວ ສືບຕໍ່ຂະຫຍາຍຕົວຊ້າລົງໃນລະດັບ 6,4% ເຊິ່ງຫຼຸດເປົ້າໝາຍທີ່ລັດຖະບານຄາດໄວ້ໃນລະດັບ 6,7%, ລາຍໄດ້ສະເລ່ຍຕໍ່ຄົນເທົ່າກັບ 2.683 ໂດລາສະຫະລັດ ເຊິ່ງຫຼຸດຄາດໝາຍທີ່ລັດຖະບານກຳນົດໄວ້ 2.726 ໂດລາສະຫະລັດ ສາເຫດມາຈາກຫຼາຍປັດໄຈ ຈາກເສດຖະກິດພາກພື້ນ ແລະ ສາກົນຂະຫຍາຍໂຕຊ້າລົງ, ໄພທຳມະຊາດ (ແຫ້ງແລ້ງ ແລະ ນ້ຳຖ້ວມ), ຫົວໜ່ວຍທຸລະກິດທີ່ສ້າງຖານລາຍຮັບແບບຍືນຍົງຍັງບໍ່ຫຼາກຫຼາຍ, ການຜະລິດບໍ່ສາມາດແຂ່ງຂັນຕ່າງປະເທດ, ການຂາດດຸນການຄ້າຕໍ່ເນື່ອງ, ການຄຸ້ມຄອງເງິນຕາຕ່າງປະເທດຍັງບໍ່ປະຕິບັດໄດ້ຢ່າງເຕັມຮູບແບບ.

ສ່ວນຂະແໜງອຸດສາຫະກຳຂະຫຍາຍໂຕຊ້າລົງຈາກ 7,7% ເປັນ 7,1% ເນື່ອງຈາກການຂະຫຍາຍໂຕຊ້າລົງຂອງຂະແໜງພະລັງງານໄຟຟ້າຈາກ 9% ເປັນ 6,1% ສາເຫດຍ້ອນປະລິມານນ້ຳບໍ່ພຽງພໍ ແລະ ໂຄງການໄຟຟ້າຄວາມຮ້ອນຫົງສາໄດ້ຢຸດການຜະລິດຊົ່ວຄາວ. ຂະແໜງການກໍ່ສ້າງຂະຫຍາຍຊ້າລົງ ເນື່ອງຈາກໂຄງການທາງດ່ວນແມ່ນຢູ່ໃນຊ່ວງບຸກເບີກ ແລະ ການກໍ່ສ້າງທາງລົດໄຟລາວ-ຈີນໄດ້ສຳເລັດພາກການກໍ່ສ້າງມາຫຼາຍແລ້ວ. ສຳລັບຂະແໜງກະສິກຳເຖິງແມ່ນຈະໄດ້ຮັບຜົນກະທົບຈາກໄພທຳມະຊາດ ແຕ່ໄດ້ຮັບແຮງຍູ້ຈາກການຂະຫຍາຍໂຕໃນຂະແໜງການລ້ຽງສັດ, ປ່າໄມ້ ແລະ ປະມົງ ສິ່ງຜົນໃຫ້ຂະຫຍາຍໂຕຈາກ 2,5% ເປັນ 2,8% ແລະ ລາຍຮັບຈາກພາສີ-ອາກອນເພີ່ມຂຶ້ນ ເນື່ອງຈາກການປະຕິຮູບການຈັດເກັບລາຍຮັບ ທັນເຂົ້າສູ່ລະບົບທັນສະໄໝຂຶ້ນ.

- **ອັດຕາເງິນເຟີ້** ເພີ່ມຂຶ້ນຈາກ 2,04% ເປັນ 3,32% ໃນປີ 2019 ສາເຫດຍ້ອນລາຄາສະບຽງອາຫານເພີ່ມຂຶ້ນ (ເຂົ້າ, ຜັກ, ຊີ້ນ) ເພີ່ມຂຶ້ນ ຍ້ອນໄພທຳມະຊາດ ແລະ ໂລກລະບາດໃນສັດ. ສະເພາະເງິນເຟີ້ໝວດສະບຽງອາຫານເພີ່ມຂຶ້ນຈາກ 1,2% ໃນໄຕຣມາດ4/2018 ເປັນ 9,8% ໃນໄຕຣມາດ4/2019 ເນື່ອງຈາກການອ່ອນຄ່າຂອງເງິນກີບ/ບາດ ເນື່ອງຈາກລາວນຳເຂົ້າສິນຄ້າຈາກໄທກວມ 60% ຂອງການນຳເຂົ້າທັງໝົດ.
- ອັດຕາແລກປ່ຽນກີບ/ໂດລາສະຫະລັດໃນປີ 2019 ທຽບໃສ່ປີ 2018 ເພີ່ມຂຶ້ນສະເລ່ຍ **3,4% ຈາກ 8.407 ກີບ/ໂດລາ ເປັນ 8.690,7 ກີບ/ໂດລາ.** ສ່ວນຕ່າງອັດຕາແລກປ່ຽນລະຫວ່າງຕະຫຼາດນອກ ແລະ ທະນາຄານທຸລະກິດສະເລ່ຍ +2,54%. ສຳລັບເງິນກີບທຽບໃສ່ເງິນບາດເຫັນວ່າອ່ອນຄ່າສະເລ່ຍ **8,22% ຈາກ 264,2 ກີບ/ບາດ ເປັນ 285,6ກີບ/ບາດ** ເຊິ່ງສ່ວນຕ່າງລະຫວ່າງຕະຫຼາດນອກ ແລະ ທະນາຄານທຸລະກິດປະມານ 0,8% ຜ່ານການຕິດຕາມຂໍ້ມູນເຫັນວ່າອັດຕາແລກປ່ຽນ ກີບ/ບາດມີການເໜັງຕີງສູງເຊິ່ງສາເຫດສາມາດສັງລວມໄດ້ດັ່ງນີ້:

- ຄວາມຕ້ອງການເງິນບາດໃນລາວມີສູງເນື່ອງຈາກນຳເຂົ້າສິນຄ້າກວມຫຼາຍກວ່າ 50% ຂອງການນຳເຂົ້າ.
- ການຊື້ຂາຍສິນຄ້າ-ບໍລິການບາງປະເພດ ເປັນເງິນບາດ ໂດຍສະເພາະການຊື້-ຂາຍ ທີ່ດິນ ສິ່ງຜົນໃຫ້ຄວາມຕ້ອງການເງິນບາດສູງຂຶ້ນ.
- ນັກລົງທຶນຫັນມາຖືຄອງເງິນບາດຫຼາຍກວ່າເງິນຂອງປະເທດອື່ນ ເນື່ອງຈາກມີຄວາມຜັນຜວນໜ້ອຍສິ່ງຜົນໃຫ້ເງິນບາດທຽບໃສ່ໂດລາແຂງຄ່າໃນຕ່າງປະເທດ ແລະ ກະທົບຕໍ່ອັດຕາແລກປ່ຽນໃນລາວຢ່າງຫຼີກລ່ຽງບໍ່ໄດ້.

2. ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ທຄຕລ

ໃນໄລຍະ 01 ປີທີ່ຜ່ານມາ ທຄຕລ ໄດ້ປະຕິບັດວຽກງານພົ້ນເດັ່ນຄື: ສຳເລັດການຈັດກອງປະຊຸມສະພາບໍລິຫານຂອງ ທຄຕລ ຈຳນວນ 7 ຄັ້ງ; ກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2018 ຈຳນວນ 1 ຄັ້ງ, ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ 4 ຄັ້ງ, ເປີດເຜີຍມະຕິກອງປະຊຸມສະພາບໍລິຫານ, ປົດລາຍງານຜົນການດຳເນີນທຸລະກິດຂອງ ທຄຕລ ຜ່ານລະບົບເປີດເຜີຍຂອງຕະຫຼາດຫຼັກຊັບລາວ. ເຊັນສັນຍາວ່າດ້ວຍການບໍລິການດ້ານການເງິນ ແລະ ຈຳໜ່າຍຮຸ້ນ ທຄຕລ 19% ຂອງກະຊວງການເງິນລະຫວ່າງ ທຄຕລ ກັບ ບໍລິສັດຫຼັກຊັບລາວ-ຈີນ ຈຳກັດ, ພ້ອມທັງສຳເລັດ

ການດຳເນີນການຂາຍຮຸ້ນອອກສູ່ສັງຄົມຈຳນວນ 10% ຕາມເວລາທີ່ກຳນົດ. ສຳເລັດແຍກພະແນກຄຸ້ມຄອງສິນເຊື່ອ ອອກເປັນ 3 ພະແນກຄື: ພະແນກປະຕິບັດການສິນເຊື່ອ, ພະແນກຂາຍຜະລິດຕະພັນສິນເຊື່ອ, ພະແນກບໍລິຫານສິນເຊື່ອ ແລະ ສ້າງຕັ້ງພະແນກນິຕິກຳ.

ທຄຕລ ເຂົ້າເປັນສະມາຊິກໂດຍກົງຂອງ AMEX; ມີການອອກຜະລິດຕະພັນໃໝ່ BCEL MasterCard; ຮ່ວມມືກັບ SwiftPass ໃນການບໍລິການຊຳລະເງິນດ້ວຍ WeChat ແລະ AliPay; ຮ່ວມມືກັບ ທະນາຄານເອັສທີ ຈຳກັດວ່າດ້ວຍການຊຳລະຄ່າທຳນຽມທາງ, ພາສີທີ່ດິນ ແລະ ຮ່ວມມືກັບຢູນຽນເພສາກົນ UPI ຄັ້ງທຳອິດໃນ ສປປ ລາວ ໃນການໃຫ້ບໍລິການຊຳລະສະສາງຜ່ານ QR CODE UnionPay, ຮ່ວມມືກັນລະຫວ່າງ ທະນາຄານທະນາຊາດ ແລະ ທຄຕລ ນຳສະເໜີວິທີຊຳລະສະສາງຂ້າມຊາຍແດນດ້ວຍລະບົບ QR Code ໃນໂທລະສັບມືຖືຄັ້ງທຳອິດໃນງານ ASEAN Payment Connectivity Exhibition, ພັດທະນາຜະລິດຕະພັນ BCEL One ເພື່ອໃຫ້ລູກຄ້າອອກບັດ MasterCard Prepaid ແລະ ພັດທະນາລະບົບຖອນເງິນສົດໂດຍບໍ່ໄດ້ນຳໃຊ້ບັດ (QR Cardless Withdrawal) ຢູ່ຕູ້ ເອທີເອັມ. ລວມທັງເປັນໜຶ່ງໃນທະນາຄານທີ່ໄດ້ຮ່ວມ ທຶນສ້າງຕັ້ງ ບໍລິສັດ ລາວເນເຊິນນໍເພເມັ້ນເນັດເວີກ ຈຳກັດ (LAPNET) ພາຍໃຕ້ການນຳພາຂອງ ທະນາຄານແຫ່ງ ສປປ ລາວ ຮ່ວມກັບອີກ 6 ທະນາຄານໃນລາວ ແລະ ຜູ້ຖືຮຸ້ນ ຕ່າງປະເທດຄື: ບໍລິສັດ ຢູນຽນເພ ສາກົນ. ພ້ອມດຽວກັນຜະລິດຕະພັນ BCEL Road Tax ກໍ່ສາມາດຍາດ ລາງວັນ ICT AWARD 2019 ຮອງຊະນະເລີດລະດັບປະເທດ ແລະ ລາງວັນຊະນະເລີດລະດັບອາຊຽນ, ພັດທະນາໂຄງການ Smart VAT Phase II ແລະ ເຊື່ອມລະບົບ ບ 53 ການຊຳລະຄ່າທຳນຽມນຳເຂົ້າລົດຊົ່ວຄາວຂອງຄົນຕ່າງປະເທດໃຫ້ແກ່ ກົມພາສີ ເພື່ອໃຫ້ສາມາດຊຳລະຢູ່ຕູ້ບໍລິການອັດຕະໂນມັດ ທີ່ຂົວມິດຕະພາບລາວ-ໄທ 1. ລວມນຳມີການເຊັນສັນຍາ Bill payment ກັບສະຖາບັນການເງິນ ແລະ ບໍລິສັດຕ່າງໆ 8 ພາກສ່ວນ. ພ້ອມກັນນັ້ນ, ເພື່ອພັດທະນາຮອງຮັບການ ຂະຫຍາຍຕົວດ້ານວຽກງານບໍລິການໃນອານາຄົດ ທຄຕລ ໄດ້ເຊັນສັນຍາການຮ່ວມມືພັດທະນາລະບົບຄຸ້ມຄອງ ທະນາຄານໃໝ່ ຮ່ວມກັບ ບໍລິສັດ ໄຮຊັນ ເຕັກໂນໂລຊີ ໂຮລດິງ ຈຳກັດ

ເພື່ອເຮັດໃຫ້ວຽກງານການບໍລິການໄດ້ບໍລິການສັງຄົມຢ່າງທົ່ວເຖິງ ແລະ ຫຼຸດຜ່ອນຄວາມແອອັດໃນວັນລັດຖະ ການ ທຄຕລ ໄດ້ເປີດບໍລິການໃນວັນເສົາ-ທິດ ໂດຍເນັ້ນໃສ່ໜ່ວຍບໍລິການທີ່ມີບໍລິມາດການບໍລິການຫຼາຍຈຳນວນ 5 ໜ່ວຍໃນເບື້ອງຕົ້ນກ່ອນຄື: ໜ່ວຍບໍລິການໄອເຕັກ, ໜ່ວຍບໍລິການຕະຫຼາດເຊົ້າ; ໜ່ວຍບໍລິການສີໄຄ, ໜ່ວຍບໍລິການ ທົ່ງຈະເລີນ ແລະ ໜ່ວຍບໍລິການຕະຫຼາດໃໝ່ປາກເຊ. ນອກຈາກນັ້ນ, ຍັງໄດ້ປ່ຽນຊື່ໜ່ວຍບໍລິການໄຊເສດຖາ (ຊື່ເດີມ) ທີ່ຂຶ້ນກັບສາຂາໄຊເສດຖາ ປ່ຽນມາເປັນ **ໜ່ວຍບໍລິການຮ່ອງແກ** (ຊື່ໃໝ່).

3. ຂໍ້ມູນການທາງດ້ານການເງິນທີ່ສຳຄັນຂອງ ທຄຕລ

ໃນໄລຍະ ປີ 2019 ທີ່ຜ່ານມາ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ອອກແຮງສູ້ຊົນ ດຳເນີນທຸລະ ກິດ ຕາມແຜນການທີ່ໄດ້ຖືກຮັບຮອງຈາກກອງປະຊຸມສາມັນຜູ້ຖືຮຸ້ນ ຊຶ່ງ ທຄຕລ ສາມາດຈັດຕັ້ງປະຕິບັດຕົວເລກ ການດຳເນີນທຸລະກິດ ຕາມມາດຕະຖານສາກົນ ສັງລວມກິດຈະການ ຜ່ານການກວດສອບ ມີບາງຕົວເລກທີ່ສຳຄັນດັ່ງ ລຸ່ມນີ້:

- **ຍອດຊັບສິນ:** ປະຕິບັດໄດ້ 46.626.704 ລ້ານກີບ, ເທົ່າກັບ 109% ຂອງແຜນການປີ, ທຽບໃສ່ໄລຍະດຽວ ກັນຂອງປີຜ່ານເທົ່າກັບ 120 %

- **ยอดໜີ້ສິນ:** ປະຕິບັດໄດ້ 44.457.018 ລ້ານກີບ, ເທົ່າກັບ 110% ຂອງແຜນການປີ, ທຽບໃສ່ໄລຍະດຽວກັນຂອງປີຜ່ານເທົ່າກັບ 120 %

- **ທຶນທັ້ງໝົດ:** ປະຕິບັດໄດ້ 2.169.686 ລ້ານກີບ, ເທົ່າກັບ 87% ຂອງແຜນການປີ, ທຽບໃສ່ໄລຍະດຽວກັນຂອງປີຜ່ານເທົ່າກັບ 107%

- **ຍອດເງິນຝາກ**: ປະຕິບັດໄດ້ 40.002.840 ລ້ານກີບ, ເທົ່າກັບ 112% ຂອງແຜນການປີ, ທຽບໃສ່ໄລຍະດຽວກັນຂອງປີຜ່ານເທົ່າກັບ 121 %

- **ຍອດສິນເຊື່ອທັ້ງໝົດ**: ປະຕິບັດໄດ້ 26.987.990 ລ້ານກີບ, ເທົ່າກັບ 104% ຂອງແຜນການປີ, ທຽບໃສ່ໄລຍະດຽວກັນຂອງປີຜ່ານເທົ່າກັບ 111 %

- **ກຳໄລ/ຂາດທຶນ**: ທຄຕລ ມີກຳໄລກ່ອນອາກອນ 462.762 ລ້ານກີບ, ເທົ່າກັບ 82% ຂອງແຜນການປີ, ທຽບໃສ່ໄລຍະດຽວກັນຂອງປີຜ່ານເທົ່າກັບ 108%

III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນບາງດ້ານ ຂອງ ທຄຕລ

- **ທີ່ຕັ້ງ ແລະ ເຄືອຂ່າຍ**

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ທັນວາ 2019 ທະນາຄານມີ (1) ສຳນັກງານໃຫຍ່, (1) ບໍລິສັດໃນເຄືອ, (5) ບໍລິສັດຮ່ວມທຶນ, (20) ສາຂາຫລັກ, (93) ໜ່ວຍບໍລິການ ແລະ (15) ຫ້ອງແລກປ່ຽນເງິນຕາ ທົ່ວ ສປປ ລາວ.

- **ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງ ທຄຕລ**
    - ເບີໂທ (+856-21) 213200 ຫຼື ໂທ 1555
    - ແຟັກ (+856-21) 213202
    - ອີເມວ: bcelhqv@bcel.com.la
    - ເວັບໄຊ: www.bcel.com.la
- **ປະຫວັດຄວາມເປັນມາໂດຍຫຍໍ້ ຂອງ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະ

ກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ພ້ອມດຽວກັນນັ້ນ, ກະຊວງການເງິນໄດ້ຕາງໜ້າໃຫ້ລັດຖະບານເປັນຜູ້ຖື ຮຸ້ນໃຫຍ່ສຸດໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ໃຫ້ຄູ່ຮ່ວມຍຸດທະສາດ ຊື່ວ່າທະນາຄານ COFIBRED ອີງຕາມສັນຍາການຊື້-ຂາຍຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 70% ຮຸ້ນ, ນັກລົງທຶນພາຍໃນ (ລວມທັງ ພະນັກ ງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດ 20% ແລະ ຄູ່ຮ່ວມຍຸດທະສາດ 10%.

ໃນວັນທີ 17 ສິງຫາ 2017 ທຄຕລ ໄດ້ສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ຂາຮຸ້ນໃໝ່ ເພື່ອເພີ່ມທຶນຈົດ ທະບຽນ. ທະນາຄານໄດ້ຮັບຂໍ້ຕົກລົງສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍທະນາຄານ ແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017 ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນຈຳ ນວນ 355.728.500.000 ກີບ (71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃຫມ່ ເລກທີ 0429/ຫຈທ, ລົງວັນທີ 18 ພຶດສະພາ 2018 ອອກ ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ເຊັນອະນຸມັດໃຫ້ທະນາຄານປັບປຸງ ໂຄງສ້າງຜູ້ຖືຮຸ້ນໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນ ຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜູນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ພ້ອມດຽວກັນນັ້ນໃນວັນທີ 29 ພະຈິກ 2019 ສຳນັກງານຄະນະກຳມະການຄຸ້ມ ຄອງຫຼັກຊັບໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳ ເລັດ.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນ ໄລຍະສັ້ນ, ກາງ ແລະ ຍາວ ຈາກນິຕິບຸກຄົນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາ ຕ່າງປະເທດ, ບໍລິການ ຊຳລະສະສາງ, ການບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ ບໍລິການຊື້ຂາຍອັດຖຸມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບເປັນຕົ້ນ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ທັນວາ 2019 ແມ່ນ 1.038.617 ລ້ານກີບ (31 ທັນວາ 2018 : 1.038.617 ລ້ານກີບ)

IV. ໂຄງຮ່າງການຈັດຕັ້ງ ສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງຄະນະກຳມະການຂຶ້ນກັບສະພາບໍລິຫານ

1. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

1.1 ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະກອບດ້ວຍ 7 ທ່ານ:

- ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ ເປັນປະທານ
- ທ່ານ ຄຳສຸກ ສູນດາລາ ເປັນຮອງປະທານ
- ທ່ານ ພູຂົງ ຈັນທະຈັກ ເປັນສະມາຊິກ
- ທ່ານ ມາກ ໂຮເບີດ ເປັນສະມາຊິກ
- ທ່ານ ພຸດທະຂັນ ຂັນຕີ ເປັນສະມາຊິກ
- ທ່ານ ຮອງສາດສະດາຈານ ປອ ພູເພັດ ກ້ຽວພິລະວົງ ເປັນສະມາຊິກ
- ທ່ານ ວຽງສຸກ ຈຸນທະວົງ ເປັນສະມາຊິກ

1.2. ປະຫວັດຫຍໍ້ຂອງສະພາບໍລິຫານ

- **ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ: ເປັນປະທານ**



- ວັນເດືອນປີເກີດ: 24/11/1966
- ສັນຊາດ : ລາວ
- ພາສາ : ລາວ, ອັງກິດ
- ຕຳແໜ່ງປະຈຸບັນ : ຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ, ກະຊວງການເງິນ
- ລະດັບການສຶກສາ: ປະລິນຍາເອກ, ປະລິນຍາໂທດ້ານເສດຖະສາດ ທີ່ມະຫາວິທະຍາໄລແຫ່ງຊາດອົດສະຕາລີ ປະເທດອົດ ສະຕາລີ, ປະລິນຍາໂທດ້ານບໍລິ ຫານທຸລະກິດທີ່ມະຫາວິທະຍາໄລທຳມະສາດ, ປະເທດໄທ, ປະລິນຍາຕີ, ປະລິນຍາໂທດ້ານຟີຊິກ ແລະ ເລຂາຄະນິດທີ່ມະຫາວິທະຍາໄລມິດສະກູ ປະເທດລັດເຊຍ.

- **ທ່ານ ຄຳສຸກ ສຸນດາຣາ: ຮອງປະທານສະພາບໍລິຫານ**



- ວັນເດືອນປີເກີດ: 03/06/1945
- ສັນຊາດ : ລາວ
- ພາສາ : ລາວ, ອັງກິ ດ, ຝຣັ່ງ
- ຕຳແໜ່ງ : ກຳມະການອິດສະຫຼະ
- ປະຫວັດການສຶກສາ: ມະຫາວິທະຍາໄລຈອດສ໌ທາວທີ່ນະຄອນວໍຊິງຕັນປະເທດສະຫະລັດອາເມລິກາ, ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍທີ່ເມືອງ ປານາ ປະເທດອິນເດຍ ແລະ ລະດັບປະລິນຍາຕີຈາກ ປະເທດ ອິດສະຕາລີ, ມະຫາວິທະຍາໄລນິວຊາວເວວ.

- **ທ່ານ ຣສຈ ປອ ພູເພັດ ກ້ຽວພິລາວົງ: ກຳມະການອິດສະຫຼະ**



- ວັນເດືອນປີເກີດ: 05/02/1974
- ສັນຊາດ : ລາວ
- ພາສາ : ລາວ, ອັງກິດ, ຍີ່ປຸ່ນ
- ຕຳແໜ່ງ : ຮອງຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ
- ລະດັບການສຶກສາ: ປະລິນຍາເອກເສດຖະສາດ, ມະຫາວິທະຍາໄລໂຄເບ, ປະເທດຍີ່ປຸ່ນປະລິນຍາໂທ ແລະ ປະລິນຍາຕີ ວິສະວະກຳໂຍທາ ມະຫາວິທະຍາໄລ ໂອສະກາ, ປະເທດຍີ່ປຸ່ນ

- **ທ່ານ ພຸດທະຂັນ ຂັນຕີ : ກຳມະການ**



- ວັນເດືອນປີເກີດ: 02/05/1970
- ສັນຊາດ : ລາວ
- ພາສາ : ລາວ, ຫວຽດນາມ ແລະ ລັດເຊຍ
- ຕຳແໜ່ງ : ຮອງຫົວໜ້າຄັງເງິນແຫ່ງຊາດ ກະຊວງການເງິນ
- ລະດັບການສຶກສາ: ປະລິນຍາໂທ ທີ່ ສະຖາບັນການເງິນຮ່າໂນ້ຍ, ສສ ຫວຽດນາມ ແລະ ມະຫາວິທະຍາໄລດາແກ້ດສະຕານ ອາດີດສະຫະພາບໂຊຫວຽດ

- **ທ່ານ ພູຂົງ ຈັນທະຈັກ : ກຳມະການ**



- ວັນເດືອນປີເກີດ: 17/06/1964
- ສັນຊາດ : ລາວ
- ພາສາ : ລາວ, ອັງກິດແລະ ຣັງກາລີ .
- ຕຳແໜ່ງ : ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ລະດັບການສຶກສາ: ຊັ້ນສູງທິດສະດີ ການເມືອງ ຈາກໂຮງຮຽນການເມືອງ- ການປົກຄອງ ແລະ ປະລິນຍາໂທ ດ້ານເສດຖະກິດການເງິນຈາກປະເທດ ຣັງກາລີ.

- **ທ່ານ ມາກ ໂຣເບີດ: ກຳມະການ**



- ວັນເດືອນ ປີເກີດ: 02 /09/1973
- ສັນຊາດ : ຝຣັ່ງ
- ພາສາ : ຝຣັ່ງ, ອັງກິດ
- ຕຳແໜ່ງ : ສະມາຊິກສະພາບໍລິຫານທະນາຄານ COFIBRED, ຕາງໜ້າທະນາຄານ COFIBRED ໃນນາມຄູ່ຮ່ວມຍຸດທະສາດ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
- ລະດັບການສຶກສາ : ປະລິນຍາເອກ ດ້ານເສດຖະສາດ ທີ່ມະຫາວິ ທະຍາໄລ ແຄລິ ຟໍເນຍ, ປະເທດ ສະຫະລັດອາເມລິກາ, ປະລິນຍາໂທດ້ານເສດຖະສາດສາກົນທີ່ມະຫາວິທະຍາໄລ Sciences PO Paris, ປະເທດຝຣັ່ງ, ປະລິນຍາຕີ ດ້ານເສດຖະສາດ ແລະ ການເງິນຈາກ ESSEC Paris-Business school, economics, finance. ປະເທດຝຣັ່ງ.

- **ທ່ານ ວຽກສຸກ ຈຸນທະວົງ: ກຳມະການ**



- ວັນເດືອນປີເກີດ: 15/08/1964
- ສັນຊາດ : ລາວ
- ພາສາ : ລາວ, ອັງກິດ ແລະ ເຊັກໂກ
- ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
- ລະດັບການສຶກສາ: ບໍລຸງທິດສະດີ ການເມືອງ 45 ວັນຈາກໂຮງຮຽນ ການເມືອງ - ການປົກຄອງ ແລະ ປະລິນຍາໂທ ສາຂາເສດຖະກິດການຄ້າຈາກສາທາລະນະລັດເຊັກ

2. ໂຄງຮ່າງການຈັດຕັ້ງຂອງຄະນະອຳນວຍການ

2.1 ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ: ປະກອບມີ 6 ທ່ານ

- ທ່ານ ຜູຍິ ຈັນທະຈັກ ຜູ້ອຳນວຍການໃຫຍ່
- ທ່ານ ລາໃຈ ຄັນພຣະວົງສ໌ ຮອງຜູ້ອຳນວຍການ
- ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ
- ທ່ານ ສຸພັກ ຖິ່ນໄຊພອນ ຮອງຜູ້ອຳນວຍການ
- ທ່ານ ບົວວັນ ສີມະລີວົງ ຮອງຜູ້ອຳນວຍການ
- ທ່ານ ວຽງສຸກ ຈຸນທະວົງ ຮອງຜູ້ອຳນວຍການ

2.2 ໂຄງຮ່າງຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ



3. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

3.1 ກອງປະຊຸມສະພາບໍລິຫານ

ສະພາບໍລິຫານ ໄດ້ດຳເນີນກອງປະຊຸມຂອງຕົນເອງລວມທັງໝົດ 07 ຄັ້ງ ໂດຍສາມາດສັງລວມ ການ ເຄື່ອນໄຫວທີ່ສຳຄັນໄດ້ດັ່ງນີ້:

- ຮັບຮອງຜົນກວດສອບເອກະສານລາຍງານການເງິນ ປະຈຳປີ 2018 ແລະ ຜົນການທົບທວນເອກະສານລາຍງານ ການເງິນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2019.
- ຮັບຮອງຕົວເລກເງິນປັນຜົນປະຈຳປີ 2018 ຈຳນວນ 991 ກີບ/ຮຸ້ນ.
- ໄດ້ຮັບຮອງແຜນການຕ່າງໆປະຈຳປີ 2019
- ຮັບຮອງການຮ່ວມລົງທຶນສ້າງຕັ້ງບໍລິສັດ ລາວເມເຊັນ ເພເມັ້ນ ເມັດເວີກ ຈຳກັດ
- ຮັບຮອງນະໂຍບາຍການຄຸ້ມຄອງສ່ຽງສິນເຊື່ອ, ນະໂຍບາຍເງິນກູ້ SME ແລະ ລະບຽບວ່າດ້ວຍການປະຕິບັດ ນະໂຍບາຍຕໍ່ພະນັກງານ ທຄຕລ ສະບັບປັບປຸງ.
- ຮັບຮອງເອົາວິທີການຄຸ້ມຄອງການອະນຸມັດສິນເຊື່ອໄລຍະຍາວຂອງ ທຄຕລ ແລະ ນະໂຍບາຍການຄຸ້ມຄອງບໍລິຫານ ບັນຊີ Nostro-Vostro, ການຄຸ້ມຄອງບັນຊີລ່ວງໜ້າ-ລໍຖ້າ, ຄ້າງຮັບ, ຄ້າງຈ່າຍດອກເບ້ຍ, ບັນຊີນອກໃບລາຍ ງານຖານະການເງິນ ແລະ ການຄຸ້ມຄອງຄວາມສ່ຽງດ້ານດານສໍ້ລາດບັງຫຼວງ ຂອງ ທຄຕລ.
- ຕິດຕາມການຄຸ້ມຄອງການຈັດຕັ້ງປະຕິບັດ ແລະ ການລາຍງານຄວາມຄືບໜ້າຂອງໂຄງການລູກຄ້າສິນເຊື່ອລາຍ ໃຫຍ່ທີ່ຕິດພັນກັບເຂື່ອນໄຟຟ້າ ໃຫ້ມີການລາຍງານສະພາບໍລິຫານຢ່າງເປັນປະຈຳ ແລະ ພິຈາລະນາອະນຸມັດເງິນກູ້ ຕາມພາລະບົດບາດຂອງສະພາບໍລິຫານ.
- ຮັບຮອງການລາພັກຜ່ອນຂອງຮອງອຳນວຍການໃຫຍ່ ທຄຕລ ຈຳນວນ 1 ທ່ານ ເນື່ອງຈາກມີຄວາມຈຳເປັນດ້ານ ສຸຂະພາບ ແລະ ຮັບຮອງການຊັບຊ້ອນ ແຕ່ງຕັ້ງພະນັກງານ ຫຼາຍຕຳແໜ່ງງານ ພາຍໃນພະແນກ, ສູນ ແລະ ສາຂາ ທຄຕລ ທົ່ວລະບົບ.
- ຮັບຮອງເອົາການຍ້ອງຍໍບຸກຄົນ ແລະ ກົມກອງໃນໂອກາດວັນຫັນເປັນທະນາຄານທຸລະກິດຂອງ ທຄຕລ ຄົບຮອບ 30 ປີ.
- ຮັບຮອງເອົາຜູ້ກວດສອບອິດສະຫຼະຂອງ ທຄຕລ ປະຈຳປີ 2020

3.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການ ໄດ້ເອົາໃຈໃສ່ໃນການໃຫ້ຄຳແນະນຳໃນການຄົ້ນຄວ້າ ແລະ ກຳນົດບັນດາລະບຽບການ ແລະ ນະໂຍບາຍດ້ານການຄຸ້ມຄອງຄວາມສ່ຽງ ພ້ອມທັງໄດ້ພິຈາລະນາຮັບຮອງເອົາບັນດານະໂຍບາຍ ແລະ ກົດລະບຽບທີ່ ຕິດພັນກັບວຽກງານຄຸ້ມຄອງຄວາມສ່ຽງ ດັ່ງນີ້:

- ຕິດຕາມການຈັດລະດັບຄຸ້ມຄອງການບໍລິຫານຄວາມສ່ຽງດ້ານສິນເຊື່ອ, ຄວາມສ່ຽງດ້ານສະພາບຄ່ອງ, ຄວາມສ່ຽງດ້ານປະຕິບັດຕາມ ແລະ ເຫດການການສໍ້ໂກງພາຍໃນ ແລະ ພາຍນອກ ເປັນແຕ່ລະໄລຍະຢ່າງໃກ້ຊິດ.
- ຮັບຮອງນະໂຍບາຍບໍລິຫານຄວາມສ່ຽງດ້ານການສໍ້ລາດບັງຫຼວງ.
- ຕິດຕາມສັງລວມຄວາມສ່ຽງຫຼັກຂອງອົງກອນໃນດ້ານຕ່າງໆມີຈຳນວນ 14 ຕົວຊີ້ວັດຄວາມສ່ຽງ.
- ລາຍງານການປະເມີນຊ່ອງຫວ່າງ ແລະ ແຜນການປັບປຸງໂຄງສ້າງການຄຸ້ມຄອງບໍລິຫານຄວາມສ່ຽງຂອງ ທຄຕລ.
- ຄົ້ນຄວ້ານະໂຍບາຍ ແລະ ສິດຂອບເຂດໃນການອະນຸມັດຄຸ້ມຄອງສິນເຊື່ອ ເພື່ອຜ່ານສະພາບໍລິຫານຮັບຮອງຕາມຂັ້ນຕອນ.
- ຕິດຕາມຄວາມຄືບໜ້າຂອງບັນດາໂຄງການຕ່າງໆທີ່ໄດ້ດຳເນີນການ ແລະ ນອນຢູ່ໃນໂຄງການຂອງບາເຊ 2.
- ຄົ້ນຄວ້າວິເຄາະຄວາມສ່ຽງດ້ານເສດຖະກິດມະຫາພາກຂອງລາວທີ່ອາດຈະມີຜົນກະທົບຄວາມສ່ຽງຕໍ່ການດຳເນີນທຸລະກິດດ້ານທະນາຄານ.

3.3 ຄະນະກຳມະການກຳນົດຄ່າຕອບແທນ

ຄະນະກຳມະການໄດ້ເອົາໃຈໃສ່ໃນການຄົ້ນຄວ້າພິຈາລະນາຮັບຮອງເອົາລະບຽບນະໂຍບາຍ ຂອງ ທຄຕລ ແນ່ໃສ່ຜົນປະໂຫຍດຂອງ ທຄຕລ ແລະ ຜູ່ຖືຮຸ້ນ ຊຶ່ງຄະນະກຳມະການໄດ້ຄົ້ນຄວ້າບັນດາລະບຽບການຕ່າງໆ ເພື່ອໃຫ້ສາມາດນຳສະເໜີຮັບຮອງຕາມສະພາບໍລິຫານ ທຄຕລ ຕາມຂັ້ນຕອນຄື:

- ພິຈາລະນາຮັບຮອງລະບຽບວ່າດ້ວຍການຮັບພະນັກງານໃໝ່ສະບັບປັບປຸງໃໝ່ 2019
- ພິຈາລະນາຮັບຮອງລະບຽບວ່າດ້ວຍການປະຕິບັດນະໂຍບາຍຕໍ່ພະນັກງານ ທຄຕລ ສະບັບປັບປຸງ 2019.
- ພິຈາລະນາການສ້າງຄັງແຮສົມສະສົມຂອງພະນັກງານ ເວລາອອກການ.

3.4 ຄະນະກຳມະການຄຸ້ມຄອງບໍລິຫານ

- ຄະນະໄດ້ຕິດຕາມຊຸກຍູ້ໃຫ້ທິດຊີ້ນຳຜົນການດຳເນີນທຸລະກິດຂອງ ທຄຕລ ເປັນປະຈຳຢ່າງໃກ້ຊິດ ແລະ ຮັບຮອງຜົນການກວດສອບເອກະສານນະການເງິນ ທຄຕລ ປະຈຳປີ 2018, ຜົນການທົບທວນເອກະສານການເງິນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2019.
- ນຳສະເໜີສະພາບໍລິຫານເພື່ອຮັບຮອງການແບ່ງຄັງ ແລະ ເງິນປັນຜົນປະຈຳປີ 2018.
- ຮັບຮອງແຜນການປະຈຳປີ 2019, ບັນຫາສຳຄັນອື່ນໆ ເພື່ອສະເໜີສະພາບໍລິຫານ ແລະ ກອງປະຊຸມສາມັນຜູ້ຖືຮຸ້ນຮັບຮອງຕາມລຳດັບ.
- ຕິດຕາມ ແລະ ໃຫ້ທິດຊີ້ນຳວຽກງານການບໍລິຫານທຶນ, ບັນຫາດ້ານສະພາບຄ່ອງ, ການນຳໃຊ້ທຶນ ແລະ ການບໍລິຫານເງິນຕາຕ່າງປະເທດ ເປັນແຕ່ລະໄລຍະ.
- ຕິດຕາມການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດ, ແຜນຍຸດທະສາດປະຈຳປີ, ແຜນຍຸດທະສາດໄລຍະຍາວ 2016-2020 ແລະ ການປະຕິບັດແຜນງານ, ໂຄງການ ຕ່າງໆ.
- ຕິດຕາມຄຸ້ມຄອງການບໍລິຫານສິນເຊື່ອໃຫ້ມີຄຸນນະພາບ, ການຄຸ້ມຄອງຕິດຕາມລູກຄ້າລາຍໃຫຍ່, ການແກ້ໄຂໜີ້ NPL ຢ່າງໃກ້ຊິດ. ນອກນີ້ຍັງໄດ້ຊີ້ນຳໃຫ້ພາກສ່ວນກ່ຽວຂ້ອງໃນການຮ່າງນະໂຍບາຍໃນການອານຸມັດສິນເຊື່ອໄລຍະ

ຍາວຂອງ ທຄຕລ ແລະ ຮັບຮອງເອົາລະບຽບນະໂຍບາຍການໃຫ້ສິນເຊື່ອສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ການສ້າງຄູ່ມືການບໍລິຫານວຽກງານສິນເຊື່ອ ແລະ ຄູ່ມືການປະຕິບັດງານຂອງຂະແໜງຕ່າງໆ.

- ຕິດຕາມວຽກງານຈັດຕັ້ງ- ພະນັກງານ: ການຮັບພະນັກງານໃໝ່, ການຕິດຕາມການພັດທະນາ ຍົກລະດັບພະນັກງານ ການນຳໃຊ້ງົບປະມານໃນການພັດທະນາບຸກຄະລາກອນ ແລະ ການຄົ້ນຄວ້າສ້າງຫຼັກສູດການເຝິກອົບຮົມເພື່ອຮອງຮັບການຂະຫຍາຍຕົວຂອງວຽກງານແຕ່ລະດ້ານ.
- ຄົ້ນຄວ້າພິຈາລະນາຄັດເລືອກບໍລິສັດກວດສອບພາຍນອກ ປີ 2020 ຂອງ ທຄຕລ.
- ພິຈາລະນາຮັບຮອງຜົນການກວດສອບມາດຖານລາວ ແລະ ມາດຖານສາກົນ ໃນການກວດສອບຖານະການເງິນ ທຄຕລ ປະຈຳປີ 2018 ແລະ ປະຈຳ 06 ຕົ້ນປີ 2019.
- ຕິດຕາມການຄົ້ນຄວ້າປ່ຽນລະບົບ Core banking ໃໝ່ຂອງ ທຄຕລ
- ຕິດຕາມຄວາມຄືບໜ້າໂຄງການຂາຍຮຸ້ນ ທຄຕລ ບ້ວງ 19% ທີ່ກະຊວງການເງິນຖືຄອງ ແລະ ໂຄງການບາເຊ 2 ເປັນແຕ່ລະໄລຍະ.

3.5 ຄະນະກຳມະການຄັດເລືອກ

ຄະນະກຳມະການໄດ້ຄົ້ນຄວ້າພິຈາລະນາບຸກຄະລາກອນຂັ້ນຄະນະບໍລິຫານງານ ເພື່ອສະເໜີຂໍແຕ່ງຕັ້ງຕຳແໜ່ງງານ ໃໝ່ ແລະ ຊັບຊ້ອນໜູນວຽນບັນດາຕຳແໜ່ງງານ ຂອງ ທຄຕລ ໃຫ້ມີຄວາມເໝາະສົມສອດຄ່ອງກັບສະພາບໃນແຕ່ລະໄລຍະຢູ່ ພະແນກ, ສູນ ສຳນັກງານໃຫຍ່ ແລະ ສາຂາ ທຄຕລ ທົ່ວລະບົບ ລວມທັງໝົດ ຈຳນວນ 5 ຄັ້ງ ເພື່ອສະເໜີຂໍຮັບຮອງຈາກສະພາບໍລິຫານ ໃນການດຳເນີນງານ ແລະ ການຈັດຕັ້ງປະຕິບັດຕາມຂັ້ນຕອນ.

3.6 ຄະນະກຳມະການກວດສອບ

- ຕິດຕາມພະນັກງານໃນການປະຕິບັດລະບຽບ, ສິດ, ຂັ້ນຕອນ, ຕ້ອງເອົາໃຈໃສ່ໃນວຽກງານການກວດກາສຸກເສີນ, ເຝົ້າລະວັງບັນຫາຂໍ້ພົບເຫັນຕ່າງໆ ແລະ ການຕຳນິສິ່ງຂ່າວຈາກລູກຄ້າ, ເພື່ອໃຫ້ຮັບປະກັນ ແກ້ໄຂບັນຫາທັນການ. ຕິດຕາມການປະຕິບັດສິດການປ່ອຍສິນເຊື່ອຂອງສາຂາ ນຳໃຊ້ມາດຕະການແກ້ໄຂບັນຫາຕ່າງໆໃຫ້ເໝາະສົມ.
- ດຳເນີນການກວດກາປົກກະຕິ, ກວດກາສະເພາະກິດ ແລະ ກວດກາສຸກເສີນຂອງບັນດາພະແນກ, ສູນ ແລະ ສາຂາ ທຄຕລ.
- ດຳເນີນການຮ່າງຄູ່ມືການນຳໃຊ້ລະບົບ ACL ສະບັບປັບປຸງ
- ຕິດຕາມການຈັດຕັ້ງປະຕິບັດຄູ້ມືກວດກາພາຍໃນຮູບແບບໃໝ່ (IA)
- ສຳເລັດການປະສານງານໃນການອອກບົດກວດສອບຖານະການເງິນ ທຄຕລ ປະຈຳປີ 2018 ແລະ ປະຈຳ 06 ເດືອນ ຕົ້ນປີ 2019.
- ສຳເລັດການປະສານສະໜອງຂໍ້ມູນໃນການທົບທວນກ່ອນປິດບັນຊີປີ 2019 ພ້ອມທັງດຳເນີນການປະສານງານໃນການກວດສອບເອກະສານການເງິນຮ່ວມກັບພາກສ່ວນທີ່ກ່ຽວຂ້ອງເພື່ອກຳນົດການອອກບົດລາຍງານຕ່າງໆໃຫ້ສຳເລັດຕາມສັນຍາທີ່ກຳນົດໃວ້.
- ດຳເນີນການປະສານງານກັບອົງການກວດສອບແຫ່ງລັດ ໃນການເຊັນຮັບຮອງບົດບັນທຶກຜົນການກວດສອບ ທຄຕລ ໃນປີ 2018 .

- ດຳເນີນການປັບປຸງຮ່າງເອກະສານອ້າງອີງສຳລັບການກວດສອບຖານະການເງິນ ທຄຕລ ປີ 2020 ແລະ ເຫັນດີຄັດເລືອກບໍລິສັດກວດສອບພາຍນອກບໍລິສັດໃໝ່ໃນປີ 2020 ແລະ ສະເໜີຮັບຮອງຕາມລະບຽບການ.
- ຕິດຕາມການແກ້ໄຂຂໍ້ຄົ້ນພົບເຫັນຂອງຜູ້ກວດກາພາຍໃນ ແລະ ກວດສອບພາຍນອກຈາກການກວດສ່ວນທີ່ກ່ຽວຂ້ອງຢ່າງເປັນປົກກະຕິ ພ້ອມທັງລາຍງານໃຫ້ຄະນະບໍລິຫານງານຮັບຊາບ.

v. ຄວາມຮັບຜິດຊອບຕໍ່ສັງຄົມ:

1. ການມອບພັນທະຕ່າງໆ ຂອງ ທຄຕລ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ປະຕິບັດຕາມລະບຽບກົດໝາຍສ່ວຍສາອາກອນ ຊຶ່ງໄດ້ມອບພັນທະອາກອນຕ່າງໆໃຫ້ແກ່ລັດຖະບານ ໃນປີ 2019 ລວມເປັນຈຳນວນເງິນທັງໝົດ **152.014,63** ລ້ານກວ່າກີບ ມີລາຍລະອຽດລຸ່ມນີ້:

ຫົວໜ່ວຍລ້ານກີບ

ລຳດັບ	ເນື້ອໃນ	ປີ 2019	ປີ 2018
1	ອາກອນກຳໄລ	106.601.30	121.994,81
2	ອາກອນມູນຄ່າເພີ້ມ	9.492,17	2.606,88
3	ອາກອນລາຍໄດ້ພະນັກງານ	33.063,69	28.927,83
4	ອາກອນຊົມໃຊ້		11,65
5	ອາກອນກຳໄລນິຕິບຸກຄົນຜູ້ທີ່ບໍ່ມີພູມລຳເນົາ ຢູ່ ສປປ ລາວ	698,28	401,35
6	ອາກອນອື່ນໆ	2.159,19	
ລວມທັງໝົດ		**152.014,63**	**153.942,52**

2. ການມີສ່ວນຮ່ວມໃນວຽກງານສັງຄົມ ແລະ ອຸປະຖຳສັງຄົມ

ຄຽງຄູ່ກັບການດຳເນີນທຸລະກິດ ແລະ ປະຕິບັດວຽກງານດ້ານອື່ນໆໃນປີ 2019, ຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ທຄຕລ ທຸກຄົນ ລ້ວນແຕ່ໄດ້ເອົາໃຈໃສ່ໃນການປະກອບສ່ວນ ແລະ ມີສ່ວນຮ່ວມໃນໂຄງການຄວາມຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility ຫຼື CSR) ເຊິ່ງເປັນໜຶ່ງໃນບັນດາຄຸນຄ່າຫຼັກຂອງ ທຄຕລ ທີ່ໄດ້ກຳນົດໄວ້ຢູ່ໃນແຜນຍຸດທະສາດໄລຍະຍາວ 2016-2020. ໃນນັ້ນ, ມີບັນດາວຽກງານທີ່ພົ້ນເດັ່ນທີ່ສະແດງອອກແຕ່ລະດ້ານດັ່ງນີ້:

- ການນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝຂອງ ທຄຕລ ໃນການພັດທະນາຜະລິດຕະພັນມາຮັບໃຊ້ສັງຄົມ ເຊັ່ນ: BCEL OneHeart ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກ

ເງິນຊ່ວຍເຫຼືອສັງຄົມທີ່ອຳນວຍຄວາມສະດວກໃຫ້ທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໜັກໃຈບໍລິຈາກ ໃນປີ 2019 ທີ່ໄດ້ເປີດຮັບບໍລິຈາກ, ສາມາດລະດົມຈາກສັງຄົມໃນການຊ່ວຍເຫຼືອສັງຄົມໃນໂຄງການຕ່າງໆ ຈຳນວນ 778,93 ລ້ານກີບ ແລະ ທຄຕລ ໄດ້ທຶນຊ່ວຍເຫຼືອແຂວງພາກໃຕ້ທີ່ປະສົບໄພນ້ຳຖ້ວມພາກໃຕ້ ຈຳນວນ 600 ລ້ານກີບ (ລວມເປັນເງິນທັງໝົດໃນການຊ່ວຍເຫຼືອຈຳນວນ 1.378,93 ລ້ານກີບ).

- ການປະກອບສ່ວນໃນວຽກງານສັງຄົມ: ໃນປີຜ່ານມາ ພະນັກງານຂອງ ທຄຕລ ໄດ້ປະກອບສ່ວນເຂົ້າໃນຂະບວນການບໍລິຈາກເລືອດເພື່ອຊ່ວຍຊີວິດ, ຂະບວນການຍ່າງເພື່ອສຸຂະພາບ, ຂະບວນການຕ້ານໄພນ້ຳຖ້ວມ, ປູກຕົ້ນໄມ້, ຮັກສາສິ່ງແວດລ້ອມ (ນຳໃຊ້ເຈ້ຍສອງໜ້າ, ນຳໃຊ້ເຄື່ອງຜົມລຸ່ນປະຢັດ) ແລະ ຂະບວນການອະນາໄມອ້ອມຂ້າງສຳນັກງານຂອງຕົນ ເພື່ອໃຫ້ມີຄວາມສະອາດຈີບງາມ ເນື່ອງໃນວັນບຸນສຳຄັນຕ່າງໆຂອງຊາດຢ່າງເປັນປົກກະຕິ.
- ທຄຕລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຜ່ານຫຼາຍຮູບການ ເປັນຕົ້ນແມ່ນ ການອຸປະຖຳວຽກງານການສຶກສາ ແລະ ກິລາ, ຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ຊຸກຍູ້ວັນບຸນສຳຄັນຕ່າງໆຂອງຊາດ ແລະ ອື່ນໆ ດ້ວຍການມອບເງິນສົດ, ວັດຖຸອຸປະກອນຕ່າງໆ ຄິດເປັນຈຳນວນເງິນທັງໝົດຫຼາຍກວ່າ 1.17 ຕື້ກວ່າກີບ.

ຜູ້ອຳນວຍການໃຫຍ່

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຢິ ຈັນທະຈັກ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນສັງລວມກິດຈະການສຳລັບຈຸດປະສົງພິເສດ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານນັກກວດສອບອິດສະຫຼະ	4 - 9
ໃບລາຍງານຜົນການດຳເນີນງານໃນການທຸລະກິດສັງລວມກິດຈະການ	10 - 11
ໃບລາຍງານຜົນການດຳເນີນງານນອກການທຸລະກິດສັງລວມກິດຈະການ	12
ໃບລາຍງານຖານະການເງິນສັງລວມກິດຈະການ	13 - 14
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສັງລວມກິດຈະການ	15 - 17
ໃບລາຍງານກະແສເງິນສົດສັງລວມກິດຈະການ	18 - 19
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການ	20 - 82

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ໃນບົດລາຍງານສະບັບນີ້ ເອີ້ນວ່າ "ທະນາຄານ") ດຳເນີນທຸລະກິດໃນຮູບແບບ ມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ("ສປປ ລາວ").

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010, ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມ ໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າແຫ່ງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ຂອງຮຸ້ນທັງໝົດ (ທຽບເທົ່າກັບ 13.657.759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED ("COFIBRED"). ອີງຕາມສັນຍາການຊື້ຮຸ້ນສາມັນລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED, ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150.235.349.000 ກີບ ໄດ້ຖືກຈ່າຍເຕັມມູນຄ່າໂດຍ ທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນໂດຍການສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈຳນວນ 68.047.300 ຮຸ້ນ ແລະ ສາທາລະນະຊົນ ຈຳນວນ 3.098.400 ຮຸ້ນ ໃນຕະຫຼາດຫຼັກຊັບລາວເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນຈຳນວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0429/ERO, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານປັບໂຄງສ້າງຜູ້ຖືຮຸ້ນ ໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜຸນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ໃນວັນທີ 29 ພະຈິກ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2019 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	124.634.021	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	20.772.359	10%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດອື່ນໆ (*)	62.316.920	30%
	207.723.300	**100%**

(*) ແຕ່ລະບຸກຄົນທົ່ວໄປ ຫຼື ອົງກອນແມ່ນອະນຸຍາດໃຫ້ຖືຮຸ້ນໄດ້ສູງສຸດ 2% ຂອງຈຳນວນຮຸ້ນທັງໝົດ.

ຂໍ້ມູນທົ່ວໄປ (ຕໍ່)

ທະນາຄານ (ຕໍ່)

ກິດຈະກຳຫຼັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນຂອງທະນາຄານ ນະວັນທີ 31 ທັນວາ 2019 ແມ່ນ 1.038.617 ລ້ານກີບ (ວັນທີ 31 ທັນວາ 2018 : 1.038.617 ລ້ານກີບ).

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ທັນວາ 2019, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ຫ້າ (5) ບໍລິສັດຮ່ວມທຶນ, ຊາວ (20) ສາຂາຫຼັກ, ເກົ້າສິບສາມ (93) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2019, ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

ຊື່	*ສ້າງຕັ້ງພາຍໃຕ້ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ບໍລິສັດຫຼັກຊັບ ທຄຕລ - ມທ ຈຳກັດ	1079/ຫຈທ ລົງວັນທີ 10 ກໍລະກົດ 2019 ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ຫຼັກຊັບ	70%

ບໍລິສັດຮ່ວມທຶນ

ນະວັນທີ 31 ທັນວາ 2019, ທະນາຄານມີ ຫ້າ (05) ບໍລິສັດຮ່ວມທຶນຄື:

ຊື່	*ສ້າງຕັ້ງພາຍໃຕ້ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ	ເລກທີ 732/ຫຈທ ລົງວັນທີ 29 ສິງຫາ 2016 ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການທະນາຄານ & ການເງິນ	25%
ທະນາຄານ ລາວ - ຝຣັ່ງ ຈຳກັດ	ເລກທີ 124-10/ກຜລ4 ລົງວັນທີ 07 ກັນຍາ 2010 ໂດຍກະຊວງແຜນການ ແລະ ການລົງທຶນ	ການທະນາຄານ & ການເງິນ	30%
ບໍລິສັດ ປະກັນໄພ ລາວ - ຫວຽດ	ເລກທີ 0600 ລົງວັນທີ 16 ສິງຫາ 2013 ໂດຍ ກະຊວງ ອຸດສະຫະກຳ ແລະ ການຄ້າ	ປະກັນໄພ	35%
ທະນາຄານ ລາວ - ຈີນ ຈຳກັດ	ເລກທີ 041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ພະແນກຂຶ້ນທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ	ການທະນາຄານ & ການເງິນ	49%
ບໍລິສັດ ລາວເມເຊີນນໍ ເພເມັ້ນ ເມັດເອີກ ຈຳກັດ	ເລກທີ 0349/ຫຈທ ລົງວັນທີ 12 ມີນາ 2019 ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ	ການຄຸ້ມຄອງທຸລະກຳການຊຳລະສະສາງ (ເອເລັກໂທຣນິກ)	20%

ຂໍ້ມູນທົ່ວໄປ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ປອ ບຸນເຫຼືອ ສີນໄຊວໍລະວົງ	ປະທານ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ຄຳສຸກ ສຸນດາລາ	ຮອງປະທານ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ພູຂົງ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ມາກ ໂຮເບີດ	ສະມາຊິກ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ພຸດທະຂັນ ຂັນຕີ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018
ທ່ານ ຣສ. ປອ ພຸເພັດ ພິລະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018
ທ່ານ ວຽງສຸກ ຈຸນທະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 15 ມັງກອນ 2016
ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 6 ມີຖຸນາ 2008 ລາອອກວັນທີ 01 ເມສາ 2019
ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ2014
ທ່ານ ຄຳຊ່ຽນ ມິ່ງບຸບຜາ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 23 ພະຈິກ 2015 ລາອອກວັນທີ 26 ເມສາ 2019
ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 23 ພະຈິກ 2015
ທ່ານ ບົວວັນ ສີມະລີວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພະຈິກ 2016
ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 18 ກຸມພາ 2019

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນປີ ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ ແມ່ນທ່ານ ພູຂົງ ຈັນທະຈັກ — ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງທະນາຄານແມ່ນ ບໍລິສັດ ເອິນແອນຢັ້ງ ລາວ ຈຳກັດ.

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 60790273/21199783-IFRS/CS

ບົດລາຍງານນັກກວດສອບອິດສະຫຼະ

ຮຽນ: ຄະນະອຳນວຍການຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
ທະນາຄານແຫ່ງ ສ ປປ ລາວ; ແລະ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື

ຄຳເຫັນແບບມີເງື່ອນໄຂ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນສັງລວມກິດຈະການສຳລັບຈຸດປະສົງພິເສດ ("ເອກະສານລາຍງານການເງິນສັງລວມກິດຈະການ") ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ("ທະນາຄານ") ແລະ ບໍລິສັດໃນເຄືອ ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນສັງລວມກິດຈະການນະວັນທີ 31 ທັນວາ 2019, ໃບລາຍງານຜົນການດຳເນີນງານສັງລວມກິດຈະການ, ໃບລາຍງານຜົນການດຳເນີນງານນອກການທຸລະກິດສັງລວມກິດຈະການ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສັງລວມກິດຈະການ ແລະ ໃບລາຍງານກະແສເງິນສົດສັງລວມກິດຈະການ ສຳລັບປີທີ່ສິ້ນສຸດດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການ ລວມທັງບົດສະຫຼຸບຂອງນັບດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ຍົກເວັ້ນຜົນກະທົບຂອງບັນຫາທີ່ໄດ້ລະບຸໄວ້ໃນວັກ ພື້ນຖານການອອກຄຳເຫັນແບບມີເງື່ອນໄຂ ໃນບົດລາຍງານຂອງພວກຂ້າພະເຈົ້າ, ເຫັນວ່າເອກະສານລາຍງານການເງິນສັງລວມກິດຈະການ ຂອງທະນາຄານ ແລະ ບໍລິສັດໃນເຄືອສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019 ແມ່ນໄດ້ຖືກກະກຽມຢ່າງຖືກຕ້ອງຕາມ ນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນ ບົດອະທິບາຍເລກທີ 6 ຂອງເອກະສານລາຍງານການເງິນສັງລວມກິດຈະການ ໂດຍສອດຄ່ອງກັບຂໍ້ກຳນົດການລາຍງານຂອງ ທະນາຄານແຫ່ງ ສປປ ລາວ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ.

ພື້ນຖານໃນການອອກຄຳເຫັນແບບມີເງື່ອນໄຂ

ເອກະສານການເງິນສັງລວມກິດຈະການບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບການຕີມູນຄ່າຍຸຕິທຳ ທີ່ໄດ້ກຳນົດໄວ້ພາຍໃຕ້ ມາດຕະຖານສາກົນດ້ານການລາຍງານ IFRS 13 "ການຕີມູນຄ່າຍຸຕິທຳ" ແລະ ການຄຸ້ມຄອງຄວາມສ່ຽງທາງການເງິນທີ່ໄດ້ກຳນົດໄວ້ພາຍໃຕ້ ມາດຕະຖານສາກົນດ້ານການລາຍງານ IFRS 7: "ເຄື່ອງມືທາງການເງິນ: ການເປີດເຜີຍຂໍ້ມູນ".

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ. ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມ ໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບສຳລັບການກວດສອບເອກະສານລາຍງານການເງິນສັງລວມກິດຈະການ"* ໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເອກະລາດຈາກທະນາຄານ ໂດຍສອດຄ່ອງກັບ ກົດຈັນຍາບັນວິຊາຊີບບັນຊີຂອງ ສະພາມາດຕະຖານດ້ານຈັນຍາບັນສາກົນ ແລະ ບັນດາຂໍ້ກຳນົດທາງຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນແບບມີເງື່ອນໄຂຂອງພວກຂ້າພະເຈົ້າ.

Building a better working world

ບັນຫາທີ່ຄວນເອົາໃຈໃສ່ - ພື້ນຖານການບັນຊີ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນສັງລວມກິດຈະການ, ທີ່ໄດ້ອະທິບາຍພື້ນຖານໃນການກະກຽມ, ພາຍໃຕ້ນະໂຍບາຍທາງການບັນຊີທີ່ນຳໃຊ້ ແລະ ການເປີດເຜີຍຂໍ້ມູນທີ່ສ້າງຂຶ້ນ (ຕໍ່ໄປນີ້ເອີ້ນວ່າ "ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ") ແມ່ນບໍ່ໄດ້ມີເປົ້າໝາຍເພື່ອ, ແລະບໍ່ໄດ້ປະຕິບັດຕາມຂໍ້ກຳນົດທັງໝົດທີ່ຮຽກຮ້ອງຕາມມາດຕະຖານສາກົນດ້ານການລາຍງານການເງິນ ເນື່ອງຈາກນະໂຍບາຍທາງການບັນຊີ ສຳລັບການຮັບຮູ້ ແລະ ການວັດແທກມູນຄ່າ ຂອງເຄື່ອງມືທາງການເງິນ ແມ່ນອີງຕາມມາດຕະຖານການບັນຊີສາກົນເລກທີ 39 - ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການວັດແທກມູນຄ່າ ແທນ ມາດຕະຖານສາກົນດ້ານການລາຍງານການເງິນ ເລກທີ 9 - ເຄື່ອງມືທາງການເງິນ. ເອກະສານລາຍງານການເງິນສັງລວມກິດຈະການແມ່ນຖືກກະກຽມສຳລັບທະນາຄານເພື່ອນຳໃຊ້ໃນການລາຍງານຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບເທົ່ານັ້ນ. ດັ່ງນັ້ນ, ເອກະສານລາຍງານການເງິນສັງລວມກິດຈະການສະບັບນີ້ ອາດຈະບໍ່ເໝາະສົມໃນການນຳໃຊ້ເພື່ອຈຸດປະສົງອື່ນ. ບົດລາຍງານການກວດສອບຂອງພວກຂ້າພະເຈົ້າ ແມ່ນມີຈຸດປະສົງເພື່ອເປັນຂໍ້ມູນ ແລະ ການນຳໃຊ້ຂອງທະນາຄານ ແລະ ເຈົ້າໜ້າທີ່ດັ່ງກ່າວນີ້, ແລະ ບໍ່ຄວນຖືກນຳໃຊ້ໂດຍພາກສ່ວນອື່ນ.

ພວກຂ້າພະເຈົ້າຍັງສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 31 — ອາກອນ ຂອງເອກະສານລາຍງານການເງິນສັງລວມກິດຈະການ, ທີ່ອະທິບາຍເຖິງໜັງສືແຈ້ງການຂອງກະຊວງການເງິນທີ່ຮຽກຮ້ອງໃຫ້ທະນາຄານທຸລະກິດຄິດໄລ່ອາກອນກຳໄລຄືນໃໝ່ແຕ່ປີ 2016 ເຖິງ 2019 ແລະ ຜົນກະທົບທີ່ອາດເກີດຂຶ້ນກັບລາຍຈ່າຍທີ່ຖືເປັນລາຍຈ່າຍສຳລັບການຄິດໄລ່ອາກອນກຳໄລໃນຊ່ວງໄລຍະນີ້ ເຊິ່ງຍັງລໍຖ້າການຊີ້ແຈງທີ່ຊັດເຈນ ແລະ ຄຳແນະນຳການນຳໃຊ້ທີ່ເປັນລາຍລະອຽດຈາກໜ່ວຍງານທີ່ຮັບຜິດຊອບ.

ຄຳເຫັນຂອງພວກຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂສຳລັບບັນຫາເຫຼົ່ານີ້.

ບັນຫາການກວດສອບທີ່ສຳຄັນ

ບັນຫາການກວດສອບທີ່ສຳຄັນແມ່ນບັນດາບັນຫາທີ່ຖືກປະເມີນຈາກການວິນິດໄສແບບມືອາຊີບຂອງພວກຂ້າພະເຈົ້າ, ມີຄວາມສຳຄັນໃນການກວດສອບຂອງພວກຂ້າພະເຈົ້າຕໍ່ກັບເອກະສານລາຍງານການເງິນສັງລວມກິດຈະການຂອງທະນາຄານປີ 2019. ນອກຈາກບັນຫາທີ່ໄດ້ກ່າວໃນຂ້ອ *ພື້ນຖານການອອກຄຳເຫັນແບບມີເງື່ອນໄຂ* ແລ້ວ, ພວກຂ້າພະເຈົ້າໄດ້ກຳນົດບັນຫາທີ່ໄດ້ອະທິບາຍຢູ່ຂ້າງລຸ່ມນີ້ເປັນບັນຫາການກວດສອບທີ່ສຳຄັນທີ່ໄດ້ຖືກແຈ້ງໃຫ້ຮັບຮູ້ໃນບົດລາຍງານຂອງພວກຂ້າພະເຈົ້າ. ບັນຫາເຫຼົ່ານີ້ໄດ້ຖືກກ່າວໃນຂອບເຂດຂອງການກວດສອບເອກະສານລາຍງານການເງິນສະເພາະກິດຈະການຂອງພວກຂ້າພະເຈົ້າໂດຍລວມ ແລະ ໃນການຮວບຮວມຄຳເຫັນຂອງພວກຂ້າພະເຈົ້າ. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ໄດ້ໃຫ້ຄຳເຫັນແຍກຕ່າງຫາກໃນບັນຫາເຫຼົ່ານີ້. ສຳລັບແຕ່ລະບັນຫາລຸ່ມນີ້, ລາຍລະອຽດຂອງວິທີການກວດສອບຂອງພວກຂ້າພະເຈົ້າທີ່ລະບຸບັນຫານັ້ນແມ່ນຖືກອະທິບາຍໃນເນື້ອຫາດັ່ງກ່າວ.

ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໃນຂ້ອ *ຄວາມຮັບຜິດຊອບຂອງຜູ້ກວດສອບໃນການກວດສອບເອກະສານລາຍງານການເງິນສະເພາະກິດຈະການ* ຂອງບົດລາຍງານຂອງພວກຂ້າພະເຈົ້າ ເຊິ່ງລວມເຖິງສ່ວນທີ່ກ່ຽວຂ້ອງກັບບັນຫາເຫຼົ່ານີ້. ຕາມການກວດສອບຂອງພວກຂ້າພະເຈົ້າ, ລວມມີການຈັດຕັ້ງປະຕິບັດວິທີການກວດສອບເພື່ອທີ່ຈະຕອບສະໜອງການປະເມີນຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນຂອງພວກຂ້າພະເຈົ້າ. ຜົນຂອງການປະຕິບັດຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າ, ລວມມີຂັ້ນຕອນທີ່ຈັດຕັ້ງປະຕິບັດເພື່ອທີ່ຈະລະບຸບັນຫາລຸ່ມນີ້, ເພື່ອໃຫ້ເປັນພື້ນຖານສຳລັບການໃຫ້ຄຳເຫັນການກວດສອບຂອງພວກຂ້າພະເຈົ້າຕໍ່ກັບເອກະສານລາຍງານລາຍງານການເງິນສັງລວມກິດຈະການ.

Building a better working world

ຂອບເຂດທີ່ຄວນເອົາໃຈໃສ່	*ວິທີການກວດສອບຂອງພວກຂ້າພະເຈົ້າເພື່ອຕອບສະໜອງປັດໃຈສ່ຽງຕ່າງໆ*
ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດຂະບວນການຫັນປ່ຽນ ທະນາຄານດຳເນີນງານຢຸ່ ສປປ ລາວ ແລະ ປະຕິບັດການບັນທຶກ ແລະ ລົງບັນຊີໂດຍອີງຕາມກົດໝາຍບັນຊີຂອງ ສປປ ລາວ ແລະ ກົດລະບຽບທີ່ກ່ຽວຂ້ອງທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ("ເອກະສານລາຍງານການເງິນພາຍໃຕ້ລະບົບການບັນຊີລາວ"). ເອກະສານລາຍງານການເງິນສັງລວມກິດຈະການສຳລັບຈຸດປະສົງພິເສດ ຂອງທະນາຄານແມ່ນຖືກກະກຽມໂດຍການບັນທຶກລາຍການດັດແກ້ທີ່ຈຳເປັນລົງໃນການບັນທຶກບັນຊີ ໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 6. ການກຳນົດທຸກໆຄວາມແຕກຕ່າງຂອງນະໂຍບາຍການບັນຊີທີ່ຖືກຍອມຮັບໂດຍທົ່ວໄປ ແລະ ການຄິດໄລ່ລາຍການດັດແກ້ທີ່ຈຳເປັນແມ່ນຮຽກຮ້ອງໃຫ້ຄະນະອຳນວຍການຂອງທະນາຄານນຳໃຊ້ດຸນພິນິດໃນການບັນທຶກລາຍການດັດແກ້ດັ່ງກ່າວ.	ບັນດາຂັ້ນຕອນຂອງພວກຂ້າພະເຈົ້າ, ທີ່ກ່ຽວຂ້ອງກັບຂະບວນການຫັນປ່ຽນເປັນຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດຂອງທະນາຄານລວມມີ: ▶ ພວກຂ້າພະເຈົ້າໄດ້ປະເມີນ ແລະ ຊອກຫາສິ່ງທ້າທາຍໃນການຄັດເລືອກ ແລະ ການນຳໃຊ້ບັນດານະໂຍບາຍການບັນຊີຂອງທະນາຄານພາຍໃຕ້ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ; ▶ ພວກຂ້າພະເຈົ້າໄດ້ຮ່າງການຄາດຄະເນຂອງຄວາມແຕກຕ່າງລະຫວ່າງເອກະສານລາຍງານການເງິນຕາມລະບົບການບັນຊີລາວ ແລະ ເອກະສານລາຍງານການເງິນສັງລວມກິດຈະການສຳລັບຈຸດປະສົງພິເສດ ແລະ ສົມທຽບກັບ ເອກະສານລາຍງານການເງິນທີ່ໄດ້ກະກຽມໂດຍທະນາຄານ; ▶ ພວກຂ້າພະເຈົ້າໄດ້ນຳໃຊ້ເຄື່ອງມືເພື່ອປະເມີນຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງການເປີດເຜີຍທີ່ໄດ້ກະກຽມໂດຍທະນາຄານ; ແລະ ▶ ພວກຂ້າພະເຈົ້າໄດ້ໃຫ້ຊ່ຽວຊານສະເພາະດ້ານມາດຕະຖານສາກົນດ້ານການລາຍງານການເງິນມີສ່ວນຮ່ວມໃນຂັ້ນຕອນຂອງພວກຂ້າພະເຈົ້າເພື່ອປະເມີນການປະຕິບັດຕາມຂໍ້ກຳນົດການເປີດເຜີຍຂອງຂອບເຂດການລາຍງານສຳລັບຈຸດປະສົງພິເສດ.

Building a better working world

ບັນຫາການກວດສອບທີ່ສຳຄັນ (ຕໍ່)

ຂອບເຂດທີ່ຄວນເອົາໃຈໃສ່	*ວິທີການກວດສອບຂອງພວກຂ້າພະເຈົ້າເພື່ອຕອບສະໜອງຫັດໃຈສ່ຽງຕ່າງໆ*
ເງິນແຮສຳລັບຄ່າເສື່ອມຂອງເງິນກູ້ໃຫ້ແກ່ລູກຄ້າ (ບົດອະທິບາຍເລກທີ 20 — ເງິນແຮສຳລັບຄ່າເສື່ອມໜີ້ເສຍ ຂອງເງິນກູ້ໃຫ້ແກ່ລູກຄ້າ) ເງິນແຮສຳລັບຄ່າເສື່ອມໜີ້ເສຍຂອງເງິນກູ້ແມ່ນມີຍອດທີ່ສູງ ແລະ ເປັນມູນຄ່າຄາດຄະເນທີ່ມີຄວາມບໍ່ແນ່ນອນໃນລະດັບທີ່ສູງ. ຜູ້ບໍລິຫານຂອງທະນາຄານຕ້ອງພິຈາລະນາໃນການກຳນົດຫຼັກຖານໃນການສ້າງ ແລະ ການຄິດໄລ່ຈຳນວນເງິນແຮຄ່າເສື່ອມ. ເພື່ອຄິດໄລ່ເງິນແຮຄ່າເສື່ອມ ທະນາຄານໄດ້ພັດທະນາຮຸບແບບ ແລະ ສ້າງຂໍ້ສົມມຸດຖານທີ່ແນ່ນອນ ທີ່ລວມມີ ການປະເມີນຄ່າຫຼັກປະກັນ, ການຄາດຄະເນກະແສເງິນສົດ, ແລະ ເງື່ອນໄຂທາງດ້ານການເງິນຂອງຜູ້ກູ້ຢືມ. ເນື່ອງຈາກຍອດເງິນແຮນີ້ແມ່ນມີຄວາມສຳຄັນ ແລະ ຮຽກຮ້ອງໃຫ້ມີການຕັດສິນໃຈໃນລະດັບສູງໂດຍຄະນະອຳນວຍການຂອງທະນາຄານ ແລະ ສິ່ງທີ່ມີຢູ່ໂດຍພາວະວິໄສຂອງຂໍ້ສົມມຸດຖານທີ່ໄດ້ເລືອກ, ພວກຂ້າພະເຈົ້າຈຶ່ງໄດ້ມີການເອົາໃຈໃສ່ເປັນພິເສດໃນການກວດສອບຂອງພວກຂ້າພະເຈົ້າ.	ພວກຂ້າພະເຈົ້າໄດ້ສ້າງຄວາມເຂົ້າໃຈ ແລະ ໄດ້ທົດສອບການອອກແບບ ແລະ ປະສິດຕິພາບການດຳເນີນການຄວບຄຸມທີ່ສຳຄັນທີ່ກ່ຽວຂ້ອງກັບ: ▶ ການພິຈາລະນາ ແລະ ການຮັບຮູ້ສິນເຊື່ອ; ▶ ການຈັດລະດັບ ແລະ ການຕິດຕາມສິນເຊື່ອ; ▶ ການຈັດປະເພດລາຍງານຖານະເງິນກູ້ຕາມຄວາມສ່ຽງທີ່ມີລັກສະນະຄ້າຍຄືກັນ; ▶ ການຄິດໄລ່ເງິນແຮຄ່າເສື່ອມສຳລັບໜີ້ເສຍ ໂດຍອີງຕາມບັນດາຂໍ້ກຳນົດທາງລະບຽບການ; ແລະ ▶ ການຄວບຄຸມທົ່ວໄປດ້ານໄອທີລວມເຖິງການຄຸ້ມຄອງການປ່ຽນແປງ, ການຄຸ້ມຄອງການເຂົ້າເຖິງ ແລະ ການດຳເນີນງານດ້ານຖານຂໍ້ມູນ, ການນຳໃຊ້ ໄອທີ ແລະ ລະບົບການດຳເນີນງານ. ສຳລັບຕົວຢ່າງຂອງເງິນກູ້ທີ່ຖືກຄິດໄລ່ເງິນແຮຄ່າເສື່ອມເປັນແຕ່ລະລາຍລູກຄ້າ, ພວກຂ້າພະເຈົ້າໄດ້: ▶ ປະເມີນ ແລະ ຫາສິ່ງທ້າທາຍຂໍ້ສົມມຸດຖານຂອງຄະນະອຳນວຍການໃນແງ່ຂອງການຄາດຄະເນເງິນສົດ; ແລະ ▶ ປະເມີນຜົນກະທົບຂອງການປັບປຸງໂຄງສ້າງໜີ້ທີ່ເຫັນວ່າບໍ່ເໝາະສົມ. ສຳລັບເງິນແຮຄ່າເສື່ອມທີ່ຖືກຄິດໄລ່ເປັນກຸ່ມ ພວກຂ້າພະເຈົ້າໄດ້ປະຕິບັດຂັ້ນຕອນ ດັ່ງຕໍ່ໄປນີ້: ▶ ທົດສອບຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງຂໍ້ມູນທີ່ໃຊ້ໃນຮຸບແບບ; ▶ ທົດສອບຄວາມຖືກຕ້ອງໃນການຄຳນວນຂອງຮຸບແບບຂອງທະນາຄານ; ▶ ປະເມີນ ແລະ ຫາສິ່ງທ້າທາຍກ່ຽວກັບຄວາມເໝາະສົມຂອງຂໍ້ສົມມຸດຖານລວມມີ ອັດຕາການສູນເສຍໃນອະດີດ; ແລະ ▶ ສົມທຽບຂໍ້ມູນ ແລະ ຂໍ້ສົມມຸດຖານທີ່ໄດ້ສ້າງໂດຍທະນາຄານຕໍ່ກັບຕົວຊີ້ວັດແຫ່ງພາຍນອກ. ທ້າຍສຸດ, ພວກຂ້າພະເຈົ້າໄດ້ປະເມີນ ຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງ ຂອງການເປີດເຜີຍໃນເອກະສານລາຍງານການເງິນທີ່ກ່ຽວຂ້ອງກັບເງິນແຮຄ່າເສື່ອມໜີ້ເສຍ ເພື່ອປະເມີນວ່າໄດ້ສອດຄ່ອງກັບຂໍ້ກຳນົດປະຕິບັດສຳລັບການເປີດເຜີຍຂໍ້ມູນ.

Building a better working world

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນສັງລວມກິດຈະການ

ຄະນະອຳນວຍການຂອງທະນາຄານແມ່ນມີໜ້າທີ່ຮັບຜິດຊອບໃນການສ້າງເອກະສານລາຍງານການເງິນສັງລວມກິດຈະການໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນ ບົດອະທິບາຍເລກທີ 6 ຂອງເອກະສານລາຍງານການເງິນສັງລວມກິດຈະການ ແລະ ບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະອຳນວຍການເຫັນວ່າມີຄວາມຈຳເປັນເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນສັງລວມກິດຈະການ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນສັງລວມກິດຈະການ, ຄະນະອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງທະນາຄານ ທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະອຳນວຍການທະນາຄານຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະອຳນວຍການທະນາຄານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນສັງລວມກິດຈະການ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບເອົາການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນສັງລວມກິດຈະການໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນສັງລວມກິດຈະການ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ.

ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນສັງລວມກິດຈະການ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.

Building a better working world

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງທະນາຄານໃນຄວາມສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນສະເພາະກິດ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອະນາຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ທະນາຄານຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍຕ່າງໆທີ່ກ່ຽວຂ້ອງ ທີ່ສ້າງຂຶ້ນໂດຍຄະນະອຳນວຍການທະນາຄານ.

- ປະເມີນການນຳສະເໜີ, ໂຄງສ້າງ ແລະ ເນື້ອໃນຂອງເອກະສານລາຍງານການເງິນສັງລວມກິດຈະການໂດຍລວມ, ລວມເຖິງການເປີດເຜີຍ, ແລະ ເອກະສານລາຍງານການເງິນສັງລວມກິດຈະການສະແດງທຸລະກຳ ແລະ ເຫດການພື້ນຖານໃນລັກສະນະທີ່ເປັນໄປຕາມຂໍ້ກຳນົດ ຫຼື ບໍ່.

- ໄດ້ຮັບຫຼັກຖານການກວດສອບທີ່ເໝາະສົມກ່ຽວກັບຂໍ້ມູນທາງດ້ານການເງິນຂອງທະນາຄານ ແລະ ບໍລິສັດໃນເຄືອ ເພື່ອນຳໃຊ້ໃນການອອກຄຳເຫັນສຳລັບເອກະສານລາຍງານການເງິນສັງລວມກິດຈະການ. ພວກຂ້າພະເຈົ້າມີຄວາມຮັບຜິດຊອບຕໍ່ການໃຫ້ທິດທາງ, ການຊີ້ນຳຄຸ້ມຄອງ ແລະ ການປະຕິບັດງານຂອງການກວດສອບກຸ່ມບໍລິສັດ. ພວກຂ້າພະເຈົ້າຍັງມີຄວາມຮັບຜິດຊອບຕໍ່ກັບຄຳເຫັນຂອງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະອຳນວຍການທະນາຄານກ່ຽວຂ້ອງກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ພົບເຫັນໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ນອກຈາກນັ້ນ, ພວກຂ້າພະເຈົ້າຍັງໄດ້ໃຫ້ຄຳຖະແຫຼງການໃຫ້ແກ່ຜູ້ທີ່ມີໜ້າທີ່ໃນການຄວບຄຸມເອກະສານລາຍງານການເງິນ ທີ່ພວກຂ້າພະເຈົ້າໄດ້ປະຕິບັດຕາມຂໍ້ກຳນົດຈັນຍາບັນທີ່ກ່ຽວຂ້ອງກ່ຽວກັບຄວາມເປັນເອກະລາດ, ແລະ ໄດ້ປຶກສາຫາລືກ່ຽວກັບບັນດາຄວາມສຳພັນ ແລະ ບັນຫາອື່ນໆທີ່ອາດຈະມີເຫດຜົນພຽງພໍທີ່ຄວນຖືກພິຈາລະນາເຖິງຄວາມເປັນເອກະລາດຂອງພວກຂ້າພະເຈົ້າ, ແລະ ມາດຕະຖານປ້ອງກັນທີ່ກ່ຽວຂ້ອງ.

ບໍລິສັດ ເອິນແອນຢັ ລາວ ຈຳກັດ

ເອິນ ແອນ ຢັ ລາວ ຈຳກັດ
ERNST & YOUNG LAO CO.,LTD

Saman Wijaya Bandara
ຮຸ້ນສ່ວນ
ທະບຽນການດຳເນີນການກວດສອບ
ໃບຢັ້ງຢືນເລກທີ: 014/LCPAA-APT-2019

ນະຄອນຫຼວງວຽງຈັນ, ສປປ ລາວ

19 ພຶດສະພາ 2020

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານສັງລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*2019 ລ້ານກີບ*	*2018 ລ້ານກີບ*
ລາຍຮັບດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ	8	2.159.294	1.938.828
ລາຍຈ່າຍດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ	9	(1.193.701)	(1.000.577)
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ		**965.593**	**938.251**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	10	249.461	261.637
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	10	(29.975)	(22.017)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**10**	**219.486**	**239.620**
ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ	11	34.749	49.719
ຂາດທຶນສຸດທິຈາກການຊື້-ຂາຍອະນຸພັນ	12	(1.204)	-
ລາຍຮັບອື່ນໆຈາກການດຳເນີນງານ	13	112.093	21.892
ລາຍຮັບທັງໝົດຈາກການດຳເນີນງານ		**1.330.717**	**1.249.482**
ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ລູກຄ້າ	20	(314.919)	(221.957)
ຄ່າເສື່ອມການລົງທຶນທາງດ້ານການເງິນ	14	(21.376)	(29.412)
ລາຍຮັບສຸດທິຈາກການດຳເນີນງານ		**994.422**	**998.113**
ລາຍຈ່າຍພະນັກງານ	15	(303.632)	(334.693)
ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ	24, 25	(71.999)	(72.363)
ຄ່າຫຼຸ້ຍຫ້ຽນສິດນຳໃຊ້ຊັບສິນ	26	(7.062)	-
ລາຍຈ່າຍອື່ນໆຈາກການດຳເນີນງານ	16	(182.001)	(156.134)
ລາຍຈ່າຍທັງໝົດຈາກການດຳເນີນງານ		**(564.694)**	**(563.190)**
ສ່ວນແບ່ງຈາກ ກຳໄລ/(ຂາດທຶນ) ຈາກບໍລິສັດຮ່ວມທຶນ	23	33.034	(7.643)
ກຳໄລກ່ອນອາກອນ		**462.762**	**427.280**
ລາຍຈ່າຍອາກອນກຳໄລພາຍໃນປີ	31.1	(107.712)	(124.762)
ລາຍຮັບອາກອນກຳໄລລໍຖ້າຊຳລະສະສາງ	31.1	5.640	18.420
ກຳໄລສຸດທິພາຍໃນປີ		**360.690**	**320.938**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານສັງລວມກິດຈະການ (ຕໍ່)

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*2019 ລ້ານກີບ*	*2018 ລ້ານກີບ*
ແບ່ງເຂົ້າ:			
ຜູ້ຖືຮຸ້ນຂອງບໍລິສັດແມ່		359.734	320.732
ສ່ວນໄດ້ເສຍທີ່ຄວບຄຸມບໍ່ໄດ້		956	206
ກຳໄລຕໍ່ຮຸ້ນ (ກີບ)	**42**	**1.732**	**1.544**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ວຽງສຸກ ຈຸນທະວົງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

19 ພຶດສະພາ 2020

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານນອກການທຸລະກິດສັງລວມກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	2019 ລ້ານກີບ	2018 ລ້ານກີບ
ກຳໄລສຸດທິພາຍໃນປີ		**360.690**	**320.938**
ລາຍຮັບອື່ນໆນອກການທຸລະກິດ			
ການປ່ຽນແປງໃນເງິນແຮ່ຄ່າເສື່ອມຂອງເຄື່ອງມືທາງການເງິນຫຼັກຊັບມີໄວ້ເພື່ອຂາຍ		-	(1.792)
ການວັດແທກຄືນຂາດທຶນຈາກແຜນກຳນົດຜົນປະໂຫຍດຫຼັງອອກການ	32	(15.897)	(1.411)
ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ	31.5	3.815	768
ລາຍຮັບນອກການທຸລະກິດພາຍໃນປີ ຫຼັງຫັກອາກອນ		**(12.082)**	**(2.435)**
ຍອດລວມລາຍຮັບນອກການທຸລະກິດພາຍໃນປີ ຫຼັງຫັກອາກອນ		**348.608**	**318.503**
ແບ່ງເຂົ້າ:			
ຜູ້ຖືຮຸ້ນຂອງບໍລິສັດແມ່		347.652	317.999
ສ່ວນໄດ້ເສຍທີ່ຄວບຄຸມບໍ່ໄດ້		956	504

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ວຽງສຸກ ຈຸນທະວົງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

19 ພຶດສະພາ 2020

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນສັງລວມກິດຈະການ

ນະວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*31/12/2019 ລ້ານກີບ*	*31/12/2018 ລ້ານກີບ*
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	17	9.202.051	5.334.246
ເງິນຝາກຢູ່ທະນາຄານອື່ນ	18	4.588.321	3.828.669
ເງິນກູ້ໃຫ້ແກ່ລູກຄ້າ	19	27.490.492	24.366.860
ຊັບສິນທາງການເງິນ - ປະເພດຖືໄວ້ເພື່ອຄ້າ		19	14
ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	21	133.930	156.516
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	22	3.453.937	3.652.772
ການລົງທຶນໃນບັນດາບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ	23	494.666	462.296
ຊັບສິນບັດຄົງທີ່ ແລະ ອຸປະກອນ	24	456.259	450.132
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	25	245.069	246.601
ສິດນຳໃຊ້ຊັບສິນ	26	55.194	-
ຊັບສິນອາກອນລໍຖ້າຊຳລະສະສາງ	31.5	34.644	29.099
ຊັບສິນອື່ນໆ	27	472.122	466.088
ລວມຊັບສິນ		**46.626.704**	**38.993.293**
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ	28	4.061.775	3.413.129
ໜີ້ຕ້ອງສົ່ງລູກຄ້າ	29	36.419.928	29.915.142
ເງິນກູ້ຢືມຈາກທະນາຄານອື່ນ	30	3.705.378	3.349.266
ໜີ້ສິນອາກອນພາຍໃນປີ	31.2	41.636	35.951
ໜີ້ສິນອາກອນລໍຖ້າຊຳລະສະສາງ	31.5	-	5.272
ໜີ້ສິນອື່ນໆ	32	228.301	242.918
ລວມໜີ້ສິນ		**44.457.018**	**36.961.678**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນສັງລວມກິດຈະການ (ຕໍ່)

ນະວັນທີ 31 ທັນວາ 2019

	ບິດອະທິບາຍ ເລກທີ	*31/12/2019 ລ້ານກີບ*	*31/12/2018 ລ້ານກີບ*
ທຶນ			
ທຶນຈົດທະບຽນ		1.038.617	1.038.617
ຄ້ຳສະສົມຕາມລະບຽບການ ແລະ ຄ້ຳສະສົມອື່ນໆ	34	605.993	440.874
ຮຸ້ນທີ່ໄດ້ຊື້ຄືນ		(3.613)	(3.313)
ກຳໄລສະສົມ		496.962	524.050
ສ່ວນຂອງທຶນທັ້ງໝົດຂອງທະນາຄານແມ່		**2.137.959**	**2.000.228**
ສ່ວນຂອງທຶນທັ້ງໝົດຈາກສ່ວນໄດ້ສ່ວນເສຍທີ່ບໍ່ສາມາດຄວບຄຸມ		31.727	31.387
ລວມທຶນ		**2.169.686**	**2.031.615**
ລວມໜີ້ສິນ ແລະ ທຶນ		**46.626.704**	**38.993.293**

ກະກຽມໂດຍ:

ອະນຸມັດໂດຍ:

ອະນຸມັດໂດຍ:

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ທ່ານ ນ. ພຸແສງທອງ ອານຸລັກຄຳ	ທ່ານ ກິງສັກ ສຸພອນສີ	ທ່ານ ວຽງສຸກ ຈຸນທະວິງ
ຫົວໜ້າພະແນກບັນຊີສັງລວມ	ຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

19 ພຶດສະພາ 2020

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສັງລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ທຶນຈົດທະບຽນ ລ້ານກີບ	*ຄ້ຳສະສົມ ຕາມລະບຽບການ ແລະ ຄ້ຳສະ ສົມອື່ນໆ ລ້ານກີບ*	*ຮຸ້ນທີ່ໄດ້ຊື້ຄືນ ລ້ານກີບ*	*ກຳໄລສະສົມ ລ້ານກີບ*	*ສ່ວນໄດ້ເສຍທີ່ ຄວບຄຸມບ່ໍໄດ້ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອນະວັນທີ 31 ທັນວາ 2018	**1.038.617**	**440.874**	**(3.313)**	**524.050**	**31.387**	**2.031.615**
ຜົນກະທົບຈາກການຈັດຕັ້ງປະຕິບັດ IFRS 16						
ນະວັນທີ 01 ມັງກອນ 2019	-	-	-	(4.311)	-	(4.311)
ເງິນປັນຜົນ ທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ສຳລັບປີ 2018	-	-	-	(205.310)	(616)	(205.926)
ແບ່ງເຂົ້ຳຄ້ຳສະສົມພາຍໃນປີ 2018	-	165.119	-	(165.119)	-	-
ກຳໄລສຸດທິສຳລັບປີ 2019	-	-	-	359.734	956	360.690
ເພີ່ມຂຶ້ນສຸດທິໃນຮຸ້ນທີ່ໄດ້ຊື້ຄືນ	-	-	(300)	-	-	(300)
ລາຍຮັບນອກການທຸລະກິດອື່ນພາຍໃນປີ 2019	-	-	-	(12.082)	-	(12.082)
ໃນນີ້ລວມມີ:						
- *ການວັດແທກຄືນຂາດທຶນຈາກແຜນງານກຳນົດຜົນປະໂຫຍດ ຫຼັງອອກການ*	-	-	-	*(15.897)*	-	*(15.897)*
- *ອາກອນກຳໄລທີ່ຕິດພັນກັບອົງປະກອບຂອງລາຍຮັບນອກ ການທຸລະກິດອື່ນ*	-	-	-	*3.815*	-	*3.815*
ຍອດເຫຼືອນະວັນທີ 31 ທັນວາ 2019	**1.038.617**	**605.993**	**(3.613)**	**496.962**	**31.727**	**2.169.686**

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສັງລວມກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ທຶນຈົດທະບຽນ ລ້ານກີບ	*ຄ້ງສະສົມຕາມລະບຽບການ ແລະ ຄ້ງສະສົມອື່ນໆ ລ້ານກີບ*	*ຮຸ້ນທີ່ໄດ້ຊື້ຄືນ ລ້ານກີບ*	*ເງິນທຶນສຳລັບຫຼັກຊັບມີໄວ້ເພື່ອຂາຍ ລ້ານກີບ*	*ກຳໄລສະສົມ ລ້ານກີບ*	*ສ່ວນໄດ້ເສຍທີ່ຄອບຄຸມບໍ່ໄດ້ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອນະວັນທີ 31 ທັນວາ 2017	**1.038.617**	**381.506**	**(1.316)**	**1.661**	**361.658**	**31.562**	**1.813.688**
ເງິນປັນຜົນ ທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ສຳລັບປີ 2017	-	-	-	-	(97.900)	(679)	(98.579)
ແບ່ງເຂົ້າຄ້ງສະສົມພາຍໃນປີ 2017	-	59.368	-	-	(59.368)	-	-
ກຳໄລສຸດທິສຳລັບປີ 2018	-	-	-	-	320.732	206	320.938
ເພີ່ມຂຶ້ນສຸດທິໃນຮຸ້ນທີ່ໄດ້ຊື້ຄືນ	-	-	(1.997)	-	-	-	(1.997)
ລາຍຮັບນອກການທຸລະກິດອື່ນພາຍໃນປີ 2018	-	-	-	(1.661)	(1.072)	298	(2.435)
ໃນນີ້							
- ການອັດແໜກຄືນຂາດທຶນຈາກແຜນງານກຳນົດຜົນປະໂຫຍດຫຼັງອອກການ	-	-	-	-	*(1.411)*	-	*(1.411)*
- ສ່ວນປ່ຽນແປງຈາກຄ່າເສື່ອມຂອງຊັບສິນທາງການເງິນມີໄວ້ເພື່ອຂາຍ	-	-	-	*(2.184)*	-	*392*	*(1.792)*
- ອາກອນກຳໄລທີ່ຕິດພັນກັບອົງປະກອບຂອງລາຍຮັບນອກການທຸລະກິດອື່ນ	-	-	-	*523*	*339*	*(94)*	*768*
ຍອດເຫຼືອນະວັນທີ 31 ທັນວາ 2018	**1.038.617**	**440.874**	**(3.313)**	**-**	**524.050**	**31.387**	**2.031.615**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສັງລວມກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ພູແສງທອງ ອານຸລັກຄຳ	ທ່ານ ກິງສັກ ສຸພອນສີ	ທ່ານ ວຽງສຸກ ຈຸນທະວິງ
ຫົວໜ້າພະແນກບັນຊີສັງລວມ	ຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

19 ພຶດສະພາ 2020

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ

ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*2019 ລ້ານກີບ*	*2018 ລ້ານກີບ*
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**462.762**	**427.280**
ການດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ	24, 25, 26	79.061	72.363
ການດັດແກ້ກຳໄລສະສົມພາຍໃຕ້ IFRS 16		(4.311)	-
ລາຍຈ່າຍຄ່າເສື່ອມມູນຄ່າ	14, 20	336.295	251.369
ລາຍຈ່າຍສຳລັບສະສາງຊັບສົມບັດພວມກໍ່ສ້າງ	16	13.351	-
ສ່ວນແບ່ງກຳໄລຂອງບໍລິສັດພາຍໃຕ້ວິທີສ່ວນໄດ້ເສຍ	23	(33.034)	7.643
ລາຍຈ່າຍສຳລັບພະນັກງານຫຼັງອອກການ	32	7.325	24.134
ລາຍຮັບດອກເບ້ຍ	8	(2.159.294)	(1.938.828)
ລາຍຈ່າຍດອກເບ້ຍ	9	1.193.701	1.000.577
ລາຍຮັບເງິນປັນຜົນ	13	(6.198)	(11.630)
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງ ດ້ານຊັບສິນ ແລະ ໜີ້ສິນ		**(110.342)**	**(167.092)**
ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ			
ເງິນຝາກຢູ່ທະນາຄານອື່ນ		(16.179)	(1.507.658)
ເງິນກູ້ໃຫ້ແກ່ລູກຄ້າ		(2.809.910)	(1.982.178)
ລົງທຶນທາງການເງິນ - ປະເພດມີໄວ້ເພື່ອຄ້າ		(5)	(9)
ລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ		(300)	373
ລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		200.045	280.969
ຊັບສິນອື່ນໆ		(65.202)	(15.986)
ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ			
ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ ແລະ ທຫລ		932.702	1.299.350
ໜີ້ຕ້ອງສົ່ງລູກຄ້າ		6.587.377	1.449.278
ໜີ້ສິນອື່ນໆ		(26.243)	31.200
ດອກເບ້ຍທີ່ໄດ້ຮັບ		1.522.442	1.688.472
ດອກເບ້ຍທີ່ໄດ້ຊຳລະ		(1.308.950)	(904.321)
ອາກອນທີ່ໄດ້ຊຳລະພາຍໃນປີ	31.3	(109.808)	(102.880)
ກະແສເງິນສົດສຸດທິຈາກການດຳເນີນງານ		**4.795.627**	**69.518**
ການເຄື່ອນໄຫວດ້ານການລົງທຶນ			
ການຈັດຊື້ ແລະ ການກໍ່ສ້າງຊັບສົມບັດຖາວອນ		(100.914)	(120.340)
ຮັບຈາກການສະສາງ/ຂາຍຊັບສົມບັດຖາວອນ		24.320	-
ການລົງທຶນຮ່ວມທີ່ໄດ້ຈ່າຍ		(2.040)	-
ຮັບເງິນປັນຜົນ		8.902	32.638
ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ເຂົ້າໃນການເຄື່ອນໄຫວການລົງທຶນ		**(69.732)**	**(87.702)**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ (ຕໍ່)

ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*2019 ລ້ານກີບ*	*2018 ລ້ານກີບ*
ກິດຈະກຳການດຳເນີນງານການເຄື່ອນໄຫວທາງການເງິນ			
ຈ່າຍເງິນປັນຜົນ		(205.926)	(97.900)
ກະແສເງິນສົດສຸດທິທີ່ນຳໃຊ້ໃນການເຄື່ອນໄຫວທາງການເງິນ		**(205.926)**	**(97.900)**
ປ່ຽນແປງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**4.519.969**	**(116.084)**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ		**7.204.432**	**7.320.516**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	**36**	**11.724.401**	**7.204.432**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ວຽງສຸກ ຈຸນທະວົງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ.

19 ພຶດສະພາ 2020

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ("ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010, ທະນາຄານ ໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງ ຕາມ ໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິ ສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າແຫ່ງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງ ການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ຂອງຮຸ້ນທັງໝົດ (ທຽບເທົ່າກັບ 13.657.759 ຮຸ້ນ) ໃຫ້ ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED ("COFIBRED"). ອີງຕາມ ສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນ ເຄືອຂອງ BRED, ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150.235.349.000 ກີບ ໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນ ໂດຍການສະ ເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ ໃນຕະຫຼາດຫຼັກຊັບລາວເພື່ອເພີ່ມທຶນຈົດທະບຽນ. ທະນາຄານ ໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍ ທະນາຄານ ແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫລາດຫລັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນ ຈຳນວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ອີງຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0429 /ຫຈທ, ລົງວັນທີ 18 ພຶດສະພາ 2018 ອອກ ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານປັບໂຄງສ້າງຜູ້ຖືຮຸ້ນ ໂດຍ ການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນ ເພື່ອສະໜັບສະໜຸນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນ ຄົງ. ໃນວັນທີ 29 ພະຈິກ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະ ເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

ອີງຕາມການແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2019 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	124.634.021	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	20.772.359	10%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດອື່ນໆ (*)	62.316.920	30%
	207.723.300	**100%**

(*) ແຕ່ລະບຸກຄົນທົ່ວໄປ ຫຼື ອົງກອນແມ່ນອະນຸຍາດໃຫ້ຖືຮຸ້ນໄດ້ສູງສຸດ 2% ຂອງຈຳນວນຮຸ້ນທັງໝົດ.

1. ຂໍ້ມູນກ່ຽວກັບທຸລະກິດ (ຕໍ່)

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ (ຕໍ່)

ກິດຈະກຳຫຼັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ແລະ ຍາວ ໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າ ລະຫວ່າງປະເທດ, ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນຂອງທະນາຄານ ນະວັນທີ 31 ທັນວາ 2019 ແມ່ນ 1.038.617 ລ້ານກີບ (ວັນທີ 31 ທັນວາ 2018: 1.038.617 ລ້ານກີບ).

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ທັນວາ 2019, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ຫ້າ (5) ບໍລິສັດຮ່ວມທຶນ, ຊາວ (20) ສາຂາຫຼັກ, ເກົ້າສິບສາມ (93) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2019, ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

ຊື່	*ສ້າງຕັ້ງພາຍໃຕ້ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງ ທະນາຄານ*
ບໍລິສັດຫຼັກຊັບ ທຄຕລ - ມທ ຈຳກັດ	1079/ຫຈທ ລົງວັນທີ 10 ກໍລະກົດ 2019 ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ຫຼັກຊັບ	70%

ບໍລິສັດຮ່ວມທຶນ

ນະວັນທີ 31 ທັນວາ 2019, ທະນາຄານມີ ຫ້າ (05) ບໍລິສັດຮ່ວມທຶນຄື:

ຊື່	*ສ້າງຕັ້ງພາຍໃຕ້ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງ ທະນາຄານ*
ທະນາຄານຮ່ວມທຸລະກິດ ລາວ - ຫວຽດ	ເລກທີ 732/ ຫຈກ ລົງວັນທີ 29 ສິງຫາ 2016 ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການທະນາຄານ & ການເງິນ	25%
ທະນາຄານ ລາວ - ຝຣັ່ງ ຈຳກັດ	ເລກທີ 124-10/ກຜລ4 ລົງວັນທີ 07 ກັນຍາ 2010 ໂດຍກະຊວງແຜນການ ແລະ ການລົງທຶນ	ການທະນາຄານ & ການເງິນ	30%
ບໍລິສັດປະກັນໄພ ລາວ - ຫວຽດ	ເລກທີ 0600 ລົງວັນທີ 16 ສິງຫາ 2013 ໂດຍ ກະຊວງ ອຸດສະຫະກຳ ແລະ ການຄ້າ.	ປະກັນໄພ	35%

1. **ຂໍ້ມູນກ່ຽວກັບທະນາຄານ** (ຕໍ່)

ບໍລິສັດຮ່ວມທຶນ (ຕໍ່)

ຊື່	*ສ້າງຕັ້ງພາຍໃຕ້ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ທະນາຄານ ລາວ - ຈີນ ຈຳກັດ	ເລກທີ 041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ພະແນກຂຶ້ນທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ.	ການທະນາຄານ & ການເງິນ	49%
ບໍລິສັດ ລາວເມເຊັນນ໌ ເພເມັ້ນ ເນັດເວີກ ຈຳກັດ	ເລກທີ 0349/ຫຈທ ລົງວັນທີ 12 ມີນາ 2019 ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ.	ການຄຸ້ມຄອງ ທຸລະກຳການຊຳ ລະສະສາງ (ເອ ເລັກໂທຣນິກ)	20%

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ	ປະທານ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ຄຳສຸກ ສຸນດາລາ	ຮອງປະທານ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ພູຂົງ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ມາກ ໂຣເບີດ	ສະມາຊິກ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ພຸດທະຂັນ ຂັນຕີ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018
ທ່ານ ຣສ. ປອ ພູເພັດ ພິລະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018
ທ່ານ ວຽງສຸກ ຈຸນທະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະວັນທີທີ່ອອກເອກະສານລາຍງານນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 15 ມັງກອນ 2016
ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 6 ມິຖຸນາ 2008 ລາອອກວັນທີ 01 ເມສາ 2019
ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ຄຳຊ່ຽນ ມີ່ງບຸບຜາ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 23 ພະຈິກ 2015 ລາອອກວັນທີ 26 ເມສາ 2019
ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 23 ພະຈິກ 2015
ທ່ານ ບົວວັນ ສີມະລີວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພະຈິກ 2016
ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 18 ກຸມພາ 2019

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ພະນັກງານ

ພະນັກງານທັງໝົດຂອງທະນາຄານ ນະວັນທີ 31 ທັນວາ 2019 ແມ່ນ 2.080 ຄົນ (ນະວັນທີ 31 ທັນວາ 2018: 1.920 ຄົນ).

2. ພື້ນຖານໃນການກຽມ

ເອກະສານລາຍງານການເງິນສັງລວມກິດຈະການ (ຫຼືເອີ້ນອີກຢ່າງໜຶ່ງວ່າ "ເອກະສານລາຍງານການເງິນສັງລວມກິດຈະການສຳລັບຈຸດປະສົງພິເສດ") ແມ່ນຖືກກະກຽມສຳລັບທະນາຄານເພື່ອນຳໃຊ້ໃນການລາຍງານຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເທົ່ານັ້ນ. ເອກະສານລາຍງານການເງິນສັງລວມກິດຈະການສະບັບນີ້ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 6. ນະໂຍບາຍການບັນຊີດັ່ງກ່າວໃນເບື້ອງຕົ້ນແມ່ນອີງຕາມມາດຕະຖານລາຍງານການເງິນສາກົນ ("IFRS") ທີ່ອອກໂດຍຄະນະກຳມະການກຳນົດມາດຕະຖານການບັນຊີສາກົນ. ເຖິງຢ່າງໃດກໍຕາມ, ການກະກຽມເອກະສານລາຍງານການເງິນດັ່ງກ່າວ ບໍ່ແມ່ນເອກະສານລາຍງານການເງິນທີ່ຄົບຖ້ວນຕາມອັດຖປະສົງໂດຍທົ່ວໄປທີ່ໄດ້ຖືກກະກຽມໂດຍສອດຄ່ອງກັບມາດຕະຖານ IFRS ເນື່ອງຈາກວ່າທະນາຄານໄດ້ປະຕິບັດຕາມຄຳແນະນຳທີ່ໄດ້ລະບຸໄວ້ໃນໜັງສືແຈ້ງການເລກທີ 1659/ທຫລ ລົງວັນທີ 14 ທັນວາ 2018 ຂອງທະນາຄານແຫ່ງ ສປປ ລາວ ແລະ ໜັງສືແຈ້ງການເລກທີ 19/ສຄຄຊ ລົງວັນທີ 23 ພະຈິກ 2018 ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເຊິ່ງມີເນື້ອໃນກ່ຽວກັບນະໂຍບາຍການບັນຊີສຳລັບ ການຮັບຮູ້ ແລະ ການວັດແທກມູນຄ່າເຄື່ອງມືທາງການເງິນ ແມ່ນໃຫ້ນຳໃຊ້ ມາດຕະຖານການບັນຊີສາກົນ IAS 39: "ເຄື່ອງມືທາງການເງິນ" ແທນ ມາດຕະຖານລາຍງານການເງິນສາກົນ IFRS 9: "ເຄື່ອງມືທາງການເງິນ".

ດັ່ງນັ້ນ, ເອກະສານລາຍງານການເງິນສັງລວມກິດຈະການແມ່ນບໍ່ໄດ້ຮັບການກະກຽມໂດຍສອດຄ່ອງກັບມາດຕະຖານລາຍງານການເງິນສາກົນ IFRS.

ເອກະສານລາຍງານການເງິນສັງລວມກິດຈະການ ແມ່ນໄດ້ຮັບການກະກຽມໂດຍອີງຕາມພື້ນຖານຕົ້ນທຶນເດີມ, ເວັ້ນແຕ່ໄດ້ຮັບການເປີດເຜີຍຢູ່ໃນບົດອະທິບາຍເລກທີໃດໜຶ່ງຂອງເອກະສານລາຍງານການເງິນສະບັບນີ້.

ທະນາຄານຮັກສາການບັນທຶກບັນຊີເປັນເງິນກີບ ("ກີບ") ແລະ ໄດ້ສ້າງເອກະສານລາຍງານການເງິນສັງລວມກິດຈະການສຳລັບຈຸດປະສົງພິເສດເປັນຫົວໜ່ວຍລ້ານກີບ ("ລ້ານກີບ"). ທະນາຄານນຳໃຊ້ເຄື່ອງໝາຍຈຸດ (,) ທີ່ເປັນເລກທົດສະນິຍົມ ແລະ ນຳໃຊ້ເຄື່ອງໝາຍຈ້ຳ (.) ເພື່ອແຍກຫົວໜ່ວຍພັນ.

ທະນາຄານຍັງໄດ້ກະກຽມ ແລະ ອອກເອກະສານລາຍງານການເງິນສະເພາະກິດຈະການສຳລັບຈຸດປະສົງພິເສດໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍ ເລກທີ 5 ຂອງເອກະສານລາຍງານການເງິນສະເພາະກິດຈະການສຳລັບຈຸດປະສົງພິເສດ.

ປີການບັນຊີຂອງທະນາຄານແມ່ນເລີ່ມຕົ້ນແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

3. ການນຳສະເໜີເອກະສານລາຍງານການເງິນ

ທະນາຄານ ແລະ ບໍລິສັດໃນເຄືອຂອງທະນາຄານ ໄດ້ນຳສະເໜີໃບລາຍງານຖານະການເງິນສັງລວມກິດຈະການ ໂດຍລຽງລຳດັບຕາມສະພາບຄ່ອງ. ຊັບສິນ ແລະ ໜີ້ສິນທາງການເງິນ ແມ່ນໄດ້ຖືກລາຍງານເປັນມູນຄ່າລວມໃນໃບລາຍງານຖານະການເງິນສັງລວມກິດຈະການ. ຊັບສິນ ແລະ ໜີ້ສິນທາງການເງິນ ຈະຖືກນຳມາຫັກລ້າງກັນ ແລະ ລາຍງານເປັນມູນຄ່າສຸດທິ ໃນເວລາທີ່ ບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງຫາກມີຄວາມຕ້ອງການຢາກຫັກລ້າງ ໃນທຸກໆກໍລະນີຕໍ່ໄປນີ້:

- ການດຳເນີນທຸລະກິດປົກກະຕິ
- ໃນກໍລະນີທີ່ທຸລະກິດມີການກະທຳຄວາມຜິດ
- ໃນກໍລະນີຂອງການລົ້ມລະລາຍ ຫຼື ການລົ້ມລະລາຍຂອງທະນາຄານ ແລະ/ຫຼື ຄູ່ຄ້າຂອງຕົນ.

4. ພື້ນຖານຂອງການສັງລວມກິດຈະການ

ເອກະສານລາຍງານການເງິນສັງລວມກິດຈະການແມ່ນປະກອບດ້ວຍເອກະສານລາຍງານການເງິນຂອງທະນາຄານ ແລະ ບໍລິສັດໃນເຄືອ ນະວັນທີ 31 ທັນວາ 2019. ບໍລິສັດໃນເຄືອແມ່ນບໍລິສັດຜູ້ຖືກລົງທຶນທີ່ທະນາຄານຄວບຄຸມ. ການຄວບຄຸມແມ່ນບັນລຸໄດ້ໃນເວລາທີ່ທະນາຄານໄດ້ຖືກຮັບ ຫຼື ມີສິດທິ, ທີ່ຈະໄດ້ຮັບຄືນຈາກຕົວປ່ຽນແປງຈາກການມີສ່ວນຮ່ວມຂອງຕົນກັບນັກລົງທຶນ ແລະ ມີຄວາມສາມາດໃນການສົ່ງຜົນກະທົບຕໍ່ຜົນຕອບແທນທີ່ຜ່ານອຳນາດຂອງຕົນຕໍ່ຜູ້ນັກລົງທຶນ.

ໂດຍທົ່ວໄປ, ມີຂໍ້ສົມມຸດຖານທີ່ວ່າຜົນຂອງສິດລົງຄະແນນສ່ວນໃຫຍ່ຢູ່ໃນການຄວບຄຸມໄດ້. ຢ່າງໃດກໍຕາມ, ພາຍໃຕ້ສະຖານະການສະເພາະໃດໜຶ່ງ, ທະນາຄານອາດຈະຍັງໃຊ້ການຄວບຄຸມທີ່ມີການຖືຮຸ້ນໜ້ອຍກວ່າ 50% ຫຼື ອາດບໍ່ສາມາດທີ່ຈະອອກດຳເນີນຄວບຄຸມ ແມ້ນກະທັ້ງມີການຖືຄອງຮຸ້ນຢູ່ຫຼາຍກວ່າ 50% ຂອງຮຸ້ນຂອງນິຕິບຸກຄົນ. ເມື່ອການປະເມີນວ່າ ມັນມີອຳນາດຫຼາຍກວ່ານັກລົງທຶນ ແລະ ຈຶ່ງຄວບຄຸມການປ່ຽນແປງຂອງຜົນຕອບແທນຂອງຕົນ, ທະນາຄານພິຈາລະນາຂໍ້ເທັດຈິງທີ່ກ່ຽວຂ້ອງທັງໝົດ ແລະ ສະພາບການ, ລວມທັງ:

- ຈຸດປະສົງ ແລະ ການອອກແບບຂອງນັກລົງທຶນ
- ການກິດຈະກຳທີ່ກ່ຽວຂ້ອງ ແລະ ວິທີການຕັດສິນໃຈກ່ຽວກັບກິດຈະກຳເຫຼົ່ານັ້ນ ບໍ່ວ່າຈະໂດຍທະນາຄານ ຫຼື ບໍ່ສາມາດຊີ້ນຳບັນດາກິດຈະກຳ
- ຂໍ້ຜູກພັນສັນຍາເຊັ່ນ: ສິດໃນການຮ້ອງ, ສິດໃນການເພີ່ມ ແລະ ສິດໃນການຊຳລະ
- ບໍ່ວ່າທະນາຄານໄດ້ຖືກຮັບ ຫຼື ມີສິດ ທີ່ຈະໄດ້ຮັບຄືນຈາກຕົວປ່ຽນແປງຈາກການມີສ່ວນຮ່ວມຂອງຕົນກັບນັກລົງທຶນ ແລະ ມີຄວາມສາມາດໃນການສົ່ງຜົນກະທົບຕໍ່ຜົນຕອບແທນທີ່ຜ່ານອຳນາດຂອງຕົນຕໍ່ຜູ້ນັກລົງທຶນ.

ກຳໄລ ຫຼື ຂາດທຶນ ແລະ ອົງປະກອບຂອງ OCI ແມ່ນຖືກແບ່ງປັນໃຫ້ກັບຜູ້ຖືຫຸ້ນຂອງບໍລິສັດແມ່ຂອງທະນາຄານ ແລະ ສ່ວນໄດ້ເສຍທີ່ບໍ່ມີການຄວບຄຸມ, ເຖິງແມ່ນວ່າສ່ວນໄດ້ເສຍທີ່ບໍ່ມີການຄວບຄຸມຈະມີຍອດຂາດດຸນ.

ໃນເວລາທີ່ມີຄວາມຈຳເປັນ, ການດັດແກ້ແມ່ນໄດ້ເຮັດໃນເອກະສານລາຍງານການເງິນຂອງບໍລິສັດໃນເຄືອເພື່ອທີ່ຈະເຮັດໃຫ້ນະໂຍບາຍການບັນຊີຂອງເຂົາເຈົ້າ ໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ. ຊັບສິນລະຫວ່າງກຸ່ມທັງໝົດ, ໜີ້ສິນ, ທຶນ, ລາຍຮັບ, ລາຍຈ່າຍ ແລະ ກະແສເງິນສົດທີ່ກ່ຽວຂ້ອງກັບທຸລະກຳລະຫວ່າງທະນາຄານແລະບໍລິສັດໃນເຄືອໄດ້ຖືກລົບລ້າງຢ່າງເຕັມສ່ວນໃນການສັງລວມກິດຈະການ.

ການປ່ຽນແປງໃນຜົນປະໂຫຍດໃນກຳມະສິດຂອງບໍລິສັດໃນເຄືອ, ໂດຍປາສະຈາກການສູນເສຍການຄວບຄຸມ, ຖືກບັນທຶກການເຮັດທຸລະກຳທາງດ້ານທຶນ. ຖ້າຫາກວ່າກຸ່ມບໍລິສັດສູນເສຍການຄວບຄຸມໃນບໍລິສັດໃນເຄືອ, ຈະຖືກຢຸດການຮັບຮູ້ໃນຊັບສິນທີ່ກ່ຽວຂ້ອງ (ລວມທັງຄ່າຄວາມນິຍົມ), ໜີ້ສິນ, ສ່ວນໄດ້ເສຍທີ່ບໍ່ສາມາດຄວບຄຸມ (NCI) ແລະ ອົງປະກອບອື່ນໆຂອງທຶນ, ໃນຂະນະທີ່ໃດຮັບກຳໄລ ຫຼື ຂາດທຶນແມ່ນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ. ການລົງທຶນໃດໜຶ່ງທີ່ໄດ້ຮັກສາຈະຖືກຮັບຮູ້ຢູ່ໃນມູນຄ່າຍຸຕິທຳ ນະວັນທີຂອງການສູນເສຍຂອງການຄວບຄຸມ.

5. ການປ່ຽນແປງໃນນະໂຍບາຍການບັນຊີແລະການເປີດເຜີຍຂໍ້ມູນ

5.1 ມາດຕະຖານໃໝ່ ແລະ ການປັບປຸງ ແລະ ການຕີຄວາມໝາຍໃໝ່

ນະໂຍບາຍການບັນຊີທີ່ທະນາຄານນຳໃຊ້ເພື່ອກະກຽມເອກະສານລາຍງານການເງິນສັງລວມຂອງກິດຈະການແມ່ນມີຄວາມສອດຄ່ອງກັບເອກະສານລາຍງານການເງິນທີ່ກະກຽມສຳລັບເອກະສານລາຍງານທາງການເງິນປະຈຳປີຂອງທະນາຄານ ນະປີທີ່ສິ້ນສຸດວັນທີ 31 ທັນວາ 2018, ຍົກເວັ້ນ ສຳລັບການນຳໃຊ້ມາດຕະຖານໃໝ່ທີ່ມີຜົນນະວັນທີ 1 ມັງກອນ 2019 ດັ່ງທີ່ໄດ້ອະທິບາຍຂ້າງລຸ່ມ. ທະນາຄານຍັງບໍ່ໄດ້ນຳໃຊ້ມາດຕະຖານ, ການຕີຄວາມໝາຍ ຫຼື ການປັບປຸງອື່ນໆລ່ວງໜ້າ ທີ່ໄດ້ເຜີຍແຜ່ອອກມາແລ້ວ ແຕ່ຍັງບໍ່ທັນມີຜົນບັງຄັບໃຊ້.

5.2 IFRS 16 ການເຊົ່າ

ມາດຕະຖານ IFRS 16 ໄດ້ຖືກນຳມາແທນ ມາດຕະຖານ IAS 17 ສັນຍາເຊົ່າ ໂດຍ IFRIC 4 ໄດ້ກຳນົດວ່າ ສັນຍາແມ່ນປະກອບດ້ວຍສັນຍາເຊົ່າ, SIC-15 ສັນຍາເຊົ່າເພື່ອການດຳເນີນງານ-ແຮງຈູງໃຈ ແລະ SIC-27 ການປະເມີນເນື້ອຫາຂອງທຸລະກຳ ທີ່ນອນຢູ່ໃນແບບສັນຍາເຊົ່າທີ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່. ມາດຕະຖານໄດ້ກຳນົດ ຫຼັກການສຳລັບການຮັບຮູ້, ການຕີມູນຄ່າ, ການນຳສະເໜີ ແລະ ການເປີດເຜີຍສັນຍາເຊົ່າ ແລະ ຍັງຮຽກຮ້ອງໃຫ້ຜູ້ເຊົ່າຄຳນຶງເຖິງສັນຍາເຊົ່າສ່ວນໃຫຍ່ພາຍໃຕ້ຮູບແບບດ່ຽວໃນໃບລາຍງານຖານະການເງິນ.

ທະນາຄານໄດ້ຮັບຮອງເອົາ IFRS 16 ໂດຍ ນຳໃຊ້ວິທີການແກ້ໄຂຍ້ອນຫຼັງໃນວັນທີ່ນຳໃຊ້ເທື່ອທຳອິດ ຄືວັນທີ 01 ມັງກອນ 2019. ພາຍໃຕ້ວິທີນີ້, ມາດຕະຖານແມ່ນຈະຖືກນຳໄປໃຊ້ຍ້ອນຫຼັງກັບຜົນສະສົມຂອງການເລີ່ມນຳໃຊ້ມາດຕະຖານທີ່ຖືກຮັບຮູ້ ນະວັນທີ່ມາໃຊ້ເທື່ອທຳອິດ. ທະນາຄານເລືອກທີ່ຈະໃຊ້ການປ່ຽນແປງທີ່ສາມາດນຳໄປໃຊ້ໄດ້ຈິງ ໂດຍອະນຸຍາດນຳໃຊ້ມາດຕະຖານນີ້ກັບສັນຍາທີ່ລະບຸໄວ້ກ່ອນໜ້ານີ້ ວ່າເປັນສັນຍາເຊົ່າທີ່ໃຊ້ນະໂຍບາຍບັນຊີ IAS 17 ແລະ IFRIC 4 ທີ່ຜ່ານມາ ນະວັນທີ່ມີການນຳໃຊ້ເທື່ອທຳອິດ. ນອກນັ້ນ ທະນາຄານຍັງເລືອກທີ່ຈະນຳໃຊ້ ການຍົກເວັ້ນສຳລັບບັນດາສັນຍາເຊົ່າທີ່ມີໄລຍະການເຊົ່າ 12 ເດືອນ ຫຼື ໄລຍະເຊົ່າທີ່ສັ້ນກວ່າ ແລະ ບໍ່ມີຈຳກັດທາງເລືອກໃນການຊື້ ('ການເຊົ່າໄລຍະສັ້ນ') ແລະ ສັນຍາເຊົ່າສຳລັບຊັບສິນມີມູນຄ່າທີ່ຕ່ຳ ('ຊັບສິນທີ່ມູນຄ່າຕ່ຳ').

ຜົນຈາກການນຳໃຊ້ IFRS 16 ນະວັນທີ 01 ມັງກອນ 2019 (ເພີ່ມຂຶ້ນ/ຫຼຸດລົງ) ດັ່ງຕໍ່ໄປນີ້:

	ລ້ານກີບ
ຊັບສິນ	
ສິດນຳໃຊ້ຊັບສິນ	41.695
ການຈ່າຍລ່ວງໜ້າ	(38.381)
ຊັບສິນອາກອນລໍຖ້າຊຳລະສະສາງ	1.362
ລວມຊັບສິນ	**4.676**
ໜີ້ສິນ	
ໜີ້ສິນຕາມສັນຍາເຊົ່າ	8.987
ລວມໜີ້ສິນ	**8.987**
ລວມການດັດແກ້ໃນບັນຊີທຶນ:	
ກຳໄລສະສົມ	**(4.311)**

5. ການປ່ຽນແປງໃນນະໂຍບາຍການບັນຊີແລະການເປີດເຜີຍຂໍ້ມູນ (ຕໍ່)

5.2 IFRS 16 ການເຊົ່າ (ຕໍ່)

ທະນາຄານມີສັນຍາເຊົ່າສຳລັບຫຼາຍລາຍການຂອງເຄື່ອງຈັກຕ່າງໆ. ກ່ອນທີ່ຈະນຳໃຊ້ ມາດຕະຖານ IFRS 16, ທະນາຄານໄດ້ ມີການຈັດປະເພດຂອງສັນຍາເຊົ່າແຕ່ລະອັນ (ໃນຖານະຜູ້ເຊົ່າ) ໃນມື້ຮັບຮູ້ວ່າເປັນການເຊົ່າທາງການເງິນ ຫຼື ການເຊົ່າເພື່ອ ການດຳເນີນງານ. ສຳລັບນະໂຍບາຍການບັນຊີກ່ອນໜ້າວັນທີ 1 ມັງກອນ 2019 ແມ່ນຖືກອະທິບາຍໃນບົດອະທິບາຍເລກທີ 6.14 ການເຊົ່າ.

ເມື່ອນຳໃຊ້ມາດຕະຖານ IFRS 16 ແລ້ວ, ທະນາຄານຈະໃຊ້ວິທີການຮັບຮູ້ ແລະ ການວັດແທກແບບດ່ຽວສຳລັບສັນຍາເຊົ່າ ທັງໝົດ ຍົກເວັ້ນສັນຍາເຊົ່າທີ່ມີໄລຍະສັ້ນ ແລະ ສັນຍາເຊົ່າຊັບສິນທີ່ມີລາຄາຕ່ຳ. ສຳລັບນະໂຍບາຍການບັນຊີເລີ່ມຈາກວັນທີ 1 ມັງກອນ 2019 ແມ່ນຖືກອະທິບາຍໃນບົດອະທິບາຍເລກທີ 6.14 ການເຊົ່າ. ມາດຕະຖານດັ່ງກ່າວສະໜອງຂໍ້ກຳນົດການ ຫັນປ່ຽນສະເພາະ ແລະ ວິທີທີ່ເໝາະສົມຕົວຈິງ, ເຊິ່ງໄດ້ຖືກນຳໃຊ້ໂດຍທະນາຄານ.

ກ) ຄຸນລັກສະນະຂອງການນຳໃຊ້ IFRS 16

- *ການເຊົ່າທີ່ຖືກຈັດປະເພດເປັນການເຊົ່າເພື່ອການດຳເນີນງານໃນກ່ອນໜ້າ*

ທະນາຄານຮັບຮູ້ ສິດນຳໃຊ້ຊັບສິນ ແລະ ໜີ້ສິນຕາມສັນຍາເຊົ່າສຳລັບສັນຍາເຊົ່າທີ່ໄດ້ຖືກຈັດເຂົ້າເປັນປະເພດສັນຍາເຊົ່າເມື່ອ ບໍ່ດົນມານີ້ ເປັນສັນຍາເຊົ່າທາງການເງິນ ຫຼື ສັນຍາເຊົ່າເພື່ອການດຳເນີນງານ, ຍົກເວັ້ນສັນຍາເຊົ່າໄລຍະສັ້ນ ແລະ ສັນຍາເຊົ່າ ຊັບສິນທີ່ມີມູນຄ່າຕ່ຳ. ສິດນຳໃຊ້ຊັບສິນ ສຳລັບສັນຍາເຊົ່າສ່ວນໃຫຍ່ແມ່ນຖືກຮັບຮູ້ຕາມມູນຄ່າບັນຊີ ຄ້າຍກັບວ່າ ມາດຕະຖານດັ່ງກ່າວແມ່ນມີການນຳໃຊ້ມາໂດຍຕະຫຼອດ, ນອກເໜືອຈາກການໃຊ້ອັດຕາການເພີ່ມຂຶ້ນຂອງເງິນໃຫ້ກູ້ຢືມ ນະ ມື້ເລີ່ມຕົ້ນນຳໃຊ້ເທື່ອທຳອິດ. ໃນບາງສັນຍາເຊົ່າ, ສິດນຳໃຊ້ຊັບສິນແມ່ນຖືກຮັບຮູ້ຕາມມູນຄ່າເທົ່າກັນກັບໜີ້ສິນຕາມສັນຍາ ເຊົ່າ, ຊຶ່ງໄດ້ຖືກດັດແກ້ດ້ວຍລາຍຈ່າຍຈ່າຍລ່ວງໜ້າທີ່ກ່ຽວຂ້ອງ ແລະ ຄ່າເຊົ່າຄ້າງຈ່າຍທີ່ເຄີຍຮັບຮູ້ມາກ່ອນໜ້ານີ້. ໜີ້ສິນຕາມ ສັນຍາເຊົ່າຈະຖືກຮັບຮູ້ຕາມມູນຄ່າປັດຈຸບັນຂອງຈຳນວນເງິນທີ່ຍັງຄ້າງຊຳລະ, ຄິດໄລ່ຫຼຸດຄ່າດ້ວຍ ອັດຕາການເພີ່ມຂຶ້ນຂອງ ເງິນກູ້ຢືມ ນະວັນທີ່ມີການເລີ່ມນຳໃຊ້ເປັນເທື່ອທຳອິດ.

ນອກຈາກນັ້ນ, ທະນາຄານຍັງໄດ້ນຳໄປໃຊ້ໃນການປະຕິບັດງານຕົວຈິງທີ່ມີຢູ່ ຄື:

- ນຳໃຊ້ອັດຕາຄິດໄລ່ຫຼຸດອັດຕາດຽວເພື່ອຄິດໄລ່ໃນລາຍການສັນຍາເຊົ່າທີ່ມີລັກສະນະຄ້າຍຄືກັນຢ່າງສົມເຫດສົມຜົນ;
- ອີງໃສ່ການປະເມີນຜົນ ເບິ່ງວ່າການເຊົ່າມີຜົນບັງຄັບໃຊ້ທັນທີກ່ອນທີ່ນຳໃຊ້ໃນເບື້ອງຕົ້ນ ຫຼື ບໍ່;
- ນຳໃຊ້ຂໍ້ຍົກເວັ້ນການເຊົ່າໄລຍະສັ້ນໃຫ້ແກ່ສັນຍາເຊົ່າທີ່ຄົບກຳນົດພາຍໃນ 12 ເດືອນ ນັບຈາກວັນທີ່ນຳໃຊ້ເປັນຕົ້ນໄປ;
- ຍົກເວັ້ນຄ່າໃຊ້ຈ່າຍທາງກົງໃນເບື້ອງຕົ້ນຈາກການວັດແທກສິດນຳໃຊ້ຊັບສິນ ໃນວັນທີທີ່ນຳໃຊ້ໃນເບື້ອງຕົ້ນ;
- ນຳໃຊ້ການທຳຄວາມເຂົ້າໃຈເພື່ອກຳນົດວ່າ ສັນຍາດັ່ງກ່າວມີທາງເລືອກໃນການຂະຫຍາຍໄລຍະເວລາ ຫຼື ຍົກເລີກສັນຍາ ເຊົ່າ.

5. ການປ່ຽນແປງໃນນະໂຍບາຍການບັນຊີແລະການເປີດເຜີຍຂໍ້ມູນ (ຕໍ່)

5.2 *IFRS 16 ການເຊົ່າ* (ຕໍ່)

ກ) ຄຸນລັກສະນະຂອງການນຳໃຊ້ IFRS 16 (ຕໍ່)

ໜີ້ສິນຕາມສັນຍາເຊົ່າ ນະວັນທີ 01 ມັງກອນ 2019 ສາມາດສົມທຽບກັບພາລະຜູກພັນການເຊົ່າເພື່ອການດຳເນີນງານ ນະວັນທີ 31 ທັນວາ 2018 ດັ່ງນີ້:

	ລ້ານກີບ
ພາລະຜູກພັນທາງການເຊົ່າເພື່ອການດຳເນີນງານ ນະວັນທີ 31 ທັນວາ 2018	**13.710**
ອັດຕາດອກເບ້ຍເງິນກູ້ຢືມສະເລ່ຍຖ່ວງນ້ຳໜັກ ນະວັນທີ 01 ມັງກອນ 2019	5,59%
ສ່ວນຫຼຸດພາລະຜູກພັນຕາມການເຊົ່າເພື່ອການດຳເນີນງານ ນະວັນທີ 01 ມັງກອນ 2019	9.000
ຫັກ:	
ພາລະຜູກພັນທີ່ກ່ຽວຂ້ອງກັບການເຊົ່າໄລຍະສັ້ນ	-
ພາລະຜູກພັນທີ່ກ່ຽວຂ້ອງກັບການເຊົ່າຊັບສິນທີ່ມີມູນຄ່າຕ່ຳ	(13)
ໜີ້ສິນຕາມສັນຍາເຊົ່າ ນະວັນທີ 01 ມັງກອນ 2019	**8.987**

5.3 ຜົນປະໂຫຍດຫຼັງອອກການ

ເລີ່ມວັນທີ 01 ມັງກອນ 2019, ນະໂຍບາຍຂອງທະນາຄານຕໍ່ກັບຜົນປະໂຫຍດພາຍຫຼັງອອກການແມ່ນຖືກປ່ຽນເປັນນະໂຍບາຍໃໝ່ຕາມບົດອະທິບາຍເລກທີ 6.16. ການປ່ຽນແປງນີ້ເປັນການປ່ຽນແປງໂດຍສະໝັກໃຈຂອງທະນາຄານໃນນະໂຍບາຍການບັນຊີ. ດັ່ງນັ້ນ, ທະນາຄານໄດ້ນຳໃຊ້ນະໂຍບາຍແບບຄາດການໃນອະນາຄົດສຳລັບການປ່ຽນແປງທາງການບັນຊີນີ້, ເຊິ່ງວ່າ ທະນາຄານໄດ້ນຳໃຊ້ນະໂຍບາຍການບັນຊີໃໝ່ສຳລັບຜົນປະໂຫຍດຫຼັງອອກການທີ່ເກີດຂຶ້ນຫຼັງຈາກວັນທີທີ່ໄດ້ປ່ຽນນະໂຍບາຍ.

5.4 *IFRIC ການຕີຄວາມໝາຍ 23 ຄວາມບໍ່ແນ່ນອນກ່ຽວກັບການປະຕິບັດດ້ານອາກອນລາຍໄດ້*

ການຕີຄວາມໝາຍສະເໜີການເອົາໃຈໃສ່ຕໍ່ກັບການບັນຊີສຳລັບອາກອນລາຍໄດ້ໃນເວລາທີ່ການປະຕິບັດດ້ານອາກອນມີຄວາມບໍ່ແນ່ນອນ ທີ່ມີຜົນກະທົບຕໍ່ການນຳໃຊ້ມາດຕະຖານ IAS 12 ແລະ ບໍ່ໄດ້ນຳໃຊ້ສຳລັບການເກັບອາກອນ ຫຼື ອື່ນໆ ນອກເໜືອຈາກຂອບເຂດຂອງ ມາດຕະຖານ IAS 12, ອີກທັງບໍ່ໄດ້ລວມເອົາຂໍ້ຮຽກຮ້ອງໃນການມອບດອກເບ້ຍ ແລະ ຄ່າປັບໄໝທີ່ກ່ຽວຂ້ອງກັບການປະຕິບັດອາກອນທີ່ບໍ່ແນ່ນອນ. ການຕີຄວາມໝາຍສະເໜີໃຫ້ເອົາໃຈໃສ່ສະເພາະບັນຫາດັ່ງຕໍ່ໄປນີ້:

- ▶ ຫາກວ່າວິສາຫະກິດພິຈາລະນາເຖິງການປະຕິບັດດ້ານອາກອນທີ່ບໍ່ແນ່ນອນເປັນກໍລະນີສະເພາະ;
- ▶ ຂໍ້ສົມມຸດຖານທີ່ວິສາຫະກິດກິດສ້າງຂຶ້ນ ກ່ຽວກັບການກວດສອບການປະຕິບັດອາກອນ ໂດຍເຈົ້າໜ້າທີ່ສ່ວຍສາອາກອນ;
- ▶ ວິທີການທີ່ວິສາຫະກິດກຳນົດກຳໄລທີ່ຖືກເສຍອາກອນ (ຂາດທຶນທາງອາກອນ), ພື້ນຖານການຄິດໄລ່ອາກອນ, ການຂາດທຶນທາງອາກອນທີ່ບໍ່ໄດ້ນຳໃຊ້, ອາກອນຫັກບໍ່ໄດ້ ແລະ ອັດຕາອາກອນ;
- ▶ ວິທີການທີ່ວິສາຫະກິດພິຈາລະນາການປ່ຽນແປງໃນຄວາມເປັນຈິງ ແລະ ສະຖານະການຈິງ.

5. ການປ່ຽນແປງໃນນະໂຍບາຍການບັນຊີແລະການເປີດເຜີຍຂໍ້ມູນ (ຕໍ່)

5.4 *IFRIC ການຕີຄວາມໝາຍ 23 ຄວາມບໍ່ແນ່ນອນກ່ຽວກັບການປະຕິບັດດ້ານອາກອນລາຍໄດ້* (ຕໍ່)

ທະນາຄານຕ້ອງກຳນົດວ່າຄວນພິຈາລະນາການປະຕິບັດດ້ານອາກອນທີ່ບໍ່ແນ່ນອນແຕ່ລະກໍລະນີເປັນສະເພາະ ຫຼື ລວມເຂົ້າກັນກັບ ໜຶ່ງ ຫຼື ຫຼາຍວິທີການປະຕິບັດອາກອນທີ່ບໍ່ແນ່ນອນ. ວິທີການທີ່ດີກວ່າໃນການຄາດຄະເນການແກ້ໄຂຄວາມບໍ່ແນ່ນອນຄວນໄດ້ຮັບການປະຕິບັດ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

6.1 *ການແລກປ່ຽນເງິນຕ່າງປະເທດ*

ການເຮັດທຸລະກຳທີ່ເປັນເງິນຕາຕ່າງປະເທດແມ່ນ ຖືກບັນທຶກ ແລະ ແລກປ່ຽນເປັນສະກຸນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນນະວັນທີທີ່ເຮັດທຸລະກຳ. ຊັບສິນ ແລະ ໜີ້ສິນທີ່ເປັນສະກຸນເງິນຕ່າງປະເທດ ແມ່ນຈະໄດ້ ຖືກແລກປ່ຽນຄືນເປັນເງິນກີບ ໂດຍໃຊ້ອັດຕາແລກປ່ຽນນະວັນທີສ້າງບົດລາຍງານ (ເບິ່ງລາຍລະອຽດອັດຕາແລກປ່ຽນຂອງສະກຸນເງິນຕາຕ່າງປະເທດ ທີ່ໃຊ້ໃນການແລກປ່ຽນເປັນເງິນກີບ ນະວັນທີ 31 ທັນວາ 2019 ແລະ 31 ທັນວາ 2018 ໃນ ບົດອະທິບາຍເລກທີ 44). ສ່ວນຜິດຜ່ຽງທີ່ເກີດຂຶ້ນຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນ ໃນມື້ສ້າງບົດລາຍງານແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານສົ່ງລວມກິດຈະການ.

6.2 *ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ*

6.2.1 *ວັນທີຂອງການຮັບຮູ້*

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແລະ ໜີ້ຕ້ອງສົ່ງລູກຄ້າ, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້ - ຂາຍ ເຊັ່ນ ມື້ທີ່ທະນາຄານກາຍເປັນພາກສ່ວນໜຶ່ງໃນພັນທະສັນຍາຂອງເຄື່ອງມືທາງການເງິນ. ນີ້ລວມທັງ "ວິທີການຄ້າປົກກະຕິ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ຮຽກຮ້ອງໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໂດຍກົດໝາຍ ຫຼື ລະບຽບການເງິນໃນສະຖານທີ່ຊື້ຂາຍ. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ໃນເມື່ອເງິນໄດ້ໂອນເຂົ້າບັນຊີ ຂອງລູກຄ້າຮຽບຮ້ອຍແລ້ວ. ທະນາຄານຮັບຮູ້ໜີ້ຕ້ອງສົ່ງລູກຄ້າເມື່ອທະນາຄານໄດ້ຮັບເງິນຈາກລູກຄ້າເປັນທີ່ຮຽບຮ້ອຍແລ້ວ.

6.2.2 *ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ*

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບລັກສະນະຂອງເຄື່ອງມືທາງການເງິນ ແລະ ຈຸດປະສົງຂອງຄະນະບໍລິຫານຕໍ່ເຄື່ອງມືທາງການເງິນທີ່ຕ້ອງການ. ເຄື່ອງມືທາງການເງິນທັງໝົດແມ່ນຖືກຕີມູນຄ່າໃນເບື້ອງຕົ້ນ ຕາມມູນຄ່າຍຸຕິທຳບວກກັບລາຍຈ່າຍທີ່ເກີດຈາກການຊື້, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ມູນຄ່າຍຸຕິທຳຖືກບັນທຶກໂດຍຜ່ານກຳໄລ ແລະ ຂາດທຶນ.

6.2.3 *ຊັບສິນທາງການເງິນ ຫຼື ໜີ້ສິນທາງການເງິນທີ່ມີໄວ້ເພື່ອການຄ້າ*

ຊັບສິນທາງການເງິນ ຫຼື ໜີ້ສິນທາງການເງິນທີ່ມີໄວ້ເພື່ອການຄ້າ ແມ່ນຖືກບັນທຶກໃນໃບລາຍງານຖານະການເງິນລວມກິດຈະການຕາມມູນຄ່າຍຸຕິທຳ. ການປ່ຽນແປງຂອງມູນຄ່າຍຸຕິທຳແມ່ນຖືກບັນທຶກເປັນ "ກຳໄລ/(ຂາດທຶນ) ສຸດທິໃນຫຼັກຊັບ ແລະ ການຊື້-ຂາຍເງິນຕາຕ່າງປະເທດ". ລາຍຮັບດອກເບ້ຍ ແລະ ເງິນປັນຜົນ ແມ່ນຖືກບັນທຶກເປັນ "ກຳໄລ/(ຂາດທຶນ) ສຸດທິຈາກຫຼັກຊັບ ແລະ ການຊື້ - ຂາຍເງິນຕາຕ່າງປະເທດ". ອີງຕາມ ກຳນົດເວລາຂອງສັນຍາ ຫຼື ເມື່ອສິດໃນການຈ່າຍໄດ້ເກີດຂຶ້ນ.

ເຊິ່ງລວມຢູ່ໃນປະເພດນີ້ແມ່ນມີຫຼັກຊັບທຶນ ທີ່ມີໄດ້ມາໂດຍຈຸດປະສົງຫຼັກໃນການຂາຍ ຫຼື ຊື້ຄືນໃນໄລຍະເວລາອັນໃກ້.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.2 *ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

6.2.4 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ອັດຕາດອກເບ້ຍທີ່ແທ້ຈິງ (EIR) ແມ່ນອັດຕາສ່ວນຫຼຸດຕົວຈິງທີ່ໄດ້ຈາກການຄາດຄະເນການຊຳລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ຄ່າເສື່ອມຕົ້ນທຶນຂອງຊັບສິນ ຫຼື ໜີ້ສິນທາງການເງິນແມ່ນຖືກດັດແກ້ ເມື່ອທະນາຄານໄດ້ແກ້ໄຂການຄາດຄະເນລາຍຮັບ ຫຼື ລາຍຈ່າຍຂອງທະນາຄານ ໂດຍຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ແລະ ສ່ວນຜິດດ່ຽງຂອງ ມູນຄ່າດັ່ງກ່າວຈະຖືກບັນທຶກເປັນ 'ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ' ສຳລັບຊັບສິນທາງການເງິນ ແລະ 'ດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືດອກເບ້ຍ' ສຳລັບໜີ້ສິນທາງການເງິນ. ນະໂຍບາຍການບັນຊີສຳລັບວິທີ EIR ແມ່ນມີຄວາມແຕກຕ່າງຕາມແຕ່ລະປະເພດຂອງການນຳໃຊ້ເຄື່ອງມື ເຊິ່ງໄດ້ອະທິບາຍເພີ່ມເຕີມບົດອະທິບາຍເລກທີ:

- 6.2.7 ສຳລັບ 'ການລົງທຶນທີ່ຖືໄວ້ຈົນຄົບກຳນົດ'
- 6.2.8 ສຳລັບ 'ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ'
- 6.2.9 ສຳລັບ 'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ແຫຼ່ງທຶນກູ້ຢືມອື່ນ'
- 6.4 ສຳລັບ 'ການເສື່ອມມູນຄ່າຂອງຊັບສິນທາງການເງິນ';
- 6.7 ສຳລັບ 'ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ'

6.2.5 *ມື້ທີ 1 ກຳໄລ ຫຼື ຂາດທຶນ*

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸຕິທຳຂອງລາຄາຕາມທ້ອງຕະຫຼາດໃນປັດຈຸບັນ ຂອງເຄື່ອງມືການເງິນອັນດຽວກັນ ຫຼື ອີງຕາມມູນຄ່າທີ່ໄດ້ສຳຫຼວດໃນຕະຫຼາດ, ທະນາຄານຮັບຮູ້ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸຕິທຳ ('ມື້ທີ 1' ກຳໄລ ຫຼື ຂາດທຶນ) ໃນ 'ລາຍຮັບສຸດທິຈາກການຄ້າ'. ໃນກໍລະນີທີ່ມູນຄ່າຍຸຕິທຳຖືກກຳນົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສຳຫຼວດ, ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າທີ່ໄດ້ຈາກນຳໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອຂໍ້ມູນສາມາດຊອກຫາໄດ້ ຫຼື ເມື່ອເຄື່ອງມືການເງິນບໍ່ຖືກຮັບຮູ້.

6.2.6 *ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ*

ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ ປະກອບມີ ຫຼັກຊັບທຶນ. ຫຼັກຊັບທຶນຈະຖືກຈັດປະເພດເປັນຫຼັກຊັບປະເພດມີໄວ້ເພື່ອຂາຍ ຖ້າໃນກໍລະນີທີ່ຫຼັກຊັບດັ່ງກ່າວ ບໍ່ໄດ້ຖືກຈັດເປັນປະເພດຫຼັກຊັບມີໄວ້ເພື່ອຄ້າ ຫຼື ຫຼັກຊັບທີ່ບັນທຶກມູນຄ່າຍຸຕິທຳຜ່ານ ກຳໄລ ແລະ ຂາດທຶນ.

ທະນາຄານຍັງບໍ່ໄດ້ຮັບຮູ້ບັນດາເງິນກູ້ ຫຼື ໜີ້ຕ້ອງຮັບເປັນການລົງທຶນການເງິນມີໄວ້ເພື່ອຂາຍ.

ຫຼັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ໄດ້ຖືກຕີມູນຄ່າເປັນມູນຄ່າຍຸຕິທຳ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.2 *ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

6.2.6 *ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ* (ຕໍ່)

ກຳໄລ ຫຼື ຂາດທຶນທີ່ບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໂດຍກົງໃນປະເພດທຶນ (ໃນໃບລາຍງານຜົນການດຳເນີນງານນອກການທຸລະກິດ) ເປັນ 'ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ'. ເມື່ອການລົງທຶນດັ່ງກ່າວໝົດກຳນົດ, ກຳໄລ ຫຼື ຂາດທຶນສະສົມກ່ອນໜ້ານີ້ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການ ວ່າແມ່ນ 'ລາຍຮັບອື່ນໆຈາກການດຳເນີນງານ' ເມື່ອທະນາຄານລົງທຶນຫຼາຍກວ່າໜຶ່ງລາຍການໂດຍນຳໃຊ້ຫຼັກຊັບຄ້ຳປະກັນດຽວກັນ, ມັນຈະຖືກສະສາງອອກຕາມຫຼັກການເຂົ້າກ່ອນ-ອອກກ່ອນ. ເງິນປັນຜົນທີ່ຫາມາໄດ້ໃນຊ່ວງໄລຍະການຖືຊັບສິນການເງິນມີໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການວ່າເປັນ 'ລາຍຮັບອື່ນໆຈາກການດຳເນີນງານອື່ນໆ' ເມື່ອສິດຂອງການໄດ້ຮັບເງິນປັນຜົນຂອງທະນາຄານຖືກສ້າງຂຶ້ນ. ເມື່ອການຂາດທຶນເພີ່ມຂຶ້ນເນື່ອງຈາກການເສື່ອມມູນຄ່າຂອງການລົງທຶນດັ່ງກ່າວນັ້ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການວ່າເປັນ 'ການຫັກຄ່າເສື່ອມການລົງທຶນທາງການເງິນ' ໂດຍປ່ຽນຈາກ 'ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ'.

6.2.7 *ການລົງທຶນທີ່ຖືໄວ້ຈົນຄົບກຳນົດ*

ການລົງທຶນທີ່ຖືໄວ້ຈົນຄົບກຳນົດແມ່ນຊັບສິນທາງການເງິນທີ່ບໍ່ແມ່ນອະນຸພັນທາງການເງິນ ເຊິ່ງມີການກຳນົດໄວ້ຢ່າງຈະແຈ້ງ ຫຼື ສາມາດກຳນົດໄດ້ໄລຍະເວລາໃນການຊຳລະ ແລະ ໄດ້ກຳນົດວັນຄົບກຳນົດໄວ້ແລ້ວ, ເຊິ່ງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດ. ພາຍຫຼັງການຮັບຮູ້ມູນຄ່າເບື້ອງຕົ້ນ, ການລົງທຶນປະເພດຖືໄວ້ຈົນຄົບກຳນົດຈະຖືກບັນທຶກອີງຕາມມູນຄ່າຫຼຸດຕົ້ນທຶນ ໂດຍຄິດໄລ່ຕາມອັດຕາດອກເບ້ຍທີ່ແທ້ຈິງ. ການລົງທຶນປະເພດຖືໄວ້ຈົນຄົບກຳນົດຈະຖືກປະເມີນຄ່າເສື່ອມເປັນແຕ່ລະໄລຍະ. ຈະມີການຫັກຄ່າເສື່ອມຂອງຫຼັກຊັບປະເພດນີ້ ຖ້າຫາກມູນຄ່າຍຸຕິທຳມີການຫຼຸດລົງ ຫຼື ຫຼຸດລົງຕ່ຳກວ່າຕົ້ນທຶນຊື້ ຫຼື ໄລຍະເວລາຂອງການຫຼຸດລົງຂອງລາຄາມີລັກສະນະຍາວນານ. ຄ່າເສື່ອມທີ່ເກີດຈາກຫຼັກຊັບແບບນີ້ຈະຖືກບັນທຶກໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການ ໃນພາກສ່ວນຂອງ 'ລາຍຈ່າຍຈາກຂາດທຶນຄ່າເສື່ອມ'.

ຖ້າທະນາຄານຕ້ອງການຂາຍ ຫຼື ຈັດປະເພດການລົງທຶນທີ່ຖືໄວ້ຈົນຄົບກຳນົດໃໝ່ກ່ອນມື້ຄົບກຳນົດ (ນອກເໜືອຈາກມີເຫດການໃດໜຶ່ງສະເພາະ), ລາຍການຄັງຫຼັກຊັບທີ່ຖືກຈັດເປັນປະເພດ ຖືໄວ້ຈົນຄົບກຳນົດທັງໝົດຈະຖືກປ່ຽນແປງ ແລະ ຈະຕ້ອງຖືກຈັດປະເພດຄືນໃໝ່ເປັນ ຫຼັກຊັບມີໄວ້ເພື່ອຂາຍ. ນອກຈາກນີ້, ທະນາຄານຈະຖືກຫ້າມບໍ່ໃຫ້ຈັດປະເພດຊັບສິນການເງິນໃດໆໃຫ້ເປັນຊັບສິນການເງິນທີ່ຖືໄວ້ຈົນຄົບພາຍໃນ 2 ປີ.

6.2.8 *ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ*

'ໜີ້ຕ້ອງຮັບຈາກທະນາຄານອື່ນ' ແລະ 'ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ', ລວມມີຊັບສິນການເງິນທີ່ບໍ່ແມ່ນອະນຸພັນທີ່ມີໄລຍະເວລາ ຫຼື ສາມາດກຳນົດໄລຍະເວລາການຊຳລະທີ່ແນ່ນອນ ເຊິ່ງລາຄາຊັບສິນເຫຼົ່ານັ້ນບໍ່ໄດ້ມີການຊື້-ຂາຍໃນຕະຫຼາດ, ນອກເໜືອຈາກ:

- ທະນາຄານມີຄວາມຕັ້ງໃຈທີ່ຈະຂາຍທັນທີ ຫຼື ທະນາຄານສາມາດຂາຍໄດ້ໃນໄລຍະສັ້ນ ແລະ ນັ້ນກໍ່ຂຶ້ນຢູ່ກັບການຮັບຮູ້ເບື້ອງຕົ້ນ, ກຳນົດຕາມມູນຄ່າຍຸຕິທຳຜ່ານກຳໄລ ຫຼື ຂາດທຶນ;
- ທະນາຄານຮັບຮູ້ມູນຄ່າເບື້ອງຕົ້ນ ແລະ ກຳນົດເປັນຫຼັກຊັບເພື່ອຂາຍ;
- ທະນາຄານອາດຈະບໍ່ໄດ້ກຳໄລຈາກການລົງທຶນທັງໝົດ ເນື່ອງຈາກການເສື່ອມຄ່າຂອງຊັບສິນ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

6.2.8 ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຕໍ່)

ຫຼັງຈາກການປະເມີນເບື້ອງຕົ້ນ, ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ຈະຖືກບັນທຶກລົງບັນຊີນຳໃຊ້ ອັດຕາດອກເບ້ຍທີ່ແທ້ຈິງ ລົບໃຫ້ລາຍຈ່າຍຄ່າເສື່ອມ. ຄ່າເສື່ອມຖືກຄິດໄລ່ໂດຍຄຳນຶງເຖິງສ່ວນຫຼຸດຂອງຊັບສິນທີ່ໄດ້ມາ ແລະ ຄ່າທຳນຽມ ແລະ ຕົ້ນທຶນທີ່ເປັນ ສ່ວນໜຶ່ງຂອງອັດຕາດອກເບ້ຍທີ່ແທ້ຈິງ. ເພາະສະນັ້ນ, ທະນາຄານໄດ້ຮັບຮູ້ລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາຜົນຕອບແທນເຊິ່ງເປັນອັດຕາການຄາດຄະເນທີ່ດີທີ່ສຸດຂອງອັດຕາຜົນຕອບແທນຄົງທີ່ຕາມອາຍຸເງິນກູ້, ດັ່ງນັ້ນ, ຈຶ່ງມີການຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ແຕກຕ່າງກັນໃນການຄິດໄລ່ຄ່າທຳນຽມໃນໄລຍະຕ່າງໆ ແລະ ລັກສະນະອື່ນໆຂອງວົງຈອນຊີວິດຜະລິດຕະພັນ (ການຈ່າຍລ່ວງໜ້າ, ດອກເບ້ຍປັບໄໝ ແລະ ຄ່າບໍລິການ).

ຖ້າຫາກວ່າການຄາດຄະເນມີການປັບປຸງແກ້ໄຂ, ຈະຕ້ອງມີການບັນທຶກການດັດແກ້ເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງມູນຄ່າໃນໃບລາຍງານຖານະການເງິນ ອີງຕາມການເພີ່ມຂຶ້ນ ຫຼື ຫຼຸດລົງຂອງລາຍຮັບດອກເບ້ຍ. ຫຼັງຈາກນັ້ນ, ມູນຄ່າດັດແກ້ດັ່ງກ່າວຈະຖືກຄິດໄລ່ຄ່າເສື່ອມ ແລະ ຖືກບັນທຶກເປັນດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍໃນໃບລາຍງານຜົນການດຳເນີນງານສົງລວມກິດຈະການ.

ທະນາຄານອາດຈະອອກຂໍ້ຜູກພັນເງິນກູ້ເມື່ອເງິນກູ້ຖືກຖອນ, ເງິນກູ້ດັ່ງກ່າວນັ້ນຈະຖືກຈັດປະເພດເປັນການເຄື່ອນໄຫວທີ່ມີໄວ້ເພື່ອຄ້າຂາຍເພາະວ່າຈຸດປະສົງແມ່ນຂາຍເງິນກູ້ໄລຍະສັ້ນ. ຂໍ້ຜູກພັນເຫຼົ່ານີ້ຈະຖືກບັນທຶກ ແລະ ຖືກປະເມີນຕາມມູນຄ່າຍຸຕິທຳຜ່ານກຳໄລ ຫຼື ຂາດທຶນ.

ເມື່ອເງິນກູ້ຖືກຖອນ, ກໍ່ຈະຖືກຮັກສາໂດຍ ທະນາຄານ ແລະ ຈະບໍ່ຂາຍໃນໄລຍະສັ້ນ, ຂໍ້ຜູກພັນຈະຖືກບັນທຶກເມື່ອສັນຍາໄດ້ຖືກເຮັດຂຶ້ນ ແລະ ມີແນວໂນ້ມບົ່ງບອກວ່າການຂາດທຶນຈະເພີ່ມຂຶ້ນ (ຕົວຢ່າງ: ໜີ້ຕ້ອງສົ່ງໃຫ້ຄູ່ສັນຍາ).

6.2.9 ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ແຫຼ່ງທຶນກູ້ຢືມອື່ນ

'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ກອງທຶນກູ້ຢືມອື່ນໆ' ປະກອບມີຂໍ້ຕົກລົງຕາມສັນຍາທີ່ສົ່ງຜົນເຮັດໃຫ້ທະນາຄານມີພັນທະທີ່ ຕ້ອງຈ່າຍເງິນສົດ ຫຼື ຊັບສິນການເງິນອື່ນໆໃຫ້ແກ່ເຈົ້າຂອງສັນຍາ.

ຫຼັງຈາກມີການປະເມີນເບື້ອງຕົ້ນ, 'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ກອງທຶນກູ້ຢືມອື່ນໆ' ຈະຖືກປະເມີນອີງຕາມການຫັກມູນຄ່າເສື່ອມໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ. ມູນຄ່າເສື່ອມຖືກຄິດໄລ່ໂດຍອີງຕາມສ່ວນຫຼຸດ ຫຼື ສ່ວນຕ່າງ ຂອງໜີ້ ແລະ ຕົ້ນທຶນທີ່ເປັນສ່ວນໜຶ່ງຂອງການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ.

6.2.10 ການຈັດປະເພດຊັບສິນການເງິນຄືນໃໝ່

ເລີ່ມຈາກວັນທີ 1 ກໍລະກົດ 2008, ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ສຳລັບບັນດາຊັບສິນທາງການເງິນ ທີ່ບໍ່ແມ່ນອອກຈາກ 'ຊັບສິນທີ່ມີໄວ້ເພື່ອການຄ້າ' ໄປເປັນ 'ຊັບສິນທີ່ມີໄວ້ເພື່ອຂາຍ', 'ເງິນກູ້ ແລະ ໜີ້ຕ້ອງຮັບ', ຫຼື 'ຊັບສິນທີ່ຖືໄວ້ຈົນຄົບກຳນົດ'. ນັບຈາກວັນທີດັ່ງກ່າວ, ທະນາຄານຍັງໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ ບັນດາເຄື່ອງມືການເງິນທີ່ ນອກເໜືອຈາກ 'ເຄື່ອງມືການເງິນທີ່ມີໄວ້ເພື່ອຂາຍ' ໄປເປັນ 'ເງິນກູ້ ແລະ ໜີ້ຕ້ອງຮັບ'. ການຈັດປະເພດຄືນໃໝ່ຈະຖືກບັນທຶກດ້ວຍມູນຄ່າຍຸຕິທຳໃນມື້ທີ່ຕີມູນຄ່າຄືນ, ເຊິ່ງມູນຄ່າດັ່ງກ່າວນັ້ນຈະກາຍເປັນມູນຄ່າຕົ້ນທຶນໃໝ່.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

6.2.10 ການຈັດປະເພດຊັບສິນການເງິນຄືນໃໝ່ (ຕໍ່)

ສຳລັບຊັບສິນການເງິນທີ່ຖືກຈັດເປັນປະເພດອອກຈາກ 'ຊັບສິນທີ່ມີໄວ້ເພື່ອຂາຍ', ທຸກໆກຳໄລ ແລະ ຂາດທຶນທີ່ເກີດຈາກຊັບສິນດັ່ງກ່າວໃນໄລຍະຜ່ານມາທີ່ໄດ້ລົງບັນຊີເປັນທຶນເຈົ້າຂອງແມ່ນຖືກສະສາງໄປເປັນກຳໄລ ຫຼື ຂາດທຶນຈາກອາຍຸສັນຍາທີ່ຍັງເຫຼືອຂອງການລົງທຶນໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ. ທຸກໆສ່ວນຜິດຕ່ຽງລະຫວ່າງມູນຄ່າຕົ້ນທຶນໃໝ່ ແລະ ກະແສເງິນສົດທີ່ຄາດຄະເນໄວ້ແມ່ນຈະຖືກສະສາງອອກຕາມອາຍຸສັນຍາທີ່ຍັງເຫຼືອຂອງຊັບສິນໂດຍໃຊ້ອັດຕາດອກເບ້ຍທີ່ແທ້ຈິງ. ຖ້າຊັບສິນຖືກກຳນົດວ່າມີການເສື່ອມຄ່າມູນຄ່າທີ່ລົງບັນຊີເປັນທຶນເຈົ້າຂອງນັ້ນແມ່ນຈະຖືກນຳມາລາຍງານໃນໃບລາຍງານຜົນການເນີນງານສັງລວມກິດຈະການ.

ໃນບາງກໍລະນີ ທະນາຄານອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອະນຸພັນອອກຈາກ 'ຊັບສິນທີ່ມີໄວ້ເພື່ອການຄ້າ' ເປັນປະເພດ "ເງິນກູ້ ແລະ ໜີ້ຕ້ອງຮັບ" ຖ້າການເຄື່ອນໄຫວຂອງມັນສອດຄ່ອງກັບຄວາມໝາຍຂອງເງິນກູ້ ແລະ ໜີ້ຕ້ອງຮັບ ແລະ ທະນາຄານມີ ເຈດຈຳນົງໃດໜຶ່ງ ແລະ ສາມາດຄອບຄອງຊັບສິນທາງການເງິນ ສຳລັບເປັນຊັບສິນທີ່ຍຶດໄດ້ໃນອະນາຄົດ ຫຼື ຄອບຄອງໄວ້ ຈົນຄົບກຳນົດ. ຖ້າຊັບສິນການເງິນຖືກຈັດປະເພດຄືນໃໝ່ ແລະ ຖ້າທະນາຄານໄດ້ຄາດຄະເນເງິນສົດທີ່ຈະໄດ້ຮັບໃນອະນາຄົດເພີ່ມໃນພາຍຫຼັງເນື່ອງຈາກວ່າຄວາມສາມາດທີ່ຈະໄດ້ຮັບເງິນສົດດັ່ງກ່າວເພີ່ມຂຶ້ນ, ຜົນກະທົບຂອງການເພີ່ມຂຶ້ນນັ້ນແມ່ນໄດ້ບັນທຶກເປັນການດັດແກ້ ຕາມອັດຕາດອກເບ້ຍຕົວຈິງ ຈາກມື້ທີ່ການຄາດຄະເນມີການປ່ຽນແປງ.

ການຈັດປະເພດຄືນໃໝ່ແມ່ນການເລືອກໂດຍຄະນະອຳນວຍການ ແລະ ຖືກກຳນົດເປັນເຄື່ອງມືໂດຍພື້ນຖານເຄື່ອງມື.

6.3 ການຫັກລ້າງຊັບສິນ ແລະ ໜີ້ສິນທາງການເງິນ

6.3.1 ຊັບສິນທາງການເງິນ

ຊັບສິນທາງການເງິນ (ຫຼື, ສ່ວນໜຶ່ງຂອງຊັບສິນການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດຮັບຮູ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນທີ່ໄດ້ໝົດອາຍຸແລ້ວ. ນອກຈາກນີ້, ທະນາຄານຍັງຢຸດຮັບຮູ້ເປັນຊັບສິນ ໃນກໍລະນີທີ່ຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.

ທະນາຄານຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ທະນາຄານໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ ຫຼື
- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຈ່າຍກະແສເງິນສົດທີ່ຈະໄດ້ຮັບທັງໝົດໃນອະນາຄົດໂດຍທັນທີໃຫ້ພາກສ່ວນທີສາມພາຍໃຕ້ຮູບແບບ 'ການຕິດພັນ'.

ການຕິດພັນ ເປັນການເຮັດທຸລະກຳຜ່ານທະນາຄານຖືເປັນລາຍການທີ່ເກີດຂຶ້ນ ເມື່ອທະນາຄານຖືສິດຕາມສັນຍາ ເພື່ອຮັບກະແສເງິນສົດຂອງຊັບສິນທາງການເງິນ (ຊັບສິນເດີມ), ແຕ່ຖືເປັນພາລະຜູກພັນຕາມສັນຍາທີ່ຈະຕ້ອງຈ່າຍຊຳລະເງິນສົດໃຫ້ແກ່ກິດຈະການຢ່າງໜ້ອຍໜຶ່ງແຫ່ງ (ຜູ້ຮັບສຸດທ້າຍ), ເມື່ອມີການປະຕິບັດຕາມເງື່ອນໄຂທັງສາມຂໍ້ດັ່ງຕໍ່ໄປນີ້. ນະວັນທີ 31 ທັນວາ 2019 ທະນາຄານບໍ່ມີຊັບສິນທາງການເງິນພາຍໃຕ້ຮູບແບບດັ່ງກ່າວ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.3 ການຫັກລ້າງຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

6.3.1 ຊັບສິນທາງການເງິນ (ຕໍ່)

ການໂອນຈະສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້ ກໍຕໍ່ເມື່ອ:

- ▶ ທະນາຄານໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນດັ່ງກ່າວ ຫຼື
- ▶ ທະນາຄານບໍ່ໄດ້ໂອນຄວາມສ່ຽງ ແລະ ຮັກສາຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນທັງໝົດ, ແຕ່ໄດ້ໂອນການຄວບຄຸມຊັບສິນດັ່ງກ່າວແລ້ວ

ອີງຕາມຂໍ້ມູນຂ້າງເທິງ, ທະນາຄານຈະພິຈາລະນາວ່າການຄວບຄຸມ ຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈຳກັດໃດໆກ່ຽວກັບການໂອນ.

ເມື່ອທະນາຄານໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼືໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ທະນາຄານຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ທະນາຄານຍັງຮັບຮູ້ເປັນໜີ້ສິນໃນເຄືອ, ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ວ່າມັນຈະສົ່ງຜົນກະທົບຕໍ່ສິດ ແລະ ພັນທະຂອງທະນາຄານທີ່ມີຢູ່.

ການສືບຕໍ່ຂອງຮູບແບບຂອງການຄ້ຳປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕ່ຳກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ທະນາຄານມີຄວາມສາມາດໃນການຊຳລະໜີ້.

ນອກຈາກນີ້ທະນາຄານຍັງຢຸດຮັບຮູ້ບັນດາຊັບສິນທາງການເງິນໂດຍສະເພາະການໃຫ້ກູ້ຢືມແກ່ລູກຄ້າ ເມື່ອເງື່ອນໄຂ ແລະ ຂໍ້ຕົກລົງສ່ວນໃຫຍ່ໄດ້ມີການເຈລະຈາກັນໃໝ່ ແລະ ຖືກພິຈາລະນາເປັນກູ້ຢືມໃໝ່, ສ່ວນຜົດຕ່າງຈະຖືກບັນທຶກເປັນຄ່າເສື່ອມໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການ.

6.3.2 ໜີ້ສິນທາງການເງິນ

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີເມື່ອພັນທະຕ່າງກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່. ສ່ວນຜົດຕ່າງຂອງມູນຄ່າເດີມທີ່ບັນທຶກບັນຊີຂອງໜີ້ສິນທາງການເງິນ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ

ທະນາຄານປະເມີນໃນມື້ເຮັດໃບລາຍງານຖານະການເງິນວ່າມີຫຼັກຖານຊັດເຈນທີ່ສະແດງໃຫ້ເຫັນວ່າຊັບສິນການເງິນ ຫຼື ກຸ່ມຂອງຊັບ ສິນການເງິນມີການເສື່ອມມູນຄ່າ ຫຼື ບໍ່. ຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນຈະຖືວ່າມີຄວາມເສຍຫາຍຖ້າ ພຽງແຕ່ວ່າມີ ຫຼັກຖານຊັດເຈນຂອງຄວາມເສຍຫາຍຈາກຜົນຂອງໜຶ່ງ ຫຼື ຫຼາຍເຫດການທີ່ປະກິດຂຶ້ນຫຼັງຈາກ ມີການຮັບຮູ້ຊັບ ສິນ (ເກີດມີ 'ເຫດການເສຍຫາຍ') ແລະ ເຫດການເສຍຫາຍໜຶ່ງ (ຫຼື ຫຼາຍເຫດການ) ໄດ້ສົ່ງຜົນກະທົບ ເຖິງການຄາດຄະເນ ກະແສເງິນສົດໃນອະນາຄົດ ຂອງຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ຢ່າງໜ້າເຊື່ອຖື.

ຫຼັກຖານຂອງການເສື່ອມມູນຄ່າອາດລວມມີ: ຕົວຊີ້ວັດວ່າຜູ້ກູ້ຢືມ ຫຼື ກຸ່ມຂອງຜູ້ກູ້ຢືມແມ່ນມີຄວາມຫຍຸ້ງຍາກທາງດ້ານ ການ ເງິນ, ການຜິດສັນຍາ ຫຼື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າ ພວກເຂົາຈະລົ້ມລະລາຍ ຫຼື ການ ປັບປຸງລະບຽບ ການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດ ຫຼຸດລົງ ເຊັ່ນ: ການປ່ຽນແປງໜີ້ ເກີນກຳນົດ ຫຼື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

6.4.1 ຊັບສິນທາງການເງິນທີ່ຮັບຮູ້ຕາມຕົ້ນທຶນຄ່າເສື່ອມມູນຄ່າ

ການຂາດທຶນຈາກຄ່າເສື່ອມມູນຄ່າສະເພາະ

ສຳລັບຊັບສິນທາງການເງິນທີ່ບັນທຶກຕາມມູນຄ່າສຸດທິຫຼັງຫັກຄ່າເສື່ອມ (ເຊັ່ນ: ໜີ້ຕ້ອງສົ່ງທະນາຄານອື່ນ, ເງິນກູ້ຢືມ ແລະ ເງິນລ່ວງໜ້າແກ່ລູກຄ້າ), ທະນາຄານຈະປະເມີນຫຼັກຖານຂອງການເສື່ອມມູນຄ່າຂອງຊັບສິນທາງການເງິນວ່າມີຫຼັກຖານການ ເສື່ອມຄ່າຂອງຊັບສິນການເງິນນັ້ນສຳຄັນ ຫຼືວ່າ ຖືກພິຈາລະນາສະເພາະໂດຍຜູ້ບໍລິຫານ.

ຖ້າຫາກມີຫຼັກຖານວ່າຄ່າເສື່ອມເກີດຂຶ້ນ, ຈຳນວນຄ່າເສື່ອມຈະຖືກຕີມູນຄ່າເປັນສ່ວນຕ່າງລະຫວ່າງຍອດຍົກມາຂອງຊັບສິນ ແລະ ຍອດເຫຼືອປະຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເສື່ອມທີ່ອາດຈະເກີດຂຶ້ນໃນອະນາຄົດ). ຍອດທີ່ ບັນທຶກບັນຊີຂອງຊັບສິນແມ່ນຫຼຸດລົງຍ້ອນນຳໃຊ້ບັນຊີຄ່າເສື່ອມ ແລະ ຍອດທີ່ຫຼຸດລົງແມ່ນຖືກຮັບຮູ້ເປັນລາຍຈ່າຍສຸມເສຍສິນ ເຊື່ອໃນໃບລາຍງານຜົນການດຳເນີນງານ. ລາຍຮັບດອກເບ້ຍຈະຖືກສືບຕໍ່ຄິດໄລ່ຕາມຍອດຍົກມາທີ່ຫຼຸດລົງ ແລະ ຖືກຄິດໄລ່ ໂດຍນຳໃຊ້ອັດຕາດອກເບ້ຍຫຼຸດຄ່າກະແສເງິນສົດໃນອະນາຄົດເພື່ອປະເມີນຄ່າເສື່ອມ. ລາຍຮັບດອກເບ້ຍຖືກລົງບັນຊີໃນ "ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ".

ເງິນກູ້ພ້ອມກັບລາຍຈ່າຍທີ່ຕິດພັນຈະຖືກສະສາງອອກ ເມື່ອທະນາຄານໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອ ຫຼັກຊັບຄ้ำປะกันถูกโอนให้ทะนาคาน. ถ้าในปีต่อมา, ค่าเสื่อมหนี้เสียจะเพิ่มขึ้น ຫຼື ຫຼຸດລົງຍ້ອນວ່າມີເຫດການ ເກີດ ຂຶ້ນຫຼັງຈາກໄດ້ ຫັກຄ່າເສື່ອມ, ຄ่าเสื่อมหนี้เสียที่ถูกหักไว้ก่อนหน้านี้จะเพิ่มขึ้น ຫຼື ຫຼຸດລົງໂດຍການດັດແກ້ໃນບັນຊີລາຍ ຈ່າຍ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້ ມູນຄ່າທີ່ເກັບຄືນໄດ້ນັ້ນຈະຖືກລົງບັນຊີເບື້ອງມີໃນລາຍຮັບ.

ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ ແມ່ນມູນຄ່າໃນປະຈຸບັນຕາມອັດຕາດອກເບ້ຍທີ່ແທ້ຈິງຂອງ ຊັບສິນການເງິນ. ຖ້າເງິນກູ້ມີອັດຕາດອກເບ້ຍທີ່ຜັນແປ, ອັດຕາສ່ວນຫຼຸດສຳລັບການຕີມູນຄ່າຂອງ ຄ่าเสื่อมแม่นอัดตาดอกเบ้ยติอจิงในปะจุบัน. ถ้าทะนาคานได้จัดปะเผดซับสินการค้าเป็นเงินกู้ และ เงินล่วงหน้า, อัดตาส่วนหุดสำลับ คิดไล่ค่าเสื่อมแม่นอัดตาดอกเบ้ยที่แท้จิงใหม่ที่พิจาละนา มะอันหีจัดปะเผดถืนใหม่.

ການຄິດໄລ່ມູນຄ่าปะจุบันของกะแสเงินสิดในอะนาคิด ที่คาดคะเนไว้ของหลักซับค้ำปะกัน มีผินกะทบต่ำกะแส เงินสิด ซึ่งอาดเป็นผินมาจากหลักซับค้ำปะกันที่ยึดมาได้ลิบให้ถิ่มทึมของหลักซับค้ำปะกันที่ได้ธับ และ ขาย บ่ อ่านการยึดหลักซับจะเป็นไปได้ ຫຼື ບໍ່ກໍ່ตาม.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

6.4.1 ຊັບສິນທາງການເງິນທີ່ຮັບຮູ້ຕາມຕົ້ນທຶນຄ່າເສື່ອມມູນຄ່າ (ຕໍ່)

ຮູບແບບການເສື່ອມມູນຄ່າເປັນກຸ່ມ

ເພື່ອຈຸດປະສົງໃນການປະເມີນຄ່າເສື່ອມເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມ ຕາມລັກສະນະຄວາມສ່ຽງທີ່ຄ້າຍຄືກັນ ຊຶ່ງເປັນຕົວຊີ້ວັດຄວາມສາມາດຂອງລູກໜີ້ໃນການຈ່າຍເງິນຈຳນວນທັງໝົດອີງຕາມເງື່ອນໄຂໃນສັນຍາ (ຕົວຢ່າງເຊັ່ນ, ອີງຕາມພື້ນຖານຂອງການປະເມີນຜົນຄວາມສ່ຽງການປ່ອຍສິນເຊື່ອ ຫຼື ການໃຫ້ຄະແນນໂດຍພິຈາລະນາຈາກ ປະເພດຊັບສິນ, ປະເພດອຸດສາຫະກຳ, ສະຖານທີ່ຕັ້ງພູມສາດ, ປະເພດຂອງຫຼັກຊັບຄ้ำປะกัน, ສະຖານะพาบที่ผ่านมา ແລะ ปัดไจอื่นๆที่ก่ยอข้อง).

ກະແສເງິນສົດໃນອະນາຄົດຂອງກຸ່ມຊັບສິນການເງິນທີ່ມີການຫັກຄ່າເສື່ອມເປັນກຸ່ມ ແມ່ນຖືກຄາດຄະເນບົນພື້ນຖານ ການເສື່ອມຄ່າຜ່ານມາຂອງຊັບສິນທີ່ມີລັກສະນະຄວາມສ່ຽງສິນເຊື່ອທີ່ຄ້າຍຄືກັນໃນກຸ່ມ. ການເສື່ອມຄ່າຜ່ານມາຖືກດັດແກ້ ບົນພື້ນຖານຂໍ້ມູນທີ່ມີໃນປະຈຸບັນ ເພື່ອສ່ອງແສງເຖິງຜົນກະທົບຂອງເງື່ອນໄຂໃນປະຈຸບັນ ເຊິ່ງການເສື່ອມຄ່າຜ່ານມາແມ່ນ ເປັນບ່ອນອີງ ແລະ ເພື່ອຍ້າຍຜົນກະທົບຂອງເງື່ອນໄຂໃນໄລຍະຜ່ານມາ ທີ່ບໍ່ສົ່ງຜົນກະທົບໃນປະຈຸບັນ.

ການຄາດຄະເນການປ່ຽນແປງທີ່ສ່ອງແສງເຖິງກະແສເງິນສົດໃນອະນາຄົດ ແລະ ເປັນໄປໃນທາງດຽວກັນກັບ ການປ່ຽນແປງຂອງຂໍ້ມູນທີ່ສັງເກດໄດ້ຈາກປີຕໍ່ປີ (ເຊັ່ນການປ່ຽນແປງໃນ ອັດຕາການວ່າງງານ, ຄວາມເປັນໜີ້ສ່ວນບຸກຄົນ, ມູນຄ່າຫຼັກຊັບຄ้ำປะกันลวมทั้งลาคาชับสินสำลับจำนอง, ลาคาสินค้า, สะถานะการชำละ, ຫຼື ປັດໄຈອື່ນໆທີ່ບົ່ງບອກເຖິງການຂາດທຶນໃນກຸ່ມ ແລະ ຄວາມສຳຄັນຂອງການຂາດທຶນ). ວິທີການ ແລະ ຂໍ້ສົມມຸດຖານທີ່ນຳໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດ ໄດ້ທົບທວນຄືນຢ່າງເປັນປົກກະຕິ ເພື່ອຫຼຸດສ່ວນຜິດດ່ຽງລະຫວ່າງຂາດທຶນທີ່ຄາດຄະເນ ແລະ ຂາດທຶນຕົວຈິງ.

6.4.2 ການເສື່ອມມູນຄ່າຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ

ທະນາຄານຍັງໄດ້ບັນທຶກຄ่าเสื่อมต่ำการลงทุนที่มีไว้เพื่อขาย เมื่อเກີดการหดลงที่สำคัน ຫຼື ການຫຼຸດລົງ ໃນມູນຄ่ายุติทำที่ต่ำกว่าต้นทุน ข้ำนิดที่ 'สำคัน' ຫຼື 'ยาวนาน' ต้องถูกพิจาละนา, การพิจาละนาดังกล่าวนี้ ทะนาคาน ปะเมินละหว่างหลายปัดไจ ແລะ ການເໜັງຕີງຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ກຳນົດຂອບເຂດຂອງມູນຄ่ายุติทำที่ต่ำกว่าต้นทุน.

6.4.3 ການປະເມີນມູນຄ่าหลักชับค้ำปะกัน

ทะนาคานชอกหาอิทีที่จะนำใช้หลักชับค้ำปะกัน, ถ้าเป็นไปได้, เพื่อหุดผ่อนคามส่ยงของชับสินการเงิน. หลัก ชับค้ำปะกันอาดเป็นได้หลายรูบแบบ เช่น: เงินสิด, หลักชับ, หนังสือสินเชื่อ/หนังสือค้ำปะกัน, อะสังหาลิมะชับ, หุ้นต้อง ธับ, เครื่องใบสาง, ชับสินที่บ่แม่นการเงินอื่นๆ ແລะ ການຍົກລະດັບສິນເຊື່ອ ເຊັ່ນ ຂໍ້ຄົກລົງທີ່ຣັດกุม. โดยทั่อไป, มูน ค่ายุติทำของหลักชับค้ำปะกันแม่นถูกปะเมินใบมูนค่าต่ำสุดใบมื้เลิ่มต้น ແລะ กำนิดเอลาการลายงานประจำปี ของทะนาคาน.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

6.4.3 ການປະເມີນມູນຄ່າຫຼັກຊັບຄ้ຳປະກັນ (ຕໍ່)

ເພື່ອກຳນົດຂອບເຂດທີ່ຄວນເປັນໄປໄດ້ ທະນາຄານໄດ້ນຳໃຊ້ຂໍ້ມູນຕາມທ້ອງຕະຫຼາດສຳລັບປະເມີນຊັບສິນການເງິນ ທີ່ໃຊ້ເປັນຫຼັກຊັບຄ้ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດກຳນົດມູນຄ່າຕາມທ້ອງຕະຫຼາດ ຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫຼັກຊັບຄ้ຳປະກັນທີ່ບໍ່ແມ່ນທາງການເງິນເຊັ່ນ: ອະສັງຫາລິມະຊັບ ຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກພາກສ່ວນພາຍນອກ (ຖ້າມີ) ເຊັ່ນ: ນາຍໜ້າ, ດັດສະນີລາຄາທີ່ພັກອາໄສ, ບົດລາຍງານການເງິນທີ່ຖືກກວດສອບແລ້ວ ແລະ ແຫຼ່ງຂໍ້ມູນທີ່ໜ້າເຊື່ອຖືອື່ນໆ.

6.4.4 ຫຼັກຊັບຄ้ຳປະກັນທີ່ຖືກຍຶດ

ນະໂຍບາຍທະນາຄານແມ່ນກຳນົດວ່າຊັບສິນທີ່ຍຶດມາ ສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການພາຍໃນຂອງທະນາຄານ ຫຼື ຄວນຈະຂາຍ. ຊັບສິນທີ່ເປັນປະໂຫຍດສຳລັບການດຳເນີນງານພາຍໃນຈະຖືກໂອນເຂົ້າໄປເປັນຊັບສິນຕາມແຕ່ລະປະເພດທີ່ກ່ຽວຂ້ອງ ເຊິ່ງຈະຖືກຕີມູນຄ່າຫຼຸດລົງຈາກມູນຄ່າທີ່ຍຶດມາ ຫຼື ຍອດບັນທຶກບັນຊີຂອງຊັບສິນທີ່ຖືກຄ้ຳປະກັນ. ຊັບສິນທີ່ຖືກກຳນົດວ່າຈະຂາຍອອກຈະຖືກໂອນເປັນຊັບສິນມີໄວ້ສຳລັບຂາຍ ແລະ ຖືກຕີມູນຄ່າຕາມມູນຄ່າຕິວຈິງນະມື້ທີ່ຍຶດຊັບສິນ ໂດຍສອດຄ່ອງກັບນະໂຍບາຍຂອງທະນາຄານ.

6.5 ການຫັກລ้ຳເຄື່ອງມືທາງການເງິນ

ຊັບສິນ ແລະ ໜີ້ສິນທາງການເງິນແມ່ນຖືກຫັກລ้ຳກັນ ແລະ ມູນຄ່າສຸດທິຈະຖືກລາຍງານໃນໃບລາຍງານຖານະການເງິນສັງລວມກິດຈະການ, ຖ້າຫາກວ່າ ທະນາຄານຖືກບັງຄັບທາງກົດໝາຍໃຫ້ສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ທະນາຄານຕັ້ງໃຈຈະສະສາງໃນມູນຄ่าสุดทิ ຫຼື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວກັນ. ນີ້ບໍ່ແມ່ນກໍລະນີທົ່ວໄປໃນຂໍ້ຕົກລົງວ່າດ້ວຍການຫັກລ้ຳງລະຫວ່າງ ຊັບສິນ ແລະ ໜີ້ສິນ ທີ່ກ່ຽວຂ້ອງໄດ້ຖືກສະແດງມູນຄ่าลอมในใบลายงานถานะการเงินสังลอมกิดจะการ.

6.6 ການລົງທຶນໃນບໍລິສັດຮ่วมทุน

ທະນາຄານແມ່ນມີລາຍຮັບຈາກບໍລິສັດຮ่วมทุน ເຊິ່ງແມ່ນຫົວໜ่วยทุละกิดที่มีการถอบคุมร่วมกัน, ดังนั้น การร่วมทุนแม่นได้มีข้อตกลงกัน กำหนดการถอบคุมร่วมกันในการเถื่อนไหวทุละกิด. ข้อตกลงได้ตกลงเป็นเอกะสันกัน สำลับข้อตกลงทางด้านการเงิน และ การดำเนินงานในการร่วมทุน.

ทะนาคานรับรู้ลายรับจากบอลิสัดร่วมทุน ตามรูบแบบอิทิส่วนได้ส่วนเสย. พายใต้รูบแบบนี้, การลงทุนในบอลิสัดร่วมทุน แม่นถูกบันทึกตามต้นทุนในเบื้องต้น ยู่ในใบลายงานถานะการเงินลอมกิดจะการ บอกกับลายการดัดแก้เป็น ซับสินสุดทิ ตามสัดส่วนของการลงทุนกับบอลิสัดร่วมทุนตามพายหลัง. ค่านิยมตามสัดส่วนของการลงทุนในบอลิสัดร่วมทุน แม่นถูกรับรู้เป็นมูนค่าซากลอมยู่ในยอดบันทึกบันชีของเงินลงทุน และ บ่ ทักค่าเสื่อม.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.6 ການລົງທຶນໃນບໍລິສັດຮ່ວມທຶນ (ຕໍ່)

ສ່ວນແບ່ງກຳໄລຂອງທະນາຄານຈາກບໍລິສັດຮ່ວມທຶນ ແມ່ນໄດ້ສະແດງໃຫ້ເຫັນຢູ່ໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການ. ນີ້ແມ່ນກຳໄລທີ່ປະກອບເປັນທຶນຂອງຜູ້ຖືຮຸ້ນໃນບໍລິສັດຮ່ວມທຶນ ແລະ ແມ່ນກຳໄລຫຼັງອາກອນ ແລະ ເປັນຜົນປະໂຫຍດທີ່ບໍ່ສາມາດຄວບຄຸມໃນການລົງທຶນໃນບໍລິສັດໃນເຄືອຂອງບໍລິສັດຮ່ວມທຶນ.

ຫຼັງຈາກນຳໃຊ້ຮູບແບບການລົງທຶນແລ້ວ ທະນາຄານຈະພິຈາລະນາວ່າ ຈຳເປັນຕ້ອງຮັບຮູ້ຄ່າເສື່ອມເພີ່ມເຕີມ ຂອງການລົງທຶນໃນບໍລິສັດຮ່ວມທຶນ ຫຼື ບໍ່. ທະນາຄານຈະພິຈາລະນາໃນມື້ທີ່ກະກຽມເອກະສານລາຍງານ ວ່າມີຫຼັກຖານ ການເສື່ອມຄ່າຂອງການລົງທຶນ ໃນບໍລິສັດຮ່ວມທຶນ ຫຼື ບໍ່. ໃນສະຖານະການດັ່ງກ່າວ ທະນາຄານຈະຄິດໄລ່ຄ່າເສື່ອມ ເປັນສ່ວນຕ່າງລະຫວ່າງ ຈຳນວນເງິນທີ່ເກັບຄືນໄດ້ ແລະ ຍອດຍົກມາຂອງການລົງທຶນໃນບໍລິສັດຮ່ວມທຶນ ແລະ ຮັບຮູ້ສ່ວນຜິດດ່ຽງຢູ່ໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການ.

6.7 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ

ລາຍຮັບແມ່ນໄດ້ຖືກຮັບຮູ້ໃນຂອບເຂດຂອງຄວາມເປັນໄປໄດ້ທີ່ວ່າຜົນປະໂຫຍດໃນທາງເສດຖະກິດຈະໄຫຼເຂົ້າທະນາຄານ ແລະ ລາຍຮັບເຫຼົ່ານັ້ນຈະຖືກຕີມູນຄ່າຢ່າງເຊື່ອຖືໄດ້. ຫຼັກການການຮັບຮູ້ສະເພາະດັ່ງຕໍ່ໄປນີ້ຈະຕ້ອງຖືກປະເມີນກ່ອນລາຍຮັບຈະຖືກຮັບຮູ້.

6.7.1 ດອກເບ້ຍ ແລະ ລາຍຮັບ ແລະ ລາຍຈ່າຍທີ່ຄ້າຍຄື

ສຳລັບທຸກໆເຄື່ອງມືທາງການເງິນທີ່ຖືກຕີມູນຄ່າຕາມລາຄາຄ່າເສື່ອມຕົ້ນທຶນ ແລະ ຊັບສິນທາງການເງິນທີ່ມີດອກເບ້ຍ ໄດ້ຈັດປະເພດເປັນ ຊັບສິນທີ່ມີໄວ້ເພື່ອຂາຍ ແລະ ເຄື່ອງມືທາງການເງິນໄດ້ກຳນົດຕາມມູນຄ່າຍຸຕິທຳ ໂດຍຜ່ານກຳໄລ ແລະ ຂາດທຶນ , ລາຍຮັບ ຫຼື ລາຍຈ່າຍດອກເບ້ຍ ແມ່ນຖືກບັນທຶກໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ ເຊິ່ງແມ່ນອັດຕາສ່ວນຫຼຸດຕົວຈິງທີ່ໄດ້ຈາກການຄາດຄະເນການຊຳລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ການຄິດໄລ່ແມ່ນຄຳນຶງເຖິງທຸກໆຂໍ້ກຳນົດໃນສັນຍາຂອງເຄື່ອງມືການເງິນ (ເຊັ່ນວ່າ: ທາງເລືອກໃນການຊຳລະລ່ວງໜ້າ) ລວມທັງທຸກໆຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍ ບໍລິການທີ່ກ່ຽວພັນກັບເຄື່ອງມື ແລະ ຊຶ່ງເປັນສ່ວນປະກອບຂອງອັດຕາດອກເບ້ຍທີ່ແທ້ຈິງ, ແຕ່ບໍ່ແມ່ນການຂາດທຶນສິນເຊື່ອໃນອະນາຄົດ.

ເມື່ອມູນຄ່າຕາມບັນຊີຂອງຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນທີ່ຄ້າຍຄືກັນຖືກຫຼຸດລົງໂດຍການຫັກຄ່າເສື່ອມ, ລາຍຮັບດອກເບ້ຍຈະຖືກຮັບຮູ້ໂດຍການນຳໃຊ້ອັດຕາດອກເບ້ຍທີ່ໃຊ້ໃນການຄິດໄລ່ກະແສເງິນສົດໃນອະນາຄົດສຳລັບຈຸດປະສົງຂອງການວັດຄ່າເສື່ອມ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.7 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ (ຕໍ່)

6.7.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

ທະນາຄານມີລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ຈາກການໃຫ້ບໍລິການຫຼາຍຮູບແບບແກ່ລູກຄ້າ. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການແມ່ນໄດ້ຮັບການບັນທຶກໄວ້ໃນຈຳນວນທີ່ສະທ້ອນໃຫ້ເຫັນເຖິງການພິຈາລະນາທີ່ທະນາຄານຄາດວ່າຈະມີສິດໃນການແລກປ່ຽນການສະໜອງການບໍລິການ. ຂໍ້ຜູກພັນໃນການປະຕິບັດງານ, ເຊັ່ນດຽວກັນກັບເວລາຂອງຄວາມເພິ່ງພໍໃຈຂອງລູກຄ້າ, ຖືກລະບຸ ແລະ ຖືກກຳນົດ, ເມື່ອເລີ່ມຕົ້ນຂອງສັນຍາ. ໂດຍທົ່ວໄປສັນຍາລາຍຮັບຂອງທະນາຄານຈະບໍ່ລວມເອົາຫຼາຍຂໍ້ຜູກພັນໃນການປະຕິບັດງານ ດັ່ງທີ່ອະທິບາຍເພີ່ມເຕີມໃນ 6.7.2.1 ແລະ 6.7.2.2 ຂ້າງລຸ່ມນີ້. ໃນເວລາທີ່ທະນາຄານໃຫ້ການບໍລິການແກ່ລູກຄ້າຂອງຕົນ, ຈະມີການພິຈາລະນາເປັນໃບແຈ້ງໜີ້ແລະກຳນົດການຊຳລະນະເວລາໃດໜຶ່ງ ຫຼື ເມື່ອສິ້ນສຸດໄລຍະເວລາຂອງສັນຍາ ສຳລັບການບໍລິການທີ່ລະບຸໄລຍະເວລາໄວ້ (ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນຢ່າງອື່ນໃນ 6.7.2.1 ແລະ 6.7.2.2 ຂ້າງລຸ່ມນີ້). ໂດຍທົ່ວໄປທະນາຄານໄດ້ໃຫ້ຂໍ້ສະຫຼຸບວ່າສິ່ງທີ່ກ່າວມານັ້ນແມ່ນເປັນຕົ້ນທຶນໃນການກະກຽມລາຍຮັບ ເພາະໂດຍທົ່ວໄປແລ້ວຕ້ອງຄວບຄຸມການບໍລິການຂອງຕົນກ່ອນທີ່ຈະໂອນໄປຍັງລູກຄ້າ.

6.7.2.1 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການຈາກການບໍລິການທີ່ຂໍ້ຜູກພັນໃນການປະຕິບັດງານກຳນົດຊຳລະເມື່ອສິ້ນສຸດໄລຍະເວລາຂອງສັນຍາ

ຂໍ້ຜູກພັນໃນການປະຕິບັດງານກຳນົດຊຳລະເມື່ອສິ້ນສຸດໄລຍະເວລາຂອງສັນຍາການບໍລິການທີ່ລູກຄ້າໄດ້ຮັບ ແລະ ໃຊ້ປະໂຫຍດຈາກການປະຕິບັດງານຂອງທະນາຄານໃນຂະນະທີ່ທະນາຄານດຳເນີນການພ້ອມກັນ.

6.7.2.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການຈາກການບໍລິການທີ່ຂໍ້ຜູກພັນໃນການປະຕິບັດງານກຳນົດການຊຳລະນະເວລາໃດໜຶ່ງ

ການບໍລິການທີ່ຂໍ້ຜູກພັນໃນການປະຕິບັດງານກຳນົດການຊຳລະນະເວລາໃດໜຶ່ງແມ່ນຖືກຮັບຮູ້ເມື່ອການຄວບຄຸມການບໍລິການຖືກໂອນໃຫ້ລູກຄ້າ. ໂດຍທົ່ວໄປຈະເປັນການເຮັດທຸລະກຳສຳເລັດ ຫຼື ການບໍລິການ, ຫຼື ສຳລັບຄ່າທຳນຽມ ຫຼື ອົງປະກອບຂອງຄ່າທຳນຽມທີ່ເຊື່ອມຕໍ່ກັບການປະຕິບັດງານທີ່ແນ່ນອນ, ພາຍຫຼັງທີ່ປະຕິບັດເງື່ອນໄຂທີ່ສອດຄ່ອງກັນ. ສິ່ງເຫຼົ່ານີ້ລວມມີຄ່າທຳນຽມ ແລະ ຄ່າບໍລິການທີ່ເກີດຂຶ້ນຈາກການເຈລະຈາ ຫຼື ການເຂົ້າຮ່ວມໃນການເຈລະຈາທຸລະກຳສຳລັບພາກສ່ວນທີ່ສາມເຊັ່ນ: ການກຽມການ/ການມີສ່ວນຮ່ວມ ຫຼື ການເຈລະຈາການຊື້ຮຸ້ນ ຫຼື ຫຼັກຊັບອື່ນໆ ຫຼື ການຊື້ຂາຍທຸລະກິດ, ຄ່າທຳນຽມນາຍໜ້າ ແລະ ການຄ້ຳປະກັນ.

ທະນາຄານໂດຍທົ່ວໄປມີພັນທະໃນການປະຕິບັດໜ້າວຽກທີ່ກ່ຽວຂ້ອງກັບການບໍລິການເຫຼົ່ານີ້, ເຊິ່ງແມ່ນເພື່ອປະຕິບັດການເຮັດທຸລະກຳໃຫ້ສຳເລັດດັ່ງທີ່ລະບຸໄວ້ໃນສັນຍາ.

6.7.3 ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນແມ່ນຖືກຮັບຮູ້ເມື່ອທະນາຄານຖືກປະກາດສິດໃນການຮັບການຊຳລະ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.7 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ (ຕໍ່)

6.7.4 ລາຍຮັບສຸດທິຈາກການຄ້າ

ເປັນຜົນທີ່ເກີດຂຶ້ນຈາກກິດຈະກຳການຄ້າປະກອບດ້ວຍທຸກກຳໄລ ແລະ ຂາດທຶນຈາກການປ່ຽນແປງໃນມູນຄ່າຍຸຕິທຳ ແລະ ລາຍຮັບ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ແລະ ເງິນປັນຜົນສຳລັບຊັບສິນ ແລະ ໜີ້ສິນທາງການເງິນ 'ຖືໄວ້ເພື່ອການຄ້າ'. ນີ້ ປະກອບມີການບໍ່ມີປະສິດທິພາບທີ່ໄດ້ບັນທຶກໃນການເຮັດທຸລະກຳປ້ອງກັນຄວາມສ່ຽງ.

6.8 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດດັ່ງທີ່ໄດ້ອ້າງອີງຢູ່ໃນໃບລາຍງານກະແສເງິນສົດປະກອບດ້ວຍເງິນສົດໃນກຳມື, ເງິນຝາກກະແສລາຍວັນກັບທະນາຄານແຫ່ງ ສປປ ລາວ ແລະ ໜີ້ຕ້ອງຮັບຈາກທະນາຄານເຊິ່ງເປັນປະເພດກະແສລາຍວັນ, ກຳນົດ 3 ເດືອນ ຫຼື ຕ່ຳກວ່ານັ້ນ.

6.9 ຊັບສິນບັດ ແລະ ອຸປະກອນ

ຊັບສິນບັດ ແລະ ອຸປະກອນ ແມ່ນໄດ້ລາຍງານ ຕາມຕົ້ນທຶນຂອງການບໍລິການມື້ຕໍ່ມື້ ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງ ຂອງອາຍຸການນຳໃຊ້ ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີ ຫັກຄ່າເສື່ອມຕາມຄວາມເໝາະສົມ ແລະ ເຮັດໃຫ້ມີການປ່ຽນແປງຕາມການຄາດຄະເນທາງການບັນຊີ.

ຄ່າຫຼ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼ້ຍຫ້ຽນແບບສະເໝີຕົວ ເພື່ອຫຼຸດຕົ້ນທຶນຂອງຊັບສິນບັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອາຍຸການນຳໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງ ລຸ່ມນີ້:

ອາຄານ ແລະ ການປັບປຸງ	5%
ເຄື່ອງໃຊ້ຫ້ອງການ	20%
ເຟີນີເຈີ ແລະ ຕິດຕັ້ງ	20%
ພາຫະນະ	20%

ຊັບສິນບັດ ແລະ ອຸປະກອນຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດຈາກການນຳໃຊ້ຊັບສິນບັດ ແລະ ອຸປະກອນດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສິນບັດ (ຄິດໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສິນບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບຈາກການດຳເນີນງານອື່ນໆ' ໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການຂອງປີທີ່ຊັບສິນບັດໄດ້ຖືກສະສາງອອກ.

6.10 ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນຂອງທະນາຄານປະກອບດ້ວຍ ສິດນຳໃຊ້ທີ່ດິນ ແລະ ຊັອບແວ.

ຊັບສິນບັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ເມື່ອຕົ້ນທຶນຂອງຊັບສິນບັດຄົງທີ່ສາມາດປະເມີນໄດ້ຢ່າງແນ່ນອນ ແລະ ມັນຈະສາມາດສ້າງຜົນປະໂຫຍດໃຫ້ແກ່ທະນາຄານໃນອະນາຄົດ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.10 ຊັບສິນບັດຄົງທີ່ບໍ່ມີຕົວຕົນ (ຕໍ່)

ຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ທະນາຄານຍຶດມາໄດ້ຈະຖືກປະເມີນມູນຄ່າຕົ້ນທຶນເບື້ອງຕົ້ນ. ຕົ້ນທຶນຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ໄດ້ມາ ຈາກການລວມທຸລະກິດຈະຖືກຮັບຮູ້ຕາມມູນຄ່າຍຸຕິທຳໃນມື້ທີ່ໄດ້ມາ. ຕໍ່ຈາກນັ້ນ, ຊັບສິນບັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ ໂດຍການເອົາຕົ້ນທຶນລົບໃຫ້ຄ່າເສື່ອມສະສົມ.

ອາຍຸການນຳໃຊ້ຂອງຊັບສິນທີ່ບໍ່ມີຕົວຕົນ ແມ່ນໄດ້ຖືກປະເມີນໂດຍຈັດເປັນ ມີກຳນົດ ແລະ ບໍ່ມີກຳນົດ. ຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນຖືກຫັກຄ່າເສື່ອມຕາມອາຍຸການນຳໃຊ້. ໄລຍະຂອງການຫັກຄ່າເສື່ອມ ແລະ ວິທີການຫັກຄ່າເສື່ອມສຳລັບຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ກຳນົດຈະຖືກທົບທວນຄືນເປັນຢ່າງນ້ອຍສຸດໃນທ້າຍປີການບັນຊີ. ການປ່ຽນແປງອາຍຸການນຳໃຊ້ຄາດຄະເນແມ່ນຈະໄດ້ລົງບັນຊີເປັນການປ່ຽນແປງໄລຍະ ແລະ ວິທີຂອງການຫັກຄ່າເສື່ອມ, ຕາມຄວາມເໝາະສົມ ແລະ ຖືເປັນການປ່ຽນແປງການຄາດຄະເນໃນບັນຊີ. ລາຍຈ່າຍກ່ຽວກັບການຫັກຄ່າເສື່ອມຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນໄດ້ຖືຮັບຮູ້ໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການໃນໝວດຂອງລາຍຈ່າຍທີ່ພົວພັນກັບຊັບສິນບັດຄົງທີ່ທີ່ບໍ່ມີຕົວຕົນ.

ຄ່າເສື່ອມຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າເສື່ອມແບບສະເໝີຕົ້ນເພື່ອຫຼຸດຕົ້ນທຶນຂອງຊັບສິນທີ່ບໍ່ມີຕົວຕົນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອັດຕາຄາດຄະເນການຫັກຄ່າເສື່ອມມີດັ່ງນີ້:

▶	ຊ້ອບແວ	2 - 5 ປີ

ສິດໃນການນຳໃຊ້ທີ່ດິນຂອງທະນາຄານແມ່ນບໍ່ມີຄ່າເສື່ອມ ເນື່ອງຈາກສິດໃນການນຳໃຊ້ທີ່ດິນແມ່ນມີອາຍຸການນຳໃຊ້ແບບບໍ່ຈຳກັດ ແລະ ອອກໃຫ້ໂດຍລັດຖະບານຂອງ ສປປ ລາວ.

6.11 ຄ່າເສື່ອມຂອງຊັບສິນທີ່ບໍ່ແມ່ນທາງການເງິນ

ທະນາຄານປະເມີນນະມື້ເຮັດເອກະສານລາຍງານ ວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດ ທະນາຄານປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກ ມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸຕິທຳຂອງຊັບສິນ ຫຼື ມູນຄ່າຍຸຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາ ຂອງຊັບສິນ ຫຼື ມູນຄ່າຂອງ CGU ຫຼາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫຼຸດລົງ ເພື່ອໃຫ້ໄດ້ມູນຄ່າປະຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫຼຸດກ່ອນອາກອນ ທີ່ສົ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປະຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະ ສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍເອົາຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບ ບໍລິສັດໃນເຄືອ ຫຼື ຕົວຊີ້ບອກມູນຄ່າຍຸຕິທຳອື່ນໆ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.11 *ຄ່າເສື່ອມຂອງຊັບສິນທີ່ບໍ່ແມ່ນທາງການເງິນ* (ຕໍ່)

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫຼຸດລົງ. ຖ້າຫາກມີຕົວຊີ້ບອກ, ທະນາຄານຈະຄາດຄະເນຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ ຫຼື ຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນ ມີການປ່ຽນແປງ ໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປັ້ນຄືນແມ່ນຖືກກຳນົດຂຶ້ນ ສະນັ້ນ ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດຍົກມາທີ່ຖືກກຳນົດລົບໃຫ້ຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໃນປີຜ່ານມາ. ການປັ້ນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການ.

6.12 *ເຄື່ອງມືທາງການເງິນອະນຸພັນ*

ສັນຍາແລກປ່ຽນ

ສັນຍາແລກປ່ຽນແມ່ນຂໍ້ຕົກລົງຕາມສັນຍາລະຫວ່າງສອງຝ່າຍເພື່ອແລກປ່ຽນກະແສການຊຳລະເງິນຕາມການເວລາໂດຍອີງໃສ່ຈຳນວນເງິນຕາມສັນຍາທີ່ລະບຸ, ທີ່ກ່ຽວຂ້ອງກັບການເຄື່ອນໄຫວໃນດັດຊະນີອ້າງອີງທີ່ລະບຸໄວ້ເຊັ່ນ: ອັດຕາດອກເບ້ຍ, ອັດຕາເງິນຕາຕ່າງປະເທດ ຫຼື ດັດຊະນີຫຸ້ນ.

ສັນຍາແລກປ່ຽນອັດຕາດອກເບ້ຍ ກ່ຽວພັນກັບສັນຍາທີ່ທະນາຄານອອກກັບຄູ່ຄ້າອື່ນໆ (ລູກຄ້າ ແລະ ສະຖາບັນການເງິນ) ເຊິ່ງທະນາຄານຈະໄດ້ຮັບ ຫຼື ຈ່າຍດອກເບ້ຍຕາມອັດຕາດອກເບ້ຍລອຍຕົວ ໃນການແລກປ່ຽນກັບ ການຈ່າຍ ຫຼື ໄດ້ຮັບອັດຕາດອກເບ້ຍທີ່ຕາມລຳດັບ. ກະແສການຊຳລະໂດຍປົກກະຕິແມ່ນສຸດທິເຊິ່ງກັນ ແລະ ກັນ, ເຊິ່ງຄວາມແຕກຕ່າງຈະຖືກຈ່າຍໂດຍຝ່າຍ ໜຶ່ງຕໍ່ອີກຝ່າຍໜຶ່ງ.

ໃນສັນຍາແລກປ່ຽນເງິນຕາ (ລວມຢູ່ໃນສັນຍາການແລກປ່ຽນເງິນຕາຕ່າງປະເທດ), ທະນາຄານຈ່າຍຈຳນວນທີ່ລະບຸໄວ້ເປັນສະກຸນເງິນໜຶ່ງ ແລະ ໄດ້ຮັບຈຳນວນທີ່ລະບຸໄວ້ເປັນສະກຸນເງິນອື່ນ. ສັນຍາແລກປ່ຽນເງິນຕາສ່ວນໃຫຍ່ແມ່ນການຊຳລະສະສາງ.

ສັນຍາແລກປ່ຽນສິນເຊື່ອທີ່ຜິດນັດຊຳລະແມ່ນຂໍ້ຕົກລົງສັນຍາລະຫວ່າງສອງຝ່າຍເພື່ອ ຊຳລະສະສາງກ່ຽວກັບເຫດການສິນເຊື່ອທີ່ໄດ້ກຳນົດ, ໂດຍອີງຕາມ ຈຳນວນເງິນຕາມສັນຍາທີ່ລະບຸ. ທະນາຄານຊື້ສັນຍາແລກປ່ຽນສິນເຊື່ອທີ່ຜິດນັດຊຳລະເພື່ອຫຼຸດຜ່ອນຄວາມສ່ຽງຂອງການຜິດນັດຊຳລະຄູ່ຄ້າໂດຍອີງໃສ່ສັນຍາພື້ນຖານຂອງການແລກປ່ຽນສິນເຊື່ອ.

ໂດຍບໍ່ມີການຄຳນຶງວ່າການຊຳລະໂດຍຜ່ານສູນຊຳລະສະສາງ ຫຼື ໂດຍກົງກັບຄູ່ຄ້າ, ສັນຍາແລກປ່ຽນສ່ວນໃຫຍ່ແມ່ນຊັບສິນຄ້ຳປະກັນຢ່າງເຕັມສ່ວນ ແລະ ຮຽກຮ້ອງໃຫ້ມີການຊຳລະສ່ວນເກີນປະຈຳວັນ. ການປະຕິບັດດັ່ງກ່າວຈະຊ່ວຍຫຼຸດຜ່ອນຄວາມສ່ຽງດ້ານການປ່ອຍສິນເຊື່ອຂອງທະນາຄານ, ແຕ່ຮຽກຮ້ອງການບໍລິຫານສະພາບຄ່ອງຫຼາຍຂຶ້ນຖ້າສະຖານະບໍ່ໄດ້ຮັບການຄ້ຳປະກັນ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.13 ການຄ້ຳປະກັນທາງການເງິນ

ໂດຍທົ່ວໄປ ທະນາຄານໄດ້ໃຫ້ການຄ້ຳປະກັນທາງການເງິນ, ປະກອບມີ ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ ແລະ ໜັງສືຕອບຮັບ. ການຄ້ຳປະກັນທາງການເງິນແມ່ນຖືກຮັບຮູ້ ໃນໄລຍະເອກະສານລາຍງານການເງິນສັງລວມກິດຈະການ (ພາຍໃຕ້ 'ໜີ້ສິນອື່ນໆ') ທີ່ມູນຄ່າຍຸຕິທຳ, ພ້ອມຄ່າທຳນຽມ. ພາຍຫຼັງການຮັບຮູ້ໜີ້ສິນຂອງທະນາຄານພາຍໃຕ້ໜັງສືຄ້ຳປະກັນແມ່ນຄິດໄລ່ໂດຍເອົາມູນຄ່າທີ່ຮັບຮູ້ພື້ນຖານທີ່ສູງກວ່າ ລົບຄ່າເສື່ອມສະສົມທີ່ຮັບຮູ້ໃນໃບລາຍງານຜົນການດຳເນີນງານ ແລະ ການຄາດຄະເນລາຍຈ່າຍທີ່ດີທີ່ສຸດທີ່ຕ້ອງຊຳລະຕາມພັນທະທີ່ເກີດຂຶ້ນຈາກໜັງສືຄ້ຳປະກັນ.

ທຸກໆການເພີ່ມຂຶ້ນຂອງໜີ້ສິນທີ່ກ່ຽວຂ້ອງກັບການຄ້ຳປະກັນທາງການເງິນແມ່ນຖືກບັນທຶກໄວ້ໃນໃບລາຍງານຜົນການດຳເນີນງານສັງລວມ ໃນ 'ລາຍຈ່າຍເງິນແຮໜີ້ເສຍ'. ຄ່າທຳນຽມແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນ 'ລາຍຮັບສຸດທິຄ່າທຳນຽມ ແລະ ຄ່າບໍລິການ' ຕາມວິທີສະເໜີຕົວຕາມອາຍຸຂອງການຄ້ຳປະກັນ.

6.14 ການເຊົ່າ (ນຳໃຊ້ຕັ້ງແຕ່ວັນທີ 01 ມັງກອນ 2019)

6.14.1 ສິດນຳໃຊ້ຊັບສິນ

ໃນມື້ເລີ່ມຕົ້ນເຮັດສັນຍາ, ທະນາຄານຈະປະເມີນວ່າສັນຍາແມ່ນເປັນສັນຍາເຊົ່າ, ຫຼືປະກອບມີເງື່ອນໄຂການເຊົ່າ ຫຼືບໍ່ ໂດຍອີງໃສ່ສັນຍາທີ່ບົ່ງບອກເຖິງຜູ້ໃຊ້ (ຜູ້ເຊົ່າ) ທີ່ມີສິດຄວບຄຸມການນຳໃຊ້ຊັບສິນທີ່ໄດ້ລະບຸໄວ້ເປັນໄລຍະເວລາໃດໜຶ່ງແລກປ່ຽນເພື່ອພິຈາລະນາ. ຖ້າສັນຍາປະກອບດ້ວຍສ່ວນປະກອບຂອງສັນຍາເຊົ່າຫຼາຍກວ່າໜຶ່ງລາຍການ ຫຼື ລວມກັນຂອງທຸລະກຳການໃຫ້ເຊົ່າ ແລະ ການບໍລິການ, ການພິຈາລະນາຈະຖືກຈັດສັນໃຫ້ແຕ່ລະສ່ວນຂອງສັນຍາເຊົ່າ ແລະ ສ່ວນທີ່ບໍ່ໄດ້ເຊົ່າຕາມຂໍ້ສະຫຼຸບ ແລະ ໃນການວັດແທກຄືນໃໝ່ຂອງສັນຍາແຕ່ລະຄັ້ງບົນພື້ນຖານຂອງລາຄາຂາຍແບບດ່ຽວ. ທະນາຄານຮວບຮວມອົງປະກອບຂອງການເຊົ່າ ແລະ ທີ່ບໍ່ແມ່ນການເຊົ່າໃນກໍລະນີທີ່ບໍ່ສາມາດແຍກສ່ວນປະກອບທີ່ບໍ່ແມ່ນການເຊົ່າອອກໄດ້.

ທະນາຄານຮັບຮູ້ສິດນຳໃຊ້ຊັບສິນໃນວັນທີເລີ່ມຕົ້ນຂອງສັນຍາເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນທີ່ຕິດພັນສາມາດນຳໃຊ້ໄດ້). ສິດໃນການນຳໃຊ້ຊັບສິນແມ່ນຖືກວັດແທກດ້ວຍລາຄາຕົ້ນທຶນຫັກຄ່າເສື່ອມສະສົມ ແລະ ຂາດທຶນຈາກການເສື່ອມຄ່າ, ແລະ ດັດແກ້ສຳລັບການວັດແທກມູນຄ່າຄືນໃໝ່ ຂອງໜີ້ສິນການເຊົ່າ. ຕົ້ນທຶນຂອງສິດໃນການນຳໃຊ້ຊັບສິນປະກອບມີໜີ້ສິນຕາມສັນຍາເຊົ່າທີ່ຖືກດັດແກ້ສຳລັບການຈ່າຍຄ່າເຊົ່າທີ່ເກີດຂຶ້ນໃນ ຫຼື ກ່ອນວັນທີເລີ່ມຕົ້ນ, ບວກໃຫ້ຕົ້ນທຶນທາງກົງໃນເບື້ອງຕົ້ນ ແລະ ຄາດຄະເນລາຍຈ່າຍໃນການຮື້ຖອນ ຫຼື ຕິດຕັ້ງຄືນຂອງຊັບສິນດັ່ງກ່າວ ຫຼື ສະຖານທີ່ຕັ້ງ ຫັກສ່ວນຫຼຸດຈູງໃຈໃຫ້ເຊົ່າທີ່ໄດ້ຮັບ. ໄລຍະເວລາຂອງການເຊົ່າລວມທັງໄລຍະເວລາທີ່ຄອບຄຸມທາງເລືອກໃນການຕໍ່ເວລາຖ້າທະນາຄານມີຄວາມເຊື່ອທີ່ແນ່ນອນຢ່າງສົມເຫດສົມຜົນໃນເລືອກທາງເລືອກດັ່ງກ່າວ. ເວັ້ນເສຍແຕ່ວ່າທະນາຄານມີຄວາມເຊື່ອທີ່ແນ່ນອນທີ່ຈະມີສິດເປັນເຈົ້າຂອງຊັບສິນທີ່ເຊົ່າພະວັນທີສິ້ນສຸດຂອງສັນຍາເຊົ່າ, ສິດໃນການນຳໃຊ້ຊັບສິນທີ່ຖືກຮັບຮູ້ແມ່ນຖືກຫັກຄ່າເສື່ອມໂດຍວິທີເສັ້ນຊື່ຕາມອາຍຸການນຳໃຊ້ທີ່ສັ້ນກວ່າອາຍຸການນຳໃຊ້ທີ່ຄາດຄະເນ ແລະ ອາຍຸສັນຍາເຊົ່າ. ສິດໃນການນຳໃຊ້ຊັບສິນແມ່ນຈະຖືກຄິດໄລ່ການເສື່ອມຄ່າ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.14.2 ໜີ້ສິນຕາມສັນຍາເຊົ່າ

ນະວັນທີ ທີ່ເລີ່ມຕົ້ນຂອງການເຊົ່າ, ທະນາຄານໄດ້ຮັບຮູ້ ໜີ້ສິນທີ່ເກີດຈາກການເຊົ່າຖືກຕີມູນຄ່າຕາມມູນຄ່າປັດຈຸບັນຂອງ ການຈ່າຍຄ່າເຊົ່າຕາມໄລຍະເວລາຂອງການເຊົ່າ. ການຈ່າຍຄ່າເຊົ່າແມ່ນລວມເຖິງການຈ່າຍແບບຄົງທີ່ (ລວມທັງການຈ່າຍ ເປັນກຳມະສິດ) ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ, ການຈ່າຍຄ່າເຊົ່າຜັນແປ ເຊິ່ງຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ມູນ ຄ່າຄາດຄະເນວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າລວມເຖິງລາຄາການໃຊ້ສິດຂອງທາງເລືອກໃນ ການຊື້ທີ່ສົມເຫດສົມຜົນທີ່ທະນາຄານຈະຕ້ອງໃຊ້ ແລະ ການຈ່າຍຄ່າປັບໃໝສຳລັບການຍົກເລີກສັນຍາຫາກໄລຍະເວລາການ ເຊົ່າສະທ້ອນໃຫ້ເຫັນເຖິງການໃຊ້ສິດຂອງທະນາຄານໃນການຍົກເລີກ. ຄ່າເຊົ່າຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ຈະຖືກ ຮັບຮູ້ເປັນຄ່າໃຊ້ຈ່າຍໃນຊ່ວງເວລາທີ່ເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດມີການຊຳລະ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງຄ່າເຊົ່າ, ທະນາຄານນຳໃຊ້ອັດຕາດອກເບ້ຍເງິນກູ້ຢືມສ່ວນເພີ່ມນະມື້ທີ່ເລີ່ມການເຊົ່າ ຖ້າ ຫາກວ່າອັດຕາດອກເບ້ຍໃນການເຊົ່າບໍ່ສາມາດຫາໄດ້ໂດຍງ່າຍ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ມູນຄ່າຂອງໜີ້ສິນທີ່ເກີດຈາກການ ເຊົ່າແມ່ນຖືກເພີ່ມຂຶ້ນຕາມການເພີ່ມຂຶ້ນຂອງດອກເບ້ຍ ແລະ ຫຼຸດລົງສຳລັບຄ່າເຊົ່າທີ່ຕ້ອງຈ່າຍ. ນອກຈາກນີ້ ມູນຄ່າຕາມບັນຊີ ຂອງໜີ້ສິນທີ່ເກີດຈາກການເຊົ່າຈະຖືກຮັບຮູ້ ກໍຕໍ່ເມື່ອມີການປ່ຽນແປງໃນສ່ວນຂອງໄລຍະເວລາຂອງການຈ່າຍຄ່າເຊົ່າແບບຄົງ ທີ ທີ່ມີເນື້ອຫາສຳຄັນ ຫຼື ການປ່ຽນແປງທາງດ້ານການປະເມີນເພື່ອຊື້ຊັບສິນ.

6.14.3 ການເຊົ່າຊັບສິນໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ

ທະນາຄານນຳໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າໄລຍະສັ້ນທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ເລີ່ມຕົ້ນ ແລະ ບໍ່ມີຕົວເລືອກໃນການຊື້. ນອກຈາກນີ້ ຍັງໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ມາເປັນການເຊົ່າຊັບ ສິນທີ່ຖືກພິຈາລະນາໃຫ້ເປັນມູນຄ່າຕ່ຳ. ການຈ່າຍຄ່າເຊົ່າ ສຳລັບການເຊົ່າທີ່ມີໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ແມ່ນຖືກຮັບຮູ້ເປັນຄ່າໃຊ້ຈ່າຍຕາມວິທີເສັ້ນຊື່ຕາມອາຍຸສັນຍາເຊົ່າ.

6.14.4 ການຕັດສິນໃຈທີ່ສຳຄັນໃນການກຳນົດໄລຍະເວລາຂອງສັນຍາພ້ອມການຕໍ່ອາຍຸ

ທະນາຄານໄດ້ກຳນົດໄລຍະເວລາການເຊົ່າເປັນໄລຍະເວລາທີ່ບໍ່ສາມາດຍົກເລີກສັນຍາໄດ້, ລວມທັງໄລຍະເວລາທີ່ກວມເອົາ ທາງເລືອກທີ່ຈະຕໍ່ອາຍຸຂອງການເຊົ່າ ຖ້າຫາກວ່າມັນມີເຫດຜົນທີ່ແນ່ນອນໃນການຈັດຕັ້ງປະຕິບັດ, ຫຼື ໄລຍະເວລາໃດໜຶ່ງທີ່ ກວມເອົາທາງເລືອກທີ່ຈະຢຸດສັນຍາເຊົ່າ, ຖ້າຫາກວ່າ ມັນມີເຫດຜົນທີ່ແນ່ນອນວ່າ ບໍ່ຄວນສືບຕໍ່ເຊົ່າຕໍ່ໄປ.

ທະນາຄານນຳໃຊ້ການຕັດສິນໃຈໃນການປະເມີນວ່າ ມີເຫດຜົນທີ່ແນ່ນອນບໍ່ ທີ່ຈະສືບຕໍ່ໃນການຕໍ່ອາຍຸສັນຍາເຊົ່າ. ນັ້ນແມ່ນ ການພິຈາລະນາທຸກໆປັດໄຈທີ່ກ່ຽວຂ້ອງທີ່ຈະສ້າງແຮງຈູງໃຈໃນການຕໍ່ອາຍຸສັນຍາເພື່ອດຳເນີນທຸລະກິດ. ຫຼັງຈາກມື້ທີ່ເລີ່ມ ການເຊົ່າ, ທະນາຄານໄດ້ໃຫ້ການປະເມີນຄືນສັນຍາເຊົ່າ ຖ້າຫາກມີເຫດການທີ່ສຳຄັນ ຫຼື ການປ່ຽນແປງໃນສະພາບການທີ່ຢູ່ ໃນການຄວບຄຸມ ແລະ ສົ່ງຜົນກະທົບຕໍ່ຄວາມສາມາດໃນການດຳເນີນງານ (ຫຼື ການບໍ່ດຳເນີນງານ) ທາງເລືອກໃນການຕໍ່ ສັນຍາ (ຕົວຢ່າງ ການປ່ຽນແປງຍຸດທະສາດຂອງທຸລະກິດ). ທະນາຄານໄດ້ລວມເອົາໄລຍະເວລາຕໍ່ອາຍຸສັນຍາເຊົ່າສຳລັບ ການເຊົ່າສະຖານທີ່ ແລະ ອຸປະກອນໄອທີ ເນື່ອງຈາກຄວາມສຳຄັນຂອງຊັບສິນເຫຼົ່ານີ້ເຂົ້າໃນການດຳເນີນງານຂອງ ທະນາຄານ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.15 ການເຊົ່າ (ເລີ່ມໃຊ້ກ່ອນ ວັນທີ 01 ມັງກອນ 2019)

ການກຳນົດວ່າຂໍ້ຕົກລົງເປັນການເຊົ່າ ຫຼື ບໍ່ເປັນການເຊົ່າ ຫຼື ບໍ່ນັ້ນ ແມ່ນຂຶ້ນຢູ່ກັບເນື້ອຫາຂອງການຕົກລົງ ແລະ ຕ້ອງມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນຂຶ້ນຢູ່ກັບການໃຊ້ຊັບສິນ ຫຼື ຊັບສິນທີ່ສະເພາະເຈາະຈົງ ແລະ ຂໍ້ຕົກລົງທີ່ບົ່ງບອກເຖິງ ສິດໃນການໃຊ້ຊັບສິນ.

ທະນາຄານໃນຖານະຜູ້ເຊົ່າ

ການເຊົ່າ, ບ່ອນທີ່ຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຂອງການເປັນເຈົ້າຂອງສິ່ງທີ່ເຊົ່າບໍ່ຖືກໂອນເຂົ້າທະນາຄານແມ່ນການເຮັດສັນຍາເຊົ່າ. ການຈ່າຍຄ່າເຊົ່າໄດ້ຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍໃນ ການຄິດໄລ່ກຳໄລ ຫຼື ຂາດທຶນຕາມວິທີການຄິດໄລ່ແບບເສັ້ນຊື່ຕາມໄລຍະເວລາການເຊົ່າ. ຄ່າເຊົ່າທີ່ສືບເຫດສືບຜົນແມ່ນຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍ ພາຍໃນຊ່ວງເວລາທີ່ການເຊົ່າເກີດຂຶ້ນ.

6.16 ຜົນປະໂຫຍດຂອງພະນັກງານ

ຜົນປະໂຫຍດພາຍຫຼັງອອກການ (ເລີ່ມນຳໃຊ້ຕັ້ງແຕ່ວັນທີ 01 ມັງກອນ 2019)

ຜົນປະໂຫຍດພາຍຫຼັງອອກການ ຈະຈ່າຍໃຫ້ແກ່ພະນັກງານທີ່ກະສຽນອາຍຸຂອງພະນັກງານຂອງທະນາຄານ ເມື່ອເວລາທີ່ກະສຽນອາຍຸ ໂດຍເອົາຈຳນວນວັນ ເທົ່າກັບ (ເງິນເດືອນພື້ນຖານຄັ້ງລ່າສຸດ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ (ຖ້າມີ) + 25% ຂອງຜົນປະໂຫຍດອື່ນໆ) x 1,5 x ປີການເຮັດວຽກ.

ກອງທຶນເພື່ອຜົນປະໂຫຍດພາຍຫຼັງອອກການ ແມ່ນມາຈາກ:

(i) ຄ້າງສຳຮອງກະສຽນອາຍຸທີ່ຮັບຈາກພະນັກງານ ເຊິ່ງທະນາຄານໄດ້ຫັກເງິນເດືອນຂອງພະນັກງານ (5,5%) ຂອງຈຳນວນເງິນ (ເທົ່າກັບເງິນເດືອນພື້ນຖານ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ + 25% ຂອງຜົນປະໂຫຍດອື່ນໆ);

(ii) ແລະ ເງິນສົມທົບຈາກທະນາຄານເປັນລາຍເດືອນ ເຊິ່ງເທົ່າກັບ 6% ຂອງຈຳນວນເງິນ (ເທົ່າກັບ ເງິນເດືອນພື້ນຖານ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ + 25% ຂອງຜົນປະໂຫຍດອື່ນໆ);

ທະນາຄານໄດ້ບັນທຶກເງິນສົມທົບເປັນ *'ເງິນເດືອນ ແລະ ຄ່າໃຊ້ຈ່າຍພະນັກງານອື່ນໆ'* ເຂົ້າໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການກິດຈະການ ເມື່ອມີການຈ່າຍເງິນດັ່ງກ່າວ.

ຜົນປະໂຫຍດຫຼັງອອກການ (ນຳໃຊ້ ກ່ອນວັນທີ 01 ມັງກອນ 2019)

ທະນາຄານປະຕິບັດແຜນງານກຳນົດຜົນປະໂຫຍດຫຼັງອອກການເຊິ່ງຜົນປະໂຫຍດຫຼັງອອກການ ແມ່ນຈະຖືກຈ່າຍໃຫ້ພະນັກງານທະນາຄານນະເວລາກະສຽນ ຈາກ:

- ຄ້າງສຳຮອງເງິນບຳເນັດສົມທົບໂດຍພະນັກງານ, ສຳລັບທະນາຄານຫັກຈາກເງິນເດືອນພື້ນຖານຂອງພະນັກງານທຸກໆເດືອນ, (ອັດຕາຄ້າງແຮເງິນບຳເນັດທີ່ໄດ້ນຳໃຊ້ໃນປະຈຸບັນທີ່ຫັກໄວ້ແມ່ນ 8,00%) ;

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.16 ຜົນປະໂຫຍດຂອງພະນັກງານ (ຕໍ່)

ຜົນປະໂຫຍດຫຼັງອອກການ (ນຳໃຊ້ ກ່ອນວັນທີ 01 ມັງກອນ 2019) (ຕໍ່)

- ການສົມທົບຂອງທະນາຄານເຊິ່ງເທົ່າກັບ ຈຳນວນເດືອນເຮັດວຽກຂອງພະນັກງານກັບທະນາຄານ ຄູນໃຫ້ 15,00% ຂອງ ເງິນເດືອນສຸດທ້າຍ.

ຕົ້ນທຶນຂອງການສະໜອງຜົນປະໂຫຍດພາຍໃຕ້ແຜນງານກຳນົດຜົນປະໂຫຍດແມ່ນຖືກກຳນົດໂດຍໃຊ້ວິທີການຄິດໄລ່ແບບ ຄາດຄະເນ (ໜີ້ສິນ). ຫຼຸດຫົວໜ່ວຍການບໍລິການທີ່ຖືກຄາດຄະເນໄວ້.

ການປະເມີນຄືນ, ປະກອບມີກຳໄລ ແລະ ຂາດທຶນຕົວຈິງ ບໍ່ລວມດອກເບ້ຍທີ່ລວມເຂົ້າໃນດອກເບ້ຍສຸດທິໃນຜົນປະໂຫຍດ ໜີ້ສິນທີ່ໄດ້ກຳນົດໄວ້ຈະບັນທຶກທັນທີໂດຍທັນທີໃນໃບລາຍງານຖານະການເງິນພ້ອມກັບ ຈິດໜ້ ຫຼື ມີ ທີ່ກ່ຽວຂ້ອງກັບກຳ ໄລສະສົມໂດຍຜ່ານ OCI ໃນປີທີ່ເກີດຂຶ້ນ. ການປະເມີນຄືນ ແມ່ນບໍ່ໄດ້ຈັດປະເພດຄືນເຂົ້າກຳໄລ ແລະ ຂາດທຶນໃນໄລຍະຕໍ່ ມາ.

ດອກເບ້ຍສຸດທິທີ່ຄິດໄລ່ໂດຍໃຊ້ອັດຕາສ່ວນຫຼຸດຂອງຊັບສິນ ຫຼື ໜີ້ສິນສຸດທິທີ່ກຳນົດໄວ້.

ທະນາຄານຮັບຮູ້ຜົນການດຳເນີນງານທີ່ປ່ຽນແປງໄປໃນພັນທະທີ່ຜູກພັນກັບຜົນປະໂຫຍດສຸດທິພາຍໃຕ້ "ລາຍຈ່າຍໃຫ້ແກ່ ພະນັກ ງານ" ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ:

- ຄ່າໃຊ້ຈ່າຍໃນການບໍລິການປະກອບມີຄ່າໃຊ້ຈ່າຍໃນການບໍລິການໃນປະຈຸບັນ, ຄ່າໃຊ້ຈ່າຍໃນການບໍລິການຜ່ານມາ, ກຳໄລ ແລະ ຂາດທຶນ ໃນການຕັດຫັກລົບ ແລະ ການຊຳລະທີ່ບໍ່ເກີດຂຶ້ນເປັນປະຈຳ, ແລະ
- ລາຍຮັບ ຫຼື ລາຍຈ່າຍດອກເບ້ຍສຸດທິ

ຜົນປະໂຫຍດຈາກການເລີກຈ້າງ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງ ວັນທີ 28 ມັງກອນ 2014, ທະນາຄານມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດສືບຕໍ່ເຮັດ ວຽກໄດ້;
- ກໍລະນີທະນາຄານພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງການເຮັດວຽກພາຍໃນອົງກອນ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານ ໂດຍ ອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານກ່ອນການເລີກຈ້າງ. ນະວັນທີ 31 ທັນວາ 2019, ບໍ່ມີພະນັກງານ ທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ທະນາຄານບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງ ດັ່ງກ່າວໃນເອກະສານລາຍງານການເງິນສັງລວມກິດຈະການ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.17 ເງິນແຮ

ເງິນແຮ ຈະຖືກຮັບຮູ້ກໍຕໍ່ເມື່ອທະນາຄານມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕີກລົງ) ເນື່ອງມາ ຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວ ຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ທະນາຄານກຳນົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດ ກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການພາສີ ເຊິ່ງແມ່ນອັດຕາການປັດຈຸບັນທີ່ກຳນົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການພາຍຫຼັງໄດ້ຮັບເງິນຄືນ.

6.18 ອາກອນກຳໄລ

ອາກອນພາຍໃນປີ

ຊັບສິນ ແລະ ໜີ້ສິນອາກອນພາຍໃນໄລຍະ ສຳລັບປີປະຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະເກັບຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນ ມີຜົນສັກສິດນຳໃຊ້ໃນມື້ສ້າງໃບລາຍງານຖານະການເງິນ ພາຍໃນປະເທດທີ່ທະນາຄານດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງເສຍອາກອນ.

ອາກອນລາຍໄດ້ພາຍໃນໄລຍະທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີທຶນແມ່ນຖືກຮັບຮູ້ໃນທຶນເຈົ້າຂອງ ແລະ ບໍ່ໄດ້ມີການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຜູ້ບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍອີງຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

ອາກອນລໍຖ້າຊຳລະສະສາງ

ອາກອນລໍຖ້າຊຳລະສະສາງແມ່ນຖືກຄິດໄລ່ ຈາກສ່ວນຜິດດ່ຽງຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ໜີ້ຕ້ອງສົ່ງອາກອນລໍຖ້າຊຳລະສະສາງແມ່ນຖືກຮັບຮູ້ເປັນສ່ວນຕ່າງອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນອາກອນລໍຖ້າຊຳລະສະສາງເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນການເຄື່ອນໄຫວທີ່ບໍ່ແມ່ນການສັງລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຖືກອາກອນ.

ຍອດຍົກມາຂອງໜີ້ຕ້ອງຮັບທາງອາກອນ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງໜີ້ ຕ້ອງຮັບອາກອນຈະຖືກອະນຸຍາດໃຫ້ຫັກ. ໜີ້ຕ້ອງຮັບອາກອນທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ໜີ້ຕ້ອງຮັບອາກອນ ສາມາດຫັກອອກໄດ້.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນລໍຖ້າຊຳລະສະສາງແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ ພາຍໃນປີ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນ) ທີ່ປະກາດນຳໃຊ້ກ່ອນໜ້າ ຫຼື ປະກາດໃຊ້ນະວັນທີໃບລາຍງານຖານະການເງິນ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.18 ອາກອນກຳໄລ (ຕໍ່)

ອາກອນລ່ວງໜ້າຊຳລະສະສາງ (ຕໍ່)

ອາກອນພາຍໃນປີ ແລະ ອາກອນລ່ວງໜ້າຊຳລະສະສາງຈະຖືກຮັບຮູ້ຜົນປະໂຫຍດທາງອາກອນ ຫຼື ຄ່າໃຊ້ຈ່າຍໃນໃບລາຍງານຜົນການດຳເນີນງານ, ຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸຕິທຳຂອງຊັບສິນທີ່ມີໄວ້ສຳລັບການຂາຍ, ການຜິດຜ່ຽງອັດຕາແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ຊຶ່ງສາມາດຄິດຄ່າທຳນຽມ ຫຼື ບັນທຶກບັນຊີເປັນ OCI. ຂໍ້ຍົກເວັ້ນເຫຼົ່ານີ້ແມ່ນໄດ້ຖືກຈັດປະເພດຄືນໃໝ່ ຈາກ OCI ໄປ ໃບລາຍງານຜົນການດຳເນີນງານ ໃນບັນຊີກຳໄລ ຫຼື ຂາດທຶນ ລ່ວງໜ້າຊຳລະສະສາງ. ທະນາຄານຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການຊຳລະສະສາງ ທີ່ກ່ຽວຂ້ອງກັບເຄື່ອງມືທາງດ້ານການເງິນ ທີ່ຖືກຈັດປະເພດເປັນທຶນເຈົ້າຂອງ.

ທະນາຄານຫັກລ້າງໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງອາກອນລ່ວງໜ້າຊຳລະສະສາງຂອງທະນາຄານ ຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍເພື່ອຫັກລ້າງ ແລະ ມັນເປັນຄວາມຕັ້ງໃຈທະນາຄານທີ່ຈະລາຍງານເປັນມູນຄ່າສຸດທິ.

6.19 ຊັບສິນທີ່ໄດ້ຮັບໝອບໝາຍອຳນາດ

ທະນາຄານໄດ້ໃຫ້ບໍລິການກ່ຽວກັບກອງທຶນ ແລະ ການບໍລິການບໍລິຫານຊັບສິນ ເຊິ່ງເປັນຜົນເຮັດໃຫ້ທະນາຄານໄດ້ຖືຄອງ ຫຼື ໄດ້ຮັບສິດໃນການລົງທຶນໃນນາມລູກຄ້າຂອງທະນາຄານ. ຊັບສິນດັ່ງກ່າວ ບໍ່ໄດ້ຖືກສະແດງໃນເອກະສານລາຍງານການເງິນສັງລວມກິດຈະການ, ເນື່ອງຈາກຊັບສິນເຫຼົ່ານັ້ນ ບໍ່ແມ່ນຊັບສິນຂອງທະນາຄານ.

6.20 ຄ້ຳສຳຮອງທຶນເຈົ້າຂອງ

ຄ້ຳສຳຮອງຖືກບັນທຶກເປັນທຶນ ໃນເອກະສານລາຍງານການເງິນສັງລວມກິດຈະການ ຂອງທະນາຄານ, ເຊິ່ງລວມມີ:

- ຄ້ຳສຳຮອງຕາມລະບຽບການ, ເຊິ່ງຖືກສ້າງຂຶ້ນຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ, ລາຍລະອຽດຢຸ່ບົດອະທິບາຍເລກທີ 34; ແລະ
- ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ, ເຊິ່ງປະກອບດ້ວຍສ່ວນປ່ຽນແປງຂອງມູນຄ່າຍຸຕິທຳຂອງຫຼັກຊັບມີໄວ້ເພື່ອຂາຍ. ລາຍລະອຽດຢຸ່ບົດອະທິບາຍເລກທີ 35.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.21 ມາດຕະຖານທີ່ອອກແລ້ວ ແຕ່ຍັງບໍ່ຖືກນຳໃຊ້

ມາດຕະຖານ ແລະ ການຕີຄວາມໝາຍທີ່ອອກແລ້ວ ແຕ່ຍັງບໍ່ຖືກນຳໃຊ້ຈົນເຖິງມື້ອອກບົດລາຍງານການເງິນ ຂອງທະນາຄານ ແມ່ນໄດ້ເປີດເຜີຍດັ່ງລຸ່ມນີ້.

IFRS 9 – ເຄື່ອງມືທາງການເງິນ

ໃນເດືອນກໍລະກົດ 2014, IASB ອອກມາດຕະຖານບັນຊີສະບັບສຸດທ້າຍຂອງ IFRS 9 – ເຄື່ອງມືທາງການເງິນທີ່ສະທ້ອນໃຫ້ເຫັນເຖິງຂັ້ນຕອນຂອງແຕ່ລະຮູບແບບຂອງເຄື່ອງມືທາງການເງິນທັງໝົດ. ແລະ ນຳມາໃຊ້ແທນ IAS 39 – ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ວັດແທກ ແລະ IFRS 9 ສະບັບກ່ອນໜ້າທັງໝົດ. ມາດຕະຖານໄດ້ລະບຸຄວາມຮຽກຮ້ອງຕ້ອງການໃໝ່ ໃນການຈັດປະເພດ ແລະ ການວັດແທກ, ການເສື່ອມມູນຄ່າ ແລະ ການປ້ອງກັນຄວາມສ່ຽງທາງບັນຊີ. IFRS 9 ມີຜົນບັງຄັບໃຊ້ໃນໄລຍະເວລາເລີ່ມຕົ້ນຂອງປີ ຫຼື ຫຼັງຈາກ ວັນທີ 1 ມັງກອນ 2018 ແລະ ອະນຸຍາດໃຫ້ຈັດຕັ້ງປະຕິບັດລ່ວງໜ້າ. ປັບປຸງບັນຊີຍ້ອນຫຼັງແມ່ນມີຄວາມຈຳເປັນ ແຕ່ວ່າຂໍ້ມູນປຽບທຽບແມ່ນບໍ່ໄດ້ບັງຄັບໃນການນຳສະເໜີ. ການນຳໃຊ້ IFRS 9 ມີຜົນກະທົບຕໍ່ການຈັດປະເພດ ແລະ ການວັດແທກຊັບສິນທາງການເງິນຂອງທະນາຄານ ແຕ່ຈະບໍ່ມີຜົນກະທົບຕໍ່ໜີ້ສິນທາງການເງິນຂອງທະນາຄານ.

ໃນປີ 2019, ທະນາຄານໄດ້ປະຕິບັດຕາມຄຳແນະນຳໃນໜັງສືແຈ້ງການສະບັບເລກທີ 1659/ທຫລ ລົງວັນທີ 14 ທັນວາ 2018 ໂດຍທະນາຄານແຫ່ງ ສປປ ລາວ ແລະ ແຈ້ງການເລກທີ 19/ສຄຄຊ ລົງວັນທີ 23 ພະຈິກ 2018 ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມນະໂຍບາຍການບັນຊີສຳລັບການຮັບຮູ້ ແລະ ການຕີລາຄາເຄື່ອງມືທາງການເງິນຕາມ IAS 39: "ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການຕີລາຄາ" ແທນ IFRS 9: "ເຄື່ອງມືການເງິນ".

6.22 ມາດຕະຖານທີ່ອອກແລ້ວ ແຕ່ຍັງບໍ່ທັນມີຜົນບັງຄັບໃຊ້

ມາດຕະຖານ ແລະ ການຕີຄວາມໝາຍ ໃໝ່ ແລະ ດັດແກ້ທີ່ໄດ້ອອກ, ແຕ່ວ່າຍັງບໍ່ທັນມີຜົນບັງຄັບໃຊ້, ຈົນເຖິງມື້ອອກເອກະສານລາຍງານການເງິນຂອງທະນາຄານ ແມ່ນໄດ້ເປີດເຜີຍດັ່ງຕໍ່ໄປນີ້. ທະນາຄານຈະຮັບຮອງເອົາມາດຕະຖານເຫລົ່ານີ້, ຖ້າສາມາດນຳໃຊ້ໄດ້ໃນເວລາທີ່ມາດຕະຖານດັ່ງກ່າວໄດ້ມີຜົນບັງຄັບໃຊ້.

ການປັບປຸງ IFRS 3: ນິຍາມທຸລະກິດ

ໃນເດືອນຕຸລາ 2018, IASB ໄດ້ອອກແຈ້ງການດັດແກ້ ຄຳນິຍາມຂອງທຸລະກິດໃນ IFRS 3 ການປະສົມປະສານທຸລະກິດ ເພື່ອຊ່ວຍໃຫ້ບັນດາອົງກອນ ກຳນົດວ່າບັນດາກິດຈະກຳ ແລະ ຊັບສິນທີ່ໄດ້ມານັ້ນແມ່ນທຸລະກິດ ຫຼື ບໍ່. ພວກເຂົາຊີ້ແຈງຂໍ້ກຳນົດຂັ້ນຕ່ຳສຸດສຳລັບທຸລະກິດ, ລຶບລ້າງການປະເມີນວ່າຜູ້ເຂົ້າຮ່ວມຕະຫຼາດມີຄວາມສາມາດປ່ຽນແທນອົງປະກອບໃດໜຶ່ງທີ່ຂາດຫາຍໄປ ຫຼື ບໍ່, ເພີ່ມຄຳແນະນຳ ເພື່ອຊ່ວຍໃຫ້ອົງກອນປະເມີນວ່າຂະບວນການທີ່ໄດ້ມານັ້ນມີຄວາມສຳຄັນ, ຈຳກັດຄຳນິຍາມຂອງທຸລະກິດ ແລະ ຜົນໄດ້ຮັບໃຫ້ແຄບລົງ, ແລະ ແນະນຳການທົດສອບຄວາມເອົາໃຈໃສ່ຕໍ່ມູນຄ່າຍຸຕິທຳແບບທາງເລືອກ. ແບບຢ່າງທີ່ໄດ້ສະແດງໃໝ່ແມ່ນຖືກສະໜອງພ້ອມກັບການດັດແກ້.

ເນື່ອງຈາກວ່າການປັບປຸງດັ່ງກ່າວມີຜົນບັງຄັບໃຊ້ໃນການເຮັດທຸລະກຳ ຫຼື ເຫດການອື່ນໆທີ່ເກີດຂຶ້ນໃນວັນທີ ຫຼື ຫຼັງຈາກການນຳໃຊ້ຄັ້ງທຳອິດ, ທະນາຄານຈະບໍ່ໄດ້ຮັບຜົນກະທົບຈາກການປັບປຸງເຫຼົ່ານີ້ໃນວັນປ່ຽນແປງ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.22 *ມາດຕະຖານທີ່ອອກແລ້ວ ແຕ່ຍັງບໍ່ທັນມີຜົນບັງຄັບໃຊ້* (ຕໍ່)

ການປັບປຸງ IAS 1 ແລະ IAS 8: ນິຍາມຂອງຄ່າສຳຄັນທຽບຖານ

ໃນເດືອນຕຸລາ 2018, IASB ໄດ້ອອກການປັບປຸງ IAS 1 ການນຳສະເໜີບົດລາຍງານດ້ານການເງິນ ແລະ IAS 8 ນະໂຍບາຍການບັນຊີ, ການປ່ຽນແປງການຄາດຄະເນການບັນຊີ ແລະ ຂໍ້ຜິດພາດເພື່ອໃຫ້ສອດຄ່ອງກັບຄຳນິຍາມຂອງ 'ຄ່າສຳຄັນທຽບຖານ' ໃນທົ່ວມາດຕະຖານ ແລະ ເພື່ອຊີ້ແຈງບາງດ້ານຂອງ ຄຳນິຍາມ. ຄຳນິຍາມໃໝ່ລະບຸວ່າ, 'ຂໍ້ມູນແມ່ນມີຄວາມສຳຄັນຖ້າ ຫາກວ່າການລະເວັ້ນ, ການລະບຸທີ່ບໍ່ຖືກຕ້ອງ ຫຼື ການປິດບັງຂໍ້ມູນມັນອາດຈະເປັນສາຍເຫດທີ່ຈະມີອິດທິພົນຕໍ່ການຕັດສິນໃຈ ທີ່ຜູ້ນຳໃຊ້ຕົ້ນຕໍຕາມຈຸດປະສົງຂອງບົດລາຍງານການເງິນທີ່ໄດ້ສ້າງຂຶ້ນບົນພື້ນຖານຂອງບົດລາຍງານການເງິນເຫຼົ່ານັ້ນ, ເຊິ່ງໄດ້ ສະໜອງຂໍ້ມູນທາງການເງິນກ່ຽວກັບອົງກອນທີ່ລາຍງານໂດຍສະເພາະ.'

ການປັບປຸງຄຳນິຍາມຂອງຄ່າສຳຄັນທຽບຖານບໍ່ໄດ້ຖືກຄາດວ່າຈະມີຜົນກະທົບທີ່ສຳຄັນຕໍ່ເອກະສານລາຍງານເງິນສັງລວມ ກິດຈະການຂອງທະນາຄານ.

7. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງຂໍ້ສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນສັງລວມກິດຈະການຂອງທະນາຄານ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີ ການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການ ເປີດເຜີຍທີ່ກ່ຽວຂ້ອງ, ລວມທັງການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີຄວາມຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະ ສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງທະນາຄານ, ຄະນະບໍລິຫານໄດ້ເຮັດການປະເມີນ ແລະ ສົມມຸດຖານດັ່ງຕໍ່ໄປນີ້ ເຊິ່ງກ່ຽວຂ້ອງກັບອະນາຄົດ ແລະ ຄວາມບໍ່ແນ່ນອນການຄາດຄະເນອັນທີລາຍງານ, ເຊິ່ງມີຄວາມ ສ່ຽງຫຼາຍ ແລະ ມີຜົນຕໍ່ການດັດແກ້ທີ່ສຳຄັນໃນຍອດທີ່ບັນທຶກບັນຊີຂອງຊັບສິນ ແລະ ໜີ້ສິນ ພາຍໃນໄລຍະການເງິນຕໍ່ໜ້າ. ສະພາບການ ແລະ ສົມມຸດຖານທີ່ມີຢູ່ກ່ຽວກັບການພັດທະນາໃນອະນາຄົດອາດຈະມີການປ່ຽນແປງເນື່ອງມາຈາກສະຖານະ ການທີ່ເໜືອການຄວບຄຸມຂອງທະນາຄານ ແລະ ມັນຖືກສະທ້ອນໃນຂໍ້ສົມມຸດຖານໃນເວລາທີ່ເກີດຂຶ້ນ. ລາຍການທີ່ມີຜົນ ກະທົບທີ່ສຳຄັນທີ່ສຸດໃນຍອດທີ່ຖືກຮັບຮູ້ໃນໃບລາຍງານການເງິນສັງລວມກິດຈະການ ພ້ອມກັບການປະເມີນການບໍລິຫານທີ່ ສຳຄັນ ແລະ/ຫຼື ການຄາດຄະເນ ແມ່ນຖືກປຽບທຽບຂ້າງລຸ່ມນີ້

7.1 *ຄວາມສືບເນື່ອງໃນການດຳເນີນທຸລະກິດ*

ຄະນະອຳນວຍການຂອງທະນາຄານໄດ້ປະເມີນຄວາມອາດສາມາດຂອງທະນາຄານ ກໍ່ຄືຄວາມສືບເນື່ອງໃນການດຳເນີນທຸລະ ກິດ ແລະ ເປັນທີ່ໜ້າພໍໃຈວ່າທະນາຄານມີແຫຼ່ງທຶນ ເພື່ອສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດ. ຍິ່ງໄປກວ່ານັ້ນ, ຄະນະ ອຳນວຍການບໍ່ມີສິ່ງຜິດປົກກະຕິໃດໆເປັນທີ່ໜ້າສົງໄສຕໍ່ກັບຄວາມອາດສາມາດຂອງທະນາຄານ ເພື່ອສືບຕໍ່ດຳເນີນງານກໍ່ຄື ຄວາມສືບເນື່ອງໃນການດຳເນີນທຸລະກິດ. ເພາະສະນັ້ນ, ເອກະສານລາຍງານການເງິນສັງລວມກິດຈະການ ແມ່ນຍັງສືບຕໍ່ສ້າງ ຂຶ້ນບົນພື້ນຖານ ຄວາມສືບເນື່ອງໃນການດຳເນີນທຸລະກິດ.

7. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

7.2 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ວິທີອັດຕາດອກເບ້ຍທີ່ແທ້ຈິງຂອງທະນາຄານ, ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 6.2.4, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຄິງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໄໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

7.3 *ການຂາດທຶນຈາກຄ່າເສື່ອມຂອງເງິນກູ້ ແລະ ເງິນລ່ວງໜ້າ*

ທະນາຄານໄດ້ມີການທົບທວນເງິນໃຫ້ກູ້ ແລະ ເງິນລ່ວງໜ້າທີ່ສຳຄັນເປັນແຕ່ລະບຸກຄົນຕາມແຕ່ລະວັນທີລາຍງານ ເພື່ອປະເມີນວ່າການຂາດທຶນຈາກຄ່າເສື່ອມ ຄວນຖືກບັນທຶກລົງໃນໃບລາຍງານຜົນການດຳເນີນງານ ຫຼື ບໍ່.

ວິທີການປະເມີນຄ່າເສື່ອມຂອງທະນາຄານສຳລັບຊັບສິນທີ່ບັນທຶກໂດຍວິທີທັກລົບຕົ້ນທຶນ ເປັນຜົນໃຫ້ມີການບັນທຶກເງິນແຮສຳລັບ:

- ▶ ການເສື່ອມມູນຄ່າສະເພາະຕາມຄວາມສຳຄັນແບບລາຍການ ຫຼື ຊັບສິນສ່ຽງທີ່ຖືກກຳນົດວ່າສຳຄັນ;
- ▶ ການເສື່ອມມູນຄ່າເປັນກຸ່ມ.

ລາຍລະອຽດຂອງແຕ່ລະປະເພດໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 6.4.1 ເຊິ່ງປະກອບດ້ວຍການຕັດສິນໃຈຂອງຄະນະອຳນວຍການ, ໂດຍສະເພາະແລ້ວຈະມີການປະເມີນມູນຄ່າ ແລະ ກຳນົດເວລາຂອງກະແສເງິນສົດໃນອະນາຄົດ ແລະ ມູນຄ່າຫຼັກຊັບຄ້ຳປະກັນ ເມື່ອມີການຂາດທຶນຈາກຄ່າເສື່ອມ. ການປະເມີນດັ່ງກ່າວມາຈາກຈຳນວນຂອງປັດໄຈ, ການປ່ຽນແປງຂອງລາຍການທີ່ເຮັດໃຫ້ເກີດຄວາມແຕກຕ່າງຂອງຜົນຕອບແທນ.

7.4 *ການເສື່ອມມູນຄ່າຂອງຊັບສິນມີໄວ້ເພື່ອຂາຍ*

ທະນາຄານທົບທວນຄືນຕາສານໜີ້ຂອງຕົນທີ່ຈັດປະເພດເປັນການລົງທຶນທີ່ມີໄວ້ເພື່ອຂາຍໃນແຕ່ລະວັນທີ່ລາຍງານເພື່ອປະເມີນວ່າພວກມັນໄດ້ເຊື່ອມມູນຄ່າ ຫຼື ບໍ່ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 6.4.2

ການປະເມີນຜົນດັ່ງກ່າວນີ້, ລວມທັງການຄາດຄະເນກະແສເງິນສົດໃນອະນາຄົດ ແລະ ຂໍ້ມູນທີ່ປະກອບເຂົ້າອື່ນໆເຂົ້າໃນຮູບແບບກະແສເງິນສົດແບບສ່ວນຫຼຸດ ແລະ ໃນກໍລະນີຂອງກາສານທຶນ, ການຕີມູນຄ່າຂອງສິ່ງທີ່ເປັນ 'ທີ່ສຳຄັນທຽບຖານ' ຫຼື 'ເປັນເວລາດົນ' ແມ່ນຮຽກຮ້ອງໃຫ້ມີການຕັດສິນໃຈ. ໃນການຕັດສິນໃຈດັ່ງກ່າວນີ້, ທະນາຄານປະເມີນ, ໃນບັນດາປັດໄຈອື່ນໆ, ປະຫວັດການເຄື່ອນໄຫວຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ຂອບເຂດ ທີ່ມູນຄ່າຍຸຕິທຳຂອງການລົງທຶນແມ່ນຕ່ຳກ່ວາຕົ້ນທຶນ.

8. ລາຍຮັບສຸດທິດອກເບັຍ ແລະ ລາຍຮັບທີ່ຄ້າຍຄືກັນ

	2019 *ລ້ານກີບ*	*2018* *ລ້ານກີບ*
ລາຍຮັບດອກເບັຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບັຍທີ່ແທ້ຈິງຈາກ:		
ເງິນກູ້ຢືມໃຫ້ກັບລູກຄ້າ	1.924.038	1.722.144
ເງິນຝາກຢູ່ທະນາຄານອື່ນໆ	68.632	51.199
ການລົງທຶນໃນຫຼັກຊັບ	166.478	165.015
ກິດຈະກຳອື່ນໆ	146	470
	2.159.294	**1.938.828**

9. ລາຍຈ່າຍສຸດທິດອກເບັຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ

	2019 *ລ້ານກີບ*	*2018* *ລ້ານກີບ*
ລາຍຈ່າຍດອກເບັຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບັຍທີ່ແທ້ຈິງສຳລັບ:		
ໜີ້ຕ້ອງສົ່ງແກ່ທະນາຄານອື່ນ	283.997	184.996
ເງິນຝາກລູກຄ້າ	909.704	815.581
	1.193.701	**1.000.577**

10. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	2019 *ລ້ານກີບ*	*2018* *ລ້ານກີບ*
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	181.324	157.223
ທຸລະກຳທຳດ້ານການເງິນ	40.924	86.808
ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ	27.213	17.606
	249.461	**261.637**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ບໍລິການຊຳລະສະສາງ	(25.694)	(20.396)
ທຸລະກຳທາງດ້ານການເງິນ	(4.281)	(1.621)
	(29.975)	**(22.017)**
ກຳໄລສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**219.486**	**239.620**

11. ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ

	2019 *ລ້ານກີບ*	*2018* *ລ້ານກີບ*
ກຳໄລສຸດທິຈາກການຊື້ຂາຍເງິນຕາ ແລະ ການຕີມູນຄ່າລາຍການທີ່ເປັນເງິນ	34.749	49.719
	34.749	**49.719**

12. ຂາດທຶນສຸດທິຈາກການຊໍ້-ຂາຍອະນຸພັນ

	2019 *ລ້ານກີບ*	*2018* *ລ້ານກີບ*
ກຳໄລຈາກອະນຸພັນທາງການເງິນ	1.518	-
ຂາດທຶນຈາກອະນຸພັນທາງການເງິນ	(2.722)	-
	(1.204)	**-**

13. ລາຍຮັບອື່ນໆຈາກການດຳເນີນງານ

	2019 *ລ້ານກີບ*	*2018* *ລ້ານກີບ*
ລາຍຮັບເງິນປັນຜົນ	6.198	11.630
ລາຍຮັບຈາກການຂາຍເງິນລົງທຶນໃນບໍລິສັດຮ່ວມທຶນ	-	2.734
ລາຍຮັບຈາກການຂາຍຊັບສິນບັດຄົງທີ່	922	-
ເກັບຄືນໜີ້ສູນທີ່ສະສາງອອກ	58.758	4.879
ຕົ້ນທຶນການບໍລິການທີ່ຜ່ານມາສຳລັບການດັດແກ້ແຜນງານກຳນົດຜົນປະໂຫຍດ	25.874	-
ອື່ນໆ	20.341	2.649
	112.093	**21.892**

14. ຄ່າເສື່ອມການລົງທຶນທາງດ້ານການເງິນ

	2019 *ລ້ານກີບ*	*2018* *ລ້ານກີບ*
ເງິນແຮຄ່າເສື່ອມຫຼັກຊັບ		
ເງິນແຮຄ່າເສື່ອມ ສຳລັບການລົງທຶນຫຼັກຊັບມີໄວ້ເພື່ອຂາຍ	(22.586)	(31.887)
ເກັບຄືນເງິນແຮຄ່າເສື່ອມ ສຳລັບການລົງທຶນຫຼັກຊັບຖືໄວ້ຄົບກຳນົດ *(ບົດອະທິບາຍເລກທີ 22)*	1.210	2.475
	(21.376)	**(29.412)**

15. ລາຍຈ່າຍພະນັກງານ

	2019	*2018*
	ລ້ານກີບ	*ລ້ານກີບ*
ເງິນເດືອນ	163.575	149.274
ເງິນບຳເນັດ ແລະ ເງິນອຸດໜູນອື່ນໆ	125.203	154.228
ເງິນອຸດໜູນພາຍຫຼັງອອກການ *(ບົດອະທິບາຍເລກທີ 32)*	7.325	24.134
ຄ່າໃຊ້ຈ່າຍອື່ນໆຂອງພະນັກງານ	7.529	7.057
	303.632	**334.693**

16. ລາຍຈ່າຍອື່ນໆຈາກການດຳເນີນງານ

	2019	*2018*
	ລ້ານກີບ	*ລ້ານກີບ*
ຄ່າສ້ອມແປງ ແລະ ບຳລຸງຮັກສາ	23.446	23.277
ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	13.316	8.343
ຄ່າເຊົ່າຫ້ອງການ	-	8.490
ຄ່າການສື່ສານ	9.714	7.662
ຄ່າການຝຶກອົບຮົມ, ປະຊຸມ ແລະ ສຳມະນາ	17.568	17.087
ຄ່າເບ້ຍປະກັນໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	31.753	27.038
ລາຍຈ່າຍດອກເບ້ຍໜີ້ສິນຕາມສັນຍາເຊົ່າ	443	-
ຄ່າອາກອນ ແລະ ພັນທະອື່ນໆ	14.220	162
ຄ່າປະກັນໄພ	8.256	6.230
ຄ່າສາທາລະນຸປະໂພກ	9.501	8.342
ຄ່ານ້ຳມັນ	2.406	2.276
ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ	21.024	16.966
ຄ່າທີ່ປຶກສາ ແລະ ການບໍລິການທາງການເງິນ	5.817	5.958
ການສະສາງຊັບສິນພວມກໍ່ສ້າງ	13.351	-
ລາຍຈ່າຍເງິນຖືກລັກໂລບ	-	4.011
ອື່ນໆ	11.186	20.292
	182.001	**156.134**

17. ເງິນສິດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນສິດໃນຄັງເປັນເງິນກີບ	1.235.430	961.728
ເງິນສິດໃນຄັງເປັນເງິນຕາຕ່າງປະເທດ	814.671	681.517
ຍອດເຫຼືອຢູ່ ທຫລ		
- ເງິນແຮຝາກບັງຄັບ (*)	1.399.542	1.294.828
- ເງິນຝາກກະແສລາຍວັນ	5.752.408	2.396.173
	9.202.051	**5.334.246**

ຍອດເຫຼືອກັບທະນາຄານກາງປະກອບດ້ວຍບັນຊີເງິນຝາກເພື່ອການຊຳລະສະສາງ ແລະ ເງິນຝາກແຮບັງຄັບ. ຍອດເຫຼືອເຫລົ່ານີ້ບໍ່ມີດອກເບ້ຍ.

(*) ພາຍໃຕ້ລະບຽບການຂອງທະນາຄານກາງ, ທະນາຄານຖືກຮຽກຮ້ອງໃຫ້ຮັກສາຄັງສະສົມເງິນສິດກັບທະນາຄານກາງໃນຮູບແບບເງິນຝາກແຮບັງຄັບ, ເຊິ່ງຖືກຄິດໄລ່ 5,00% ສຳລັບສະກຸນເງິນກີບ ແລະ 10,00% ສຳລັບສະກຸນເງິນຕ່າງປະເທດ, ສອງອາທິດຕໍ່ຄັ້ງ (2018: 5,00% ແລະ 10,00%) ຂອງເງິນຝາກລູກຄ້າທີ່ມີມື້ຄົບກຳນົດຕ່ຳກວ່າ 12 ເດືອນ. ພາຍໃນປີ, ທະນາຄານໄດ້ຮັກສາຍອດເງິນຝາກແຮບັງຄັບໃນມູນຄ່າທີ່ຖືກຕ້ອງຕາມລະບຽບຂອງ ທຫລ.

18. ໜີ້ຕ້ອງຮັບຈາກທະນາຄານອື່ນ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	**3.921.892**	**2.700.974**
- ເປັນເງິນກີບ	1.750	3.681
- ເປັນເງິນຕາຕ່າງປະເທດ	3.920.142	2.697.293
ເງິນຝາກມີກຳນົດ	**666.429**	**1.127.695**
- ເປັນເງິນກີບ	312.549	381.380
- ເປັນເງິນຕາຕ່າງປະເທດ	353.880	746.315
	4.588.321	**3.828.669**

ອັດຕາດອກເບ້ຍສຳລັບໜີ້ຕ້ອງຮັບທະນາຄານອື່ນພາຍໃນປີມີດັ່ງລຸ່ມນີ້:

	2019 *% ຕໍ່ປີ*	***2018*** *% ຕໍ່ປີ*
ເງິນຝາກກະແສລາຍວັນ	0,00% - 3,10%	0,00% - 0,80%
ເງິນຝາກປະຢັດ	0,00% - 0,80%	0,00% - 0,80%
ເງິາຝາກມີກຳນົດ	0,85% - 4,95%	0,85% - 4,00%

19. ເງິນກູ້ໃຫ້ແກ່ລູກຄ້າ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນກູ້ໃຫ້ລູກຄ້າທັງໝົດ	28.141.033	24.845.276
ປະກອບມີ:		
ເງິນກູ້ທີ່ໄດ້ຮັບຫຶນຈາກການກູ້ຢືມເງິນຈາກ ທຫລ		
(ບົດອະທິບາຍເລກທີ 30)	*1.825.039*	*2.063.243*
ລົບ: ເງິນເຮຍຂາດທຶນຈາກການເສື່ອມຄ່າ		
(ບົດອະທິບາຍເລກທີ 20)	(650.541)	(478.416)
	27.490.492	**24.366.860**

ອັດຕາດອກເບ້ຍສຳລັບເງິນກູ້ທຸລະກິດພາຍໃນໄລຍະມີ ດັ່ງລຸ່ມນີ້:

	2019 *ອັດຕາດອກເບ້ຍ* *% ຕໍ່ປີ*	*2018* *ອັດຕາດອກເບ້ຍ* *% ຕໍ່ປີ*
ເງິນກູ້ເປັນເງິນ ກີບ	6,00% - 16,00%	6,00% - 16,00%
ເງິນກູ້ເປັນເງິນ ໂດລາ	5,80% - 16,00%	4,00% - 16,00%
ເງິນກູ້ເປັນເງິນ ບາດ	6,00% - 10,00%	6,00% - 11,50%

ການວິເຄາະຖານະເງິນກູ້ຂອງລູກຄ້າຕາມສະກຸນເງິນ:

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນກູ້ເປັນເງິນ ກີບ	12.649.118	10.988.474
ເງິນກູ້ເປັນເງິນ ໂດລາ	12.054.073	10.842.780
ເງິນກູ້ເປັນເງິນ ບາດ	3.437.842	3.014.022
	28.141.033	**24.845.276**

ການວິເຄາະຖານະເງິນກູ້ຂອງລູກຄ້າຕາມມື້ຄົບກຳນົດເດີມ:

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນກູ້ໄລຍະສັ້ນ	1.581.901	1.825.034
ເງິນກູ້ໄລຍະກາງ	16.311.131	14.431.801
ເງິນກູ້ໄລຍະຍາວ	10.248.001	8.588.441
	28.141.033	**24.845.276**

19. ເງິນກູ້ໃຫ້ລູກຄ້າ (ຕໍ່)

ການວິເຄາະຖານະເງິນກູ້ຂອງລູກຄ້າສຳລັບແຕ່ລະຂະແໜງອຸດສາຫະກຳ:

	31/12/2019		*31/12/2018*	
	ລ້ານກີບ	*%*	*ລ້ານກີບ*	*%*
ຂະແໜງ ອຸດສາຫະກຳ	14.778.834	52,52%	12.931.637	52,05%
ຂະແໜງ ກໍ່ສ້າງ	4.319.800	15,35%	3.374.610	13,58%
ຂະແໜງ ປະກອບວັດຖຸເຕັກນິກ	75.996	0,27%	85.352	0,34%
ຂະແໜງ ກະສິກຳ – ປ່າໄມ້	64.855	0,23%	74.248	0,30%
ຂະແໜງ ການຄ້າ	4.272.155	15,18%	4.336.508	17,45%
ຂະແໜງ ຂົນສົ່ງໄປສະນີ	726.588	2,58%	688.078	2,77%
ຂະແໜງ ບໍລິການ	3.575.691	12,71%	2.875.026	11,57%
ຂະແໜງ ທັດຖະກຳ	3.187	0,01%	3.456	0,01%
ຂະແໜງ ອື່ນໆ	323.927	1,15%	476.361	1,92%
	28.141.033	**100%**	**24.845.276**	**100%**

20. ເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ

ສ່ວນປ່ຽນແປງໃນເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ກັບລູກຄ້າ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2019 ມີດັ່ງລຸ່ມນີ້:

	2019	*2018*
	ລ້ານກີບ	*ລ້ານກີບ*
ຍອດເຫຼືອ ນະວັນທີ 1 ມັງກອນ	**478.416**	**481.013**
ປ່ຽນແປງສຸດທິພາຍໃນໄລຍະ	314.919	221.957
ສະສາງໜີ້ຕ້ອງຮັບທອງຍາກ	(164.410)	(232.259)
ສ່ວນຕ່າງຈາກອັດຕາແລກປ່ຽນ	21.616	7.705
ຍອດເຫຼືອນະວັນທີ 31 ທັນວາ	**650.541**	**478.416**

ລາຍລະອຽດເງິນແຮສຳລັບການເສື່ອມຄ່າຂອງເງິນກູ້ໃຫ້ກັບລູກຄ້າ ນະວັນທີ 31 ທັນວາ 2019 ແລະ ວັນທີ 31 ທັນວາ 2018 ມີດັ່ງລຸ່ມນີ້:

	31/12/2019		*31/12/2018*	
	ຍອດເຫຼືອທ້າຍ ລ້ານກີບ	*ຄ່າເສື່ອມ ລ້ານກີບ*	*ຍອດເຫຼືອທ້າຍ ລ້ານກີບ*	*ຄ່າເສື່ອມ ລ້ານກີບ*
ຄ່າເສື່ອມຈາກການປະເມີນເງິນກູ້ແບບດ່ຽວ	4.008.282	401.513	1.859.522	291.960
ຄ່າເສື່ອມຈາກການປະເມີນເງິນກູ້ແບບກຸ່ມ	22.979.708	249.028	22.478.847	186.456
	26.987.990	**650.541**	**24.338.369**	**478.416**

21. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ຫຼັກຊັບປະເພດທຶນຂອງ ບໍລິສັດ ຜະລິດໄຟຟ້າລາວ (*)	133.930	156.516
	133.930	**156.516**

(*) ນະວັນທີ 31 ທັນວາ 2019, ມູນຄ່າຮຸ້ນແມ່ນມີການດ້ອຍຄ່າຕ່ຳກວ່າມູນຄ່າຕົ້ນທຶນ 188.403 ລ້ານກີບ ຈຳນວນ 54.473 ລ້ານກີບ.

22. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດຄັງເງິນທີ່ອອກໂດຍ ກະຊວງການເງິນ	900.929	1.916.549
ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດທີ່ອອກໂດຍກະຊວງ ການເງິນ	2.553.003	1.737.433
	3.453.937	**3.653.982**
ຄ່າເສື່ອມຂອງການຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ (*)	**-**	**(1.210)**
ຄ່າເສື່ອມຈາກພັນທະບັດທີ່ອອກໂດຍ ກະຊວງການເງິນ	-	*(1.210)*
	3.453.937	**3.652.772**

ການປ່ຽນແປງໃນເງິນແຮຄ່າເສື່ອມຈາກ ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ມີດັ່ງນີ້:

	2019 *ລ້ານກີບ*	*2018* *ລ້ານກີບ*
ຍອດເຫຼືອ ນະວັນທີ 1 ມັງກອນ	**(1.210)**	**(3.685)**
ເກັບຄືນເງິນແຮຄ່າເສື່ອມສຸດທິພາຍໃນປີ	1.210	2.475
ຍອດເຫຼືອນະວັນທີ 31 ທັນວາ	**-**	**(1.210)**

22. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ (ຕໍ່)

22.1 ພັນທະບັດຄັງເງິນ ທີ່ອອກໂດຍ ກະຊວງການເງິນ

ຫົວໜ່ວຍ: ລ້ານກີບ

ໄລຍະເວລາ	*ມື້ທີ່ຊື້*	*ມື້ຄົບກຳນົດ*	*ມູນຄ່າໜ້າບັດ*	*ມູນຄ່າຕາມວິທີຫຼຸດຕົ້ນທຶນ*	*ອັດຕາດອກເບ້ຍຕໍ່ປີ*
1 ປີ	22 ກຸມພາ 19	22 ກຸມພາ 20	300.000	312.776	5,00%
1 ປີ	7 ມີນາ 19	7 ມີນາ 20	73.000	75.968	5,00%
1 ປີ	22 ມີນາ 19	22 ມີນາ 20	68.600	71.247	5,00%
1 ປີ	5 ເມສາ 19	5 ເມສາ 20	150.000	151.853	5,30%
1 ປີ	12 ເມສາ 19	12 ເມສາ 20	50.000	51.784	5,00%
1 ປີ	26 ເມສາ 19	26 ເມສາ 20	20.000	20.675	5,00%
1 ປີ	31 ພຶດສະພາ 19	31 ພຶດສະພາ 20	68.000	69.968	5,00%
1 ປີ	14 ມິຖຸນາ 19	14 ມິຖຸນາ 20	100.000	102.702	5,00%
1 ປີ	28 ມິຖຸນາ 19	28 ມິຖຸນາ 20	42.880	43.956	5,00%
			872.480	**900.929**	

22.2 ພັນທະບັດທີ່ອອກໂດຍກະຊວງການເງິນ

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ພັນທະບັດເພີ່ມທຶນ	-	70.600
ພັນທະບັດອື່ນໆ	2.553.008	1.666.833
	2.553.008	**1.737.433**

22. ການລົງທຶນປະເພດຖືໄວ້ຄົບກຳນົດ (ຕໍ່)

22.2 ພັນທະບັດທີ່ອອກໂດຍກະຊວງການເງິນ (ຕໍ່)

22.2.1 ພັນທະບັດອື່ນໆ

ລາຍລະອຽດຂອງພັນທະບັດອື່ນໆ ຕາມມື້ຄົບກຳນົດຂອງສັນຍາ ມີດັ່ງຕໍ່ໄປນີ້:

	ມູນຄ່າໜ້າບັດ ລ້ານກີບ	*ມູນຄ່າຕາມວິທີຫຼຸດຕົ້ນທຶນລົງ ລ້ານກີບ*
ພາຍໃນ 1 ປີ	50.000	45.683
1 ຫາ 5 ປີ	1.697.049	1.724.318
ຫຼາຍກວ່າ 5 ປີ	755.634	782.997
	2.502.683	**2.553.008**

ລາຍລະອຽດຂອງດອກເບ້ຍພັນທະບັດອື່ນໆ ຕາມມື້ຄົບກຳນົດຂອງສັນຍາ ມີດັ່ງຕໍ່ໄປນີ້:

	2019 (% ຕໍ່ປີ)	*2018 (% ຕໍ່ປີ)*
ພາຍໃນ 1 ປີ	4,00%	3,00 - 5,30%
1 ຫາ 5 ປີ	3,00 - 6,95%	3,00 - 6,95%
ຫຼາຍກວ່າ 5 ປີ	4,00 - 4,80%	4,00 - 4,80%

ພັນທະບັດອື່ນໆ ເປັນພັນທະບັດທີ່ອອກໂດຍກະຊວງການເງິນໃຫ້ເພື່ອ (i) ຊຳລະໜີ້ທີ່ໄດ້ຮັບຈາກກະຊວງການເງິນ ຫຼື (ii) ຊຳລະໜີ້ໃຫ້ແກ່ທະນາຄານໂດຍລູກຄ້າທີ່ເປັນເຈົ້າໜີ້ຂອງກະຊວງການເງິນ.

23. ການລົງທຶນໃນບໍລິສັດຮ່ວມທຶນ

	2019 ລ້ານກີບ	*2018 ລ້ານກີບ*
ຍອດນະວັນທີ 1 ມັງກອນ	462.296	541.730
ສ່ວນແບ່ງຂອງ ກຳໄລ/(ຂາດທຶນ) ສຸດທິພາຍໃນປີພາຍໃຕ້ວິທີທຶນ	30.334	(7.643)
ລົງທຶນໃນບໍລິສັດຮ່ວມທຶນ	2.040	-
ລົບ:		
ຂາຍຮຸ້ນຂອງບໍລິສັດຮ່ວມທຶນ	-	(52.266)
ເງິນປັນຜົນທີ່ໄດ້ຮັບພາຍໃນປີ	(2.704)	(19.525)
ຍອດເຫຼືອທ້າຍນະວັນທີ 31 ທັນວາ	**494.666**	**462.296**

23. ການລົງທຶນໃນບໍລິສັດຮ່ວມທຶນ (ຕໍ່)

	31/12/2019				*31/12/2018*			
	ຕົ້ນທຶນເປັນ ໂດລາ	*ຕົ້ນທຶນທຽບ ເທົ່າລ້ານກີບ*	*ມູນຄ່າ ຕາມບັນຊີເປັນ ລ້ານກີບ*	*% ການຖືຮຸ້ນຂອງ ທະ ນາຄານ*	*ຕົ້ນທຶນ ເປັນ ໂດລາ*	*ຕົ້ນທຶນທຽບ ເທົ່າລ້ານກີບ*	*ມູນຄ່າ ຕາມບັນຊີເປັນ ລ້ານກີບ*	*% ການຖືຮຸ້ນຂອງ ທະ ນາຄານ*
ການລົງທຶນໃນສາຖະບັນການເງິນອື່ນ								
ທະນາຄານຮ່ວມທຸລະກິດລາວ - ຫວຽດ (LVB)	24.500.000	197.839	235.339	25%	24.500.000	197.839	228.359	25%
ທະນາຄານ ລາວ - ຝຣັ່ງຈຳກັດ	N/A	90.000	84.431	30%	N/A	90.000	64.053	30%
ທະນາຄານ ລາວ - ຈີນ ຈຳກັດ	N/A	147.000	162.464	49%	N/A	147.000	158.179	49%
ລົງທຶນໃນ ນິຕິບຸກຄົນພາຍໃນປະເທດ								
ບໍລິສັດປະກັນໄພ ລາວ - ຫວຽດ	1.050.000	9.168	10.837	35%	1.050.000	9.168	11.705	35%
ບໍລິສັດ ລາວເມເຊີນນໍ ເພເມັ້ນ ເມັດເອີກ ຈຳກັດ	N/A	2.040	1.595	20%		-	-	-
		446.047	**494.666**			**444.007**	**462.296**	

23. ການລົງທຶນໃນບໍລິສັດຮ່ວມທຶນ (ຕໍ່)

- ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ("LVB") ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ, ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ດຳເນີນທຸລະກິດສະໜອງການບໍລິການທາງດ້ານທະນາຄານ. ເປັນບໍລິສັດທີ່ຮ່ວມທຶນກັບທະນາຄານເພື່ອການລົງທຶນ ແລະ ການພັດທະນາຂອງຫວຽດນາມ, ເຊິ່ງເປັນທະນາຄານທຸລະກິດລັດທີ່ດຳເນີນທຸລະກິດຢູ່ ສສ ຫວຽດນາມ.ບໍລິສັດຮ່ວມທຶນດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 31 ມີນາ 2000 ອອກໂດຍທະນາຄານແຫ່ງ ສປປ ລາວ ເປັນໄລຍະເວລາ 30 ປີ. ໃນປີ 2015, ທຮລ ໄດ້ເພີ່ມທຶນຈົດທະບຽນເປັນ 791.357.560.000 ກີບ. ອັດຕາສ່ວນການຂຶດຂອງທະນາຄານໃນ ທຮລ ພາຍຫຼັງທຶນເພີ່ມຂຶ້ນ 25% ອີງຕາມ ໃບອະນຸຍາດການລົງທຶນ ເລກທີ 004-15/KH-DDT4 ທີ່ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ, ວັນທີ 24 ສິງຫາ 2015 ທຽບເທົ່າເງິນກີບເທົ່າກັບ 197.839.390.000 ກີບ.

- ບໍລິສັດ ປະກັນໄພ ລາວ - ຫວຽດ ("LVI") ເປັນທຸລະກິດທີ່ຈົດທະບຽນເປັນບໍລິສັດຮ່ວມທຶນ ຢູ່ ສປປ ລາວ, ສະໜອງການບໍລິການທາງດ້ານການປະກັນໄພ ພາຍໃຕ້ໃບອະນຸຍາດການລົງທຶນເລກທີ 077/08/FIMC ອອກໂດຍຄະນະກຳມະການຄຸ້ມຄອງການລົງທຶນຕ່າງປະເທດ, ລົງວັນທີ 09 ມິຖຸນາ 2008. ເປັນການຮ່ວມທຶນກັບບໍລິສັດຫຸ້ນສ່ວນປະກັນໄພ BIDV ແລະ ທະນາຄານຮ່ວມທຸລະກິດລາວຫວຽດ. ນະວັນທີ 31 ທັນວາ 2019, ທະນາຄານໄດ້ປະກອບທຶນທັງໝົດໃນມູນຄ່າ 1.050.000 ໂດລາ ຫຼື ທຽບເທົ່າກັບ 9.168 ລ້ານກີບ.

- ທະນາຄານ ລາວ - ຈີນ ຈຳກັດ ("LCNB") ເປັນທຸລະກິດທີ່ດຳເນີນກ່ຽວກັບການບໍລິການດ້ານການທະນາຄານຢູ່ໃນ ສປປ ລາວ. ທະນາຄານລາວ-ຈີນ ເປັນທະນາຄານຮ່ວມທຶນກັບ ທະນາຄານ ຟູດ້ຽນ ຈີນ ເຊິ່ງແມ່ນທະນາຄານທຸລະກິດຂອງລັດທີ່ດຳເນີນການຢູ່ປະເທດຈີນ. ບໍລິສັດຮ່ວມທຶນດຳເນີນທຸລະກິດ ພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 20 ມັງກອນ 2014 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຂອງ LCNB ແມ່ນ 300.000 ລ້ານກີບ ແລະ ນະວັນທີ 31 ທັນວາ 2019 ຂາຮຸ້ນໄດ້ປະກອບທຶນຄົບຕາມຈຳນວນດັ່ງກ່າວ.

- ທະນາຄານ ລາວ - ຝຣັ່ງ ຈຳກັດ ("BFL") ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ສະໜອງການບໍລິການທາງດ້ານການທະນາຄານ. ທະນາຄານ ລາວ-ຝຣັ່ງ ຖືກສ້າງຂຶ້ນໂດຍໄດ້ຮ່ວມທຶນກັບ Cofibred Company Frances De La Bred ເຊິ່ງເປັນທະນາຄານທຸລະກິດລັດ ທີ່ດຳເນີນທຸລະກິດຢູ່ ປາຣີ, ປະເທດ ຝຣັ່ງ. ບໍລິສັດຮ່ວມທຶນດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນ ການທະນາຄານຊື່ວຄາວ ລົງວັນທີ 01 ຕຸລາ 2009 ແລະ ໃບອະນຸຍາດຖາວອນ ລົງວັນທີ 16 ກໍລະກົດ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຕາມກົດລະບຽບຂອງທະນາຄານ BFL ແມ່ນ 20 ລ້ານໂດລາ ເຊິ່ງໄດ້ເພີ່ມເປັນ 37 ລ້ານໂດລາ, ອີງຕາມບົດບັນຍັດຂອງປະທານປະເທດອອກໃນ ວັນທີ 24 ກັນຍາ 2009 ແລະ ໜັງສືເລກທີ 01/ທຫລ ລົງວັນທີ 28 ມັງກອນ 2010 ຈາກ ທຫລ.

- ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ ("LAPNet") ແມ່ນເປັນບໍລິສັດໜຶ່ງທີ່ສ້າງຕັ້ງໃນ ສປປ ລາວ ພາຍໃຕ້ໃບທະບຽນວິສາຫະກິດ ເລກທີ 0349 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ ລົງວັນທີ 12 ມີນາ 2019 ເຊິ່ງໃຫ້ບໍລິການທາງການເງິນ. ເປັນການຮ່ວມມືລະຫວ່າງທະນາຄານແຫ່ງ ສປປ ລາວ, Union Pay International, ທະນາຄານພັດທະນາລາວ, ທະນາຄານສິ່ງເສີມກະສິກຳ, ທະນາຄານຮ່ວມພັດທະນາ, ທະນາຄານລາວ - ຫວຽດ, ທະນາຄານ ເອັສທີ ຈຳກັດ, ທະນາຄານ ບີໄອຊີ ແລະ ທະນາຄານ. ບໍລິສັດມີທຶນຈົດທະບຽນ ມູນຄ່າ 34.000 ລ້ານກີບ. ນະວັນທີ 31 ທັນວາ 2019, ການປະກອບທຶນທັງໝົດຂອງທະນາຄານໃນບໍລິສັດນີ້ມີຈຳນວນ 2.040 ລ້ານກີບ.

24. ຊັບສິນບັດ ແລະ ອຸປະກອນ

ຕົ້ນທຶນ:	*ອາຄານ ແລະ ການປັບປຸງ ລ້ານກີບ*	*ອຸປະກອນ ຫ້ອງການ ລ້ານກີບ*	*ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ*	*ພາຫະນະ ລ້ານກີບ*	*ລວມ ລ້ານກີບ*
ນະວັນທີ 1 ມັງກອນ 2019	476.463	151.886	41.210	19.770	689.329
ຊື້ເພີ່ມໃໝ່	29.725	44.165	4.109	3.513	81.512
ຊຳລະສະສາງ ແລະ ຈົດລ້າງອອກ	(10.921)	(34.046)	(6.132)	(5.246)	(56.345)
ນະວັນທີ 31 ທັນວາ 2019	495.267	162.005	39.187	18.037	714.496
ຄ່າຫຼ້ຍຫ້ຽນສະສົມ:					
ນະວັນທີ 1 ມັງກອນ 2019	135.271	67.649	26.278	9.999	239.197
ຫັກຄ່າຫຼ້ຍຫ້ຽນພາຍໃນປີ	26.938	31.801	5.823	3.886	68.448
ຊຳລະສະສາງ ແລະ ຈົດລ້າງອອກ	(6.710)	(31.702)	(6.012)	(4.984)	(49.408)
ນະວັນທີ 31 ທັນວາ 2019	155.499	67.748	26.089	8.901	258.237
ມູນຄ່າຍັງເຫຼືອສຸດທິ:					
ນະວັນທີ 1 ມັງກອນ 2019	341.192	84.237	14.932	9.771	450.132
ນະວັນທີ 31 ທັນວາ 2019	339.768	94.257	13.098	9.136	456.259

25. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

	ສິດນຳໃຊ້ທີ່ດິນ ລ້ານກີບ	*ໂປຼແກຼມຄອມພິວເຕີ ລ້ານກີບ*	*ລວມ ລ້ານກີບ*
ຕົ້ນທຶນ:			
ນະວັນທີ 1 ມັງກອນ 2019	240.619	16.841	257.460
ຊື້ເພີ່ມ	14.374	5.027	19.401
ຊຳລະສະສາງ ແລະ ຈົດລ້າງອອກ	(17.382)	(7.444)	(24.826)
ນະວັນທີ 31 ທັນວາ 2019	237.611	14.424	252.035
ຄ່າເສື່ອມສະສົມ:			
ນະວັນທີ 1 ມັງກອນ 2019	-	10.859	10.859
ຫັກຄ່າເສື່ອມພາຍໃນປີ	-	3.551	3.551
ຊຳລະສະສາງ ແລະ ຈົດລ້າງອອກ	-	(7.444)	(7.444)
ນະວັນທີ 31 ທັນວາ 2019	-	6.966	6.966
ມູນຄ່າຍັງເຫຼືອສຸດທິ:			
ນະວັນທີ 1 ມັງກອນ 2019	240.619	5.982	246.601
ນະວັນທີ 31 ທັນວາ 2019	237.611	7.458	245.069

26. ສິດນຳໃຊ້ຊັບສິນ

	ທີ່ດິນ ແລະ ອາຄານ *LAKm*
ຕົ້ນທຶນ:	
ນະວັນທີ 1 ມັງກອນ 2019	52.571
ຊື້ເພີ່ມ	20.561
ນະວັນທີ 31 ທັນວາ 2019	73.132
ຄ່າຫຼ້ຍຫ້ຽນສະສົມ:	
ນະວັນທີ 1 ມັງກອນ 2019	10.876
ຫັກຄ່າຫຼ້ຍຫ້ຽນພາຍໃນປີ	7.062
ນະວັນທີ 31 ທັນວາ 2019	17.938
ມູນຄ່າຍັງເຫຼືອສຸດທິ:	
ນະວັນທີ 1 ມັງກອນ 2019	41.695
ນະວັນທີ 31 ທັນວາ 2019	55.194

27. ຊັບສິນອື່ນໆ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ຊັບສິນມີໄວ້ເພື່ອຂາຍ	250.272	255.438
ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນອື່ນໆ	5.165	8.558
ແຊັກພອມຮຽກເກັບ	13.734	6.671
ຊັບສິນພອມກໍ່ສ້າງ ແລະ ຊັບສິມບັດພອມຊື້ (*)	75.072	65.079
ລາຍຈ່າຍລ່ວງໜ້າແບ່ງສ່ວນຈ່າຍ	33.968	62.065
ເງິນຈ່າຍລ່ວງໜ້າສຳລັບການດຳເນີນງານອື່ນໆ	31.347	27.553
ເງິນຈ່າຍລ່ວງໜ້າສຳລັບຜູ້ສະໜອງ	58.561	34.589
ອື່ນໆ	4.003	6.135
	472.122	**466.088**

27. ຊັບສິນອື່ນໆ (ຕໍ່)

(*) ການເຄື່ອນໄຫວຂອງຊັບສິນພວມກໍ່ສ້າງ ແລະ ຊັບສິນບັດພວມຊື້ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ມີດັ່ງນີ້:

	ສິດນຳໃຊ້ທີ່ດິນ ລ້ານກີບ	*ອາຄານ ແລະ ການປັບປຸງ ລ້ານກີບ*	*ອື່ນໆ ລ້ານກີບ*	*ລວມ ລ້ານກີບ*
ວັນທີ 1 ມັງກອນ 2019	541	38.630	25.908	65.079
ຊື້ເພີ່ມ	17.684	26.241	76.787	120.712
ໂອນໄປຊັບສິນຄົງທີ່	(14.374)	(26.666)	(50.987)	(92.027)
ໂອນໄປຊັບສິນອື່ນໆ	-	(5.341)	-	(5.341)
ຈົດລ້າງອອກ	(3.851)	(181)	(9.319)	(13.351)
ວັນທີ 31 ທັນວາ 2019	-	32.683	42.389	75.072

28. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ

	31/12/2019 ລ້ານກີບ	*31/12/2018 ລ້ານກີບ*
ເງິນຝາກກະແສລາຍວັນ	**3.521.128**	**2.517.029**
- ເປັນເງິນກີບ	1.125.688	800.136
- ເປັນເງິນຕາຕ່າງປະເທດ	2.395.440	1.716.893
ເງິນຝາກປະຢັດ	**302.654**	**119.495**
- ເປັນເງິນກີບ	45.567	21.954
- ເປັນເງິນຕາຕ່າງປະເທດ	257.087	97.541
ເງິນຝາກມີກຳນົດ	**215.345**	**754.543**
- ເປັນເງິນກີບ	137.359	195.581
- ເປັນເງິນຕາຕ່າງປະເທດ	77.986	558.962
ອື່ນໆ	**22.648**	**22.062**
- ເປັນເງິນກີບ	15.166	9.009
- ເປັນເງິນຕາຕ່າງປະເທດ	7.482	13.053
	4.061.775	**3.413.129**

ອັດຕາດອກເບ້ຍສຳລັບເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນພາຍໃນປີ ມີດັ່ງລຸ່ມນີ້:

	2019 *%ຕໍ່ປີ*	2018 *%ຕໍ່ປີ*
ເງິນຝາກກະແສລາຍວັນ	0,00% - 0,30%	ບໍ່ມີດອກເບ້ຍ
ເງິນຝາກປະຢັດ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກມີກຳນົດ	0,56% - 6,65%	0,00% - 5,52%

29. ໜີ້ຕ້ອງສົ່ງລູກຄ້າ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນຝາກກະແສລາຍວັນ	**5.851.192**	**5.447.954**
ເງິນຝາກກະແສລາຍວັນເປັນເງິນກີບ	2.828.297	2.141.221
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	3.022.895	3.306.733
ເງິນຝາກປະຢັດ	**16.422.065**	**13.092.788**
ເງິນຝາກປະຢັດເປັນເງິນກີບ	8.015.243	5.788.652
ເງິນຝາກປະຢັດເປັນເງິນຕາຕ່າງປະເທດ	8.406.822	7.304.136
ເງິນຝາກກຳນົດ	**13.900.002**	**11.159.134**
ເງິນຝາກມີກຳນົດເປັນເງິນກີບ	7.640.736	6.671.234
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	6.259.266	4.487.900
ເງິນຝາກມັດຈຳ	**104.854**	**103.279**
ເງິນຝາກມັດຈຳເປັນເງິນກີບ	33.832	33.629
ເງິນຝາກມັດຈຳເປັນເງິນຕາຕ່າງປະເທດ	71.022	69.650
ໜີ້ຕ້ອງສົ່ງລູກຄ້າອື່ນໆ	**141.815**	**111.987**
	36.419.928	**29.915.142**

ອັດຕາດອກເບ້ຍພາຍໃນປີສຳລັບເງິນຝາກດັ່ງກ່າວ ມີດັ່ງລຸ່ມນີ້:

	2019 *% ຕໍ່ປີ*	*2018* *% ຕໍ່ປີ*
ເງິນຝາກກະແສລາຍວັນ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກປະຢັດເປັນເງິນກີບ	1,25% - 1,89%	1,25% - 1,89%
ເງິນຝາກປະຢັດເປັນເງິນໂດລາ	0,90% - 1,15%	0,90% - 1,15%
ເງິນຝາກປະຢັດເປັນເງິນບາດ	0,45% - 0,90%	0,45% - 0,90%
ເງິນຝາກມີກຳນົດເປັນເງິນກີບ	3,16% - 13,00%	3,16% - 6,90%
ເງິນຝາກມີກຳນົດເປັນເງິນໂດລາ	1,65% - 7,75%	1,65% - 6,65%
ເງິນຝາກມີກຳນົດເປັນເງິນບາດ	1,40% - 7,75%	1,40% - 6,40%

30. ເງິນກູ້ຢືມຈາກ ທະນາຄານອື່ນ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ	1.825.039	2.063.243
ເງິນກູ້ຢືມຈາກທະນາຄານອື່ນ	1.880.339	1.286.023
	3.705.378	**3.349.266**

ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ ນະວັນທີ 31 ທັນວາ 2019 ລວມມີ:

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 3.285.713 ໂດລາ (ມູນຄ່າເດີມຂອງເງິນກູ້ ແມ່ນ 9.200.000 ໂດລາ ໂດຍອັດຕາດອກເບ້ຍແມ່ນ 0,25% ຕໍ່ປີ) ຈຸດປະສົງແມ່ນເພື່ອ ລົງທຶນໃນ ທະນາຄານ ລາວ - ຝລັ່ງ ຈຳກັດ. ຕົ້ນທຶນເງິນກູ້ແມ່ນຈະຊຳລະເປັນປີ ເລີ່ມແຕ່ປີ 2010 ຫາ 2023 ສຳລັບດອກເບ້ຍແມ່ນຈ່າຍທຸກໆ 6 ເດືອນ.

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 99.854.000 ໂດລາ (ສະກຸນເງິນເດີມແມ່ນ 100.000.000 ໂດລາ ໂດຍອັດຕາດອກເບ້ຍ 5,50% ຕໍ່ປີ.) ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ໂຄງການເຄື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜຸນຈາກລັດຖະບານ. ຕົ້ນທຶນເງິນກູ້ແມ່ນຊຳລະທຸກໆປີ ເລີ່ມຈາກວັນທີ 1 ມັງກອນ 2016 ຫາ ວັນທີ 27 ສິງຫາ 2025. ດອກເບ້ຍແມ່ນຊຳລະເປັນໄຕມາດ.

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 99.900.000 ໂດລາ (ສະກຸນເງິນເດີມແມ່ນ 100.000.000 ໂດລາ ໂດຍມີອັດຕາດອກເບ້ຍ 5,30% ຕໍ່ປີ) ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ ໂຄງການເຄື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜຸນຈາກລັດຖະບານ. ຕົ້ນທຶນແມ່ນຊຳລະທຸກໆປີເລີ່ມແຕ່ວັນທີ 3 ພຶດສະພາ 2016 ຫາ 3 ພຶດສະພາ 2026. ດອກເບ້ຍແມ່ນຊຳລະເປັນໄຕມາດ.

ເງິນກູ້ຢືມຈາກທະນາຄານພາຍໃນປະເທດ ແລະ ສະຖາບັນການເງິນອື່ນ ນະວັນທີ 31 ທັນວາ 2019 ລວມມີ ເງິນກູ້ຢືມໄລຍະໜຶ່ງປີ ຈຳນວນ 80.000.000 ໂດລາ ຈາກ ICBC ວຽງຈັນ ໂດຍອັດຕາດອກເບ້ຍແມ່ນ 5,50% ຕໍ່ປີ. ຕົ້ນທຶນເງິນກູ້ ແລະ ດອກເບ້ຍແມ່ນຊຳລະເມື່ອຄົບກຳນົດ.

ເງິນກູ້ຢືມຈາກທະນາຄານຕ່າງປະເທດ ແລະ ສະຖາບັນການເງິນອື່ນ ນະວັນທີ 31 ທັນວາ 2019 ລວມມີ ເງິນກູ້ຢືມໄລຍະສີ່ປີ ຈຳນວນ 126.055.000 ໂດລາ (ສະກຸນເງິນເດີມແມ່ນ 148.300.000 ໂດລາ ກູ້ຢືມໄລຍະ 4 ປີ ໂດຍອັດຕາດອກເບ້ຍແມ່ນ 4% + 3 ເດືອນ LIBOR) ສຳລັບຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ກັບໂຄງການຕ່າງໆພາຍໃນປະເທດ. ຕົ້ນທຶນເງິນກູ້ແມ່ນຊຳລະເປັນລາຍປີ ແລະ ດອກເບ້ຍແມ່ນຊຳລະເປັນໄຕມາດ.

31. ອາກອນ

31.1 ລາຍຈ່າຍອາກອນກຳໄລ

ອົງປະກອບສຳຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

	2019	*2018*
	ລ້ານກີບ	*ລ້ານກີບ*
ລາຍຈ່າຍອາກອນກຳໄລພາຍໃນປີ	107.712	124.762
ລາຍຮັບອາກອນກຳໄລລໍຖ້າຊຳລະສະສາງ	(5.640)	(18.420)
ລາຍຈ່າຍອາກອນທັງໝົດພາຍໄລຍະ	**102.072**	**106.342**

31.2 ໜີ້ຕ້ອງສົ່ງອາກອນພາຍໃນປີ

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ໜີ້ຕ້ອງສົ່ງອາກອນກຳໄລ *(ບົດອະທິບາຍ ເລກທີ 31.3)*	28.880	31.422
ໜີ້ຕ້ອງສົ່ງອາກອນທີ່ຫັກໄວ້	12.156	-
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	358	4.529
ໜີ້ຕ້ອງສົ່ງອາກອນອື່ນໆ	242	-
	41.636	**35.951**

31.3 ອາກອນກຳໄລໃນປີ

ທະນາຄານມີພັນທະຕ້ອງຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລກ່ອນອາກອນ ໂດຍໃຫ້ສອດຄ່ອງກັບກົດໝາຍອາກອນສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ແຕ່ ຫຼື ຫຼັງຈາກວັນທີ 24 ພຶດສະພາ 2016.

31. ອາກອນ (ຕໍ່)

31.3 ອາກອນກຳໄລໃນປີ (ຕໍ່)

ການຄິດໄລ່ຂອງອາກອນກຳໄລພາຍສຳລັບປີ 2019 ແລະ 2018 ແມ່ນມີດັ່ງຕໍ່ໄປນີ້:

	2019 *ລ້ານກີບ*	*2018* *ລ້ານກີບ*
ກຳໄລສັງລວມກິດຈະການກ່ອນຫັກອາກອນຕາມຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	**462.762**	**427.280**
ດັດແກ້ສຳລັບ:		
- ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຂອງພັນທະບັດພາຍໃຕ້ມາດຕະຖານ LAS ແລະ ມູນຄ່າຫຼຸດຕົ້ນທຶນພາຍໃຕ້ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	2.689	(3.647)
- ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຂອງເງິນກູ້ໃຫ້ແກ່ທະນາຄານ ແລະ ລູກຄ້າພາຍໃຕ້ມາດຕະຖານ LAS ແລະ ມູນຄ່າຫຼຸດຕົ້ນທຶນພາຍໃຕ້ມາດຕະຖານ IFRS	58.512	-
- ສ່ວນຕ່າງລະຫວ່າງເງິນແຮຄ່າເສື່ອມຂອງເງິນກູ້ໃຫ້ແກ່ທະນາຄານ ແລະ ລູກຄ້າພາຍໃຕ້ມາດຕະຖານ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	56.666	31.729
- ສ່ວນຕ່າງລະຫວ່າງເງິນອຸດໜູນສຳລັບຜົນປະໂຫຍດພາຍຫຼັງອອກການພາຍໃຕ້ມາດຕະຖານ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	(63.436)	21.425
- ສ່ວນຕ່າງລະຫວ່າງລາຍຈ່າຍຄ່າເສື່ອມໃນການລົງທຶນພາຍໃຕ້ມາດຕະຖານ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	(30.931)	27.246
- ກຳໄລທີ່ບໍ່ຖືກຄິດໄລ່ອາກອນຈາກການດັດແກ້ສັງລວມ	(27.686)	35.569
- ລາຍການທີ່ບໍ່ໃຫ້ຖືເປັນລາຍຮັບ	(23.924)	(34.734)
- ລາຍຈ່າຍທີ່ບໍ່ໃຫ້ຖືເປັນລາຍຈ່າຍ	14.147	14.977
ລາຍຮັບທີ່ຖືກຄິດໄລ່ອາກອນອີງຕາມ LAS	**448.799**	**519.845**
ເຊິ່ງໃນນັ້ນ		
- ລາຍຮັບທີ່ຖືກຄິດໄລ່ອາກອນຂອງທະນາຄານແມ່	*444.351*	*516.754*
- ລາຍຮັບທີ່ຖືກຄິດໄລ່ອາກອນຂອງບໍລິສັດໃນເຄືອ	*4.448*	*3.091*
ລາຍຈ່າຍອາກອນກຳໄລຂອງທະນາຄານແມ່ ນະອັດຕາ 24% (2018: 24%)	106.644	124.020
ລາຍຈ່າຍອາກອນກຳໄລຂອງບໍລິສັດໃນເຄືອ ນະອັດຕາ 24% (2018: 24%)	1.068	742
ລາຍຈ່າຍອາກອນທັງໝົດໃນປີ	**107.712**	**124,762**
ອາກອນກຳໄລຕ້ອງຈ່າຍຕົ້ນປີ	31.422	9.540
ອາກອນທີ່ຊຳລະພາຍໃນປີ	(109.808)	(102.880)
ໜີ້ສິນອາກອນເພີ່ມເຕີມສຳລັບປີຜ່ານມາ	(446)	-
ອາກອນກຳໄລຕ້ອງຈ່າຍທ້າຍປີ	**28.880**	**31.422**

31. ອາກອນ (ຕໍ່)

31.3 ອາກອນກຳໄລໃນປີ (ຕໍ່)

ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບ ທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງ ກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນສັງລວມກິດຈະການ ສຳລັບປີອາດຈະຖືກປ່ຽນແປງຫຼັງຈາກ ມື້ໄລ່ລຽງຂອງກົມສ່ວຍສາອາກອນ.

31.4 ໜີ້ສິນທີ່ອາດເກີດຂຶ້ນ

ນະວັນທີ 6 ພະຈິກ 2019, ກະຊວງການເງິນໄດ້ອອກແຈ້ງການເລກທີ 4475/ກງ ຮຽກຮ້ອງໃຫ້ທະນາຄານທຸລະກິດຄິດໄລ່ ອາກອນກຳໄລຄືນໃໝ່ສຳລັບປີ 2016 ເຖິງ 2019 ເຊິ່ງວ່າເງິນແຮສຳລັບການສູນເສຍສິນເຊື່ອຄວນຖືກພິຈາລະນາເປັນລາຍ ຈ່າຍທີ່ບໍ່ຖືວ່າເປັນລາຍຈ່າຍ. ທະນາຄານໄດ້ສົ່ງໜັງສືທາງການເລກທີ 003/ທຄຕລ ລົງວັນທີ 06 ທັນວາ 2019 ເຖິງກະຊວງ ການເງິນ ແລະ ໜັງສືທາງການເລກທີ 037/ທຄຕລ ລົງວັນທີ 23 ມັງກອນ 2020 ເຖິງ ທະນາຄານແຫ່ງ ສປປ ລາວ ເພື່ອ ຊອກຫາຄວາມກະຈ່າງແຈ້ງ ແລະ ຄຳແນະນຳອັນລະອຽດເພີ່ມເຕີມໃນການຈັດຕັ້ງປະຕິບັດຕາມແຈ້ງການດັ່ງກ່າວ. ຈົນເຖິງ ວັນທີໃນເອະສານລາຍງານການເງິນສັງລວມກິດຈະການ, ທະນາຄານຍັງບໍ່ໄດ້ຮັບຄຳຕອບຈາກກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ແລະ ຜົນກະທົບຂອງບັນຫານີ້ (ຖ້າມີ) ແມ່ນຍັງບໍ່ໄດ້ຖືກກຳນົດ. ສະນັ້ນ, ທະນາຄານບໍ່ໄດ້ ບັນທຶກການດັດແກ້ໃດໃນເອກະສານລາຍງານການເງິນສັງລວມກິດຈະການສຳລັບປີ 2019.

31. ອາກອນ (ຕໍ່)

31.5 ຊັບສິນ/(ໜີ້ສິນ) ອາກອນລ໊ຖ້າຊຳລະສະສາງ

	ໃບລາຍງານຖານະການເງິນ		*ໃບລາຍງານຜົນການດຳເນີນງານ*		*ໃບລາຍງານຜົນການດຳເນີນງານນອກການທຸລະກິດ*	
	31 ທັນວາ 2019	*31 ທັນວາ 2018*	*2019*	*2018*	*2019*	*2018*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ຊັບສິນອາກອນລ໊ຖ້າຊຳລະສະສາງ	33.282	29.099	368	11.144	3.815	(260)
ຜົນກະທົບຈາກການຈັດຕັ້ງປະຕິບັດ IFRS 16 ນະວັນທີ 01 ມັງກອນ 2019	1.362	-	-	-	-	-
ໜີ້ສິນອາກອນລ໊ຖ້າຊຳລະສະສາງ	-	(5.272)	5.272	7.276	-	1.028
ອາກອນລ໊ຖ້າຊຳລະສະສາງສຸດທິທີ່ຕ້ອງຮັບຮັກເຂົ້າໃນໃບລາຍງານຜົນການດຳເນີນງານສັງລວມກິດຈະການ			**5.640**	**18.420**		
ອາກອນລ໊ຖ້າຊຳລະສະສາງສຸດທິທີ່ຕ້ອງຮັບຮັກເຂົ້າໃນໃບລາຍງານຜົນການດຳເນີນງານນອກການທຸລະກິດສັງລວມກິດຈະການ					**3.815**	**768**

31. ອາກອນ (ຕໍ່)

31.5 *ຊັບສິນ/(ໜີ້ສິນ) ອາກອນລໍຖ້າຊຳລະສະສາງ* (ຕໍ່)

ລາຍລະອຽດຂອງຊັບສິນ ແລະ ໜີ້ສິນອາກອນລໍຖ້າຊຳລະສະສາງແມ່ນມີດັ່ງຕໍ່ໄປນີ້:

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ສ່ວນຜິດຊົ່ວຄາວທີ່ສາມາດຫັກໄດ້ຊື່ອຄາວ	144.350	121.247
ໃນນັ້ນ:		
ຜົນກະທົບຈາກການຈັດຕັ້ງປະຕິບັດ IFRS 16 ນະວັນທີ 01 ມັງກອນ 2019	*5.673*	-
ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຂອງພັນທະບັດຕາມ LAS ແລະ ມູນຄ່າຫຼຸດພາຍໃຕ້ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	*5.019*	*2.331*
ສ່ວນຕ່າງໃນລາຍຈ່າຍເງິນແຮຂອງການລົງທຶນຕາມ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	-	*30.931*
ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຂອງເງິນກູ້ໃຫ້ແກ່ທະນາຄານ ແລະ ລູກຄ້າພາຍໃຕ້ມາດຕະຖານ LAS ແລະ ມູນຄ່າຫຼຸດຕົ້ນທຶນພາຍໃຕ້ມາດຕະຖານ IFRS	*58.512*	-
ສ່ວນຕ່າງລະຫວ່າງເງິນແຮຄ່າເສື່ອມຂອງເງິນກູ້ໃຫ້ແກ່ທະນາຄານ ແລະ ລູກຄ້າພາຍໃຕ້ມາດຕະຖານ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	*34.700*	-
ສ່ວນຕ່າງໃນຜົນປະໂຫຍດຂອງພະນັກງານຫຼັງອອກການຕາມ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	*40.446*	*87.985*
ຊັບສິນອາກອນລໍຖ້າຊຳລະສະສາງ (ໃນອັດຕາ 24%)	**34.644**	**29.099**
ສ່ວນຕ່າງຊື່ອຄາວລະຫວ່າງໜີ້ຕ້ອງສົ່ງອາກອນ	-	(21.965)
ໃນນັ້ນ:		
ສ່ວນຕ່າງເງິນແຮຄ່າເສື່ອມສຳລັບໜີ້ເສຍຂອງເງິນກູ້ໃຫ້ແກ່ລູກຄ້າຕາມ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	-	*(21.965)*
ໜີ້ສິນອາກອນລໍຖ້າຊຳລະສະສາງ (ໃນອັດຕາ 24%)	-	**(5.272)**

32. ໜີ້ສິນອື່ນໆ

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ໜີ້ຕ້ອງສິ່ງພະນັກງານ	52.477	86.612
ໜີ້ຕ້ອງສິ່ງຜູ້ສະໜອງ	28.513	22.101
ແຜນການກຳນົດຜົນປະໂຫຍດຫຼັງອອກການ	79.219	87.985
ໜີ້ສິນຕາມສັນຍາເຊົ່າ	14.249	-
ອື່ນໆ	53.843	46.220
	228.301	**242.918**

ປ່ຽນແປງໃນແຜນງານກຳນົດຜົນປະໂຫຍດຫຼັງອອກການມີດັ່ງລຸ່ມນີ້:

	2019	*2018*
	ລ້ານກີບ	*ລ້ານກີບ*
ນະວັນທີ 1 ມັງກອນ	87.985	65.149
ຄ່າບໍລິການທີ່ຜ່ານມາ	(25.874)	-
ຄ່າບໍລິການນະປັດຈຸບັນ	3.643	18.875
ລາຍຈ່າຍດອກເບ້ຍ	3.682	5.259
ສ່ວນຕ່າງທີ່ເກີດຈາກການປ່ຽນແປງຂໍ້ສົມມຸດຖານທາງການເງິນ	15.897	1.411
ລາຍຈ່າຍຜົນປະໂຫຍດ	(6.114)	(2.709)
ນະວັນທີ 31 ທັນວາ	**79.219**	**87.985**

ລາຍຈ່າຍທາງດ້ານຜົນປະໂຫຍດສຸດທິ (ຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ):

	2019	*2018*
	ລ້ານກີບ	*ລ້ານກີບ*
ຄ່າບໍລິການນະປັດຈຸບັນ	3.643	18.875
ລາຍຈ່າຍດອກເບ້ຍ	3.682	5.259
	7.325	**24.134**

32. ໜີ້ສິນອື່ນໆ (ຕໍ່)

	2019	*2018*
	%	*%*
ອັດຕາສ່ວນຫຼຸດ	4,68 - 6,11	5,00 - 8,47
ການເພີ່ມຂຶ້ນເງິນເດືອນໃນອະນາຄົດ	0,76	1,03
ອັດຕາພະນັກງານລາອອກ	0,00	0,00

ການວິເຄາະຄວາມອ່ອນໄຫວທາງດ້ານປະລິມານສຳລັບຂໍ້ສົມມຸດຖານທີ່ສຳຄັນ ນະວັນທີ 31 ທັນວາ ແມ່ນສະແດງດັ່ງລຸ່ມນີ້:

	2019	*2018*
	ລ້ານກີບ	*ລ້ານກີບ*
ອັດຕາສ່ວນຫຼຸດ		
ເພີ່ມຂຶ້ນ 50 ຈຸດ	(6.175)	(7.301)
ຫຼຸດລົງ 50 ຈຸດ	5.596	8.340
ການເພີ່ມເງິນເດືອນໃນອະນາຄົດ		
ເພີ່ມຂຶ້ນ 50 ຈຸດ	(6.448)	(6.001)
ຫຼຸດລົງ 50 ຈຸດ	5.874	5.517

33. ທຶນຈົດທະບຽນ

ບໍ່ມີການປ່ຽນແປງຂອງທຶນຈົດທະບຽນໃນລະຫວ່າງປີ 2019.

34. ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ

	ຄັງສະສົມຕາມລະບຽບການ	*ຄັງຂະຫຍາຍທຸລະກິດ*	*ລວມ*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*
ນະວັນທີ 1 ມັງກອນ 2019	130.507	310.367	440.874
ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2018 ຈາກກຳໄລພາຍໃຕ້ LAS ປີ 2018 ຂອງທະນາຄານ	41.218	123.655	164.873
ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2018 ຈາກກຳໄລພາຍໃຕ້ LAS ປີ 2018 ຂອງບໍລິສັດໃນເຄືອ	123	123	246
ນະວັນທີ 31 ທັນວາ 2019	**171.848**	**434.145**	**605.993**

34. ຄ້ຳສະສົມຕາມລະບຽບການ ແລະ ຄ້ຳສະສົມອື່ນໆ (ຕໍ່)

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ, ສະບັບລົງວັນທີ 7 ທັນວາ 2018 ໄດ້ກຳນົດໃຫ້ ທະນາຄານທຸລະກິດຕ່າງໆຕ້ອງໄດ້ແບ່ງສ່ວນຂອງກຳໄລຫຼັງອາກອນເພື່ອເຂົ້າຄ້ຳແຮຕ່າງໆດັ່ງນີ້:

- ຄ້ຳສະສົມຕາມລະບຽບການ
- ຄ້ຳຂະຫຍາຍທຸລະກິດ ແລະ ຄ້ຳອື່ນໆ

ອີງຕາມມາດຕາ 156, ກົດໝາຍວ່າດ້ວຍວິສາຫະກິດ ລົງວັນທີ 26 ທັນວາ 2013, ທະນາຄານຕ້ອງໄດ້ຫັກເງິນແຮສະສົມ 10% ຂອງ ກຳໄລຫຼັງອາກອນຂອງແຕ່ລະປີ ເຂົ້າຄ້ຳສະສົມຕາມລະບຽບການ. ເມື່ອຄ້ຳສະສົມດັ່ງກ່າວມີຍອດເຖິງ 50% ຂອງ ທຶນຈົດທະບຽນ, ທະນາຄານສາມາດຢຸດສະສົມເງິນແຮດັ່ງກ່າວ, ຍົກເວັ້ນກໍລະນີທີ່ກົດໝາຍກຳນົດໄວ້ຢ່າງອື່ນ.

ຄ້ຳຂະຫຍາຍທຸລະກິດ ແລະ ຄ້ຳອື່ນໆຕ້ອງໄດ້ມີການສ້າງຂຶ້ນບົນພື້ນຖານການຕັດສິນໃຈຂອງສະພາບໍລິຫານ.

35. ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ

	2019	*2018*
	ລ້ານກີບ	*ລ້ານກີບ*
ຍອດຍົກມາ	-	1.661
ສ່ວນປ່ຽນແປງຈາກເງິນແຮຄ່າເສື່ອມຂອງ ການລົງທຶນຫຼັກຊັບມີໄວ້ເພື່ອຂາຍ	-	(2.184)
ອາກອນກຳໄລທີ່ກ່ຽວຂ້ອງກັບຂາດທຶນສຸດຊັບສິນທາງການເງິນທີ່ມີໄວ້ເພື່ອຂາຍ	-	523
	-	-

36. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດລວມຢູ່ໃນໃບລາຍງານກະແສເງິນສົດສັງລວມກິດຈະການ ປະກອບມີມູນຄ່າຂອງເອກະສານລາຍງານຖານະທາງການເງິນສັງລວມກິດຈະການ ເຊິ່ງມີລາຍລະອຽດດັ່ງນີ້:

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ	2.050.101	1.643.245
ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ	5.752.408	2.396.173
ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ	3.921.892	2.700.974
ເງິນຝາກມີກຳນົດ ພາຍໃນ 90 ມື້	-	464.040
	11.724.401	**7.204.432**

37. ໜີ້ສິນທີ່ອາດເກີດຂຶ້ນ ແລະ ຂໍ້ຜູກພັນ

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ໜັງສືຄ້ຳປະກັນທາງການເງິນ	400.347	255.094
ໜັງສືສິນເຊື່ອກັບທີ່	350.346	39.978
ໜັງສືສິນເຊື່ອລໍຖ້າຊຳລະສະສາງ	95.254	162.423
ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ	2.434.380	3.349.575
ວົງເງິນສິນເຊື່ອໃຫ້ແກ່ທະນາຄານອື່ນ	548	548
	3.280.875	**3.807.618**

ການຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ. ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້. ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃບບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫຼຸດ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ).

ຂໍ້ຜູກພັນຍັງບໍ່ໄດ້ຖືກຖອນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝຸນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກຳນົດທີ່ໄດ້ກຳນົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ, ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ໄດ້ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈຳເປັນຕ້ອງລາຍງານຢູ່ໃນລາຍງານກະແສເງິນສົດ.

ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນແມ່ນຕ່ຳກວ່າມູນຄ່າທັງໝົດຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້. ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອແມ່ນຄວາມບັງເອີນ ໃນເມື່ອລູກຄ້າຍັງຮັກສາມາດຕະຖານສະເພາະທີ່ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາທີ່ຍາວນານ ໂດຍທົ່ວໄປແມ່ນມີລະດັບຄວາມສ່ຽງສິນເຊື່ອຫຼາຍກວ່າ ຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

ຂໍ້ຜູກພັນໃນການເຊົ່າ

ວັນທີ 31 ທັນວາ 2019, ທະນາຄານບໍ່ໄດ້ເຊັນສັນຍາເຊົ່າໃນນາມທີ່ເປັນທັງຜູ້ໃຫ້ເຊົ່າ ຫຼື ຜູ້ເຊົ່າ ທີ່ຈະມີຜົນຕໍ່ກະແສເງິນສົດເຂົ້າ ແລະ/ຫຼື ອອກ ໃນອະນາຄົດ.

38. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບຜູ້ບໍລິຫານຄົນສຳຄັນຂອງທະນາຄານ

ຜົນປະໂຫຍດໃຫ້ແກ່ສະພາບໍລິຫານ ແລະ ຄະນະອຳນວຍການ ແມ່ນມີລາຍລະອຽດດັ່ງລຸ່ມນີ້:

	2019 *ລ້ານກີບ*	*2018* *ລ້ານກີບ*
ເງິນເດືອນ	1.589	1.557
ເງິນບຳເນັດ	518	499
ເງິນອຸດໜຸນຕຳແໜ່ງ	988	1.000
ຜົນປະໂຫຍດອື່ນໆ	48	1.001
	3.143	**4.057**

ລາຍການເຄື່ອນໄຫວທີ່ສຳຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃນປີ 2019 ມີລາຍລະອຽດຄືດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ບົດອະທິບາຍ* *ເລກທີ*	*ລາຍການເຄື່ອນໄຫວ*	*ລາຍຮັບ* *ລ້ານກີບ*	*ລາຍຈ່າຍ* *ລ້ານກີບ*
ທະນາຄານແຫ່ງ ສປປ ລາວ	(i)	ລາຍຈ່າຍດອກເບ້ຍຈາກເງິນກູ້ຢືມ ສຳລັບ ທຫລ	-	124.579
ກະຊວງການເງິນແຫ່ງ ສປປ ລາວ	(ii)	ລາຍຮັບດອກເບ້ຍຈາກການລົງທຶນໃນພັນທະບັດຂອງກະຊວງການເງິນ	169.167	-

38. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ	*ບົດອະທິບາຍ ເລກທີ*	*ລາຍການເຄື່ອນໄຫວ*	*ເພີ່ມຂຶ້ນ ລ້ານກີບ*	*ຫຼຸດລົງ ລ້ານກີບ*
ທະນາຄານແຫ່ງ ສປປ ລາວ	(i)	ສ່ວນປ່ຽນແປງສຸດທິໃນເງິນກູ້ຍືມຈາກທະນາຄານ	-	(238.204)
		ສ່ວນປ່ຽນແປງສຸດທິໃນເງິນຝາກຢູ່ທະນາຄານ	3.356.235	-
		ສ່ວນປ່ຽນແປງສຸດທິໃນເງິນຝາກຈາກທະນາຄານ	464	-
ກະຊວງການເງິນແຫ່ງ ສປປ ລາວ	(ii)	ສ່ວນປ່ຽນແປງສຸດທິໃນການລົງທຶນໃນພັນທະບັດຂອງກະຊວງການເງິນ	-	(116.937)
ທະນາຄານ ຮ່ວມທຸລະກິດລາວ - ຫວຽດ	(iii)	ສ່ວນປ່ຽນແປງສຸດທິໃນເງິນຝາກຢູ່ LVB	171.556	-
		ສ່ວນປ່ຽນແປງສຸດທິໃນເງິນຝາກຈາກ LVB	878.005	-
ທະນາຄານ ລາວ - ຝຣັ່ງ ຈຳກັດ	(iii)	ສ່ວນປ່ຽນແປງສຸດທິໃນເງິນຝາກຢູ່ BFL	-	(9.965)
		ສ່ວນປ່ຽນແປງສຸດທິໃນເງິນຝາກຈາກ BFL	3.144	-
ທະນາຄານ ລາວ - ຈີນ ຈຳກັດ	(iii)	ສ່ວນປ່ຽນແປງສຸດທິໃນເງິນຝາກຢູ່ LCNB	13.792	-

(i) ຜູ້ຄຸ້ມຄອງໂດຍກົງ
(ii) ເຈົ້າຂອງໂດຍກົງ
(iii) ບໍລິສັດຮ່ວມທຶນ

38. ຍັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອທີ່ສຳຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2019 ມີລາຍລະອຽດຄືດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ບົດອະທິບາຍ ເລກທີ*	*ລາຍການເຄື່ອນໄຫວ*	*ໜີ້ຕ້ອງຮັບ ລ້ານກີບ*	*ໜີ້ຕ້ອງສົ່ງ ລ້ານກີບ*
ທະນາຄານແຫ່ງ ສປປ ລາວ	(i)	ເງິນກູ້ຢືມຈາກ ແລະ ຕ້ອງເບັຍຄ້າງຈ່າຍ ແກ່ ທຫລ	-	1.825.039
		ເງິນຝາກກະແສລາຍວັນຂອງ ທຄຕລ ຢູ່ ທຫລ	5.752.407	6.810
		ເງິນຝາກແຮບັງຄັບ ຂອງ ທຄຕລ ຢູ່ ທຫລ	1.399.542	-
ກະຊວງການເງິນ	(ii)	ລົງທຶນໃນພັນທະບັດຂອງ ກະຊວງການເງິນ	3.375.163	-
		ດອກເບັຍຄ້າງຮັບ	83.793	-
ທະນາຄານ ຮ່ວມທຸລະກິດລາວ - ຫວຽດ	(iii)	ບັນຊີເງິນຝາກກະແສລາຍວັນ	1.195.623	1.072.822
ທະນາຄານ ລາວ - ຝຣັ່ງ ຈຳກັດ	(iii)	ບັນຊີເງິນຝາກກະແສລາຍວັນ	908	10.718
		ບັນຊີເງິນຝາກມີກຳນົດ		10.642
ທະນາຄານ ລາວ - ຈີນ ຈຳກັດ	(iii)	ບັນຊີເງິນຝາກກະແສລາຍວັນ	-	19.379

(i) ຜູ້ຄຸ້ມຄອງໂດຍກົງ
(ii) ເຈົ້າຂອງໂດຍກົງ
(iii) ບໍລິສັດຮ່ວມທຶນ

39. ນະໂຍບາຍບໍລິຫານຄວາມສ່ຽງ

ຄຳນຳ

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນກັບກິດຈະກຳຂອງທະນາຄານ ໂດຍຜ່ານຕົວຊີ້ບອກທີ່ຊັດເຈນ, ຜ່ານການວັດແທກ ແລະ ການຄວບຄຸມ, ຂອບເຂດຄວາມສ່ຽງ ແລະ ການຄຸ້ມຄອງອື່ນໆ. ການບໍລິຫານຄວາມສ່ຽງ ແມ່ນສິ່ງທີ່ສຳຄັນຕໍ່ຄວາມສາມາດສ້າງກຳໄລຢ່າງຕໍ່ເນື່ອງຂອງທະນາຄານ ແລະ ພະນັກງານແຕ່ລະຄົນພາຍໃນທະນາຄານ ແມ່ນຕ້ອງຮັບຜິດຊອບຕໍ່ຄວາມສ່ຽງທີ່ເກີດຂຶ້ນ ເຊິ່ງກ່ຽວຂ້ອງກັບໜ້າທີ່ຂອງຕົນ.

ຈຸດປະສົງສຳຄັນຂອງທະນາຄານໃນການບໍລິຫານຄວາມສ່ຽງແມ່ນເພື່ອໃຫ້ສອດຄ່ອງກັບລະບຽບຂອງທະນາຄານກາງ ແລະ ອີກເຫດຜົນໜຶ່ງແມ່ນຍ້ອນທະນາຄານໄດ້ຮັບຮູ້ເຖິງຄວາມສຳຄັນຂອງການບໍລິຫານຄວາມສ່ຽງເພື່ອໃຫ້ສອດຄ່ອງຕາມການປະຕິບັດຂອງມາດຕະຖານສາກົນທີ່ດີທີ່ສຸດໃນການບໍລິຫານຄວາມສ່ຽງ. ຄະນະບໍລິຫານ ແລະ ຄະນະອຳນວຍການ, ພ້ອມດ້ວຍການສະໜັບສະໜຸນຈາກຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ແມ່ນກຳລັງກຳນົດຕົວຜັນແປທີ່ຊັດເຈນຂອງຄວາມສ່ຽງທີ່ສາມາດຍອມຮັບໄດ້ຂອງທະນາຄານ ແລະ ຄວບຄຸມການປະຕິບັດທີ່ກົງກັນຂ້າມກັບຕົວຜັນແປນີ້.

ສະພາໄດ້ແຕ່ງຕັ້ງຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມການຈັດການຄວາມສ່ຽງໂດຍລວມຂອງທະນາຄານ.

ທະນາຄານມີຄວາມສ່ຽງທາງດ້ານສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫຼາດ, ຫຼັງຈາກນັ້ນໄດ້ແບ່ງອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ທະນາຄານຍັງມີຄວາມສ່ຽງອື່ນໆອີກທີ່ເກີດຈາກການດຳເນີນງານ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດ ບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດ ເຊັ່ນ: ການປ່ຽນແປງຂອງສະພາບແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງທະນາຄານແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງທະນາຄານ.

ໂຄງສ້າງຂອງການຄຸ້ມຄອງຄວາມສ່ຽງ

ສະພາບໍລິຫານແມ່ນມີຄວາມຮັບຜິດຊອບສຳລັບການບໍລິຫານຄວາມສ່ຽງໂດຍລວມ ແລະ ສຳລັບການອະນຸມັດ ກົນລະຍຸດ ແລະ ຫຼັກການບໍລິຫານຄວາມສ່ຽງ.

ຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນມີຄວາມຮັບຜິດຊອບໃນການພັດທະນາກົນລະຍຸດ ແລະ ຫຼັກການໂດຍລວມ, ຂອບເຂດວຽກ, ນະໂຍບາຍ ແລະ ຂອບເຂດ. ພະແນກປະຕິບັດຕາມ ແລະ ຄວາມສ່ຽງ ແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາບໍລິຫານຮັບຮູ້.

ນະໂຍບາຍຂອງທະນາຄານແມ່ນຂັ້ນຕອນການຈັດການຄວາມສ່ຽງໂດຍທີ່ທະນາຄານໄດ້ຖືກກວດສອບປະຈຳປີ. ເຊິ່ງຜ່ານການກວດສອບນີ້ຈະຮູ້ໄດ້ວ່າທະນາຄານສາມາດປະຕິບັດໄດ້ຕາມຂັ້ນຕອນທີ່ວາງໄວ້ ຫຼື ບໍ່. ພະແນກກວດກາພາຍໃນໄດ້ປຶກສາຫາລື ຜົນຂອງການປະເມີນຄວາມສ່ຽງ ແລະ ລາຍງານສິ່ງທີ່ພົບເຫັນ ແລະ ຄຳແນະນຳໃຫ້ຄະນະກຳມະການກວດກາ.

40. ການບໍລິຫານທຶນ

ທະນາຄານໄດ້ຮັກສາທຶນສຳຮອງຕ່ຳສຸດຕາມລະບຽບການເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ລົງວັນທີ 14 ຕຸລາ 2009 ອອກໂດຍຮັກສາການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳອື່ນໆ. ຈຸດປະສົງເບື້ອງຕົ້ນຂອງການບໍລິຫານທຶນຂອງທະນາຄານແມ່ນເພື່ອຮັບປະກັນວ່າ ທະນາຄານໄດ້ປະຕິບັດຕາມຂໍ້ກຳນົດທາງດ້ານເງິນທຶນຂອງທະນາຄານກາງ. ທະນາຄານຮັບຮູ້ເຖິງຄວາມຈຳເປັນຂອງ ທະນາຄານເພື່ອຮັກສາການ

ບໍລິຫານຊັບສິນ ແລະ ໜີ້ສິນໃຫ້ມີປະສິດທິພາບເພື່ອສ້າງສົມດຸນລະຫວ່າງການສ້າງກຳໄລ ແລະ ຄວາມພຽງພໍຂອງທຶນ.

ອີງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ທຶນຕາມລະບຽບການຂອງທະນາຄານກາງຖືກວິເຄາະເປັນ 2 ລະດັບຄື:

- ທຶນຊັ້ນ 1 ປະກອບດ້ວຍ: ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອການຂະຍາຍທຸລະກິດ ແລະ ທຶນອື່ນໆ ແລະ ກຳໄລລໍຖ້າແບ່ງປັນ;
- ທຶນຊັ້ນ 2 ແມ່ນມູນຄ່າເທົ່າກັບ 45% ຂອງການຕີມູນຄ່າຄືນເງິນແຮ ຫຼື ຕ່ຳກວ່າ 1,25% ຂອງຍອດລວມຄວາມສ່ຽງ ຖ່ວງໜັກຂອງລາຍການໃນໃບລາຍງານຖານະການເງິນ ແລະ ຍອດເຫຼືອຂອງເງິນແຮທົ່ວໄປພາຍໃນປີ

ຂອບເຂດຕ່າງໆແມ່ນຖືກນຳໃຊ້ເພື່ອເປັນອົງປະກອບຂອງທຶນອີງໃສ່: ທຶນຊັ້ນ 2 ບໍ່ສາມາດເກີນທຶນຊັ້ນ 1 ໄດ້ ແລະ ໜີ້ສິນ ສຳຮອງບໍ່ສາມາດເກີນ 50% ຂອງທຶນຊັ້ນ 1.

ການວິເຄາະທຶນຂອງທະນາຄານແມ່ນອີງຕາມຂໍ້ມູນທາງການເງິນທີ່ໄດ້ຈາກເອກະສານລາຍງານການເງິນສັງລວມກິດຈະການ ພາຍໃຕ້ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດເຊິ່ງມີດັ່ງຕໍ່ໄປນີ້ :

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ທຶນຊັ້ນ 1	2.141.572	2.003.541
ທຶນຊັ້ນ 2	-	-
ລວມທຶນ	2.141.572	2.003.541
ລົບ: ຫັກອອກຈາກທຶນ (ການລົງທຶນໃນນິຕິບຸກຄົນອື່ນ)	(494.666)	(462.296)
ທຶນສຳລັບການຄິດໄລ່ CAR (A)	**1.646.906**	**1.541.245**
ຄວາມສ່ຽງຖ່ວງໜັກຢູ່ໃນລາຍງານຖານະການເງິນ	13.377.776	11.984.241
ຄວາມສ່ຽງຖ່ວງໜັກຢູ່ລາຍການນອກໃບລາຍງານຖານະການເງິນ	1.595.547	1.880.710
ລວມຄວາມສ່ຽງສຳຄັນຢູ່ຊັບສິນ (B)	**14.973.323**	**13.864.951**
ອັດຕາສ່ວນຄວາມພຽງພໍຂອງທຶນ (A/B)	**11,00%**	**11,12%**

41. ມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ

ມູນຄ່າຍຸຕິທຳໝາຍເຖິງ ມູນຄ່າຊັບສິນທີ່ສາມາດແລກປ່ຽນເປັນເງິນ ຫຼື ການຊຳລະໜີ້ສິນບົນພື້ນຖານລາຍການເຕື່ອນໄຫວໃນເງື່ອນໄຂແຂ່ງແຍ້ງປົກກະຕິ. ເນື່ອງຈາກວ່າບໍ່ມີລາຄາສົມທຽບຂອງຕະຫຼາດ, ຊັບສິນ ແລະ ໜີ້ສິນ ຂອງທະນາຄານຈຶ່ງບໍ່ສາມາດປະເມີນລາຄາຕາມຕະຫຼາດໄດ້. ດັ່ງນັ້ນ, ມູນຄ່າຍຸຕິທຳຈຶ່ງຖືກປະເມີນແບບສົມມຸດຕິຖານອີງຕາມລັກສະນະຂອງຊັບສິນ ແລະ ໜີ້ສິນ. ຕາມຄຳເຫັນຂອງຄະນະບໍລິຫານ ເງິນທີ່ກູ້ຢືມຈາກ ທຫລ, ມູນຄ່າຕາມບັນຊີຂອງ ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ຢູ່ໃນ ໃບລາຍງານຖານະການເງິນສັງລວມກິດຈະການແມ່ນຖືກຄາດຄະເນຢ່າງສົມເຫດສົມຜົນກັບມູນຄ່າຍຸຕິທຳ. ໃນການປະເມີນດັ່ງກ່າວ, ຄະນະບໍລິຫານຂອງທະນາຄານ ສົມມຸດຖານວ່າ ເງິນກູ້ ສ່ວນໃຫຍ່ຖືຈົນຄົບກຳນົດ ດ້ວຍມູນຄ່າຍຸຕິທຳ ເທົ່າກັບ ມູນຄ່າຕາມບັນຊີຂອງເງິນກູ້ທີ່ຖືກຄັດແກ້ເງິນແຮຈາກການຫັກຄ່າເສື່ອມ.

42. ລາຍໄດ້ຕໍ່ຮຸ້ນ

ມູນຄ່າຂອງລາຍໄດ້ຕໍ່ຮຸ້ນ ແມ່ນຄິດໄລ່ຈາກຜົນຫານລະຫວ່າງ ກຳໄລຫຼັງຫັກອາກອນທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນ ຂອງທະນາຄານ ກັບ ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນ.

ລາຍການດັ່ງລຸ່ມນີ້ສະແດງໃຫ້ເຫັນຂໍ້ມູນ ທີ່ໃຊ້ເຂົ້າໃນການຄິດໄລ່ ລາຍໄດ້ຕໍ່ຮຸ້ນ:

	2019	*2018*
ກຳໄລສຸດທິຫຼັງຫັກອາກອນທີ່ຄາດວ່າຈະຕ້ອງໄດ້ຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນບົນພື້ນຖານລາຍໄດ້ຕໍ່ຮຸ້ນທົ່ວໄປ (ລ້ານກີບ)	359.734	320.732
ຈຳນວນສະເລ່ຍຂອງຮຸ້ນສາມັນສຳລັບລາຍໄດ້ພື້ນຖານຕໍ່ຮຸ້ນ (ຮຸ້ນ)	207.723.300	207.723.300
ມູນຄ່າຕໍ່ຮຸ້ນ (ກີບ)	5.000	5.000
ກຳໄລຕໍ່ຮຸ້ນ (ກີບ)	1.732	1.544

43. ເຫດການທີ່ເກີດຂຶ້ນຫຼັງມື້ທີ່ອອກເອກະສານລາຍງານ

ໃນວັນທີ 24 ມີນາ 2020, ປະເທດລາວຢືນຢັນພະຍາດອັກເສບປອດຮຸນແຮງຈາກການຕິດເຊື້ອຈຸລະໂລກ ໂກໂລນາ ສາຍພັນໃໝ່ (Covid-19) 2 ກໍລະນີທຳອິດ. ນັບແຕ່ນັ້ນມາ, ລັດຖະບານລາວໄດ້ຈັດຕັ້ງປະຕິບັດມາດຕະການເພື່ອປ້ອງກັນ ແລະ ຕອບໂຕ້ການລະບາດຂອງພະຍາດດັ່ງກ່າວໃນປະເທດລາວ. ໃນຕອນຕົ້ນຂອງເດືອນ ເມສາ 2020, ໄດ້ມີມາດຕະການໃນການຕໍ່ສູ້ກັບການລະບາດທີ່ອາດຈະເກີດຂຶ້ນລວມທັງການປະຕິບັດນະໂຍບາຍໄລຍະຫ່າງທາງສັງຄົມເປັນເວລາ 15 ວັນ.

ເຖິງແມ່ນວ່າປະເທດລາວເປັນປະເທດໜຶ່ງທີ່ຈັດຕັ້ງຄວບຄຸມການແຜ່ລະບາດໄດ້ດີທີ່ສຸດ, ແຕ່ກໍຍັງປະສົບຄວາມຫຍຸ້ງຍາກຈາກການລະບາດຍ້ອນການຖີດຖອຍຂອງອຸດສາຫະກຳເກືອບທັງໝົດທົ່ວປະເທດ.

ຈົນມາເຖິງວັນທີຂອງບົດລາຍງານການເງິນ, ທະນາຄານກຳລັງການປະເມີນຜົນກະທົບຂອງ Covid-19 ຕໍ່ການດຳເນີນງານຂອງທະນາຄານ ພ້ອມທັງ ການດຳເນີນງານ, ກະແສເງິນສົດ ແລະ ເງື່ອນໄຂທາງການເງິນຂອງລູກຄ້າຂອງທະນາຄານເພື່ອນຳໃຊ້ໃນການປັບປຸງໂຄງສ້າງການຊຳລະເງິນກູ້, ການຍົກເວັ້ນ, ການຫຼຸດອັດຕາດອກເບ້ຍ ແລະ ຄ່າທຳນຽມແກ່ລູກຄ້າຂອງທະນາຄານ. ການເພີ່ມຂຶ້ນອັນມີໄນຍະສຳຄັນໃນຄວາມສ່ຽງສິນເຊື່ອ ແລະ ຂໍ້ມູນທີ່ກ່ຽວຂ້ອງອື່ນໆຈະຖືກສະທ້ອນໃຫ້ເຫັນໃນການກະກຽມບົດລາຍງານທາງການເງິນສຳລັບໄລຍະ 6 ເດືອນ ທີ່ສິ້ນສຸດວັນທີ 30 ມິຖຸນາ 2020.

ບໍ່ມີເຫດການໃດເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2019 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນສັງລວມກິດຈະການຂອງທະນາຄານ.

44. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວໃນທ້າຍປີ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ໂດລາ ສະຫະລັດ	8.868,00	8.538,00
ເອີໂຣ	9.915,00	9.753,00
ບາດໄທ	298,59	265,48
ປອນ ອັງກິດ	11.474,00	10.702,00
ເຢນ ຍີ່ປຸ່ນ	79,95	75,80
ໂດລາ ອົດສະຕາລີ	6.104,00	5.966,00
ຢວນ ຈີນ	1.263,00	1.229,00

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ພຸແສງທອງ ອານຸລັກຄຳ	ທ່ານ ກິງສັກ ສຸພອນສີ	ທ່ານ ວຽງສຸກ ຈຸນທະວິງ
ຫົວໜ້າພະແນກບັນຊີສັງລວມ	ຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

19 ພຶດສະພາ 2020

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນສະເພາະກິດຈະການສຳລັບຈຸດປະສົງພິເສດ

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານນັກກວດສອບອິດສະຫຼະ	4 - 9
ໃບລາຍງານຜົນການດຳເນີນງານໃນການທຸລະກິດສະເພາະກິດຈະການ	10
ໃບລາຍງານຜົນການດຳເນີນງານນອກການທຸລະກິດສະເພາະກິດຈະການ	11
ໃບລາຍງານຖານະການເງິນສະເພາະກິດຈະການ	12
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສະເພາະກິດຈະການ	13 - 14
ໃບລາຍງານກະແສເງິນສົດສະເພາະກິດຈະການ	15 - 16
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສະເພາະກິດຈະການ	17 - 80

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ໃນບົດລາຍງານສະບັບນີ້ ເອີ້ນວ່າ "ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ("ສປປ ລາວ").

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010, ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມ ໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ຂອງຮຸ້ນທັງໝົດ (ທຽບເທົ່າກັບ 13.657.759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED ("COFIBRED"). ອີງຕາມສັນຍາການຊື້ຮຸ້ນສາມັນລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED, ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150.235.349.000 ກີບ ໄດ້ຖືກຈ່າຍເຕັມມູນຄ່າໂດຍ ທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017, ຫ້ອງການຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນໂດຍການສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈຳນວນ 68.047.300 ຮຸ້ນ ແລະ ສາທາລະນະຊົນ ຈຳນວນ 3.098.400 ຮຸ້ນ ໃນຕະຫຼາດຫຼັກຊັບລາວ ເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນ ຈຳນວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0889 /ERO, ລົງວັນທີ 15 ກັນຍາ 2017 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານປັບໂຄງສ້າງຜູ້ຖືຮຸ້ນ ໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜຸນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ໃນວັນທີ 29 ພະຈິກ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

ອີງຕາມການແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2019 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	124.634.021	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	20.772.359	10%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດອື່ນໆ (*)	62.316.920	30%
	207.723.300	**100%**

(*) ແຕ່ລະບຸກຄົນທົ່ວໄປ ຫຼື ອົງກອນແມ່ນອະນຸຍາດໃຫ້ຖືຮຸ້ນໄດ້ສູງສຸດ 2% ຂອງຈຳນວນຮຸ້ນທັງໝົດ.

ຂໍ້ມູນທົ່ວໄປ (ຕໍ່)

ທະນາຄານ (ຕໍ່)

ກິດຈະກຳຫຼັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນຂອງທະນາຄານ ນະວັນທີ 31 ທັນວາ 2019 ແມ່ນ 1.038.617 ລ້ານກີບ (ວັນທີ 31 ທັນວາ 2018 : 1.038.617 ລ້ານກີບ).

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ທັນວາ 2019, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ຫ້າ (5) ບໍລິສັດຮ່ວມທຶນ, ຊາວ (20) ສາຂາຫຼັກ, ເກົ້າສິບສາມ (93) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2019 ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

ຊື່	*ສ້າງຕັ້ງພາຍໃຕ້ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ບໍລິສັດຫຼັກຊັບ ທຄຕລ - ມທ ຈຳກັດ	1079/ຫຈທ ລົງວັນທີ 10 ກໍລະກົດ 2019 ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ຫຼັກຊັບ	70%

ບໍລິສັດຮ່ວມທຶນ

ນະວັນທີ 31 ທັນວາ 2019, ທະນາຄານມີ ຫ້າ (05) ບໍລິສັດຮ່ວມທຶນຄື:

ຊື່	*ສ້າງຕັ້ງພາຍໃຕ້ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ທະນາຄານຮ່ວມທຸລະກິດ ລາວ - ຫວຽດ	ເລກທີ 732/ ERO ລົງວັນທີ 29 ສິງຫາ 2016 ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການທະນາຄານ & ການເງິນ	25%
ທະນາຄານລາວ - ຝຣັ່ງ	ເລກທີ 124-10/ກຜລ4 ລົງວັນທີ 07 ກັນຍາ 2010 ໂດຍກະຊວງແຜນການ ແລະ ການລົງທຶນ	ການທະນາຄານ & ການເງິນ	30%
ບໍລິສັດປະກັນໄພ ລາວ - ຫວຽດ	ເລກທີ 0600 ລົງວັນທີ 16 ສິງຫາ 2013 ໂດຍ ກະຊວງ ອຸດສະຫະກຳ ແລະ ການຄ້າ	ປະກັນໄພ	35%
ທະນາຄານ ລາວ - ຈີນ ຈຳກັດ	ເລກທີ 041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ພະແນກຂຶ້ນທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ	ການທະນາຄານ & ການເງິນ	49%
ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ	ເລກທີ 0349/ຫຈທ ລົງວັນທີ 12 ມິນາ 2019 ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ	ການຄຸ້ມຄອງທຸລະກຳການຊຳລະສະສາງ ເອເລັກໂທຣ) (ນິກ	20%

ຂໍ້ມູນທົ່ວໄປ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ	ປະທານ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ຄຳສຸກ ສຸນດາລາ	ຮອງປະທານ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ພູຂົງ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ມາກ ໂຮເບີດ	ສະມາຊິກ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ພຸດທະຂັນ ຂັນຕີ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018
ທ່ານ ຣສ. ປອ ພູເພັດ ພິລະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018
ທ່ານ ວຽງສຸກ ຈຸນທະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 15 ມັງກອນ 2016
ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 6 ມິຖຸນາ 2008 ລາອອກວັນທີ 01 ເມສາ 2019
ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ2014
ທ່ານ ຄຳຊ່ຽນ ມິ່ງບຸບຜາ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 23 ພະຈິກ 2015 ລາອອກວັນທີ 26 ເມສາ 2019
ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 23 ພະຈິກ 2015
ທ່ານ ບົວວັນ ສີມະລີວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພະຈິກ 2016
ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 18 ກຸມພາ 2019

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ ແມ່ນທ່ານ ພູຂົງ ຈັນທະຈັກ – ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງທະນາຄານແມ່ນ ບໍລິສັດ ເອິນແອນຢັ້ງ ລາວ ຈຳກັດ.

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 60790273/21199783-IFRS

ບົດລາຍງານນັກກວດສອບອິດສະຫຼະ

ຮຽນ: ຄະນະບໍລິຫານຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
ທະນາຄານແຫ່ງ ສ ປປ ລາວ; ແລະ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື

ຄຳເຫັນແບບມີເງື່ອນໄຂ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນສະເພາະກິດຈະການສຳລັບຈຸດປະສົງພິເສດ ("ເອກະສານລາຍງານການເງິນສະເພາະກິດຈະການ") ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ("ທະນາຄານ") ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນສະເພາະກິດຈະການນະວັນທີ 31 ທັນວາ 2019, ໃບລາຍງານຜົນການດຳເນີນງານສະເພາະກິດຈະການ, ໃບລາຍງານຜົນການດຳເນີນງານນອກການທຸລະກິດສະເພາະກິດຈະການ,ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສະເພາະກິດຈະການ ແລະ ໃບລາຍງານກະແສເງິນສິດສະເພາະກິດຈະການ ສຳລັບປີທີ່ສິ້ນສຸດດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນສະເພາະກິດຈະການ ລວມທັງບົດສະຫຼຸບຂອງນັນດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ຍົກເວັ້ນຜົນກະທົບທີ່ເປັນໄປໄດ້ຂອງບັນຫາທີ່ໄດ້ລະບຸໄວ້ໃນວັກ ພື້ນຖານການອອກຄຳເຫັນແບບມີເງື່ອນໄຂ ໃນບົດລາຍງານຂອງພວກຂ້າພະເຈົ້າ, ເຫັນວ່າເອກະສານລາຍງານການເງິນສະເພາະກິດຈະການຂອງທະນາຄານສຳລັບປີສິ້ນສຸດວັນທີ 31 ທັນວາ 2019 ແມ່ນໄດ້ຖືກກະກຽມຢ່າງຖືກຕ້ອງຕາມ ນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນ ບົດອະທິບາຍເລກທີ 5 ຂອງເອກະສານລາຍງານການເງິນສະເພາະກິດຈະການ ໂດຍສອດຄ່ອງກັບຂໍ້ກຳນົດການລາຍງານຂອງ ທະນາຄານແຫ່ງ ສປປ ລາວ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ.

ພື້ນຖານໃນການອອກຄຳເຫັນແບບມີເງື່ອນໄຂ

ເອກະສານການເງິນສະເພາະກິດຈະການບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບການຕີມູນຄ່າຍຸຕິທຳ ທີ່ໄດ້ກຳນົດໄວ້ພາຍໃຕ້ ມາດຕະຖານສາກົນການລາຍງານ IFRS 13 "ການຕີມູນຄ່າຍຸຕິທຳ" ແລະ ການຄຸ້ມຄອງຄວາມສ່ຽງທາງການເງິນທີ່ໄດ້ກຳນົດໄວ້ພາຍໃຕ້ ມາດຕະຖານການລາຍງານສາກົນ IFRS 7: "ເຄື່ອງມືທາງການເງິນ: ການເປີດເຜີຍຂໍ້ມູນ". ຜົນກະທົບຂອງຄວາມລົ້ມເຫຼວທີ່ເກີດຂຶ້ນໃນບົດລາຍງານການເງິນຂອງຂອງທະນາຄານແມ່ນບໍ່ສາມາດກຳນົດໄດ້ໃນການເປີດເຜີຍຂໍ້ມູນເຫຼົ່ານີ້.

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ. ນັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າພາຍໃຕ້ນັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມ ໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບສຳລັບການກວດສອບເອກະສານລາຍງານການເງິນສະເພາະກິດຈະການ"* ໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເອກະລາດຈາກທະນາຄານ ໂດຍສອດຄ່ອງກັບ ກົດຈັນຍາບັນວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ນັນດາຂໍ້ກຳນົດທາງຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດນັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນແບບມີເງື່ອນໄຂຂອງພວກຂ້າພະເຈົ້າ.

Building a better working world

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນສະເພາະກິດຈະການ, ທີ່ໄດ້ອະທິບາຍພື້ນຖານໃນການກະກຽມ, ພາຍໃຕ້ນະໂຍບາຍທາງການບັນຊີທີ່ນຳໃຊ້ ແລະ ການເປີດເຜີຍຂໍ້ມູນທີ່ສ້າງຂຶ້ນ (ຕໍ່ໄປນີ້ເອີ້ນວ່າ "ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ") ແມ່ນບໍ່ໄດ້ມີເປົ້າໝາຍເພື່ອ, ແລະບໍ່ໄດ້ປະຕິບັດຕາມຂໍ້ການິດທັງໝົດທີ່ຮຽກຮ້ອງຕາມມາດຕະຖານລາຍງານການເງິນສາກົນ ເນື່ອງຈາກນະໂຍບາຍທາງການບັນຊີ ສຳລັບການຮັບຮູ້ ແລະ ການວັດແທກມູນຄ່າຂອງເຄື່ອງມືທາງການເງິນ ແມ່ນອີງຕາມມາດຕະຖານການບັນຊີສາກົນເລກທີ 39 - ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການວັດແທກມູນຄ່າ ແທນ ມາດຕະຖານລາຍງານການເງິນສາກົນເລກທີ 9 - ເຄື່ອງມືທາງການເງິນ. ເອກະສານລາຍງານການເງິນສະເພາະກິດຈະການແມ່ນຖືກກະກຽມສຳລັບທະນາຄານເພື່ອນຳໃຊ້ໃນການລາຍງານຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບເທົ່ານັ້ນ. ດັ່ງນັ້ນ, ເອກະສານລາຍງານການເງິນສະພາະກິດຈະການສະບັບນີ້ ອາດຈະບໍ່ເໝາະສົມໃນການນຳໃຊ້ເພື່ອຈຸດປະສົງອື່ນ. ບົດລາຍງານການກວດສອບຂອງພວກຂ້າພະເຈົ້າ ແມ່ນມີຈຸດປະສົງເພື່ອເປັນຂໍ້ມູນ ແລະ ການນຳໃຊ້ຂອງທະນາຄານ ແລະ ເຈົ້າໜ້າທີ່ດັ່ງກ່າວນີ້, ແລະບໍ່ຄວນຖືກນຳໃຊ້ໂດຍພາກສ່ວນອື່ນ.

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສະເພາະກິດຈະການ ເຊິ່ງໄດ້ລະບຸວ່າ ທະນາຄານຍັງໄດ້ກະກຽມເອກະສານລາຍງານການເງິນສັງລວມກິດຈະການຂອງທະນາຄານ ແລະ ບໍລິສັດໃນເຄືອ ສຳລັບປີສິ້ນສຸດວັນທີ 31 ທັນວາ 2019 ໂດຍສອດຄ້ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 5 ຂອງເອກະສານລາຍງານການເງິນສັງລວມກິດຈະການ. ຜູ້ທີ່ນຳໃຊ້ເອກະສານລາຍງານການເງິນສະເພາະກິດຈະການຄວນອ່ານຄວບຄູ່ກັນກັບເອກະສານລາຍງານການເງິນສັງລວມດັ່ງກ່າວ ເພື່ອໃຫ້ໄດ້ຮັບຂໍ້ມູນທີ່ສົມບູນກ່ຽວກັບຖານະການເງິນສັງລວມກິດຈະການ, ຜົນການດຳເນີນງານສັງລວມກິດຈະການ ແລະ ກະແສເງິນສົດສັງລວມກິດຈະການຂອງທະນາຄານ ແລະ ບໍລິສັດໃນເຄືອທັງໝົດ.

ພ້ອມນັ້ນ, ພວກຂ້າພະເຈົ້າຍັງສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສະເພາະກິດຈະການເລກທີ 29 - ອາກອນ, ທີ່ອະທິບາຍເຖິງໜັງສືແຈ້ງການຂອງກະຊວງການເງິນທີ່ຮຽກຮ້ອງໃຫ້ທະນາຄານທຸລະກິດຄິດໄລ່ອາກອນກຳໄລຄືນໃໝ່ແຕ່ປີ 2016 ເຖິງ 2019 ແລະ ຜົນກະທົບທີ່ອາດເກີດຂຶ້ນກັບລາຍຈ່າຍທີ່ຖືເປັນລາຍຈ່າຍສຳລັບການຄິດໄລ່ອາກອນກຳໄລໃນຊ່ວງໄລຍະນີ້ ເຊິ່ງຍັງຄົງຄ້າງການຊີ້ແຈງທີ່ຊັດເຈນ ແລະ ຄຳແນະນຳການນຳໃຊ້ທີ່ເປັນລາຍລະອຽດຈາກໜ່ວຍງານທີ່ຮັບຜິດຊອບ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂສຳລັບບັນຫາເຫຼົ່ານີ້.

ບັນຫາການກວດສອບທີ່ສຳຄັນ

ບັນຫາການກວດສອບທີ່ສຳຄັນແມ່ນບັນດາບັນຫາທີ່ຖືກປະເມີນຈາກການວິນິດໄສແບບມືອາຊີບຂອງພວກຂ້າພະເຈົ້າ, ມີຄວາມສຳຄັນໃນການກວດສອບຂອງພວກຂ້າພະເຈົ້າຕໍ່ກັບເອກະສານລາຍງານການເງິນສະເພາະກິດຈະການຂອງທະນາຄານປີ 2019. ນອກຈາກບັນຫາທີ່ໄດ້ກ່າວໃນວັກ *ພື້ນຖານການອອກຄຳເຫັນແບບມີເງື່ອນໄຂ* ແລ້ວ, ພວກຂ້າພະເຈົ້າໄດ້ກຳນົດບັນຫາທີ່ໄດ້ອະທິບາຍຢູ່ຂ້າງລຸ່ມນີ້ເປັນບັນຫາການກວດສອບທີ່ສຳຄັນທີ່ໄດ້ຖືກແຈ້ງໃຫ້ຮັບຮູ້ໃນບົດລາຍງານຂອງພວກຂ້າພະເຈົ້າ. ບັນຫາເຫຼົ່ານີ້ໄດ້ຖືກກ່າວໃນຂອບເຂດຂອງການກວດສອບເອກະສານລາຍງານການເງິນສະເພາະກິດຈະການຂອງພວກຂ້າພະເຈົ້າໂດຍລວມ ແລະ ໃນການຮ່ວມຮ່ອນຄຳເຫັນຂອງພວກຂ້າພະເຈົ້າ. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ໄດ້ໃຫ້ຄຳເຫັນແຍກຕ່າງຫາກໃນບັນຫາເຫຼົ່ານີ້. ສຳລັບແຕ່ລະບັນຫາລຸ່ມນີ້, ລາຍລະອຽດຂອງວິທີການກວດສອບຂອງພວກຂ້າພະເຈົ້າທີ່ລະບຸບັນຫານັ້ນແມ່ນຖືກອະທິບາຍໃນເນື້ອຫາດັ່ງກ່າວ.

ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນສະເພາະກິດຈະການ* ຂອງບົດລາຍງານຂອງພວກຂ້າພະເຈົ້າ ເຊິ່ງລວມເຖິງສ່ວນທີ່ກ່ຽວຂ້ອງກັບບັນຫາເຫຼົ່ານີ້. ຕາມການກວດສອບຂອງພວກຂ້າພະເຈົ້າ, ລວມມີການຈັດຕັ້ງປະຕິບັດວິທີການກວດສອບເພື່ອທີ່ຈະຕອບສະໜອງການປະເມີນຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນຂອງພວກຂ້າພະເຈົ້າ. ຜົນຂອງການປະຕິບັດຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າ, ລວມມີຂັ້ນຕອນທີ່ຈັດຕັ້ງປະຕິບັດເພື່ອທີ່ຈະລະບຸບັນຫາລຸ່ມນີ້, ເພື່ອໃຫ້ເປັນພື້ນຖານສຳລັບການໃຫ້ຄຳເຫັນການກວດສອບຂອງພວກຂ້າພະເຈົ້າຕໍ່ກັບເອກະສານລາຍງານການເງິນສະເພາະກິດຈະການ.

Building a better working world

ບັນຫາການກວດສອບທີ່ສຳຄັນ (ຕໍ່)

ຂອບເຂດທີ່ຄວນເອົາໃຈໃສ່	*ວິທີການກວດສອບຂອງພວກຂ້າພະເຈົ້າເພື່ອຕອບສະໜອງປັດໃຈສ່ຽງຕ່າງໆ*
ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ ແລະ ນະໂຍບາຍການບັນຊີ ທີ່ສຳຄັນ ທະນາຄານດຳເນີນງານຢູ່ ສປປ ລາວ ແລະ ປະຕິບັດການບັນທຶກ ແລະ ລົງບັນຊີໂດຍອີງຕາມກົດໝາຍບັນຊີຂອງ ສປປ ລາວ ແລະ ກົດລະບຽບທີ່ກ່ຽວຂ້ອງທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ("ເອກະສານລາຍງານການເງິນພາຍໃຕ້ລະບົບການບັນຊີລາວ"). ເອກະສານລາຍງານການເງິນສະເພາະກິດຈະການສຳລັບຈຸດປະສົງພິເສດ ຂອງທະນາຄານແມ່ນຖືກກະກຽມໂດຍການບັນທຶກລາຍການດັດແກ້ທີ່ຈຳເປັນລົງໃນການບັນທຶກບັນຊີ ໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 5. ການກຳນົດທຸກໆຄວາມແຕກຕ່າງຂອງນະໂຍບາຍການບັນຊີທີ່ຖືກຍອມຮັບໂດຍທົ່ວໄປ ແລະ ການຄິດໄລ່ລາຍການດັດແກ້ທີ່ຈຳເປັນແມ່ນຮຽກຮ້ອງໃຫ້ຄະນະອຳນວຍການຂອງທະນາຄານນຳໃຊ້ດຸນພິນິດໃນການບັນທຶກລາຍການດັດແກ້ດັ່ງກ່າວ.	ບັນດາຂັ້ນຕອນຂອງພວກຂ້າພະເຈົ້າ, ທີ່ກ່ຽວຂ້ອງກັບຂະບວນການຫັນປ່ຽນເປັນຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດຂອງທະນາຄານລວມມີ: • ພວກຂ້າພະເຈົ້າໄດ້ປະເມີນ ແລະ ຊອກຫາສິ່ງທ້າທາຍໃນການຄັດເລືອກ ແລະ ການນຳໃຊ້ນັບດານະໂຍບາຍການບັນຊີຂອງທະນາຄານພາຍໃຕ້ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ. • ພວກຂ້າພະເຈົ້າໄດ້ຮ່າງການຄາດຄະເນຂອງຄວາມແຕກຕ່າງລະຫວ່າງເອກະສານລາຍງານການເງິນຕາມລະບົບການບັນຊີລາວ ແລະ ເອກະສານລາຍງານການເງິນສະເພາະກິດຈະການສຳລັບຈຸດປະສົງພິເສດ ແລະ ສົມທຽບກັບ ເອກະສານລາຍງານການເງິນທີ່ໄດ້ກະກຽມໂດຍທະນາຄານ. • ພວກຂ້າພະເຈົ້າໄດ້ນຳໃຊ້ເຄື່ອງມືເພື່ອປະເມີນຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງການເປີດເຜີຍທີ່ໄດ້ກະກຽມໂດຍທະນາຄານ; ແລະ • ພວກຂ້າພະເຈົ້າໄດ້ໃຫ້ຊ່ຽວຊານສະເພາະດ້ານມາດຕະຖານສາກົນດ້ານການລາຍງານການເງິນມີສ່ວນຮ່ວມໃນຂັ້ນຕອນຂອງພວກຂ້າພະເຈົ້າເພື່ອປະເມີນການປະຕິບັດຕາມຂໍ້ກຳນົດການເປີດເຜີຍຂອງຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ.

ຂອບເຂດທີ່ຄວນເອົາໃຈໃສ່	*ວິທີການກວດສອບຂອງພວກຂ້າພະເຈົ້າເພື່ອຕອບສະໜອງປັດໃຈສ່ຽງຕ່າງໆ*
ເງິນແຮສຳລັບຄ່າເສື່ອມຂອງເງິນກູ້ໃຫ້ແກ່ລູກຄ້າ (ປົດອະທິບາຍເລກທີ 18 – ເງິນແຮສຳລັບຄ່າເສື່ອມໜີ້ເສຍ ຂອງເງິນກູ້ໃຫ້ແກ່ລູກຄ້າ) ເງິນແຮສຳລັບຄ່າເສື່ອມໜີ້ເສຍຂອງເງິນກູ້ແມ່ນມີຍອດທີ່ສູງ ແລະ ເປັນມູນຄ່າຄາດຄະເນທີ່ມີຄວາມບໍ່ແນ່ນອນໃນລະດັບທີ່ສູງ. ຜູ້ບໍລິຫານຂອງທະນາຄານຕ້ອງພິຈາລະນາໃນການກຳນົດຫຼັກຖານໃນການສ້າງ ແລະ ການຄິດໄລ່ຈຳນວນເງິນແຮຄ່າເສື່ອມ. ເພື່ອຄິດໄລ່ເງິນແຮຄ່າເສື່ອມ ທະນາຄານໄດ້ພັດທະນາຮູບແບບ ແລະ ສ້າງຂໍ້ສົມມຸດຖານທີ່ແນ່ນອນ ທີ່ລວມມີການປະເມີນຄ່າຫຼັກປະກັນ, ການຄາດຄະເນກະແສເງິນສົດ, ແລະ ເງື່ອນໄຂທາງດ້ານການເງິນຂອງຜູ້ກູ້ຢືມ. ເນື່ອງຈາກຍອດເງິນແຮນີ້ແມ່ນມີຄວາມສຳຄັນ ແລະ ຮຽກຮ້ອງໃຫ້ມີການຕັດສິນໃຈໃນລະດັບສູງໂດຍຄະນະອຳນວຍການຂອງທະນາຄານ ແລະ ສິ່ງທີ່ມີຢູ່ໂດຍພາວະວິໄສຂອງຂໍ້ສົມມຸດຖານທີ່ໄດ້ເລືອກ, ພວກຂ້າພະເຈົ້າຈຶ່ງໄດ້ມີການເອົາໃຈໃສ່ເປັນພິເສດໃນການກວດສອບຂອງພວກຂ້າພະເຈົ້າ.	ພວກຂ້າພະເຈົ້າໄດ້ສ້າງຄວາມເຂົ້າໃຈ ແລະ ໄດ້ທົດສອບການອອກແບບ ແລະ ປະສິດຕິພາບການດຳເນີນການຄວບຄຸມທີ່ສຳຄັນທີ່ກ່ຽວຂ້ອງກັບ: • ການພິຈາລະນາ ແລະ ການຮັບຮູ້ສິນເຊື່ອ; • ການຈັດລະດັບ ແລະ ການຕິດຕາມສິນເຊື່ອ; • ການຈັດປະເພດລາຍງານຖານະເງິນກູ້ຕາມຄວາມສ່ຽງທີ່ມີລັກສະນະຄ້າຍຄືກັນ; • ການຄິດໄລ່ເງິນແຮຄ່າເສື່ອມສຳລັບໜີ້ເສຍ ໂດຍອີງຕາມຢັນດາຂໍ້ກຳນົດທາງລະບຽບການ; ແລະ • ການຄວບຄຸມທົ່ວໄປດ້ານໄອທີ ລວມເຖິງການຄຸ້ມຄອງການປ່ຽນແປງ, ການຄຸ້ມຄອງການເຂົ້າເຖິງ ແລະ ການດຳເນີນງານດ້ານຖານຂໍ້ມູນ, ການນຳໃຊ້ ໄອທີ ແລະ ລະບົບການດຳເນີນງານ. ສຳລັບຕົວຢ່າງຂອງເງິນກູ້ທີ່ຖືກຄິດໄລ່ເງິນແຮຄ່າເສື່ອມເປັນແຕ່ລະລາຍລູກຄ້າ, ພວກຂ້າພະເຈົ້າໄດ້: • ປະເມີນ ແລະ ທ້າສິ່ງທ້າທາຍຂໍ້ສົມມຸດຖານຂອງຄະນະອຳນວຍການໃນແງ່ຂອງການຄາດຄະເນເງິນສົດ ແລະ • ປະເມີນຜົນກະທົບຂອງການປັບປຸງໂຄງສ້າງໜີ້ທີ່ເຫັນວ່າບໍ່ເໝາະສົມ ສຳລັບເງິນແຮຄ່າເສື່ອມທີ່ຖືກຄິດໄລ່ເປັນກຸ່ມ ພວກຂ້າພະເຈົ້າໄດ້ປະຕິບັດຂັ້ນຕອນ ດັ່ງຕໍ່ໄປນີ້: • ທົດສອບຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງຂໍ້ມູນທີ່ໃຊ້ໃນຮູບແບບ • ທົດສອບຄວາມຖືກຕ້ອງໃນການຄຳນວນຂອງຮູບແບບຂອງທະນາຄານ • ປະເມີນ ແລະ ທ້າສິ່ງທ້າທາຍກ່ຽວກັບຄວາມເໝາະສົມຂອງຂໍ້ສົມມຸດຖານລວມມີ ອັດຕາການສູນເສຍໃນອະດີດ, ແລະ • ສົມທຽບຂໍ້ມູນ ແລະ ຂໍ້ສົມມຸດຖານທີ່ໄດ້ສ້າງໂດຍທະນາຄານຕໍ່ກັບຕົວຊີ້ວັດແທກພາຍນອກ. ທ້າຍສຸດ, ພວກຂ້າພະເຈົ້າໄດ້ປະເມີນ ຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງ ຂອງການເປີດເຜີຍໃນເອກະສານລາຍງານການເງິນທີ່ກ່ຽວຂ້ອງກັບເງິນແຮຄ່າເສື່ອມໜີ້ເສຍ ເພື່ອປະເມີນວ່າໄດ້ສອດຄ່ອງກັບຂໍ້ກຳນົດປະຕິບັດສຳລັບການເປີດເຜີຍຂໍ້ມູນ.

Building a better working world

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນສະເພາະກິດຈະການ

ຄະນະອຳນວຍການຂອງທະນາຄານແມ່ນມີໜ້າທີ່ຮັບຜິດຊອບໃນການສ້າງເອກະສານລາຍງານການເງິນໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນ ບົດອະທິບາຍເລກທີ 5 ຂອງເອກະສານລາຍງານການເງິນສະເພາະກິດຈະການ ແລະ ບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະອຳນວຍການເຫັນວ່າມີຄວາມຈຳເປັນເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນສະເພາະກິດຈະການ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນສະເພາະກິດຈະການ, ຄະນະອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງທະນາຄານ ທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະອຳນວຍການທະນາຄານຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະອຳນວຍການທະນາຄານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນສະເພາະກິດຈະການ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບເອົາການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນສະເພາະກິດຈະການໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນສະເພາະກິດຈະການ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ.

ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນສະເພາະກິດຈະການ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງທະນາຄານໃນຄວາມສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸ

Building a better working world

ໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນສະເພາະກິດ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອະນາຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ທະນາຄານຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍຕ່າງໆທີ່ກ່ຽວຂ້ອງ ທີ່ສ້າງຂຶ້ນໂດຍຄະນະອຳນວຍການທະນາຄານ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະອຳນວຍການທະນາຄານກ່ຽວຂ້ອງກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ພົບເຫັນໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ນອກຈາກນັ້ນ, ພວກຂ້າພະເຈົ້າຍັງໄດ້ໃຫ້ຄຳຖະແຫຼງການໃຫ້ແກ່ຜູ້ທີ່ມີໜ້າທີ່ໃນການຄວບຄຸມເອກະສານລາຍງານການເງິນ ທີ່ພວກຂ້າພະເຈົ້າໄດ້ປະຕິບັດຕາມຂໍ້ກຳນົດຈັນຍາບັນທີ່ກ່ຽວຂ້ອງກ່ຽວກັບຄວາມເປັນເອກະລາດ, ແລະ ໄດ້ປຶກສາຫາລືກ່ຽວກັບບັນດາຄວາມສຳພັນ ແລະ ບັນຫາອື່ນໆທີ່ອາດຈະມີເຫດຜົນພຽງພໍທີ່ຄວນຖືກພິຈາລະນາເຖິງຄວາມເປັນເອກະລາດຂອງພວກຂ້າພະເຈົ້າ, ແລະ ມາດຕະຖານປ້ອງກັນທີ່ກ່ຽວຂ້ອງ.

ບໍລິສັດ ເອີນແອນຢັ້ງ ລາວ ຈຳກັດ

ບໍລິສັດ ເອີນ ແອນ ຢັ້ງ ລາວ ຈຳກັດ ERNST & YOUNG LAO CO.,LTD

Saman Wijaya Bandara
ຮຸ້ນສ່ວນ
ໃບອະນຸຍາດດຳເນີນການກວດສອບ
ໃບຢັ້ງຢືນເລກທີ: 014/LCPAA-APT-2019

ນະຄອນຫລວງວຽງຈັນ, ສປປ ລາວ

30 ເມສາ 2020

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານສະເພາະກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*2019 ລ້ານກີບ*	*2018 ລ້ານກີບ*
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	7	2.152.457	1.931.564
ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ	7	(1.193.701)	(1.000.577)
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	**7**	**958.756**	**930.987**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	8	245.882	258.681
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	8	(29.975)	(22.017)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**8**	**215.907**	**236.664**
ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ	9	34.749	49.719
ຂາດທຶນສຸດທິຈາກການຊື້-ຂາຍອະນຸພັນ	10	(1.204)	-
ລາຍຮັບອື່ນໆຈາກການດຳເນີນງານ	11	116.012	47.107
ລາຍຮັບທັງໝົດຈາກການດຳເນີນງານ		**1.324.220**	**1.264.477**
ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ລູກຄ້າ	18	(314.919)	(221.957)
ຄ່າເສື່ອມມູນຄ່າການລົງທຶນທາງດ້ານການເງິນ	12	(20.650)	(27.246)
ລາຍຮັບສຸດທິຈາກການດຳເນີນງານ		**988.651**	**1.015.274**
ລາຍຈ່າຍພະນັກງານ	13	(300.612)	(331.775)
ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ	22, 23	(71.619)	(71.991)
ຄ່າຫລຸ້ຍຫ້ຽນສິດນຳໃຊ້ຊັບສິນ	24	(6.650)	-
ລາຍຈ່າຍອື່ນໆຈາກການດຳເນີນງານ	14	(179.284)	(152.252)
ລາຍຈ່າຍທັງໝົດຈາກການດຳເນີນງານ		**(558.165)**	**(556.018)**
ກຳໄລກ່ອນອາກອນ		**430.486**	**459.256**
ລາຍຈ່າຍອາກອນກຳໄລ	29.1	(106.644)	(124.020)
ລາຍຈ່າຍອາກອນກຳໄລລໍຖ້າຊຳລະສະສາງ	29.1	5.640	18.420
ກຳໄລສຸດທິພາຍໃນປີ		**329.482**	**353.656**
ກຳໄລຕໍ່ຮຸ້ນ (ກີບ)	**37**	**1.586**	**1.703**

ກະກຽມໂດຍ:

ທ່ານ ນ. ພຸເສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ວຽງສຸກ ຈຸນທະວົງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ

30 ເມສາ 2020

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານນອກການທຸລະກິດສະເພາະກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	2019 ລ້ານກີບ	2018 ລ້ານກີບ
ກຳໄລສຸດທິພາຍໃນປີ		**329.482**	**353.656**
ລາຍຮັບອື່ນໆນອກການທຸລະກິດ			
ການປ່ຽນແປງໃນເງິນແຮ່ຖ່າເສື່ອມຂອງຫຼັກຊັບທາງການເງິນປະເພດ ມີໄວ້ເພື່ອຂາຍ		-	(2.875)
ການລົດແທກຄືນຂາດທຶນຈາກແຜນກຳນົດຜົນປະໂຫຍດຫຼັງອອກ ການ	30	(15.897)	(1.411)
ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ		3.815	1.028
ລາຍຮັບນອກການທຸລະກິດພາຍໃນປີ ຫຼັງຫັກອາກອນ		**(12.082)**	**(3.258)**
ຍອດລວມລາຍຮັບນອກການທຸລະກິດພາຍໃນປີ ຫຼັງຫັກອາກອນ		**317.400**	**350.398**

ກະກຽມໂດຍ:

ທ່ານ ນ. ພຸເສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກົງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທ່ານ ວິໄຈສຸກ ຈຸນທະວົງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ

30 ເມສາ 2020

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນສະເພາະກິດຈະການ

ນະວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*31/12/2019 ລ້ານກີບ*	*31/12/2018 ລ້ານກີບ*
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	15	9.202.045	5.334.240
ເງິນຝາກຢູ່ທະນາຄານອື່ນ	16	4.493.536	3.733.419
ເງິນກູ້ໃຫ້ແກ່ລູກຄ້າ	17	27.490.492	24.366.860
ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	19	129.623	151.483
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	20	3.453.937	3.652.772
ການລົງທຶນໃນບັນດາບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ	21	516.047	514.007
ຊັບສິນບັດຄົງທີ່ ແລະ ອຸປະກອນ	22	455.721	449.238
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	23	245.042	246.596
ສິດນຳໃຊ້ຊັບສິນ	24	54.814	-
ຊັບສິນອາກອນລໍຖ້າຊຳລະສະສາງ	29.5	34.521	29.099
ຊັບສິນອື່ນໆ	25	471.430	464.931
ລວມຊັບສິນ		**46.547.208**	**38.942.645**
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ	26	4.063.635	3.413.129
ໜີ້ຕ້ອງສົ່ງລູກຄ້າ	27	36.419.928	29.915.142
ກູ້ຢືມຈາກທະນາຄານອື່ນ	28	3.705.378	3.349.266
ໜີ້ສິນອາກອນພາຍໃນປີ	29.2	41.309	35.793
ໜີ້ສິນອາກອນລໍຖ້າຊຳລະສະສາງ	29.5	-	5.272
ໜີ້ສິນອື່ນໆ	30	224.826	239.533
ລວມໜີ້ສິນ		**44.455.076**	**36.958.135**
ທຶນ			
ທຶນຈົດທະບຽນ	31	1.038.617	1.038.617
ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ	32	604.423	439.550
ກຳໄລສະສົມ		449.092	506.343
ລວມທຶນ		**2.092.132**	**1.984.510**
ລວມໜີ້ສິນ ແລະ ທຶນ		**46.547.208**	**38.942.645**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ວຽງສຸກ ຈຸນທະວົງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ

30 ເມສາ 2020

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສະເພາະກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ທຶນຈົດທະບຽນ ລ້ານກີບ	*ຄ້າງສະສົມ ຕາມລະບຽບການ ລ້ານກີບ*	*ກຳໄລສະສົມ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອນະວັນທີ 31 ທັນວາ 2018	**1.038.617**	**439.550**	**506.343**	**1.984.510**
ຜົນກະທົບຈາກການຈັດຕັ້ງປະຕິບັດ IFRS 16 ນະວັນທີ 01 ມັງກອນ 2019	-	-	(3.923)	(3.923)
ເງິນປັນຜົນ ທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ສຳລັບປີ 2018	-	-	(205.855)	(205.855)
ແບ່ງເຂົ້າຄ້າງສະສົມພາຍໃນປີ 2018	-	164.873	(164.873)	-
ກຳໄລສຸດທິສຳລັບປີ 2019	-	-	329.482	329.482
ລາຍຮັບນອກການທຸລະກິດອື່ນພາຍໃນປີ 2019	-	-	(12.082)	(12.082)
ໃນນີ້ລວມມີ:				
- *ການຕີມູນຄ່າຂາດທຶນຄືນຕາມແຜນກຳນົດຜົນປະໂຫຍດຫຼັງອອກການ*	-	-	*(15.897)*	*(15.897)*
- *ອາກອນກຳໄລທີ່ຕິດພັນກັບອົງປະກອບຂອງລາຍຮັບນອກການທຸລະກິດອື່ນ*	-	-	*3.815*	*3.815*
ຍອດເຫຼືອນະວັນທີ 31 ທັນວາ 2019	**1.038.617**	**604.423**	**449.092**	**2.092.132**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສະເພາະກິດຈະການ (ຕໍ່)

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ທຶນຈົດທະບຽນ ລ້ານກີບ	*ຄັງສະສົມ ຕາມລະບຽບການ ລ້ານກີບ*	*ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ ລ້ານກີບ*	*ກຳໄລສະສົມ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອມະວັນທີ 31 ທັນວາ 2017	**1.038.617**	**380.382**	**2.186**	**310.827**	**1.732.012**
ແບ່ງສ່ວນສຳລັບເງິນປັນຜົນທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ສຳລັບປີ 2017	-	-	-	(97.900)	(97.900)
ແບ່ງເຂົ້າຄັງສະສົມພາຍໃນປີ 2017	-	59.168	-	(59.168)	-
ກຳໄລສຸດທິສຳລັບປີ 2018	-	-	-	353.656	353.656
ລາຍຮັບນອກການທຸລະກິດອື່ນພາຍໃນປີ 2018	-	-	(2.186)	(1.072)	(3.258)
ໃນນີ້ລວມມີ:					
- *ການຕີມູນຄ່າຂາດທຶນຄືນຕາມແຜນກຳນົດຜົນປະໂຫຍດຫຼັງອອກການ*	-	-	-	*(1.411)*	*(1.411)*
- *ສ່ວນປ່ຽນແປງໃນມູນຄ່າຍຸຕິທຳຂອງຊັບສິນທາງການເງິນຫຼັກຊັບມີໄວ້ເພື່ອຂາຍ*	-	-	*(2.875)*	-	*(2.875)*
- *ອາກອນກຳໄລທີ່ຕິດພັນກັບອົງປະກອບຂອງລາຍຮັບນອກການທຸລະກິດອື່ນ*	-	-	*689*	*339*	*1.028*
ຍອດເຫຼືອມະວັນທີ 31 ທັນວາ 2018	**1.038.617**	**439.550**	**-**	**506.343**	**1.984.510**

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ວຽງສຸກ ຈຸນທະວົງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ

30 ເມສາ 2020

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*2019 ລ້ານກີບ*	*2018 ລ້ານກີບ*
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**430.486**	**459.256**
ການດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ	22, 23, 24	78.269	71.991
ການດັດແກ້ຍອດຍົກມາພາຍໃຕ້ IFRS 16		(3.923)	-
ລາຍຈ່າຍຄ່າເສື່ອມມູນຄ່າ	12, 18	335.569	249.203
ລາຍຈ່າຍສຳລັບສະສາງຊັບສົມບັດພວມກໍ່ສ້າງ	14	13.351	-
ລາຍຈ່າຍສຳລັບພະນັກງານຫຼັງອອກການ	13	7.325	24.134
ລາຍຮັບດອກເບ້ຍ	7	(2.152.457)	(1.931.564)
ລາຍຈ່າຍດອກເບ້ຍ	7	1.193.701	1.000.577
ລາຍຮັບເງິນປັນຜົນ	11	(10.133)	(32.638)
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງ ດ້ານຊັບສິນ ແລະ ໜີ້ສິນ		**(107.812)**	**(159.041)**
ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ			
ປ່ຽນແປງສຸດທິໃນຍອດເຫຼືອຢູ່ທະນາຄານອື່ນ		(120.674)	(1.498.113)
ປ່ຽນແປງສຸດທິໃນເງິນກູ້ໃຫ້ແກ່ລູກຄ້າ		(2.809.910)	(1.982.178)
ລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		200.045	280.969
ລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ		-	762
ປ່ຽນແປງສຸດທິໃນຊັບສິນອື່ນໆ		(64.752)	(26.885)
ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ			
ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ		1.039.276	1.299.350
ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງລູກຄ້າ		6.587.377	1.448.852
ປ່ຽນແປງສຸດທິໃນໜີ້ສິນອື່ນໆ		(26.333)	33.851
ດອກເບ້ຍທີ່ໄດ້ຮັບ		1.515.567	1.681.209
ດອກເບ້ຍທີ່ໄດ້ຈ່າຍ		(1.308.950)	(904.321)
ອາກອນທີ່ໄດ້ຈ່າຍພາຍໃນປີ	29.3	(108.909)	(102.247)
ກະແສເງິນສົດສຸດທິຈາກການດຳເນີນງານ		**4.794.925**	**72.208**
ການເຄື່ອນໄຫວດ້ານການລົງທຶນ			
ການຈັດຊື້ ແລະ ການກໍ່ສ້າງຊັບສົມບັດຖາວອນ		(100.868)	(120.335)
ຮັບຈາກການສະສາງ/ຂາຍຊັບສົມບັດຖາວອນ		24.320	-
ການລົງທຶນຮ່ວມທີ່ໄດ້ຈ່າຍ		(2.040)	-
ຮັບເງິນປັນຜົນ		10.133	32.638
ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ໃນການເຄື່ອນໄຫວການລົງທຶນ		**(68.455)**	**(87.697)**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	2019 ລ້ານກີບ	2018 ລ້ານກີບ
ກິດຈະກຳການດຳເນີນງານການເຄື່ອນໄຫວທາງການເງິນ			
ຈ່າຍເງິນປັນຜົນ		(205.855)	(97.900)
ກະແສເງິນສົດສຸດທິນຳໃຊ້ໃນການເຄື່ອນໄຫວທາງການເງິນ		**(205.855)**	**(97.900)**
ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ		**4.520.615**	**(113.389)**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ		**7.201.769**	**7.315.158**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	**34**	**11.722.384**	**7.201.769**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັ່ງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທ່ານ ວຽງສຸກ ຈັນທະວົງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ.

30 ເມສາ 2020

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ໃນບົດລາຍງານສະບັບນີ້ ເອີ້ນວ່າ "ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010, ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມ ໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ຂອງຮຸ້ນທັງໝົດ (ທຽບເທົ່າກັບ 13.657.759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED ("COFIBRED"). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED, ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150.235.349.000 ກີບ ໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017, ຫ້ອງການຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນໂດຍການສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈຳນວນ 68.047.300 ຮຸ້ນ ແລະ ສາທາລະນະຊົນ ຈຳນວນ 3.098.400 ຮຸ້ນ ໃນຕະຫຼາດຫຼັກຊັບລາວ ເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນ ຈຳນວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0889 /ERO, ລົງວັນທີ 15 ກັນຍາ 2017 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານປັບໂຄງສ້າງຜູ້ຖືຮຸ້ນ ໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜຸນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ໃນວັນທີ 29 ພະຈິກ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ (ຕໍ່)

ອີງຕາມການແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2019 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	124.634.021	60%
ຄຸ່ຮ່ວມຮຸ້ນທາງຍຸດທະສາດ	20.772.359	10%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດອື່ນໆ (*)	62.316.920	30%
	207.723.300	**100%**

(*) ແຕ່ລະບຸກຄົນທົ່ວໄປ ຫຼື ອົງກອນແມ່ນອະນຸຍາດໃຫ້ຖືຮຸ້ນໄດ້ສູງສຸດ 2% ຂອງຈຳນວນຮຸ້ນທັງໝົດ.

ກິດຈະກຳຫຼັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ແລະ ຍາວ ໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າ ລະຫວ່າງປະເທດ, ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນຂອງທະນາຄານ ນະວັນທີ 31 ທັນວາ 2019 ແມ່ນ 1.038.617 ລ້ານກີບ (ນະວັນທີ 31 ທັນວາ 2018: 1.038.617 ລ້ານກີບ).

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ທັນວາ 2019, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ຫ້າ (5) ບໍລິສັດຮ່ວມທຶນ, ຊາວ (20) ສາຂາຫຼັກ, ເກົ້າສິບສາມ (93) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2019, ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

ຊື່	*ສ້າງຕັ້ງພາຍໃຕ້ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	1079/ຫຈທ ລົງວັນທີ 10 ກໍລະກົດ 2019 ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ຫຼັກຊັບ	70%

ບໍລິສັດຮ່ວມທຶນ

ນະວັນທີ 31 ທັນວາ 2019, ທະນາຄານມີ ຫ້າ (05) ບໍລິສັດຮ່ວມທຶນຄື:

ຊື່	*ສ້າງຕັ້ງພາຍໃຕ້ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ທະນາຄານຮ່ວມທຸລະກິດ ລາວ -ຫວຽດ	ເລກທີ 732/ ERO ລົງວັນທີ 29 ສິງຫາ 2016 ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການທະນາຄານ & ການເງິນ	25%
ທະນາຄານລາວ - ຝຣັ່ງ	ເລກທີ 124-10/ກຜລ4 ລົງວັນທີ 07 ກັນຍາ 2010 ໂດຍກະຊວງແຜນການ ແລະ ການລົງທຶນ	ການທະນາຄານ & ການເງິນ	30%
ບໍລິສັດປະກັນໄພ ລາວ - ຫວຽດ	ເລກທີ 0600 ລົງວັນທີ 16 ສິງຫາ 2013 ໂດຍ ກະຊວງ ອຸດສະຫະກຳ ແລະ ການຄ້າ.	ປະກັນໄພ	35%
ທະນາຄານ ລາວ - ຈີນ ຈຳກັດ	ເລກທີ 041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ພະແນກຂຶ້ນທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ.	ການທະນາຄານ & ການເງິນ	49%
ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ	ເລກທີ 0349/ຫຈທ ລົງວັນທີ12 ມີນາ 2019ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ.	ການຄຸ້ມຄອງ ທຸລະກຳການຊຳ ລະສະສາງ (ເອ ເລັກໂທຣນິກ)	20%

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ	ປະທານ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ຄຳສຸກ ສຸນດາລາ	ຮອງປະທານ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ພູຂົງ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ມາກ ໂຣເບີດ	ສະມາຊິກ	ແຕ່ງຕັ້ງຄືນວັນທີ 27 ເມສາ 2018
ທ່ານ ພຸດທະຂັນ ຂັນຕີ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018
ທ່ານ ຣສ. ປອ ພູເພັດ ພິລະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018
ທ່ານ ວຽງສຸກ ຈຸນທະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ແລະ ນະວັນທີທີ່ອອກເອກະສານລາຍງານນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 15 ມັງກອນ 2016
ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 6 ມີຖຸນາ 2008 ລາອອກວັນທີ 01 ເມສາ 2019
ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ຄຳຊ່ຽນ ມິ່ງບຸບຜາ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 23 ພະຈິກ 2015 ລາອອກວັນທີ 26 ເມສາ 2019
ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 23 ພະຈິກ 2015
ທ່ານ ບົວອັນ ສີມະລີວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພະຈິກ 2016
ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 18 ກຸມພາ 2019

ພະນັກງານ

ພະນັກງານທັງໝົດຂອງທະນາຄານ ນະວັນທີ 31 ທັນວາ 2019 ແມ່ນ 2.060 ຄົນ (ນະວັນທີ 31 ທັນວາ 2018: 1.900 ຄົນ).

2. ພື້ນຖານໃນການກຽມ

ເອກະສານລາຍງານການເງິນສະເພາະກິດຈະການ (ຫຼືເອີ້ນອີກຢ່າງໜຶ່ງວ່າ "ເອກະສານລາຍງານການເງິນສະເພາະກິດຈະການ ສຳລັບຈຸດປະສົງພິເສດ") ແມ່ນຖືກກະກຽມສຳລັບທະນາຄານເພື່ອນຳໃຊ້ໃນການລາຍງານຕາມຂໍ້ກຳນົດຂອງທະນາຄານ ແຫ່ງ ສປປ ລາວ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເທົ່ານັ້ນ. ເອກະສານລາຍງານການເງິນສະເພາະກິດຈະການ ສະບັບນີ້ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 5. ນະໂຍບາຍການບັນຊີດັ່ງກ່າວໃນເບື້ອງຕົ້ນແມ່ນອີງຕາມມາດຕະຖານດ້ານການລາຍງານການເງິນສາກົນ ("IFRS") ທີ່ອອກໂດຍຄະນະກຳມະການກຳນົດມາດຕະຖານການບັນຊີສາກົນ. ເຖິງຢ່າງໃດກໍຕາມ, ການກະກຽມເອກະສານລາຍງານການເງິນ ດັ່ງກ່າວ ບໍ່ແມ່ນເອກະສານລາຍງານການເງິນທີ່ຄົບຖ້ວນຕາມວັດຖຸປະສົງໂດຍທົ່ວໄປທີ່ໄດ້ຖືກກະກຽມໂດຍສອດຄ່ອງກັບ ມາດຕະຖານ IFRS ເນື່ອງຈາກວ່າທະນາຄານໄດ້ປະຕິບັດຕາມຄຳແນະນຳທີ່ໄດ້ລະບຸໄວ້ໃນໜັງສືແຈ້ງການເລກທີ 1659/ ທຫລ ລົງວັນທີ 14 ທັນວາ 2018 ຂອງທະນາຄານແຫ່ງ ສປປ ລາວ ແລະ ໜັງສືແຈ້ງການເລກທີ 19/ສຄຄຊ ລົງວັນທີ 23 ພະຈິກ 2018 ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເຊິ່ງມີເນື້ອໃນກ່ຽວກັບນະໂຍບາຍການບັນຊີສຳລັບ ການ ຮັບຮູ້ ແລະ ການວັດແທກມູນຄ່າເຄື່ອງມືທາງການເງິນ ແມ່ນໃຫ້ນຳໃຊ້ ມາດຕະຖານການບັນຊີສາກົນ IAS 39 - ເຄື່ອງມື ທາງການເງິນ ແທນ ມາດຕະຖານລາຍງານການເງິນສາກົນ IFRS 9 - ເຄື່ອງມືທາງການເງິນ. ດັ່ງນັ້ນ, ເອກະສານລາຍງານ ການເງິນສະເພາະກິດຈະການແມ່ນບໍ່ໄດ້ຮັບການກະກຽມໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານ IFRS.

ເອກະສານລາຍງານການເງິນສະເພາະກິດຈະການ ແມ່ນໄດ້ຮັບການກະກຽມໂດຍອີງຕາມພື້ນຖານຕົ້ນທຶນເດີມ, ເວັ້ນແຕ່ໄດ້ ຮັບການເປີດເຜີຍຢູ່ໃນບົດອະທິບາຍເລກທີໃດໜຶ່ງຂອງເອກະສານລາຍງານການເງິນສະບັບນີ້.

ທະນາຄານຮັກສາການບັນທຶກບັນຊີເປັນເງິນກີບ ("ກີບ") ແລະ ໄດ້ສ້າງເອກະສານລາຍງານການເງິນສະເພາະກິດຈະການ ສຳລັບຈຸດປະສົງພິເສດເປັນຫົວໜ່ວຍລ້ານກີບ. ທະນາຄານນຳໃຊ້ເຄື່ອງໝາຍຈຸດ (,) ທີ່ເປັນເລກທິດສະນິຍົມ ແລະ ນຳໃຊ້ ເຄື່ອງໝາຍຈ້ຳ (.) ເພື່ອແຍກຫົວໜ່ວຍພັນ.

ເອກະສານລາຍງານການເງິນສະເພາະກິດຈະການ ໄດ້ຖືກກະກຽມເພື່ອຈຸດປະສົງໃນການນຳສະເໜີຖານະການເງິນສະເພາະ ກິດຈະການຂອງທະນາຄານ, ລວມທັງ ຜົນການດຳເນີນງານ ແລະ ກະແສເງິນສົດສະເພາະກິດຈະການ ຂອງທະນາຄານ, ເວົ້າ ສະເພາະແມ່ນເພື່ອ:

- ເອກະສານລາຍງານການເງິນສະເພາະກິດຈະການສະບັບນີ້ແມ່ນລວມເອົາແຕ່ສະເພາະການດຳເນີນງານຂອງ ສຳນັກງານ ໃຫຍ່ ແລະ ສາຂາຂອງທະນາຄານເທົ່ານັ້ນ;
- ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນໄດ້ຖືກບັນທຶກບັນຊີ ອີງຕາມວິທີຕົ້ນທຶນ.

3. ຈຸດປະສົງ ແລະ ການນຳສະເໜີເອກະສານລາຍງານການເງິນສະເພາະກິດຈະການ

3.1 ຈຸດປະສົງສຳລັບການກະກຽມເອກະສານລາຍງານການເງິນສະເພາະກິດຈະການ

ທະນາຄານໄດ້ກະກຽມ ແລະ ອອກເອກະສານລາຍງານທາງການເງິນສະເພາະກິດຈະການ ເພື່ອນຳໃຊ້ໃນການລາຍງານຕາມຂໍ້ກຳນົດຕາມລະບຽບການ. ນອກຈາກນີ້ທະນາຄານແມ່ນກຳລັງກະກຽມເອກະສານລາຍງານການເງິນສັງລວມກິດຈະການຂອງທະນາຄານ ແລະ ບໍລິສັດໃນເຄືອ ສຳລັບປີທີ່ສິ້ນສຸດນະ ວັນທີ 31 ທັນວາ 2019. ຜູ້ນຳໃຊ້ເອກະສານລາຍງານການເງິນສະເພາະກິດຈະການຄວນອ່ານຄຽງຄູ່ກັນກັບເອກະສານລາຍງານການເງິນສັງລວມກິດຈະການຂອງທະນາຄານທີ່ກ່າວມານັ້ນ ເພື່ອໃຫ້ໄດ້ຮັບຂໍ້ມູນຄົບຖ້ວນກ່ຽວກັບຖານະການເງິນສັງລວມກິດຈະການ, ຜົນການດຳເນີນງານສັງລວມກິດຈະການ ແລະ ກະແສເງິນສັງລວມກິດຈະການຂອງ ທະນາຄານ ແລະ ບໍລິສັດໃນເຄືອ.

3.2 ການນຳສະເໜີເອກະສານລາຍງານການເງິນສະເພາະກິດຈະການ

ທະນາຄານໄດ້ນຳສະເໜີໃບລາຍງານຖານະການເງິນສະເພາະກິດຈະການ ໂດຍລຽງລຳດັບຕາມສະພາບຄ່ອງ. ຊັບສິນ ແລະ ໜີ້ສິນທາງການເງິນ ແມ່ນໄດ້ຖືກລາຍງານເປັນມູນຄ່າລວມໃນໃບລາຍງານຖານະການເງິນສະເພາະກິດຈະການ. ຊັບສິນ ແລະ ໜີ້ສິນທາງການເງິນ ຈະຖືກນຳມາຫັກລ້າງກັນ ແລະ ລາຍງານເປັນມູນຄ່າສຸດທິ ໃນເວລາທີ່ ບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງຫາມີຄວາມຕ້ອງການຢາກຫັກລ້າງ ໃນທຸກໆກໍລະນີຕໍ່ໄປນີ້: ການດຳເນີນທຸລະກິດປົກກະຕິ, ໃນກໍລະນີທີ່ທຸລະກິດມີການກະທຳຄວາມຜິດ ແລະ ໃນກໍລະນີຂອງການລົ້ມລະລາຍ ຫຼື ການລົ້ມລະລາຍຂອງທະນາຄານ ແລະ/ຫຼື ຄູ່ຄ້າຂອງຕົນ.

4. ການປ່ຽນແປງໃນນະໂຍບາຍການບັນຊີ ແລະ ການເປີດເຜີຍຂໍ້ມູນ

4.1 ມາດຕະຖານໃໝ່ ແລະ ການປັບປຸງ ແລະ ການຕີຄວາມຫມາຍໃໝ່

ນະໂຍບາຍການບັນຊີທີ່ທະນາຄານນຳໃຊ້ເພື່ອກະກຽມເອກະສານລາຍງານການເງິນເຫຼົ່ານີ້ແມ່ນມີຄວາມສອດຄ່ອງກັບເອກະສານລາຍງານການເງິນສະເພາະກິດຈະການທີ່ກະກຽມສຳລັບການລາຍງານຂອງທະນາຄານ ນະປີທີ່ສິ້ນສຸດວັນທີ 31 ທັນວາ 2018, ຍົກເວັ້ນ ສຳລັບການນຳໃຊ້ມາດຕະຖານໃໝ່ທີ່ມີຜົນນະວັນທີ 1 ມັງກອນ 2019 ດັ່ງທີ່ໄດ້ອະທິບາຍຂ້າງລຸ່ມ. ທະນາຄານຍັງບໍ່ໄດ້ນຳໃຊ້ມາດຕະຖານ, ການຕີຄວາມໝາຍ ຫຼື ການປັບປຸງອື່ນໆລ່ວງໜ້າ ທີ່ໄດ້ເຜີຍແຜ່ອອກມາແລ້ວ ແຕ່ຍັງບໍ່ທັນມີຜົນບັງຄັບໃຊ້.

4.2 IFRS 16 ການເຊົ່າ

ມາດຕະຖານ IFRS 16 ໄດ້ຖືກນຳມາແທນ ສັນຍາເຊົ່າມາດຕະຖານ IAS 17 ໂດຍ IFRIC 4 ໄດ້ກຳນົດວ່າ ສັນຍາແມ່ນປະກອບດ້ວຍສັນຍາເຊົ່າ, SIC-15 ສັນຍາເຊົ່າເພື່ອການດຳເນີນງານ-ແຮງຈູງໃຈ ແລະ SIC-27 ການປະເມີນເນື້ອຫາຂອງທຸລະກຳ ທີ່ນອນຢູ່ໃນແບບສັນຍາເຊົ່າທີ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່. ມາດຕະຖານໄດ້ກຳນົດ ຫຼັກການສຳລັບການຮັບຮູ້, ການຕີມູນຄ່າ, ການນຳສະເໜີ ແລະ ການເປີດເຜີຍສັນຍາເຊົ່າ ແລະ ຍັງຮຽກຮ້ອງໃຫ້ຜູ້ເຊົ່າຄຳນຶງເຖິງສັນຍາເຊົ່າສ່ວນໃຫຍ່ພາຍໃຕ້ຮູບແບບດ່ຽວໃນໃບລາຍງານຖານະການເງິນ.

4. ການປ່ຽນແປງໃນນະໂຍບາຍການບັນຊີແລະການເປີດເຜີຍຂໍ້ມູນ (ຕໍ່)

4.2 *IFRS 16 ການເຊົ່າ* (ຕໍ່)

ທະນາຄານໄດ້ຮັບຮອງເອົາ IFRS 16 ໂດຍ ນຳໃຊ້ວິທີການແກ້ໄຂຍ້ອນຫຼັງໃນວັນທີ່ນຳໃຊ້ເທື່ອທຳອິດ ຄືວັນທີ 01 ມັງກອນ 2019. ພາຍໃຕ້ວິທີນີ້, ມາດຕະຖານແມ່ນຈະຖືກນຳໄປໃຊ້ຍ້ອນຫຼັງກັບຜົນສະສົມຂອງການເລີ່ມນຳໃຊ້ມາດຕະ ຖານທີ່ຖືກຮັບຮູ້ ນະວັນທີ່ມາໃຊ້ເທື່ອທຳອິດ. ທະນາຄານເລືອກທີ່ຈະໃຊ້ການປ່ຽນແປງທີ່ສາມາດນຳໄປໃຊ້ໄດ້ຈິງ ໂດຍອະນຸຍາດນຳໃຊ້ ມາດຕະຖານນີ້ກັບສັນຍາທີ່ລະບຸໄວ້ກ່ອນໜ້ານີ້ ວ່າເປັນສັນຍາເຊົ່າທີ່ໃຊ້ນະໂຍການບັນຊີທີ່ຜ່ານມາ ນະວັນທີ່ມີການນຳໃຊ້ ເທື່ອທຳອິດ. ນອກນັ້ນ ທະນາຄານຍັງເລືອກທີ່ຈະນຳໃຊ້ ການຍົກເວັ້ນສຳລັບບັນດາສັນຍາເຊົ່າທີ່ມີໄລຍະການເຊົ່າ 12 ເດືອນ ຫຼື ໄລຍະເຊົ່າທີ່ສັ້ນກວ່າ ແລະ ບໍ່ມີຈຳກັດທາງເລືອກໃນການຊື້ ('ການເຊົ່າໄລຍະສັ້ນ') ແລະ ສັນຍາເຊົ່າສຳລັບຊັບສິນມີມູນຄ່າ ທີ່ຕ່ຳ ('ຊັບສິນທີ່ມູນຄ່າຕ່ຳ').

ຜົນຈາກການນຳໃຊ້ IFRS 16 ນະວັນທີ 01 ມັງກອນ 2019 (ເພີ່ມຂຶ້ນ/(ຫຼຸດລົງ)) ດັ່ງຕໍ່ໄປນີ້:

	ລ້ານກີບ
ຊັບສິນ	
ສິດນຳໃຊ້ຊັບສິນ	40.903
ການຈ່າຍລ່ວງໜ້າ	(37.948)
ຊັບສິນອາກອນລໍຖ້າຊຳລະສະສາງ	1.239
ລວມຊັບສິນ	**4.194**
ໜີ້ສິນ	
ໜີ້ສິນຕາມສັນຍາເຊົ່າ	8.117
ລວມໜີ້ສິນ	**8.117**
ລວມການດັດແກ້ໃນບັນຊີທຶນ:	
ກຳໄລສະສົມ	**(3.923)**

4. ການປ່ຽນແປງໃນນະໂຍບາຍການບັນຊີແລະການເປີດເຜີຍຂໍ້ມູນ (ຕໍ່)

4.2 *IFRS 16 ການເຊົ່າ* (ຕໍ່)

ທະນາຄານມີສັນຍາເຊົ່າສຳລັບຫຼາຍລາຍການຂອງເຄື່ອງຕົກອາຄານ ແລະ ທີ່ດິນ. ກ່ອນທີ່ຈະນຳໃຊ້ ມາດຕະຖານ IFRS 16, ທະນາຄານໄດ້ມີການຈັດປະເພດຂອງສັນຍາເຊົ່າແຕ່ລະອັນ (ໃນຖານະຜູ້ເຊົ່າ) ໃນມື້ຮັບຮູ້ວ່າເປັນການເຊົ່າທາງການເງິນ ຫຼື ການເຊົ່າເພື່ອການດຳເນີນງານ. ສຳລັບນະໂຍບາຍການບັນຊີກ່ອນໜ້າວັນທີ 1 ມັງກອນ 2019 ແມ່ນຖືກອະທິບາຍໃນບົດ ອະທິບາຍເລກທີ 5.16 ການເຊົ່າ.

ເມື່ອນຳໃຊ້ມາດຕະຖານ IFRS 16 ແລ້ວ, ທະນາຄານຈະໃຊ້ວິທີການຮັບຮູ້ ແລະ ການວັດແທກແບບດ່ຽວສຳລັບສັນຍາເຊົ່າ ທັງໝົດ ຍົກເວັ້ນສັນຍາເຊົ່າທີ່ມີໄລຍະສັ້ນ ແລະ ສັນຍາເຊົ່າຊັບສິນທີ່ມີລາຄາຕ່ຳ. ສຳລັບນະໂຍບາຍການບັນຊີເລີ່ມຈາກວັນທີ 1 ມັງກອນ 2019 ແມ່ນຖືກອະທິບາຍໃນບົດອະທິບາຍເລກທີ 5.15 ການເຊົ່າ. ມາດຕະຖານດັ່ງກ່າວສະໜອງຂໍ້ກຳນົດການ ຫັນປ່ຽນສະເພາະ ແລະ ວິທີທີ່ເໝາະສົມຕົວຈິງ, ເຊິ່ງໄດ້ຖືກນຳໃຊ້ໂດຍທະນາຄານ.

- *ການເຊົ່າທີ່ຖືກຈັດປະເພດເປັນການເຊົ່າເພື່ອການດຳເນີນງານໃນກ່ອນໜ້າ*

ທະນາຄານຮັບຮູ້ ສິດນຳໃຊ້ຊັບສິນ ແລະ ໜີ້ສິນຕາມສັນຍາເຊົ່າສຳລັບສັນຍາເຊົ່າທີ່ໄດ້ຖືກຈັດເຂົ້າເປັນປະເພດສັນຍາເຊົ່າເມື່ອ ບໍ່ດົນມານີ້ ເປັນສັນຍາເຊົ່າທາງການເງິນ ຫຼື ສັນຍາເຊົ່າເພື່ອການດຳເນີນງານ, ຍົກເວັ້ນສັນຍາເຊົ່າໄລຍະສັ້ນ ແລະ ສັນຍາເຊົ່າ ຊັບສິນທີ່ມີມູນຄ່າຕ່ຳ. ສິດນຳໃຊ້ຊັບສິນ ສຳລັບສັນຍາເຊົ່າສ່ວນໃຫຍ່ແມ່ນຖືກຮັບຮູ້ຕາມມູນຄ່າບັນຊີ ຄ້າຍກັບວ່າ ມາດຕະຖານດັ່ງກ່າວແມ່ນມີການນຳໃຊ້ມາໂດຍຕະຫຼອດ, ນອກເໜືອຈາກການໃຊ້ອັດຕາການເພີ່ມຂຶ້ນຂອງເງິນໃຫ້ກູ້ຢືມ ນະ ມື້ເລີ່ມຕົ້ນນຳໃຊ້ເທື່ອທຳອິດ. ໃນບາງສັນຍາເຊົ່າ, ສິດນຳໃຊ້ຊັບສິນແມ່ນຖືກຮັບຮູ້ຕາມມູນຄ່າເທົ່າກັນກັບໜີ້ສິນຕາມສັນຍາ ເຊົ່າ, ຊຶ່ງໄດ້ຖືກດັດແກ້ດ້ວຍລາຍຈ່າຍຈ່າຍລ່ວງໜ້າທີ່ກ່ຽວຂ້ອງ ແລະ ຄ່າເຊົ່າຄ້າງຈ່າຍທີ່ເຄີຍຮັບຮູ້ມາກ່ອນໜ້ານີ້. ໜີ້ສິນຕາມ ສັນຍາເຊົ່າຈະຖືກຮັບຮູ້ຕາມມູນຄ່າປັດຈຸບັນຂອງຈຳນວນເງິນທີ່ຍັງຄ້າງຊຳລະ, ຄິດໄລ່ຫຼຸດຄ່າດ້ວຍ ອັດຕາການເພີ່ມຂຶ້ນຂອງ ເງິນກູ້ຢືມ ນະວັນທີ່ມີການເລີ່ມນຳໃຊ້ເປັນເທື່ອທຳອິດ.

ນອກຈາກນັ້ນ, ທະນາຄານຍັງໄດ້ນຳໄປໃຊ້ໃນການປະຕິບັດງານຕົວຈິງທີ່ມີຢູ່ ຄື:

- ນຳໃຊ້ອັດຕາຄິດໄລ່ຫຼຸດອັດຕາດຽວເພື່ອຄິດໄລ່ໃນລາຍການສັນຍາເຊົ່າທີ່ມີລັກສະນະຄ້າຍຄືກັນຢ່າງສົມເຫດສົມຜົນ;
- ອີງໃສ່ການປະເມີນຜົນ ເບິ່ງວ່າການເຊົ່າມີຜົນບັງຄັບໃຊ້ທັນທີກ່ອນທີ່ນຳໃຊ້ໃນເບື້ອງຕົ້ນ ຫຼື ບໍ່;
- ນຳໃຊ້ຂໍ້ຍົກເວັ້ນການເຊົ່າໄລຍະສັ້ນໃຫ້ແກ່ສັນຍາເຊົ່າທີ່ຄົບກຳນົດພາຍໃນ 12 ເດືອນ ນັບຈາກວັນທີ່ນຳໃຊ້ເປັນຕົ້ນໄປ;
- ຍົກເວັ້ນຄ່າໃຊ້ຈ່າຍທາງກົງໃນເບື້ອງຕົ້ນຈາກການວັດແທກສິດນຳໃຊ້ຊັບສິນ ໃນວັນທີທີ່ນຳໃຊ້ໃນເບື້ອງຕົ້ນ;
- ນຳໃຊ້ການທຳຄວາມເຂົ້າໃຈເພື່ອກຳນົດວ່າ ສັນຍາດັ່ງກ່າວມີທາງເລືອກໃນການຂະຫຍາຍໄລຍະເວລາ ຫຼື ຍົກເລີກສັນຍາ ເຊົ່າ.

4. ການປ່ຽນແປງໃນນະໂຍບາຍການບັນຊີແລະການເປີດເຜີຍຂໍ້ມູນ (ຕໍ່)

4.2 *IFRS 16 ການເຊົ່າ* (ຕໍ່)

ໜີ້ສິນຕາມສັນຍາເຊົ່າ ນະວັນທີ 01 ມັງກອນ 2019 ສາມາດສົມທຽບກັບພາລະຜູກພັນການເຊົ່າເພື່ອການດຳເນີນງານ ນະວັນທີ 31 ທັນວາ 2018 ດັ່ງນີ້:

	ລ້ານກີບ
ພາລະຜູກພັນທາງການເຊົ່າເພື່ອການດຳເນີນງານ ນະວັນທີ 31 ທັນວາ 2018	**12.851**
ອັດຕາດອກເບ້ຍເງິນກູ້ຢືມສະເລ່ຍຖ່ວງນ້ຳໜັກ ນະວັນທີ 01 ມັງກອນ 2019	5,59%
ສ່ວນຫຼຸດພາລະຜູກພັນຕາມການເຊົ່າເພື່ອການດຳເນີນງານ ນະວັນທີ 01 ມັງກອນ 2019	8.130
ຫັກ:	
ພາລະຜູກພັນທີ່ກ່ຽວຂ້ອງກັບການເຊົ່າໄລຍະສັ້ນ	-
ພາລະຜູກພັນທີ່ກ່ຽວຂ້ອງກັບການເຊົ່າຊັບສິນທີ່ມີມູນຄ່າຕ່ຳ	(13)
ໜີ້ສິນຕາມສັນຍາເຊົ່າ ນະວັນທີ 01 ມັງກອນ 2019	**8.117**

4.3 ຜົນປະໂຫຍດຫຼັງອອກການ

ເລີ່ມວັນທີ 01 ມັງກອນ 2019, ນະໂຍບາຍຂອງທະນາຄານຕໍ່ກັບຜົນປະໂຫຍດພາຍຫຼັງອອກການແມ່ນຖືກປ່ຽນເປັນນະໂຍບາຍໃໝ່ຕາມບົດອະທິບາຍເລກທີ 5.17. ການປ່ຽນແປງນີ້ເປັນການປ່ຽນແປງໂດຍສະໝັກໃຈຂອງທະນາຄານໃນນະໂຍບາຍການບັນຊີ. ດັ່ງນັ້ນ, ທະນາຄານໄດ້ນຳໃຊ້ນະໂຍບາຍແບບຄາດການໃນອະນາຄົດສຳລັບການປ່ຽນແປງທາງການບັນຊີນີ້, ເຊິ່ງວ່າ ທະນາຄານໄດ້ນຳໃຊ້ນະໂຍບາຍການບັນຊີໃໝ່ສຳລັບຜົນປະໂຫຍດຫຼັງອອກການທີ່ເກີດຂຶ້ນຫຼັງຈາກວັນທີທີ່ໄດ້ປ່ຽນນະໂຍບາຍ.

4.4 *IFRIC ການຕີຄວາມໝາຍ 23 ຄວາມບໍ່ແນ່ນອນກ່ຽວກັບການປະຕິບັດດ້ານອາກອນລາຍໄດ້*

ການຕີຄວາມໝາຍສະເໜີການເອົາໃຈໃສ່ຕໍ່ກັບການບັນຊີສຳລັບອາກອນລາຍໄດ້ໃນເວລາທີ່ການປະຕິບັດດ້ານອາກອນມີຄວາມບໍ່ແນ່ນອນ ທີ່ມີຜົນກະທົບຕໍ່ການນຳໃຊ້ມາດຕະຖານ IAS 12 ອາກອນລາຍໄດ້. ມາດຕະຖານນີ້ບໍ່ໄດ້ໃຊ້ສຳລັບການເກັບອາກອນ ຫຼື ອື່ນໆນອກເໜືອຈາກຂອບເຂດຂອງ ມາດຕະຖານ IAS 12, ອີກທັງບໍ່ໄດ້ລວມເອົາຂໍ້ຮຽກຮ້ອງໃນການມອບດອກເບ້ຍ ແລະ ຄ່າປັບໄໝທີ່ກ່ຽວຂ້ອງກັບການປະຕິບັດອາກອນທີ່ບໍ່ແນ່ນອນ. ການຕີຄວາມໝາຍສະເໜີໃຫ້ເອົາໃຈໃສ່ສະເພາະບັນຫາດັ່ງຕໍ່ໄປນີ້:

- ການວ່າວິສາຫະກິດພິຈາລະນາເຖິງການປະຕິບັດດ້ານອາກອນທີ່ບໍ່ແນ່ນອນເປັນກໍລະນີສະເພາະ;
- ຂໍ້ສົມມຸດຖານທີ່ວິສາຫະກິດກິດສ້າງຂຶ້ນ ກ່ຽວກັບການກວດສອບການປະຕິບັດອາກອນ ໂດຍເຈົ້າໜ້າທີ່ສ່ວຍສາອາກອນ;
- ວິທີການທີ່ວິສາຫະກິດກຳນົດກຳໄລທີ່ຖືກເສຍອາກອນ (ຂາດທຶນທາງອາກອນ), ພື້ນຖານການຄິດໄລ່ອາກອນ, ການຂາດທຶນທາງອາກອນທີ່ບໍ່ໄດ້ນຳໃຊ້, ອາກອນຫັກບໍ່ໄດ້ ແລະ ອັດຕາອາກອນ;
- ວິທີການທີ່ວິສາຫະກິດພິຈາລະນາການປ່ຽນແປງໃນຄວາມເປັນຈິງ ແລະ ສະຖານະການຈິງ.

4. ການປ່ຽນແປງໃນນະໂຍບາຍການບັນຊີແລະການເປີດເຜີຍຂໍ້ມູນ (ຕໍ່)

ວິສາຫະກິດຕ້ອງກຳນົດວ່າຄວນພິຈາລະນາການປະຕິບັດດ້ານອາກອນທີ່ບໍ່ແນ່ນອນແຕ່ລະກໍລະນີເປັນສະເພາະ ຫຼື ລວມເຂົ້າກັນກັບ ໜຶ່ງ ຫຼື ຫຼາຍວິທີການປະຕິບັດອາກອນທີ່ບໍ່ແນ່ນອນ. ວິທີການທີ່ດີກວ່າໃນການຄາດຄະເນການແກ້ໄຂຄວາມບໍ່ແນ່ນອນຄວນໄດ້ຮັບການປະຕິບັດ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

5.1 ການແລກປ່ຽນເງິນຕ່າງປະເທດ

ການເຮັດທຸລະກຳທີ່ເປັນເງິນຕາຕ່າງປະເທດແມ່ນ ຖືກບັນທຶກ ແລະ ແລກປ່ຽນເປັນສະກຸນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນນະວັນທີທີ່ເຮັດທຸລະກຳ. ຊັບສິນ ແລະ ຫນີ້ສິນທີ່ເປັນສະກຸນເງິນຕ່າງປະເທດ ແມ່ນຈະໄດ້ ຖືກແລກປ່ຽນຄືນເປັນເງິນກີບ ໂດຍໃຊ້ອັດຕາແລກປ່ຽນນະວັນທີສ້າງບົດລາຍງານ (ເບິ່ງລາຍລະອຽດອັດຕາແລກປ່ຽນຂອງສະກຸນເງິນຕາຕ່າງປະເທດ ທີ່ໃຊ້ໃນການແລກປ່ຽນເປັນເງິນກີບ ນະວັນທີ 31 ທັນວາ 2019 ແລະ 31 ທັນວາ 2018 ໃນບົດອະທິບາຍເລກທີ 42). ສ່ວນຜິດຕ່ຽງທີ່ເກີດຂຶ້ນຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນ ໃນວັນທີໃບລາຍງານຖານະການເງິນແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ.

5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ

5.2.1 ວັນທີຂອງການຮັບຮູ້

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແລະ ໜີ້ຕ້ອງສົ່ງລູກຄ້າ, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້ - ຂາຍ ເຊັ່ນ ມື້ທີ່ທະນາຄານກາຍເປັນພາກສ່ວນໜຶ່ງໃນພັນທະສັນຍາຂອງເຄື່ອງມືທາງການເງິນ. ນີ້ ລວມທັງ "ວິທີການຄ້າປົກກະຕິ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ຮຽກຮ້ອງໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໂດຍກົດໝາຍ ຫຼື ລະບຽບການເງິນໃນສະຖານທີ່ຊື້ຂາຍ. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແມ່ນ ຖືກຮັບຮູ້ໃນເມື່ອເງິນໄດ້ໂອນເຂົ້າບັນຊີ ຂອງລູກຄ້າຮຽບຮ້ອຍແລ້ວ. ທະນາຄານຮັບຮູ້ໜີ້ຕ້ອງສົ່ງລູກຄ້າເມື່ອທະນາຄານໄດ້ຮັບເງິນຈາກລູກຄ້າເປັນທີ່ຮຽບຮ້ອຍແລ້ວ.

5.2.2 ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບລັກສະນະຂອງເຄື່ອງມືທາງການເງິນ ແລະ ຈຸດປະສົງຂອງຄະນະບໍລິຫານຕໍ່ເຄື່ອງມືທາງການເງິນທີ່ຕ້ອງການ. ເຄື່ອງມືທາງການເງິນທັງໝົດແມ່ນຖືກຕີມູນຄ່າໃນເບື້ອງຕົ້ນ ຕາມມູນຄ່າຍຸຕິທຳບວກກັບລາຍຈ່າຍທີ່ເກີດຈາກການຊື້, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ມູນຄ່າຍຸຕິທຳຖືກບັນທຶກໂດຍຜ່ານກຳໄລ ແລະ ຂາດທຶນ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.2 *ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

5.2.3 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ອັດຕາດອກເບ້ຍທີ່ແທ້ຈິງ (EIR) ແມ່ນອັດຕາສ່ວນຫຼຸດຕໍ່ອຈິງທີ່ໄດ້ຈາກການຄາດຄະເນການຊຳລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ຄ່າເສື່ອມຕົ້ນທຶນຂອງຊັບສິນ ຫຼື ໜີ້ສິນທາງການເງິນແມ່ນຖືກດັດແກ້ ເມື່ອທະນາຄານໄດ້ແກ້ໄຂການຄາດຄະເນລາຍຮັບ ຫຼື ລາຍຈ່າຍຂອງທະນາຄານ ໂດຍຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ ແລະ ສ່ວນຜິດດ່ຽງຂອງ ມູນຄ່າດັ່ງກ່າວຈະຖືກບັນທຶກເປັນ 'ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ' ສຳລັບຊັບສິນທາງການເງິນ ແລະ 'ດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືດອກເບ້ຍ' ສຳລັບໜີ້ສິນທາງການເງິນ. ນະໂຍບາຍການບັນຊີສຳລັບວິທີ EIR ແມ່ນມີຄວາມແຕກຕ່າງຕາມແຕ່ລະປະເພດຂອງການນຳໃຊ້ເຄື່ອງມື ເຊິ່ງໄດ້ອະທິບາຍເພີ່ມເຕີມເອກະສານຊ້ອນທ້າຍເລກທີ:

- ບົດອະທິບາຍເລກທີ 5.2.6 ສຳລັບ 'ການລົງທຶນທີ່ຖືໄວ້ຈົນຄົບກຳນົດ'
- ບົດອະທິບາຍເລກທີ 5.2.7 ສຳລັບ 'ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ'
- ບົດອະທິບາຍເລກທີ 5.2.8 ສຳລັບ 'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ແຫຼ່ງທຶນກູ້ຢືມອື່ນ'
- ບົດອະທິບາຍເລກທີ 5.4 ສຳລັບ 'ການເສື່ອມມູນຄ່າຂອງຊັບສິນທາງການເງິນ'; ແລະ
- ບົດອະທິບາຍເລກທີ 5.8 ສຳລັບ 'ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ'

5.2.4 *ມື້ທີ 1 ກຳໄລ ຫຼື ຂາດທຶນ*

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸຕິທຳຂອງລາຄາຕາມທ້ອງຕະຫຼາດໃນປັດຈຸບັນ ຂອງເຄື່ອງມືການເງິນອັນດຽວກັນ ຫຼື ອີງຕາມມູນຄ່າທີ່ໄດ້ສຳຫຼວດໃນຕະຫຼາດ, ທະນາຄານຮັບຮູ້ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸຕິທຳ ('ມື້ທີ 1' ກຳໄລ ຫຼື ຂາດທຶນ) ໃນ "ລາຍຮັບສຸດທິຈາກການຄ້າ". ໃນກໍລະນີທີ່ມູນຄ່າຍຸຕິທຳຖືກກຳນົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສຳຫຼວດ, ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າທີ່ໄດ້ຈາກນຳໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອຂໍ້ມູນສາມາດຊອກຫາໄດ້ ຫຼື ເມື່ອເຄື່ອງມືການເງິນບໍ່ຖືກຮັບຮູ້.

5.2.5 *ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ*

ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ ປະກອບມີ ຫຼັກຊັບທຶນ. ຫຼັກຊັບທຶນຈະຖືກຈັດປະເພດເປັນຫຼັກຊັບປະເພດມີໄວ້ເພື່ອຂາຍ ຖ້າໃນກໍລະນີທີ່ຫຼັກຊັບດັ່ງກ່າວ ບໍ່ໄດ້ຖືກຈັດເປັນປະເພດຫຼັກຊັບມີໄວ້ເພື່ອຄ້າ ຫຼື ຫຼັກຊັບທີ່ບັນທຶກມູນຄ່າຍຸຕິທຳຜ່ານ ກຳໄລ ແລະ ຂາດທຶນ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.2 *ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

5.2.5 *ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ* (ຕໍ່)

ທະນາຄານຍັງບໍ່ໄດ້ຮັບຮູ້ບັນດາເງິນກູ້ ຫຼື ໜີ້ຕ້ອງຮັບເປັນການລົງທຶນການເງິນມີໄວ້ເພື່ອຂາຍ.

ຫຼັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ໄດ້ຖືກຕີມູນຄ່າເປັນມູນຄ່າຍຸຕິທຳ.

ກຳໄລ ຫຼື ຂາດທຶນທີ່ບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໂດຍກົງໃນປະເພດທຶນ (ໃນໃບລາຍງານຜົນການດຳເນີນງານນອກການທຸລະກິດ) ເປັນ "ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ". ເມື່ອການລົງທຶນດັ່ງກ່າວໝົດກຳນົດ, ກຳໄລ ຫຼື ຂາດທຶນສະສົມກ່ອນໜ້ານີ້ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ ວ່າແມ່ນ "ລາຍຮັບອື່ນໆຈາກການດຳເນີນງານ" ເມື່ອທະນາຄານລົງທຶນຫຼາຍກວ່າໜຶ່ງລາຍການໂດຍນຳໃຊ້ຫຼັກຊັບຄ້ຳປະກັນດຽວກັນ, ມັນຈະຖືກສະສາງອອກຕາມຫຼັກການເຂົ້າກ່ອນ-ອອກກ່ອນ. ເງິນປັນຜົນທີ່ຫາມາໄດ້ໃນຊ່ວງໄລຍະການຖືຊັບສິນການເງິນມີໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະການກິດຈະການ ວ່າເປັນ "ລາຍຮັບອື່ນໆຈາກການດຳເນີນງານອື່ນໆ" ເມື່ອສິດຂອງການໄດ້ຮັບເງິນປັນຜົນຂອງທະນາຄານ ຖືກສ້າງຂຶ້ນ. ເມື່ອການຂາດທຶນເພີ່ມຂຶ້ນເນື່ອງຈາກການເສື່ອມມູນຄ່າຂອງການລົງທຶນດັ່ງກ່າວນັ້ນ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ ວ່າເປັນ "ການຫັກຄ່າເສື່ອມການລົງທຶນທາງການເງິນ" ໂດຍປ່ຽນຈາກ "ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ".

5.2.6 *ການລົງທຶນທີ່ຖືໄວ້ຈົນຄົບກຳນົດ*

ການລົງທຶນທີ່ຖືໄວ້ຈົນຄົບກຳນົດແມ່ນຊັບສິນທາງການເງິນທີ່ບໍ່ແມ່ນອະນຸພັນທາງການເງິນ ເຊິ່ງມີການກຳນົດໄວ້ຢ່າງຈະແຈ້ງ ຫຼື ສາມາດກຳນົດໄດ້ໄລຍະເວລາໃນການຊຳລະ ແລະ ໄດ້ກຳນົດວັນຄົບກຳນົດໄວ້ແລ້ວ, ເຊິ່ງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດ. ພາຍຫຼັງການຮັບຮູ້ມູນຄ່າເບື້ອງຕົ້ນ, ການລົງທຶນປະເພດຖືໄວ້ຈົນຄົບກຳນົດຈະຖືກບັນທຶກອີງຕາມຕົ້ນທຶນ ບວກໃຫ້ ລາຍຮັບ/ລາຍຈ່າຍດອກເບ້ຍຄ້າງຮັບ ໂດຍຄິດໄລ່ຕາມອັດຕາດອກເບ້ຍຕາມສັນຍາຕາມແບບວິທີຄົງຕົວ. ການລົງທຶນປະເພດຖືໄວ້ຈົນຄົບກຳນົດ ຈະຖືກປະເມີນຄ່າເສື່ອມເປັນແຕ່ລະໄລຍະ. ຈະມີການຫັກຄ່າເສື່ອມຂອງຫຼັກຊັບປະເພດນີ້ ຖ້າຫາກມູນຄ່າຍຸຕິທຳມີການຫຼຸດລົງ ຫຼື ຫຼຸດລົງຕ່ຳກວ່າຕົ້ນທຶນຊື້ ຫຼື ໄລຍະເວລາຂອງການຫຼຸດລົງຂອງລາຄາມີລັກສະນະຍາວນານ. ຄ່າເສື່ອມທີ່ເກີດຈາກຫຼັກຊັບແບບນີ້ຈະຖືກບັນທຶກໃນໃບລາຍງານຜົນການດຳເນີນງານສະເພາະການກິດຈະການ ໃນພາກສ່ວນຂອງ "ລາຍຈ່າຍຄ່າເສື່ອມມູນຄ່າ".

ຖ້າທະນາຄານຕ້ອງການຂາຍ ຫຼື ຈັດປະເພດການລົງທຶນທີ່ຖືໄວ້ຈົນຄົບກຳນົດໃໝ່ກ່ອນມື້ຄົບກຳນົດ (ນອກເໜືອຈາກມີເຫດການໃດໜຶ່ງສະເພາະ), ລາຍການຄ້າຫຼັກຊັບທີ່ຖືກຈັດເປັນປະເພດ ຖືໄວ້ຈົນຄົບກຳນົດທັງໝົດຈະຖືກປ່ຽນແປງ ແລະ ຈະຕ້ອງຖືກຈັດປະເພດຄືນໃໝ່ເປັນ ຫຼັກຊັບມີໄວ້ເພື່ອຂາຍ. ນອກຈາກນີ້, ທະນາຄານຈະຖືກຫ້າມບໍ່ໃຫ້ຈັດປະເພດຊັບສິນການເງິນໃດໆໃຫ້ເປັນຊັບສິນການເງິນທີ່ຖືໄວ້ຈົນຄົບພາຍໃນ 2 ປີ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

5.2.7 ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ

'ໜີ້ຕ້ອງຮັບຈາກທະນາຄານອື່ນ' ແລະ 'ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ', ລວມມີຊັບສິນການເງິນທີ່ບໍ່ແມ່ນອະນຸພັນທີ່ມີໄລຍະເວລາ ຫຼື ສາມາດກຳນົດໄລຍະເວລາການຊຳລະທີ່ແນ່ນອນ ເຊິ່ງລາຄາຊັບສິນເຫຼົ່ານັ້ນບໍ່ໄດ້ມີການຊື້-ຂາຍໃນຕະຫຼາດ, ນອກເໜືອຈາກ:

- ທະນາຄານມີຄວາມຕັ້ງໃຈທີ່ຈະຂາຍທັນທີ ຫຼື ທະນາຄານສາມາດຂາຍໄດ້ໃນໄລຍະສັ້ນ ແລະ ນັ້ນກໍ່ຂຶ້ນຢູ່ກັບການຮັບຮູ້ເບື້ອງຕົ້ນ, ກຳນົດຕາມມູນຄ່າຍຸຕິທຳຜ່ານກຳໄລ ຫຼື ຂາດທຶນ;
- ທະນາຄານຮັບຮູ້ມູນຄ່າເບື້ອງຕົ້ນ ແລະ ກຳນົດເປັນຫຼັກຊັບເພື່ອຂາຍ;
- ທະນາຄານອາດຈະບໍ່ໄດ້ກຳໄລຈາກການລົງທຶນທັງໝົດ ເນື່ອງຈາກການເສື່ອມຄ່າຂອງຊັບສິນ.

ຫຼັງຈາກການປະເມີນເບື້ອງຕົ້ນ, ເງິນຝາກກັບທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ຈະຖືກບັນທຶກລົງບັນຊີນຳໃຊ້ ອັດຕາດອກເບ້ຍທີ່ແທ້ຈິງ (ອັດຕາດອກເບ້ຍທີ່ແທ້ຈິງ "EIR") ລືບໃຫ້ລາຍຈ່າຍຄ່າເສື່ອມ. ຄ່າເສື່ອມຖືກຄິດໄລ່ໂດຍຄຳນຶງເຖິງສ່ວນຫຼຸດຂອງຊັບສິນທີ່ໄດ້ມາ ແລະ ຄ່າທຳນຽມ ແລະ ຕົ້ນທຶນທີ່ເປັນ ສ່ວນໜຶ່ງຂອງອັດຕາດອກເບ້ຍທີ່ແທ້ຈິງ. ເພາະສະນັ້ນ, ທະນາຄານໄດ້ຮັບຮູ້ລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາຜົນຕອບແທນເຊິ່ງເປັນອັດຕາການຄາດຄະເນທີ່ດີທີ່ສຸດຂອງອັດຕາຜົນຕອບແທນຄົງທີ່ຕາມອາຍຸເງິນກູ້. ດັ່ງນັ້ນ, ຈຶ່ງມີການຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ແຕກຕ່າງກັນໃນການຄິດໄລ່ຄ່າທຳນຽມໃນໄລຍະຕ່າງໆ ແລະ ລັກສະນະອື່ນໆຂອງວົງຈອນຊີວິດຜະລິດຕະພັນ (ການຈ່າຍລ່ວງໜ້າ, ດອກເບ້ຍ ແລະ ຄ່າບໍລິການ).

ຖ້າຫາກວ່າການຄາດຄະເນມີການປັບປຸງແກ້ໄຂ, ຈະຕ້ອງມີການບັນທຶກການດັດແກ້ເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງມູນຄ່າໃນໃບລາຍງານຖານະການເງິນ ອີງຕາມການເພີ່ມຂຶ້ນ ຫຼື ຫຼຸດລົງຂອງລາຍຮັບດອກເບ້ຍ. ຫຼັງຈາກນັ້ນ, ມູນຄ່າດັດແກ້ດັ່ງກ່າວຈະຖືກຄິດໄລ່ຄ່າເສື່ອມ ແລະ ຖືກບັນທຶກເປັນດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ.

ທະນາຄານອາດຈະອອກຂໍ້ຜູກພັນເງິນກູ້ເມື່ອເງິນກູ້ຖືກຖອນ, ເງິນກູ້ດັ່ງກ່າວນັ້ນຈະຖືກຈັດປະເພດເປັນການເຄື່ອນໄຫວທີ່ມີໄວ້ເພື່ອຄ້າຂາຍເພາະວ່າຈຸດປະສົງແມ່ນຂາຍເງິນກູ້ໄລຍະສັ້ນ. ຂໍ້ຜູກພັນເຫຼົ່ານີ້ຈະຖືກບັນທຶກ ແລະ ຖືກປະເມີນຕາມມູນຄ່າຍຸຕິທຳຜ່ານກຳໄລ ຫຼື ຂາດທຶນ.

ເມື່ອເງິນກູ້ຖືກຖອນ, ກໍ່ຈະຖືກຮັກສາໂດຍ ທະນາຄານ ແລະ ຈະບໍ່ຂາຍໃນໄລຍະສັ້ນ, ຂໍ້ຜູກພັນຈະຖືກບັນທຶກເມື່ອສັນຍາໄດ້ຖືກເຮັດຂຶ້ນ ແລະ ມີແນວໂນ້ມບົ່ງບອກວ່າການຂາດທຶນຈະເພີ່ມຂຶ້ນ (ຕົວຢ່າງ: ໜີ້ຕ້ອງສົ່ງໃຫ້ຄູ່ສັນຍາ).

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

5.2.8 ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ແຫຼ່ງທຶນກູ້ຢືມອື່ນ

"ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ" ປະກອບມີຂໍ້ຕົກລົງຕາມສັນຍາທີ່ສິ່ງຜົນເຮັດໃຫ້ທະນາຄານມີພັນທະທີ່ ຕ້ອງ ຈ່າຍເງິນສົດ ຫຼື ຊັບສິນການເງິນອື່ນໆໃຫ້ແກ່ເຈົ້າຂອງສັນຍາ.

ຫຼັງຈາກມີການປະເມີນເບື້ອງຕົ້ນ, 'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ' ຈະຖືກປະເມີນອີງຕາມການຫັກມູນຄ່າເສື່ອມ ໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ. ມູນຄ່າເສື່ອມຖືກຄິດໄລ່ໂດຍອີງຕາມສ່ວນຫຼຸດ ແລະ ຄ່າທຳນຽມຂອງໜີ້ ແລະ ຕົ້ນທຶນ ທີ່ເປັນສ່ວນໜຶ່ງຂອງການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ.

5.2.9 ການຈັດປະເພດຊັບສິນການເງິນຄືນໃໝ່

ເລີ່ມຈາກວັນທີ 1 ກໍລະກົດ 2008, ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ສຳລັບບັນດາຊັບສິນທາງການເງິນ ທີ່ ບໍ່ແມ່ນອອກຈາກ "ຊັບສິນທີ່ມີໄວ້ເພື່ອການຄ້າ" ໄປເປັນ "ຊັບສິນທີ່ມີໄວ້ເພື່ອຂາຍ", "ເງິນກູ້ ແລະ ໜີ້ຕ້ອງຮັບ", ຫຼື "ຊັບ ສິນທີ່ຖືໄວ້ຈົນຄົບກຳນົດ". ນັບຈາກວັນທີດັ່ງກ່າວ, ທະນາຄານຍັງໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ ບັນດາເຄື່ອງມືການ ເງິນທີ່ ນອກເໜືອຈາກ "ເຄື່ອງມືການເງິນທີ່ມີໄວ້ເພື່ອຂາຍ" ໄປເປັນ "ເງິນກູ້ ແລະ ໜີ້ຕ້ອງຮັບ". ການຈັດປະເພດຄືນໃໝ່ຈະ ຖືກບັນທຶກດ້ວຍມູນຄ່າຍຸຕິທຳໃນມື້ທີ່ຕີມູນຄ່າຄືນ, ເຊິ່ງມູນຄ່າດັ່ງກ່າວນັ້ນຈະກາຍເປັນມູນຄ່າຕົ້ນທຶນໃໝ່.

ສຳລັບຊັບສິນການເງິນທີ່ຖືກຈັດເປັນປະເພດອອກຈາກ "ຊັບສິນມີໄວ້ເພື່ອຂາຍ", ທຸກໆກຳໄລ ແລະ ຂາດທຶນທີ່ເກີດຈາກຊັບ ສິນດັ່ງກ່າວໃນໄລຍະຜ່ານມາທີ່ໄດ້ລົງບັນຊີເປັນທຶນເຈົ້າຂອງແມ່ນຖືກສະສາງໄປເປັນກຳໄລ ຫຼື ຂາດທຶນຈາກອາຍຸສັນຍາທີ່ຍັງ ເຫຼືອຂອງການລົງທຶນໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ. ທຸກໆສ່ວນຜິດຕ່າງລະຫວ່າງມູນຄ່າຕົ້ນທຶນໃໝ່ ແລະ ກະແສ ເງິນສົດທີ່ຄາດຄະເນໄວ້ແມ່ນຈະຖືກສະສາງອອກຕາມອາຍຸສັນຍາທີ່ຍັງເຫຼືອຂອງຊັບສິນໂດຍໃຊ້ອັດຕາດອກເບ້ຍຕົວຈິງ. ຖ້າ ຊັບສິນຖືກກຳນົດວ່າມີການເສື່ອມຄ່າມູນຄ່າທີ່ລົງບັນຊີເປັນທຶນເຈົ້າຂອງນັ້ນແມ່ນຈະຖືກນຳມາລາຍງານໃນໃບລາຍງານຜົນ ການດຳເນີນງານສະເພາະກິດຈະການ.

ໃນບາງກໍລະນີ ທະນາຄານອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອານຸພັນອອກຈາກ "ຊັບສິນທີ່ມີໄວ້ເພື່ອການຄ້າ" ເປັນ ປະເພດ "ເງິນກູ້ ແລະ ໜີ້ຕ້ອງຮັບ" ຖ້າການເຄື່ອນໄຫວຂອງມັນສອດຄ່ອງກັບຄວາມໝາຍຂອງເງິນກູ້ ແລະ ໜີ້ຕ້ອງຮັບ ແລະ ທະນາຄານມີເຈດຈຳນົງໃດໜຶ່ງ ແລະ ສາມາດຄອບຄອງຊັບສິນທາງການເງິນ ສຳລັບເປັນຊັບສິນທີ່ຍຶດໄດ້ໃນອະນາຄົດ ຫຼື ຄອບ ຄອງໄວ້ ຈົນຄົບກຳນົດ. ຖ້າຊັບສິນການເງິນຖືກຈັດປະເພດຄືນໃໝ່ ແລະ ຖ້າທະນາຄານໄດ້ຄາດຄະເນເງິນສົດທີ່ຈະໄດ້ຮັບໃນ ອະນາຄົດເພີ່ມໃນພາຍຫຼັງເນື່ອງຈາກວ່າຄວາມສາມາດທີ່ຈະໄດ້ຮັບເງິນສົດດັ່ງກ່າວເພີ່ມຂຶ້ນ, ຜົນກະທົບຂອງການເພີ່ມຂຶ້ນນັ້ນ ແມ່ນໄດ້ບັນທຶກເປັນການດັດແກ້ ຕາມອັດຕາດອກເບ້ຍທີ່ແທ້ຈິງ ຈາກມື້ທີ່ການຄາດຄະເນມີການປ່ຽນແປງ.

ການຈັດປະເພດຄືນໃໝ່ແມ່ນການເລືອກໂດຍຄະນະອຳນວຍການ ແລະ ຖືກກຳນົດເປັນເຄື່ອງມືໂດຍພື້ນຖານເຄື່ອງມື.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.3 ການຫັກລ້າງຊັບສິນ ແລະ ໜີ້ສິນທາງການເງິນ

5.3.1 ຊັບສິນທາງການເງິນ

ຊັບສິນທາງການເງິນ (ຫຼື, ສ່ວນໜຶ່ງຂອງຊັບສິນການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດຮັບຮູ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນທີ່ໄດ້ໝົດອາຍຸແລ້ວ. ນອກຈາກນີ້, ທະນາຄານຍັງຢຸດຮັບຮູ້ເປັນຊັບສິນ ໃນກໍລະນີທີ່ຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.

ທະນາຄານຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ທະນາຄານໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ ຫຼື
- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຈ່າຍກະແສເງິນສົດທີ່ຈະໄດ້ຮັບທັງໝົດໃນອານາຄົດໂດຍທັນທີໃຫ້ພາກສ່ວນທີສາມພາຍໃຕ້ຮູບແບບ 'ການຕິດພັນ'.

ການຕິດພັນ ເປັນການເຮັດທຸລະກຳຜ່ານທະນາຄານຖືເປັນລາຍການທີ່ເກີດຂຶ້ນ ເມື່ອທະນາຄານຖືສິດຕາມສັນຍາ ເພື່ອຮັບກະແສເງິນສົດຂອງຊັບສິນທາງການເງິນ (ຊັບສິນເດີມ), ແຕ່ຖືເປັນພາລະຜູກພັນຕາມສັນຍາທີ່ຈະຕ້ອງຈ່າຍຊຳລະເງິນສົດໃຫ້ແກ່ກິດຈະການຢ່າງໜ້ອຍໜຶ່ງແຫ່ງ (ຜູ້ຮັບສຸດທ້າຍ), ເມື່ອມີການປະຕິບັດຕາມເງື່ອນໄຂທັງສາມຂໍ້ດັ່ງຕໍ່ໄປນີ້. ນະວັນທີ 31 ທັນວາ 2019 ທະນາຄານບໍ່ມີຊັບສິນທາງການເງິນພາຍໃຕ້ຮູບແບບດັ່ງກ່າວ.

ການໂອນຈະສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້ ກໍ່ຕໍ່ເມື່ອ:

- ທະນາຄານໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນດັ່ງກ່າວ ຫຼື
- ທະນາຄານບໍ່ໄດ້ໂອນຄວາມສ່ຽງ ແລະ ຮັກສາຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນ ທັງໝົດ, ແຕ່ໄດ້ໂອນການຄວບຄຸມຊັບສິນດັ່ງກ່າວແລ້ວ.

ອີງຕາມຂໍ້ມູນຂ້າງເທິງ, ທະນາຄານຈະພິຈາລະນາວ່າການຄວບຄຸມ ຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈຳກັດໃດໆກ່ຽວກັບການໂອນ.

ເມື່ອທະນາຄານໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼືໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ທະນາຄານຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ທະນາຄານຍັງຮັບຮູ້ເປັນໜີ້ສິນໃນເຄືອ, ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ວ່າມັນຈະສົ່ງຜົນກະທົບຕໍ່ສິດ ແລະ ພັນທະຂອງທະນາຄານທີ່ມີຢູ່.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.3 *ການຫັກລ້າງຊັບສິນ ແລະ ໜີ້ສິນທາງການເງິນ* (ຕໍ່)

5.3.1 *ຊັບສິນທາງການເງິນ* (ຕໍ່)

ການສືບຕໍ່ຂອງຮູບແບບຂອງການຄ້ຳປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕ່ຳກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ທະນາຄານມີຄວາມສາມາດໃນການຊຳລະໜີ້.

ນອກຈາກນີ້ທະນາຄານຍັງຢຸດຮັບຮູ້ບັນດາຊັບສິນທາງການເງິນໂດຍສະເພາະການໃຫ້ກູ້ຢືມແກ່ລູກຄ້າ ເມື່ອເງື່ອນໄຂ ແລະ ຂໍ້ຕົກລົງສ່ວນໃຫຍ່ໄດ້ມີການເຈລະຈາກັນໃໝ່ ແລະ ຖືກພິຈາລະນາເປັນກູ້ຢືມໃໝ່, ສ່ວນຜິດດ່ຽງຈະຖືກບັນທຶກເປັນຄ່າເສື່ອມໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ.

5.3.2 *ໜີ້ສິນທາງການເງິນ*

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີເມື່ອພັນທະຕ່ຳກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່, ແລະ ສ່ວນຜິດດ່ຽງ ຂອງຍອດຍົກມາຈະຖືກລາຍງານໃນໃບລາຍງານຜົນການດຳເນີນງານ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

5.4 *ການເສື່ອມມູນຄ່າຂອງຊັບສິນທາງການເງິນ*

ທະນາຄານປະເມີນໃນມື້ເຮັດໃບລາຍງານຖານະການເງິນວ່າມີຫຼັກຖານຊັດເຈນທີ່ສະແດງໃຫ້ເຫັນວ່າຊັບສິນການເງິນ ຫຼື ກຸ່ມຂອງຊັບ ສິນການເງິນມີການເສື່ອມມູນຄ່າ ຫຼື ບໍ່. ຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນຈະຖືວ່າມີຄວາມເສຍຫາຍຖ້າ ພຽງແຕ່ວ່າມີ ຫຼັກຖານຊັດເຈນຂອງຄວາມເສຍຫາຍຈາກຜົນຂອງໜຶ່ງ ຫຼື ຫຼາຍເຫດການທີ່ປະກົດຂຶ້ນຫຼັງຈາກ ມີການຮັບຮູ້ຊັບ ສິນ (ເກີດມີ "ເຫດການເສຍຫາຍ") ແລະ ເຫດການເສຍຫາຍໜຶ່ງ (ຫຼື ຫຼາຍເຫດການ) ໄດ້ສົ່ງຜົນກະທົບ ເຖິງການຄາດຄະເນ ກະແສເງິນສົດໃນອະນາຄົດ ຂອງຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ຢ່າງໜ້າເຊື່ອຖື.

ຫຼັກຖານຂອງການເສື່ອມມູນຄ່າອາດລວມມີ: ຕົວຊີ້ວັດວ່າຜູ້ກູ້ຢືມ ຫຼື ກຸ່ມຂອງຜູ້ກູ້ຢືມແມ່ນມີຄວາມຫຍຸ້ງຍາກທາງດ້ານ ການ ເງິນ, ການຜິດສັນຍາ ຫຼື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າ ພວກເຂົາຈະລົ້ມລະລາຍ ຫຼື ການ ປັບປຸງລະບົບ ການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດ ຫຼຸດລົງ ເຊັ່ນ: ການປ່ຽນແປງໜີ້ ເກີນກຳນົດ ຫຼື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

5.4.1 ຊັບສິນທາງການເງິນທີ່ຮັບຮູ້ຕາມຕົ້ນທຶນຄ່າເສື່ອມມູນຄ່າ

ການຂາດທຶນຈາກການເສື່ອມມູນຄ່າ

ສຳລັບຊັບສິນທາງການເງິນທີ່ບັນທຶກຕາມມູນຄ່າສຸດທິຫຼັງຫັກຄ່າເສື່ອມມູນຄ່າ (ເຊັ່ນ: ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ການກູ້ຢືມອື່ນໆ), ທະນາຄານຈະປະເມີນຫຼັກຖານຂອງການເສື່ອມມູນຄ່າຂອງຊັບສິນທາງການເງິນວ່າມີຫຼັກຖານການເສື່ອມຄ່າຂອງຊັບສິນການເງິນນັ້ນສຳຄັນ ຫຼື ບໍ່ເພື່ອພິຈາລະນາສະເພາະໂດຍຜູ້ບໍລິຫານ.

ຖ້າຫາກມີຫຼັກຖານວ່າຄ່າເສື່ອມເກີດຂຶ້ນ, ຈຳນວນຄ່າເສື່ອມຈະຖືກຕີມູນຄ່າເປັນສ່ວນຕ່າງລະຫວ່າງຍອດຍົກມາຂອງຊັບສິນ ແລະ ຍອດເຫຼືອປະຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເສື່ອມທີ່ອາດຈະເກີດຂຶ້ນ ໃນອະນາຄົດ). ຍອດຍົກມາຂອງຊັບສິນແມ່ນຫຼຸດລົງ ຍ້ອນນຳໃຊ້ບັນຊີຄ່າເສື່ອມ ແລະ ຈຳນວນຄ່າເສື່ອມທີ່ລາຍງານໃນໃບລາຍງານຜົນການດຳເນີນງານ ສະເພາະກິດຈະການ. ລາຍຮັບດອກເບ້ຍຈະຖືກສືບຕໍ່ຄິດໄລ່ຕາມຍອດຍົກມາທີ່ຫຼຸດລົງ ແລະ ຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍກະແສເງິນສົດໃນອະນາຄົດ ເພື່ອປະເມີນຄ່າເສື່ອມ. ລາຍຮັບດອກເບ້ຍຖືກລົງບັນຊີໃນ "ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ".

ເງິນກູ້ພ້ອມກັບລາຍຈ່າຍທີ່ຕິດພັນຈະຖືກສະສາງອອກ ເມື່ອທະນາຄານໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອຫຼັກຊັບຄ้ำປะกันถูกโอนให้ทะนาคาน. ถ้าในปีต่ำมา, ค่าเสื่อมหนี้เสียจะเพิ่มขึ้น หรือ หุดลิงย้อนว่ามีเหตการณ เกิดขึ้นหลังจากได้ หักค่าเสื่อม, ค่าเสื่อมหนี้เสียที่ถูกหักไว้ก่อนหน้านี้จะเพิ่มขึ้น หรือ หุดลิงโดยการดัดแก้ไขในบันชีลายจ่าย , ถ้าในอะนาคิดจะสามาดเก็บคืนได้ มูนค่าที่เก็บคืนได้นั้นจะถูกลิงบันชีเบื้องมีใน "ลายรับ".

ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ ແມ່ນມູນຄ່າໃນປະຈຸບັນຕາມອັດຕາດອກເບ້ຍທີ່ແທ້ຈິງຂອງຊັບສິນການເງິນ. ຖ້າເງິນກູ້ມີອັດຕາດອກເບ້ຍທີ່ຜັນແປ, ອັດຕາສ່ວນຫຼຸດສຳລັບການຕີມູນຄ່າຂອງ ຄ່າເສື່ອມມູນຄ່າແມ່ນອັດຕາດອກເບ້ຍຕົວຈິງໃນປະຈຸບັນ. ຖ້າທະນາຄານໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້ ແລະ ເງິນລ່ວງໜ້າ, ອັດຕາສ່ວນ ຫຼຸດ ສຳລັບຄິດໄລ່ຄ່າເສື່ອມແມ່ນ ຕ້ອງນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງໃນປະຈຸບັນ.

ການຄິດໄລ່ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດ ທີ່ຄາດຄະເນໄວ້ຂອງຫຼັກຊັບຄ้ำປะกัน มีผันกะทบต่กะแส เงินสด ซึ่งอาดเป็นผันมาจากหลักชับค้ำประกันที่ยึดมาได้ลับให้ต้นทันของหลักชับค้ำประกันที่ได้รับ และ ขาย บ่ อ่ามาดยึดหลักชับจะเป็นไปได้ หรือ บ่ก่ตาม.

ຮູບແບບການເສື່ອມມູນຄ່າເປັນກຸ່ມ

ເພື່ອຈຸດປະສົງໃນການປະເມີນຄ່າເສື່ອມເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມ ຕາມລັກສະນະຄວາມສ່ຽງທີ່ຄ້າຍຄືກັນ ຊຶ່ງເປັນຕົວຊີ້ວັດຄວາມສາມາດຂອງລູກໜີ້ໃນການຈ່າຍເງິນຈຳນວນທັງໝົດອີງຕາມເງື່ອນໄຂໃນສັນຍາ (ຕົວຢ່າງເຊັ່ນ, ອີງຕາມພື້ນຖານຂອງການປະເມີນຜົນຄວາມສ່ຽງການປ່ອຍສິນເຊື່ອ ຫຼື ການໃຫ້ຄະແນນໂດຍພິຈາລະນາຈາກ ປະເພດຊັບສິນ, ປະເພດອຸດສາຫະກຳ, ສະຖານທີ່ຕັ້ງພູມສາດ, ປະເພດຂອງຫຼັກຊັບຄ้ำປะกัน, ສະຖານະພາບທີ່ຜ່ານມາ ແລະ ປັດໄຈອື່ນໆທີ່ກ່ຽວຂ້ອງ).

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

5.4.1 ຊັບສິນທາງການເງິນທີ່ຮັບຮູ້ຕາມຕົ້ນທຶນຄ່າເສື່ອມມູນຄ່າ (ຕໍ່)

ກະແສເງິນສົດໃນອານາຄົດຂອງກຸ່ມຊັບສິນການເງິນທີ່ມີການຫັກຄ່າເສື່ອມມູນຄ່າເປັນກຸ່ມ ແມ່ນຖືກຄາດຄະເນບົນພື້ນຖານການເສື່ອມຄ່າຜ່ານມາຂອງຊັບສິນທີ່ມີລັກສະນະຄວາມສ່ຽງສິນເຊື່ອທີ່ຄ້າຍຄືກັນໃນກຸ່ມ. ການເສື່ອມຄ່າຜ່ານມາຖືກດັດແກ້ບົນພື້ນຖານຂໍ້ມູນທີ່ມີໃນປະຈຸບັນ ເພື່ອສ່ອງແສງເຖິງຜົນກະທົບຂອງເງື່ອນໄຂໃນປະຈຸບັນ ເຊິ່ງການເສື່ອມຄ່າຜ່ານມາແມ່ນເປັນບ່ອນອີງ ແລະ ເພື່ອຍ້າຍຜົນກະທົບຂອງເງື່ອນໄຂໃນໄລຍະຜ່ານມາ ທີ່ບໍ່ສົ່ງຜົນກະທົບໃນປະຈຸບັນ.

ການຄາດຄະເນການປ່ຽນແປງທີ່ສ່ອງແສງເຖິງກະແສເງິນສົດໃນອະນາຄົດ ແລະ ເປັນໄປໃນທາງດຽວກັນກັບ ການປ່ຽນແປງຂອງຂໍ້ມູນທີ່ສັງເກດໄດ້ຈາກປີຕໍ່ປີ (ເຊັ່ນການປ່ຽນແປງອັດຕາການວ່າງງານ, ລາຄາຊັບສິນ, ລາຄາສິນຄ້າ, ເງື່ອນໄຂການຊຳລະ, ຫຼື ປັດໄຈອື່ນໆທີ່ບົ່ງບອກເຖິງການຂາດທຶນໃນກຸ່ມ ແລະ ຄວາມສຳຄັນຂອງການຂາດທຶນ). ວິທີການ ແລະ ຂໍ້ສົມມຸດຖານທີ່ນຳໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດ ໄດ້ທົບທວນຄືນຢ່າງເປັນປົກກະຕິ ເພື່ອຫຼຸດຜ່ອນຜົດຕ່າງລະຫວ່າງຂາດທຶນທີ່ຄາດຄະເນ ແລະ ຂາດທຶນຕົວຈິງ.

5.4.2 ການເສື່ອມມູນຄ່າຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ

ທະນາຄານຍັງໄດ້ບັນທຶກຄ່າເສື່ອມມູນຄ່າຕ່ຳການລົງທຶນທີ່ມີໄວ້ເພື່ອຂາຍ ເມື່ອເກີດການຫຼຸດລົງທີ່ສຳຄັນ ຫຼື ການຫຼຸດລົງ ໃນມູນຄ່າຍຸຕິທຳທີ່ຕ່ຳກວ່າຕົ້ນທຶນ ຂໍ້ກຳນົດທີ່ "ສຳຄັນ" ຫຼື "ຍາວນານ" ຕ້ອງຖືກພິຈາລະນາ, ການພິຈາລະນາດັ່ງກ່າວນີ້ ທະນາຄານປະເມີນລະຫວ່າງຫຼາຍປັດໄຈ ແລະ ການເໜັງຕີງຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ກຳນົດຂອບເຂດຂອງມູນຄ່າຍຸຕິທຳທີ່ຕ່ຳກວ່າຕົ້ນທຶນ.

5.4.3 ການປະເມີນມູນຄ່າຫຼັກຊັບຄ້ຳປະກັນ

ທະນາຄານຊອກຫາວິທີທີ່ຈະນຳໃຊ້ຫຼັກຊັບຄ້ຳປະກັນ, ຖ້າເປັນໄປໄດ້, ເພື່ອຫຼຸດຜ່ອນຄວາມສ່ຽງຂອງຊັບສິນການເງິນ. ຫຼັກຊັບຄ້ຳປະກັນອາດເປັນໄດ້ຫຼາຍຮູບແບບ ເຊັ່ນ: ເງິນສົດ, ຫຼັກຊັບ, ໜັງສືສິນເຊື່ອ/ໜັງສືຄ້ຳປະກັນ, ອະສັງຫາລິມະຊັບ, ໜີ້ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການຍົກລະດັບສິນເຊື່ອ ເຊັ່ນ ຂໍ້ຕົກລົງທີ່ຮັດກຸມ. ໂດຍທົ່ວໄປ, ມູນຄ່າຍຸຕິທຳຂອງຫຼັກຊັບຄ້ຳປະກັນແມ່ນຖືກປະເມີນໃນມູນຄ່າຕ່ຳສຸດໃນມື້ເລີ່ມຕົ້ນ ແລະ ກຳນົດເວລາການລາຍງານປະຈຳປີຂອງທະນາຄານ.

ເພື່ອກຳນົດຂອບເຂດທີ່ຄວນເປັນໄປໄດ້ ທະນາຄານໄດ້ນຳໃຊ້ຂໍ້ມູນຕາມທ້ອງຕະຫຼາດສຳລັບປະເມີນຊັບສິນການເງິນ ທີ່ໃຊ້ເປັນຫຼັກຊັບຄ້ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດກຳນົດມູນຄ່າຕາມທ້ອງຕະຫຼາດ ຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫຼັກຊັບຄ້ຳປະກັນທີ່ບໍ່ແມ່ນທາງການເງິນເຊັ່ນ: ອະສັງຫາລິມະຊັບ ຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກພາກສ່ວນພາຍນອກ (ຫາກມີ) ເຊັ່ນ: ນາຍໜ້າ, ດັດສະນີລາຄາທີ່ພັກອາໄສ, ບົດລາຍງານການເງິນທີ່ຖືກກວດສອບແລ້ວ ແລະ ແຫລ່ງຂໍ້ມູນທີ່ໜ້າເຊື່ອຖືອື່ນໆ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.4 *ການເສື່ອມມູນຄ່າຂອງຊັບສິນທາງການເງິນ* (ຕໍ່)

5.4.4 *ຫຼັກຊັບຄ้ຳປะกันที่ถือยึด*

ນະໂຍບາຍທະນາຄານແມ່ນກຳນົດວ່າຊັບສິນທີ່ຍຶດມາ ສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການພາຍໃນຂອງທະນາຄານ ຫຼື ຄວນຈະຂາຍ. ຊັບສິນທີ່ເປັນປະໂຫຍດສຳລັບການດຳເນີນງານພາຍໃນຈະຖືກໂອນເຂົ້າໄປເປັນຊັບສິນຕາມແຕ່ລະປະເພດທີ່ກ່ຽວຂ້ອງ ເຊິ່ງຈະຖືກຕີມູນຄ່າຫຼຸດລົງຈາກມູນຄ່າທີ່ຍຶດມາ ຫຼື ຍອດຍົກມາຂອງຊັບສິນທີ່ຖືກຄ้ຳປะกัน. ຊັບສິນທີ່ຖືກກຳນົດວ່າຈະຂາຍອອກຈະຖືກໂອນເປັນຊັບສິນມີໄວ້ສຳລັບຂາຍ ແລະ ຖືກຕີມູນຄ່າຕາມມູນຄ່າຕົວຈິງນະມື້ທີ່ຍຶດຊັບສິນໂດຍສອດ ຄ່ອງກັບນະໂຍບາຍຂອງທະນາຄານ.

5.5 *ການຫັກລ้ำงเครื่องมือทางการเงิน*

ຊັບສິນ ແລະ ໜີ້ສິນທາງການເງິນແມ່ນຖືກຫັກລ้ำงกัน ແລະ ມູນຄ່າສຸດທິຈະຖືກລາຍງານໃນໃບລາຍງານຖານະການເງິນ, ຖ້າຫາກວ່າ ທະນາຄານຖືກບັງຄັບທາງກົດໝາຍໃຫ້ສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ທະນາຄານຕັ້ງໃຈຈະສະສາງໃນມູນຄ่าสุดท้าย ຫຼື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວกัน. ນີ້ບໍ່ແມ່ນກໍລະນີທົ່ວໄປໃນຂໍ້ຕົກລົງວ່າດ້ວຍການຫັກລ้ำงละหว่าง ຊັບສິນ - ໜີ້ສິນ ແລະ ຊັບສິນ - ໜີ້ສິນ ທີ່ກ່ຽວຂ້ອງໄດ້ຖືກສະແດງມູນຄ่าลอมในใบลายงานถานะการเงินสะเพาะกิดจะการ.

5.6 *ການລົງທຶນໃນบໍลิสัดในเถือ*

ການລົງທຶນຢຸ່ບໍລິສັດລູກຂອງທະນາຄານແມ່ນຖືກລົງບັນຊີເປັນຕົ້ນທຶນ. ສ່ວນແບ່ງกำไลสะสมบໍลิสัดลูกาเกิดขึ้นพายหลัง ວັນທີລົງທຶນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ. ຜົນໄດ້ຮັບອື່ນໆນอกจากกำไลแม่น ผินตอบแทนจากการลงทุน และ หักลบต้นทุนของการลงทุน. การหักค่าเสื่อมสร้างขึ้นเพื่อการลงทุนในบໍลิสัดลูก เมื่อบໍลิสัดลูกมีการขาดทุน (ยกเว้นสำลับการขาดทุนที่ถือละบุยู่ในแผนทุละกิดก่อนการสร้างตั้ง). ดังนั้น, การหักค่าเสื่อมจึ่งถือสร้างขึ้นสำลับส่วนต่างละหว่าง การลงทุนตัวจิงยู่บໍลิสัดลูก และ ร้อนส่วนของทะนาคานยู่บໍลิสัดในเถือ.

5.7 *ການລົງທຶນໃນบໍลิสัดร่วมทุน*

ການລົງທຶນໃນบໍลิสัดร่วมทุนของทะนาคานแม่นถือลงบันชีเป็นต้นทุน. ส่วนแบ่งกำไลสะสมของบໍลิสัดร่วมทุน เกิดขึ้นพายหลังจันที่ลงทุน แม่นถือรับรู้ในใบลายงานผินการดำเนินงานสะเพาะกิดจะการ. ผินได้รับอื่นๆ นอกจากกำไล แม่นผินตอบแทนจากการลงทุน และ หักออกจากต้นทุนของการลงทุน.

ການหักค่าเสื่อมสร้างขึ้นเพื่อการลงทุนในบໍลิสัดร่วมทุนเมื่ออิสาหะกิดเกิดมีการขาดทุน (ยกเว้น การขาดทุนที่ได้ละบุไว้ในแผนทุละกิดก่อนการสร้างตั้ง). ดังนั้น, ค่าเสื่อมจึ่งถือสร้างขึ้นสำลับส่วนต่าง ละหว่างการลงทุนตัวจิงในบໍลิสัดร่วมทุน และ ร้อนส่วนในทุนสุดท้ายของทะนาคานในบໍลิสัดร่วมทุน.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.8 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ

ລາຍຮັບແມ່ນໄດ້ຖືກຮັບຮູ້ໃນຂອບເຂດຂອງຄວາມເປັນໄປໄດ້ທີ່ວ່າຜົນປະໂຫຍດໃນທາງເສດຖະກິດຈະໄຫຼເຂົ້າທະນາຄານ ແລະ ລາຍຮັບເຫຼົ່ານັ້ນຈະຖືກຕີມູນຄ່າຢ່າງເຊື່ອຖືໄດ້. ຫຼັກການການຮັບຮູ້ສະເພາະດັ່ງຕໍ່ໄປນີ້ຈະຕ້ອງຖືກປະເມີນກ່ອນລາຍຮັບຈະຖືກຮັບຮູ້.

5.8.1 ດອກເບ້ຍ ແລະ ລາຍຮັບແລະ ລາຍຈ່າຍທີ່ຄ້າຍຄືດອກເບ້ຍ

ສຳລັບທຸກໆເຄື່ອງມືທາງການເງິນທີ່ຖືກຕີມູນຄ່າຕາມລາຄາຄ່າເສື່ອມຕົ້ນທຶນ ແລະ ຊັບສິນທາງການເງິນທີ່ມີດອກເບ້ຍ ໄດ້ຈັດປະເພດເປັນ ຊັບສິນທີ່ມີໄວ້ເພື່ອຂາຍ ແລະ ເຄື່ອງມືທາງການເງິນໄດ້ກຳນົດຕາມມູນຄ່າຍຸຕິທຳ ໂດຍຜ່ານກຳໄລ ແລະ ຂາດທຶນ , ລາຍຮັບ ຫຼື ລາຍຈ່າຍດອກເບ້ຍ ແມ່ນຖືກບັນທຶກໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ ເຊິ່ງແມ່ນອັດຕາສ່ວນຫຼຸດຕົວຈິງທີ່ໄດ້ຈາກການຄາດຄະເນການຊຳລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ການຄິດໄລ່ແມ່ນຄຳນຶງເຖິງທຸກໆຂໍ້ກຳນົດໃນສັນຍາຂອງເຄື່ອງມືການເງິນ (ເຊັ່ນວ່າ: ທາງເລືອກໃນການຊຳລະລ່ວງໜ້າ) ລວມທັງທຸກໆຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍ ບໍລິຫານທີ່ກ່ຽວພັນກັບເຄື່ອງມື ແລະ ຊຶ່ງເປັນສ່ວນປະກອບຂອງອັດຕາດອກເບ້ຍທີ່ແທ້ຈິງ, ແຕ່ບໍ່ແມ່ນການສູນເສຍສິນເຊື່ອໃນອະນາຄົດ.

ເມື່ອມູນຄ່າຕາມບັນຊີຂອງຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນທີ່ຄ້າຍຄືກັນຖືກຫຼຸດລົງໂດຍການຫັກຄ່າເສື່ອມມູນຄ່າ, ລາຍຮັບດອກເບ້ຍຈະຖືກຮັບຮູ້ໂດຍການນຳໃຊ້ອັດຕາດອກເບ້ຍທີ່ໃຊ້ໃນການຄິດໄລ່ກະແສເງິນສົດໃນອະນາຄົດສຳລັບ ເພື່ອຈຸດປະສົງຂອງການວັດຄ່າເສື່ອມ.

5.8.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ

ທະນາຄານມີລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ຈາກການໃຫ້ບໍລິການຫຼາຍຮູບແບບແກ່ລູກຄ້າ. ລາຍຮັບຄ່າທຳນຽມ ແລະຄ່ານາຍໜ້າແມ່ນໄດ້ຮັບການບັນທຶກໄວ້ໃນຈຳນວນທີ່ສະທ້ອນໃຫ້ເຫັນເຖິງການພິຈາລະນາທີ່ທະນາຄານຄາດວ່າຈະມີສິດໃນການແລກປ່ຽນການສະໜອງການບໍລິການ. ຂໍ້ຜູກພັນໃນການປະຕິບັດງານ, ເຊັ່ນດຽວກັນກັບເວລາຂອງຄວາມເພິ່ງພໍໃຈຂອງລູກຄ້າ, ຖືກລະບຸ ແລະ ຖືກກຳນົດ, ເມື່ອເວລາເລີ່ມຕົ້ນຂອງສັນຍາ. ໂດຍທົ່ວໄປສັນຍາລາຍຮັບຂອງທະນາຄານຈະບໍ່ລວມເອົາຫຼາຍຂໍ້ຜູກພັນໃນການປະຕິບັດງານ ດັ່ງທີ່ອະທິບາຍເພີ່ມເຕີມໃນ 5.8.2.1 ແລະ 5.8.2.2 ຂ້າງລຸ່ມນີ້. ໃນເວລາທີ່ທະນາຄານໃຫ້ການບໍລິການແກ່ລູກຄ້າຂອງຕົນ, ຈະມີການພິຈາລະນາເປັນໃບແຈ້ງໜີ້ແລະກຳນົດການຊຳລະນະເວລາໃດໜຶ່ງ ຫຼື ເມື່ອສິ້ນສຸດໄລຍະເວລາຂອງສັນຍາ ສຳລັບການບໍລິການທີ່ລະບຸໄລຍະເວລາໄວ້ (ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນຢ່າງອື່ນໃນ 5.8.2.1 ແລະ 5.8.2.2 ຂ້າງລຸ່ມນີ້). ໂດຍທົ່ວໄປທະນາຄານໄດ້ໃຫ້ຂໍ້ສະຫຼຸບວ່າສິ່ງທີ່ກ່າວມານັ້ນແມ່ນເປັນຕົ້ນທຶນໃນການກະກຽມລາຍຮັບ ເພາະໂດຍທົ່ວໄປແລ້ວຕ້ອງຄວບຄຸມການບໍລິການຂອງຕົນກ່ອນທີ່ຈະໂອນໄປຍັງລູກຄ້າ.

5.8.2.1 ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າຈາກການບໍລິການທີ່ຂໍ້ຜູກພັນໃນການປະຕິບັດງານກຳນົດຊຳລະເມື່ອສິ້ນສຸດໄລຍະເວລາຂອງສັນຍາ

ຂໍ້ຜູກພັນໃນການປະຕິບັດງານກຳນົດຊຳລະເມື່ອສິ້ນສຸດໄລຍະເວລາຂອງສັນຍາການບໍລິການທີ່ລູກຄ້າໄດ້ຮັບ ແລະ ໃຊ້ປະໂຫຍດຈາກການປະຕິບັດງານຂອງທະນາຄານໃນຂະນະທີ່ທະນາຄານດຳເນີນການພ້ອມກັນ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.8 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ (ຕໍ່)

5.8.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ (ຕໍ່)

5.8.2.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າຈາກການບໍລິການທີ່ຂໍ້ຜູກພັນໃນການປະຕິບັດງານກຳນົດການຊຳລະນະເວລາໃດໜຶ່ງ

ການບໍລິການທີ່ຂໍ້ຜູກພັນໃນການປະຕິບັດງານກຳນົດການຊຳລະນະເວລາໃດໜຶ່ງແມ່ນຖືກຮັບຮູ້ເມື່ອການຄວບຄຸມການບໍລິການຖືກໂອນໃຫ້ລູກຄ້າ. ໂດຍທົ່ວໄປຈະເປັນການເຮັດທຸລະກຳສຳເລັດ ຫຼື ການບໍລິການ, ຫຼື ສຳລັບຄ່າທຳນຽມ ຫຼື ອົງປະກອບຂອງຄ່າທຳນຽມທີ່ເຊື່ອມຕໍ່ກັບການປະຕິບັດງານທີ່ແນ່ນອນ, ພາຍຫຼັງທີ່ປະຕິບັດເງື່ອນໄຂທີ່ສອດຄ້ອງກັນ. ສິ່ງເຫຼົ່ານີ້ລວມມີຄ່າທຳນຽມແລະຄ່ານາຍໜ້າທີ່ເກີດຂຶ້ນຈາກການເຈລະຈາຫຼືການເຂົ້າຮ່ວມໃນການເຈລະຈາທຸລະກຳສຳລັບພາກສ່ວນທີ່ສາມເຊັ່ນ: ການກຽມການ/ການມີສ່ວນຮ່ວມຫຼືການເຈລະຈາການຊື້ຮຸ້ນ ຫຼື ຫຼັກຊັບອື່ນໆ ຫຼື ການຊື້ຂາຍທຸລະກິດ, ຄ່າທຳນຽມນາຍໜ້າ ຫຼື ຊື້ຂາຍຫຼັກຊັບ.

ທະນາຄານໂດຍທົ່ວໄປມີພັນທະໃນການປະຕິບັດໜ້າວຽກທີ່ກ່ຽວຂ້ອງກັບການບໍລິການເຫຼົ່ານີ້, ເຊິ່ງແມ່ນເພື່ອປະຕິບັດການເຮັດທຸລະກຳໃຫ້ສຳເລັດດັ່ງທີ່ລະບຸໄວ້ໃນສັນຍາ.

5.8.3 ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນແມ່ນຖືກຮັບຮູ້ເມື່ອທະນາຄານຖືກປະກາດສິດໃນການຮັບການຊຳລະ.

5.8.4 ລາຍຮັບສຸດທິຈາກການຄ້າ

ເປັນຜົນທີ່ເກີດຂຶ້ນຈາກກິດຈະກຳການຄ້າປະກອບດ້ວຍທຸກກຳໄລ ແລະ ຂາດທຶນຈາກການປ່ຽນແປງໃນມູນຄ່າຍຸຕິທຳ ແລະ ລາຍຮັບ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ແລະ ເງິນປັນຜົນສຳລັບຊັບສິນ ແລະ ໜີ້ສິນທາງການເງິນ 'ຖືໄວ້ເພື່ອການຄ້າ'. ນີ້ປະກອບມີການບໍ່ມີປະສິດທິພາບທີ່ໄດ້ບັນທຶກໃນການເຮັດທຸລະກຳປ້ອງກັນຄວາມສ່ຽງ.

5.9 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດດັ່ງທີ່ໄດ້ອ້າງອີງຢູ່ໃນໃບລາຍງານກະແສເງິນສົດປະກອບດ້ວຍເງິນສົດໃນກຳມື, ເງິນຝາກກະແສລາຍວັນກັບທະນາຄານແຫ່ງ ສປປ ລາວ ແລະ ໜີ້ຕ້ອງຮັບຈາກທະນາຄານເຊິ່ງເປັນປະເພດກະແສລາຍວັນ, ກຳນົດ 3 ເດືອນ ຫຼື ຕ່ຳກວ່ານັ້ນ.

5.10 ຊັບສິນບັດ ແລະ ອຸປະກອນ

ຊັບສິນບັດ ແລະ ອຸປະກອນ ແມ່ນໄດ້ລາຍງານ ຕາມຕົ້ນທຶນຂອງການບໍລິການມື້ຕໍ່ມື້ ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງ ຂອງອາຍຸການນຳໃຊ້ ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າເສື່ອມຕາມຄວາມເໝາະສົມ ແລະ ເຮັດໃຫ້ມີການປ່ຽນແປງຕາມການຄາດຄະເນທາງການບັນຊີ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.10 ຊັບສິນບັດ ແລະ ອຸປະກອນ (ຕໍ່)

ຄ່າຫຼ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼ້ຍຫ້ຽນແບບສະເໝີຕົວ ເພື່ອຫຼຸດຕົ້ນທຶນຂອງຊັບສິນບັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອາຍຸການນຳໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງ ລຸ່ມນີ້:

ອາຄານ ແລະ ການປັບປຸງ	5%
ເຄື່ອງໃຊ້ຫ້ອງການ	20%
ເຟີນິເຈີ ແລະ ຕິດຕັ້ງ	20%
ພາຫະນະ	20%

ຊັບສິນບັດ ແລະ ອຸປະກອນຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນ ອະນາຄົດຈາກການນຳໃຊ້ຊັບສິນບັດ ແລະ ອຸປະກອນດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສິນບັດ (ຄິດໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສິນບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບຈາກການ ດຳເນີນງານອື່ນໆ" ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການຂອງປີທີ່ຊັບສິນບັດໄດ້ຖືກສະສາງອອກ.

5.11 ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນຂອງທະນາຄານປະກອບດ້ວຍ ສິດນຳໃຊ້ທີ່ດິນ ແລະ ຊັອບແວ.

ຊັບສິນບັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ເມື່ອຕົ້ນທຶນຂອງຊັບສິນບັດຄົງທີ່ສາມາດປະເມີນໄດ້ຢ່າງແນ່ນອນ ແລະ ມັນຈະ ສາມາດສ້າງຜົນປະໂຫຍດໃຫ້ແກ່ທະນາຄານໃນອະນາຄົດ.

ຊັບສິນບັດຄົງທີ່ທະນາຄານຍຶດມາໄດ້ຈະຖືກປະເມີນມູນຄ່າຕົ້ນທຶນເບື້ອງຕົ້ນ. ຕົ້ນທຶນຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ໄດ້ ມາ ຈາກການລວມທຸລະກິດຈະຖືກຮັບຮູ້ຕາມມູນຄ່າຍຸຕິທຳໃນມື້ທີ່ໄດ້ມາ. ຕໍ່ຈາກນັ້ນ, ຊັບສິນບັດຄົງທີ່ບໍ່ມີຕົວຕົນຈະຖືກຮັບ ຮູ້ ໂດຍການເອົາຕົ້ນທຶນລົບໃຫ້ຄ່າເສື່ອມສະສົມ.

ອາຍຸການນຳໃຊ້ຂອງຊັບສິນທີ່ບໍ່ມີຕົວຕົນ ແມ່ນໄດ້ຖືກປະເມີນ ໂດຍຈັດເປັນ ມີກຳນົດ ແລະ ບໍ່ມີກຳນົດ. ຊັບສິນບັດຄົງທີ່ບໍ່ມີ ຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນຖືກຫັກຄ່າເສື່ອມຕາມອາຍຸການນຳໃຊ້. ໄລຍະຂອງການຫັກຄ່າເສື່ອມ ແລະ ວິທີ ການຫັກຄ່າເສື່ອມສຳລັບຊັບສິນທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ກຳນົດຈະຖືກທົບທວນຄືນເປັນຢ່າງນ້ອຍສຸດໃນທ້າຍປີການ ບັນຊີ. ການປ່ຽນແປງອາຍຸການນຳໃຊ້ຄາດຄະເນແມ່ນຈະໄດ້ລົງບັນຊີເປັນການປ່ຽນແປງໄລຍະ ແລະ ວິທີຂອງການຫັກຄ່າ ເສື່ອມ, ຕາມຄວາມ ເໝາະສົມ ແລະ ຖືເປັນການປ່ຽນແປງການຄາດຄະເນໃນບັນຊີ. ລາຍຈ່າຍກ່ຽວກັບການຫັກຄ່າເສື່ອມ ຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນໄດ້ຖືຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະ ກິດຈະການໃນໝວດຂອງລາຍຈ່າຍທີ່ພົວພັນກັບຊັບສິນທີ່ບໍ່ມີຕົວຕົນ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.11 ຊັບສິນບັດຖິທີ່ບໍ່ມີຕົວຕົນ (ຕໍ່)

ຄ່າເສື່ອມຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າເສື່ອມແບບສະໝ່ຳສະເໝີເພື່ອຫຼຸດຕົ້ນທຶນຂອງຊັບສິນທີ່ບໍ່ມີຕົວຕົນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອັດຕາຄາດຄະເນການຫັກຄ່າເສື່ອມມີດັ່ງນີ້:

▶ ຊ້ອບແວ	2 - 5 ປີ

ສິດໃນການນຳໃຊ້ທີ່ດິນຂອງທະນາຄານແມ່ນບໍ່ມີຄ່າເສື່ອມ ເນື່ອງຈາກສິດໃນການນຳໃຊ້ທີ່ດິນແມ່ນມີອາຍຸການນຳໃຊ້ແບບບໍ່ຈຳກັດ ແລະ ອອກໃຫ້ໂດຍລັດຖະບານຂອງ ສປປ ລາວ.

5.12 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ

ທະນາຄານປະເມີນນະມື້ເຮັດເອກະສານລາຍງານ ວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດ ທະນາຄານປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກ ມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸຕິທຳຂອງຊັບສິນ ຫຼື ມູນຄ່າຍຸຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາ ຂອງຊັບສິນ ຫຼື ມູນຄ່າຂອງ CGU ຫຼາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫຼຸດລົງ ເພື່ອໃຫ້ໄດ້ມູນຄ່າປະຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫຼຸດກ່ອນອາກອນ ທີ່ສົ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປະຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະ ສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍເອົາຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບ ບໍລິສັດໃນເຄືອ ຫຼື ຕົວຊີ້ບອກມູນຄ່າຍຸຕິທຳອື່ນໆ.

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫຼຸດລົງ. ຖ້າຫາກມີຕົວຊີ້ບອກ, ທະນາຄານຈະຄາດຄະເນຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນ ມີການປ່ຽນແປງ ໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປັ້ນຄືນແມ່ນຖືກກຳນົດຂຶ້ນ ສະນັ້ນ ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດຍົກມາທີ່ຖືກກຳນົດລົບໃຫ້ຄ່າຫລ້ຽຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໃນປີຜ່ານມາ. ການປັ້ນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.13 *ເຄື່ອງມືທາງການເງິນອະນຸພັນ*

ສັນຍາແລກປ່ຽນ

ສັນຍາແລກປ່ຽນແມ່ນຂໍ້ຕົກລົງຕາມສັນຍາລະຫວ່າງສອງຝ່າຍເພື່ອແລກປ່ຽນກະແສການຊຳລະເງິນຕາມການເວລາໂດຍອີງໃສ່ຈຳນວນເງິນຕາມສັນຍາທີ່ລະບຸ, ທີ່ກ່ຽວຂ້ອງກັບການເຄື່ອນໄຫວໃນດັດຊະນີອ້າງອີງທີ່ລະບຸໄວ້ເຊັ່ນ: ອັດຕາດອກເບ້ຍ, ອັດຕາເງິນຕາຕ່າງປະເທດ ຫຼື ດັດຊະນີຫຸ້ນ.

ສັນຍາແລກປ່ຽນອັດຕາດອກເບ້ຍ ກ່ຽວພັນກັບສັນຍາທີ່ທະນາຄານອອກກັບຄູ່ຄ້າອື່ນໆ (ລູກຄ້າ ແລະ ສະຖາບັນການເງິນ) ເຊິ່ງທະນາຄານຈະໄດ້ຮັບ ຫລື ຈ່າຍດອກເບ້ຍຕາມອັດຕາດອກເບ້ຍລອຍຕົວ ໃນການແລກປ່ຽນກັບ ການຈ່າຍ ຫຼື ໄດ້ຮັບອັດຕາດອກຄົງທີ່ຕາມລຳດັບ. ກະແສການຊຳລະໂດຍປົກກະຕິແມ່ນສຸດທິເຊິ່ງກັນ ແລະ ກັນ, ເຊິ່ງຄວາມແຕກຕ່າງຈະຖືກຈ່າຍໂດຍຝ່າຍ ໜຶ່ງ ຕໍ່ອີກຝ່າຍໜຶ່ງ.

ໃນສັນຍາແລກປ່ຽນເງິນຕາ (ລວມຢູ່ໃນສັນຍາການແລກປ່ຽນເງິນຕາຕ່າງປະເທດ), ທະນາຄານຈ່າຍຈຳນວນທີ່ລະບຸໄວ້ເປັນສະກຸນເງິນໜຶ່ງ ແລະ ໄດ້ຮັບຈຳນວນທີ່ລະບຸໄວ້ເປັນສະກຸນເງິນອື່ນ. ສັນຍາແລກປ່ຽນເງິນຕາສ່ວນໃຫຍ່ແມ່ນການຊຳລະສະສາງ.

ສັນຍາແລກປ່ຽນສິນເຊື່ອທີ່ຜິດນັດຊຳລະແມ່ນຂໍ້ຕົກລົງສັນຍາລະຫວ່າງສອງຝ່າຍເພື່ອ ຊຳລະສະສາງກ່ຽວກັບເຫດການສິນເຊື່ອທີ່ໄດ້ກຳນົດ, ໂດຍອີງຕາມ ຈຳນວນເງິນຕາມສັນຍາທີ່ລະບຸ. ທະນາຄານຊື້ສັນຍາແລກປ່ຽນສິນເຊື່ອທີ່ຜິດນັດຊຳລະເພື່ອຫຼຸດຜ່ອນຄວາມສ່ຽງຂອງການຜິດນັດຊຳລະໂດຍຄູ່ຄ້າດ້ວຍສັນຍາແລກປ່ຽນທີ່ອ້າງອີງຈາກຫຼັກຊັບຄ້ຳປະກັນ *IFRS 7.31.*

ໂດຍບໍ່ມີການຄຳນຶງວ່າການຊຳລະໂດຍຜ່ານສຸມຊຳລະສະສາງ ຫລື ໂດຍກົງກັບຄູ່ຄ້າ, ສັນຍາແລກປ່ຽນສ່ວນໃຫຍ່ແມ່ນຊັບສິນຄ້ຳປະກັນຢ່າງເຕັມສ່ວນ ແລະ ຮຽກຮ້ອງໃຫ້ມີການຊຳລະສ່ວນເກີນປະຈຳວັນ. ການປະຕິບັດດັ່ງກ່າວຈະຊ່ວຍຫຼຸດຜ່ອນຄວາມສ່ຽງດ້ານການປ່ອຍສິນເຊື່ອຂອງທະນາຄານ, ແຕ່ຮຽກຮ້ອງການບໍລິຫານສະພາບຄ່ອງຫຼາຍຂຶ້ນຖ້າສະຖານະບໍ່ໄດ້ຮັບການຄ້ຳປະກັນ.

5.14 *ການຄ້ຳປະກັນທາງການເງິນ*

ໂດຍທົ່ວໄປ ທະນາຄານໄດ້ໃຫ້ການຄ້ຳປະກັນທາງການເງິນ, ປະກອບມີ ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ ແລະ ໜັງສືຕອບຮັບ. ການຄ້ຳປະກັນທາງການເງິນແມ່ນຖືກຮັບຮູ້ ໃນໄລຍະເອກະສານລາຍງານການເງິນສະເພາະກິດຈະການ (ພາຍໃຕ້ 'ໜີ້ສິນອື່ນໆ') ທີ່ມູນຄ່າຍຸດຕິທຳ, ພ້ອມຄ່າທຳນຽມ. ພາຍຫຼັງການຮັບຮູ້ ໜີ້ສິນຂອງທະນາຄານພາຍໃຕ້ໜັງສືຄ້ຳປະກັນແມ່ນຄິດໄລ່ໂດຍເອົາມູນຄ່າທີ່ຮັບຮູ້ພື້ນຖານທີ່ສູງກວ່າ ລົບຄ່າເສື່ອມສະສົມທີ່ຮັບຮູ້ໃນໃບລາຍງານການເງິນສະເພາະກິດຈະການ ແລະ ການຄາດຄະເນລາຍຈ່າຍທີ່ດີທີ່ສຸດທີ່ຕ້ອງຊຳລະຕາມພັນທະທີ່ເກີດຂຶ້ນຈາກໜັງສືຄ້ຳປະກັນ.

ທຸກໆການເພີ່ມຂຶ້ນຂອງໜີ້ສິນທີ່ກ່ຽວຂ້ອງກັບການຄ້ຳປະກັນທາງການເງິນແມ່ນຖືກບັນທຶກໄວ້ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ ໃນ 'ລາຍຈ່າຍເງິນແຮໜີ້ເສຍ'. ຄ່າທຳນຽມແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນ 'ລາຍຮັບສຸດທິຄ່າທຳນຽມ ແລະ ຄ່າບໍລິການ' ຕາມວິທີສະເໜີຕົວຕາມອາຍຸຂອງການຄ້ຳປະກັນ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.15 ການເຊົ່າ (ນຳໃຊ້ຕັ້ງແຕ່ວັນທີ 01 ມັງກອນ 2019)

5.15.1 ສິດນຳໃຊ້ຊັບສິນ

ເມື່ອເລີ່ມຕົ້ນສັນຍາການເຊົ່າ, ທະນາຄານຈະປະເມີນການຈັດສັນຍາເຊົ່າທີ່ອີງໃສ່ສັນຍາການເຊົ່າ ໂດຍໃຫ້ສອດຄ່ອງກັບສັນຍາທີ່ເຮັດໃຫ້ຜູ້ຊົມໃຊ້ (ຜູ້ເຊົ່າ) ມີສິດຄວບຄຸມການນຳໃຊ້ຊັບສິນທີ່ໄດ້ລະບຸໄວ້ເປັນໄລຍະເວລາໃດໜຶ່ງຊຶ່ງເປັນການແລກປ່ຽນ. ຖ້າໃນສັນຍາມີຫຼາຍກວ່າໜຶ່ງລາຍການຂອງການໃຫ້ເຊົ່າ ຫຼື ເປັນການລວມກັນຂອງທຸລະກຳການໃຫ້ເຊົ່າ ແລະການບໍລິການ, ແມ່ນພິຈາລະນາໂດຍການແບ່ງວ່າ ເປັນລາຍການໃຫ້ເຊົ່າ ຫຼື ເປັນລາຍການທີ່ບໍ່ໃຫ້ເຊົ່າ ດ້ວຍການສະຫຼຸບ ແລະ ດ້ວຍການຕີມູນຄ່າຄືນໃໝ່ຂອງສັນຍາ ບົນພື້ນຖານມູນຄ່າຂອງແຕ່ລະລາຍການເວລາແຍກຂາຍເປັນແຕ່ລະສ່ວນ. ທະນາຄານຈະລວມລາຍການທີ່ໃຫ້ເຊົ່າ ແລະ ບໍ່ໃຫ້ເຊົ່າ, ໃນກໍລະນີ ທີ່ມີບໍ່ມີລາຍການບໍ່ໃຫ້ເຊົ່າບໍ່ໄດ້.

ທະນາຄານຈະຮັບຮູ້ ສິດນຳໃຊ້ຊັບສິນທີ່ຖືກຕ້ອງໃນວັນທີ ທີ່ເລີ່ມຕົ້ນການເຊົ່າ (ຕົວຢ່າງ, ວັນທີ ທີ່ຊັບສິນພ້ອມໃຊ້ງານ). ສິດນຳໃຊ້ຊັບສິນແມ່ນຖືກຕີມູນຄ່າດ້ວຍມູນຄ່າຕົ້ນທຶນ ຫັກລົບໃຫ້ຄ່າຫຼ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າ, ແລະ ປັບປຸງສຳລັບການຕີມູນຄ່າຄືນໃໝ່ຂອງໜີ້ສິນທີ່ເປັນການເຊົ່າ. ມູນຄ່າຕົ້ນທຶນຂອງສິດນຳໃຊ້ຊັບສິນແມ່ນລວມເອົາຈຳນວນຂອງໜີ້ສິນທີ່ເປັນການເຊົ່າທີ່ໄດ້ຖືກດັດແກ້ສຳລັບການຈ່າຍຄ່າເຊົ່າ ທີ່ໄດ້ປະຕິບັດໄປແລ້ວ ຫຼື ກ່ອນມື້ທີ່ເລີ່ມຕົ້ນນຳໃຊ້, ບວກຄ່າໃຊ້ຈ່າຍທາງກົງໃນເບື້ອງຕົ້ນທີ່ເກີດຂຶ້ນ ແລະ ການຄາດຄະເນຄ່າໃຊ້ຈ່າຍໃນການຮື້ຖອນ ແລະ ເຄື່ອນຍ້າຍຊັບສິນ ຫຼື ການຟື້ນຟູຊັບສິນທີ່ຕິດພັນ ຫຼື ສະຖານທີ່ທີ່ມັນຕັ້ງຢູ່, ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ. ໄລຍະເວລາການເຊົ່າລວມເຖິງໄລຍະເວລາທີ່ກວມເອົາທາງເລືອກໃນການຂະຫຍາຍ ຖ້າຫາກວ່າກຸ່ມບໍລິສັດມີຄວາມໝັ້ນໃຈໃນການໃຊ້ທາງເລືອກນັ້ນ. ຍົກເວັ້ນກໍລະນີທີ່ທະນາຄານມີຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າຈະໄດ້ຮັບກຳມະສິດໃນຊັບສິນທີ່ໃຫ້ເຊົ່າເມື່ອສິ້ນສຸດໄລຍະເວລາການເຊົ່າ, ການຮັບຮູ້ ສິດນຳໃຊ້ຊັບສິນໃຫ້ເປັນຄ່າຫຼ້ຍຫ້ຽນບົນພື້ນຖານຮູບແບບການຄິດໄລ່ແບບເສັ້ນຊື່ຕາມອາຍຸການໃຊ້ງານ. ສິດນຳໃຊ້ຊັບສິນແມ່ນຂຶ້ນຢູ່ກັບຄ່າເສື່ອມມູນຄ່າ.

5.15.2 ໜີ້ສິນຕາມສັນຍາເຊົ່າ

ນະວັນທີ ທີ່ເລີ່ມຕົ້ນຂອງການເຊົ່າ, ທະນາຄານໄດ້ຮັບຮູ້ ໜີ້ສິນທີ່ເກີດຈາກການເຊົ່າຖືກຕີມູນຄ່າຕາມມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າຕາມໄລຍະເວລາຂອງການເຊົ່າ. ການຈ່າຍຄ່າເຊົ່າແມ່ນລວມເຖິງການຈ່າຍແບບຄົງທີ່ (ລວມທັງການຈ່າຍເປັນກຳມະສິດ) ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ, ການຈ່າຍຄ່າເຊົ່າຜັນແປ ເຊິ່ງຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ມູນຄ່າຄາດຄະເນວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າລວມເຖິງລາຄາການໃຊ້ສິດຂອງທາງເລືອກໃນການຊື້ທີ່ສົມເຫດສົມຜົນທີ່ທະນາຄານຈະຕ້ອງໃຊ້ ແລະ ການຈ່າຍຄ່າປັບໄໝສຳລັບການຍົກເລີກສັນຍາຫາກໄລຍະເວລາການເຊົ່າສະທ້ອນໃຫ້ເຫັນເຖິງການໃຊສິດຂອງທະນາຄານໃນການຍົກເລີກ. ຄ່າເຊົ່າຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນຊ່ວງເວລາທີ່ເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດມີການຊຳລະ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງຄ່າເຊົ່າ, ທະນາຄານນຳໃຊ້ອັດຕາດອກເບ້ຍເງິນກູ້ຢືມສ່ວນເພີ່ມນະມື້ທີ່ເລີ່ມການເຊົ່າ ຖ້າຫາກວ່າອັດຕາດອກເບ້ຍໃນການເຊົ່າບໍ່ສາມາດຫາໄດ້ໂດຍງ່າຍ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ມູນຄ່າຂອງໜີ້ສິນທີ່ເກີດຈາກການເຊົ່າແມ່ນຖືກເພີ່ມຂຶ້ນຕາມການເພີ່ມຂຶ້ນຂອງດອກເບ້ຍ ແລະ ຫຼຸດລົງສຳລັບຄ່າເຊົ່າທີ່ຕ້ອງຈ່າຍ. ນອກຈາກນີ້ ມູນຄ່າຕາມບັນຊີຂອງໜີ້ສິນທີ່ເກີດຈາກການເຊົ່າຈະຖືກຮັບຮູ້ ກໍຕໍ່ເມື່ອມີການປ່ຽນແປງໃນສ່ວນຂອງໄລຍະເວລາຂອງການຈ່າຍຄ່າເຊົ່າແບບຄົງທີ່ ທີ່ ທີ່ມີເນື້ອຫາສຳຄັນ ຫຼື ການປ່ຽນແປງທາງດ້ານການປະເມີນເພື່ອຊື້ຊັບສິນ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.15 ການເຊົ່າ (ນຳໃຊ້ຕັ້ງແຕ່ວັນທີ 01 ມັງກອນ 2019) (ຕໍ່)

5.15.3 ການເຊົ່າຊັບສິນໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ

ທະນາຄານນຳໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າໄລຍະສັ້ນທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ເລີ່ມຕົ້ນ ແລະ ບໍ່ມີຕົວເລືອກໃນການຊື້. ນອກຈາກນີ້ ຍັງໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ມາເປັນການເຊົ່າຊັບສິນທີ່ຖືກພິຈາລະນາໃຫ້ເປັນມູນຄ່າຕ່ຳ. ການຈ່າຍຄ່າເຊົ່າ ສຳລັບການເຊົ່າທີ່ມີໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ແມ່ນຖືກຮັບຮູ້ເປັນຄ່າໃຊ້ຈ່າຍຕາມວິທີເສັ້ນຊື່ຕາມອາຍຸສັນຍາເຊົ່າ.

5.15.4 ການຕັດສິນໃຈທີ່ສຳຄັນໃນການກຳນົດໄລຍະເວລາຂອງສັນຍາພ້ອມການຕໍ່ອາຍຸ

ທະນາຄານໄດ້ກຳນົດໄລຍະເວລາການເຊົ່າເປັນໄລຍະເວລາທີ່ບໍ່ສາມາດຍົກເລີກສັນຍາໄດ້, ລວມທັງໄລຍະເວລາທີ່ກວມເອົາທາງເລືອກທີ່ຈະຕໍ່ອາຍຸຂອງການເຊົ່າ ຖ້າຫາກວ່າມັນມີເຫດຜົນທີ່ແນ່ນອນໃນການຈັດຕັ້ງປະຕິບັດ, ຫຼື ໄລຍະເວລາໃດໜຶ່ງທີ່ກວມເອົາທາງເລືອກທີ່ຈະຢຸດສັນຍາເຊົ່າ, ຖ້າຫາກວ່າ ມັນມີເຫດຜົນທີ່ແນ່ນອນວ່າ ບໍ່ຄວນສືບຕໍ່ເຊົ່າຕໍ່ໄປ.

ທະນາຄານນຳໃຊ້ການຕັດສິນໃຈໃນການປະເມີນວ່າ ມີເຫດຜົນທີ່ແນ່ນອນບໍ ທີ່ຈະສືບຕໍ່ໃນການຕໍ່ອາຍຸສັນຍາເຊົ່າ. ນັ້ນແມ່ນການພິຈາລະນາທຸກໆປັດໄຈທີ່ກ່ຽວຂ້ອງທີ່ຈະສ້າງແຮງຈູງໃຈໃນການຕໍ່ອາຍຸສັນຍາເພື່ອດຳເນີນທຸລະກິດ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ທະນາຄານໄດ້ໃຫ້ການປະເມີນຄືນສັນຍາເຊົ່າ ຖ້າຫາກມີເຫດການທີ່ສຳຄັນ ຫຼື ການປ່ຽນແປງໃນສະພາບການທີ່ຢູ່ໃນການຄວບຄຸມ ແລະ ສິ່ງຜົນກະທົບຕໍ່ຄວາມສາມາດໃນການດຳເນີນງານ (ຫຼື ການບໍ່ດຳເນີນງານ) ທາງເລືອກໃນການຕໍ່ສັນຍາ (ຕົວຢ່າງ ການປ່ຽນແປງຍຸດທະສາດຂອງທຸລະກິດ). ທະນາຄານໄດ້ລວມເອົາໄລຍະເວລາຕໍ່ອາຍຸສັນຍາເຊົ່າສຳລັບການເຊົ່າສະຖານທີ່ ແລະ ອຸປະກອນໄອທີ ເນື່ອງຈາກຄວາມສຳຄັນຂອງຊັບສິນເຫຼົ່ານີ້ເຂົ້າໃນການດຳເນີນງານຂອງທະນາຄານ.

5.16 ການເຊົ່າ (ເລີ່ມໃຊ້ກ່ອນ ວັນທີ 01 ມັງກອນ 2019)

ການກຳນົດ ວ່າຂໍ້ຕົກລົງເປັນການເຊົ່າ ຫຼື ບໍ່ເປັນການເຊົ່າ ຫຼື ບໍ່ນັ້ນ ແມ່ນຂຶ້ນຢູ່ກັບເນື້ອຫາຂອງການຕົກລົງ ແລະ ຕ້ອງມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນຂຶ້ນຢູ່ກັບການໃຊ້ຊັບສິນ ຫຼື ຊັບສິນທີ່ສະເພາະເຈາະຈົງ ແລະ ຂໍ້ຕົກລົງທີ່ບົ່ງບອກເຖິງ ສິດໃນການໃຊ້ຊັບສິນ.

ທະນາຄານໃນຖານະຜູ້ເຊົ່າ

ການເຊົ່າ, ບ່ອນທີ່ຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຂອງການເປັນເຈົ້າຂອງສິ່ງທີ່ເຊົ່າບໍ່ຖືກໂອນເຂົ້າທະນາຄານແມ່ນການເຮັດສັນຍາເຊົ່າ. ການຈ່າຍຄ່າເຊົ່າໄດ້ຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍໃນ ການຄິດໄລ່ກຳໄລ ຫຼື ຂາດທຶນຕາມວິທີການຄິດໄລ່ແບບເສັ້ນຊື່ຕາມໄລຍະເວລາການເຊົ່າ. ຄ່າເຊົ່າທີ່ສົມເຫດສົມຜົນແມ່ນຖືກຮັບຮູ້ວ່າເປັນຄ່າໃຊ້ຈ່າຍ ພາຍໃນຊ່ວງເວລາທີ່ການເຊົ່າເກີດຂຶ້ນ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.17 ຜົນປະໂຫຍດຂອງພະນັກງານ

ຜົນປະໂຫຍດພາຍຫຼັງອອກການ (ເລີ່ມນຳໃຊ້ຕັ້ງແຕ່ວັນທີ 01 ມັງກອນ 2019)

ຜົນປະໂຫຍດພາຍຫຼັງອອກການ ຈະຈ່າຍໃຫ້ແກ່ພະນັກງານທີ່ກະສຽນອາຍຸຂອງພະນັກງານຂອງທະນາຄານ ເມື່ອເວລາທີ່ກະສຽນອາຍຸ ໂດຍເອົາຈຳນວນວັນ ເທົ່າກັບ (ເງິນເດືອນພື້ນຖານຄັ້ງລ່າສຸດ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ (ຖ້າມີ) + 25% ຂອງຜົນປະໂຫຍດອື່ນໆ) x 1,5 x ປີການເຮັດວຽກ.

ກອງທຶນເພື່ອຜົນປະໂຫຍດພາຍຫຼັງອອກການ ແມ່ນມາຈາກ:

(i) ຄ້ຳສຳຮອງກະສຽນອາຍຸທີ່ຮັບຈາກພະນັກງານ ເຊິ່ງທະນາຄານໄດ້ຫັກເງິນເດືອນຂອງພະນັກງານ (5,5%) ຂອງຈຳນວນເງິນ (ເທົ່າກັບເງິນເດືອນພື້ນຖານ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ + 25% ຂອງຜົນປະໂຫຍດອື່ນໆ);

(ii) ແລະ ເງິນສົມທົບຈາກທະນາຄານເປັນລາຍເດືອນ ເຊິ່ງເທົ່າກັບ 6% ຂອງຈຳນວນເງິນ (ເທົ່າກັບ ເງິນເດືອນພື້ນຖານ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ + 25% ຂອງຜົນປະໂຫຍດອື່ນໆ);

ທະນາຄານໄດ້ບັນທຶກເງິນສົມທົບເປັນ *'ເງິນເດືອນ ແລະ ຄ່າໃຊ້ຈ່າຍພະນັກງານອື່ນໆ'* ເຂົ້າໃນເອກະສານລາຍງານຜົນໄດ້ຮັບສະເພາະກິດຈະການ ເມື່ອມີການຈ່າຍເງິນດັ່ງກ່າວ.

ຜົນປະໂຫຍດຫຼັງອອກການ (ນຳໃຊ້ ກ່ອນວັນທີ 01 ມັງກອນ 2019)

ຜົນປະໂຫຍດຫຼັງອອກການ ແມ່ນຈະຖືກຈ່າຍໃຫ້ພະນັກງານທະນາຄານ ນະເວລາກະສຽນຈາກ:

(i) ຄ້ຳສຳຮອງເງິນບຳເນັດ ສົມທົບໂດຍພະນັກງານ, ສຳລັບທະນາຄານຫັກຈາກເງິນເດືອນພື້ນຖານຂອງພະນັກງານທຸກໆເດືອນ , (ອັດຕາຄ້ຳແຮເງິນບຳເນັດທີ່ໄດ້ນຳໃຊ້ໃນປະຈຸບັນທີ່ຫັກໄວ້ແມ່ນ 8,00%) ແລະ ທະນາຄານໄດ້ບັນທຶກເປັນ "ໜີ້ສິນອື່ນໆ" ໃນໃບລາຍງານຖານະການເງິນສະເພາະກິດຈະການ.

(ii) ການສົມທົບທຶນຂອງທະນາຄານແມ່ນເທົ່າທຽມກັບ ຈຳນວນເດືອນເຮັດວຽກຂອງພະນັກງານກັບທະນາຄານ ຄູນໃຫ້ 15,00% ຂອງເງິນເດືອນລ້າສຸດ. ທະນາຄານບັນທຶກ ເງິນສົມທົບດັ່ງກ່າວເປັນ 'ເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ' ເຂົ້າໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ ເມື່ອລາຍຈ່າຍເຫຼົ່ານັ້ນໄດ້ຮັບການຊຳລະ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.17 *ຜົນປະໂຫຍດຂອງພະນັກງານ* (ຕໍ່)

ຜົນປະໂຫຍດຈາກການເລີກຈ້າງ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງ ວັນທີ 28 ມັງກອນ 2014, ທະນາຄານມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດສືບຕໍ່ເຮັດ ວຽກໄດ້;
- ກໍລະນີທະນາຄານພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງການເຮັດວຽກພາຍໃນອົງກອນ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານ ໂດຍ ອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານ ເດືອນສຸດທ້າຍຄູນໃຫ້ຈຳນວນເດືອນທີ່ເຮັດວຽກກັບທະນາຄານ. ນະວັນທີ 31 ທັນວາ 2019, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ທະນາຄານບໍ່ໄດ້ ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນສະເພາະກິດຈະການ.

5.18 *ເງິນແຮ*

ເງິນແຮ ຈະຖືກຮັບຮູ້ ກໍ່ຕໍ່ເມື່ອທະນາຄານມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕີຄວາມ) ເນື່ອງມາ ຈາກເຫດການທີ່ຜ່ານ ມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວ ຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ທະນາຄານກຳນົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດ ກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການພາສີ ເຊິ່ງແມ່ນອັດຕາການປັດຈຸບັນທີ່ກຳນົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການພາຍຫຼັງໄດ້ຮັບເງິນຄືນ.

5.19 *ອາກອນກຳໄລ*

ອາກອນພາຍໃນປີ

ຊັບສິນ ແລະ ໜີ້ສິນອາກອນພາຍໃນໄລຍະ ສຳລັບປີປະຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະເກັບ ຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນມີຜົນ ສັກສິດນຳໃຊ້ໃນມື້ສ້າງໃບລາຍງານຖານະການເງິນ ພາຍໃນປະເທດທີ່ທະນາຄານດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງ ເສຍອາກອນ.

ອາກອນລາຍໄດ້ພາຍໃນໄລຍະທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີທຶນແມ່ນຖືກຮັບຮູ້ໃນທຶນເຈົ້າຂອງ ແລະ ບໍ່ໄດ້ມີ ການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຜູ້ບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍ ອີງຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.19 *ອາກອນກຳໄລ* (ຕໍ່)

ອາກອນເຍື້ອນຊຳລະ

ອາກອນລົ້ຳຊຳລະສະສາງແມ່ນຖືກຄິດໄລ່ ຈາກສ່ວນຜິດຕ່ຽງຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ໜີ້ຕ້ອງສິ່ງອາກອນລົ້ຳຊຳລະສະສາງແມ່ນຖືກຮັບຮູ້ເປັນ ສ່ວນຕ່າງອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນອາກອນລົ້ຳຊຳລະສະສາງເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນການເຄື່ອນໄຫວທີ່ບໍ່ແມ່ນການສ້ຽລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງ ດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຖືກອາກອນ.

ຍອດຍົກມາຂອງໜີ້ຕ້ອງຮັບທາງອາກອນ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າ ຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງໜີ້ ຕ້ອງຮັບອາກອນຈະຖືກອະນຸຍາດໃຫ້ຫັກ. ໜີ້ຕ້ອງ ຮັບອາກອນທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ໜີ້ຕ້ອງຮັບອາກອນ ສາມາດຫັກອອກໄດ້.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງອາກອນລົ້ຳຊຳລະສະສາງແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ ພາຍໃນ ໄລຍະ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍ ສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ລາຍງານເອກະສານການເງິນ.

ອາກອນພາຍໃນປີ ແລະ ອາກອນເຍື້ອນຊຳລະຈະຖືກຮັບຮູ້ຜົນປະໂຫຍດທາງອາກອນ ຫຼື ຄ່າໃຊ້ຈ່າຍໃນໃບລາຍງານຜົນການ ດຳເນີນງານ, ຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸດຕິທຳຂອງຊັບສິນທີ່ມີໄວ້ສຳລັບການຂາຍ, ການຜິດ ຕ່ຽງອັດຕາແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ຊຶ່ງສາມາດຄິດຄ່າທຳນຽມ ຫຼື ບັນທຶກບັນຊີເປັນ OCI. ຂໍ້ ຍົກເວັ້ນເຫຼົ່ານີ້ແມ່ນໄດ້ຖືກຈັດປະເພດຄືນໃໝ່ ຈາກ OCI ໄປ ໃບລາຍງານຜົນການດຳເນີນງານ ໃນບັນຊີກຳໄລ ຫຼື ຂາດທຶນ ເຍື້ອນຊຳລະ. ທະນາຄານຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການຊຳລະສະສາງ ທີ່ກ່ຽວຂ້ອງກັບເຄື່ອງມືທາງດ້ານການເງິນ ທີ່ຖືກ ຈັດປະເພດເປັນທຶນເຈົ້າຂອງ.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງອາກອນລົ້ຳຊຳລະສະສາງແມ່ນໄດ້ຖືກຫັກລ້າງ ຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ເພື່ອຫັກ ລ້າງຊັບສິນອາກອນ ແລະ ໜີ້ສິນອາກອນ ແລະ ທະນາຄານມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

5.20 *ຊັບສິນທີ່ໄດ້ຮັບໝອບໝາຍອຳນາດ*

ທະນາຄານໄດ້ໃຫ້ບໍລິການກ່ຽວກັບກອງທຶນ ແລະ ການບໍລິການບໍລິຫານຊັບສິນ ເຊິ່ງເປັນຜົນເຮັດໃຫ້ທະນາຄານໄດ້ຖືຄອງ ຫຼື ໄດ້ຮັບສິດໃນການລົງທຶນໃນນາມລູກຄ້າຂອງທະນາຄານ. ຊັບສິນດັ່ງກ່າວ ບໍ່ໄດ້ຖືກສະແດງໃນເອກະສານລາຍງານການເງິນ ຂອງທະນາຄານ, ເນື່ອງຈາກຊັບສິນເຫຼົ່ານັ້ນ ບໍ່ແມ່ນຊັບສິນຂອງທະນາຄານ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.21 ຄັງສຳຮອງທຶນເຈົ້າຂອງ

ຄັງສຳຮອງຖືກບັນທຶກເປັນທຶນ ໃນເອກະສານລາຍງານການເງິນສະເພາະກິດຈະການ ຂອງທະນາຄານ, ເຊິ່ງລວມມີ:

- ຄັງສຳຮອງຕາມລະບຽບການ, ເຊິ່ງຖືກສ້າງຂຶ້ນຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ, ລາຍລະອຽດຢູ່ບົດອະທິບາຍເລກທີ 32; ແລະ
- ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ, ເຊິ່ງປະກອບດ້ວຍສ່ວນປ່ຽນແປງຂອງມູນຄ່າຍຸຕິທຳຂອງຫຼັກຊັບມີໄວ້ເພື່ອຂາຍ. ລາຍລະອຽດຢູ່ບົດອະທິບາຍເລກທີ 33.

5.22 ມາດຕະຖານທີ່ອອກແລ້ວ ແຕ່ຍັງບໍ່ຖືກນຳໃຊ້

ມາດຕະຖານ ແລະ ການຕີຄວາມໝາຍທີ່ອອກແລ້ວ ແຕ່ຍັງບໍ່ຖືກນຳໃຊ້ຈົນເຖິງມື້ອອກບົດລາຍງານການເງິນ ຂອງທະນາຄານ ແມ່ນໄດ້ເປີດເຜີຍດັ່ງລຸ່ມນີ້.

IFRS 9 - ເຄື່ອງມືທາງການເງິນ

ໃນເດືອນກໍລະກົດ 2014, IASB ອອກມາດຕະຖານບັນຊີສະບັບສຸດທ້າຍຂອງ IFRS 9 - ເຄື່ອງມືທາງການເງິນທີ່ສະທ້ອນໃຫ້ເຫັນເຖິງຂັ້ນຕອນຂອງແຕ່ລະຮູບແບບຂອງເຄື່ອງມືທາງການເງິນທັງໝົດ. ແລະ ນຳມາໃຊ້ແທນ IAS 39 - ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ວັດແທກ ແລະ IFRS 9 ສະບັບກ່ອນໜ້າທັງໝົດ. ມາດຕະຖານໄດ້ລະບຸຄວາມຮຽກຮ້ອງຕ້ອງການໃໝ່ ໃນການຈັດປະເພດ ແລະ ການວັດແທກ, ການເສື່ອມມູນຄ່າ ແລະ ການປ້ອງກັນຄວາມສ່ຽງທາງບັນຊີ. IFRS 9 ມີຜົນບັງຄັບໃຊ້ໃນໄລຍະເວລາເລີ່ມຕົ້ນຂອງປີ ຫຼື ຫຼັງຈາກ ວັນທີ 1 ມັງກອນ 2018 ແລະ ອະນຸຍາດໃຫ້ຈັດຕັ້ງປະຕິບັດລ່ວງໜ້າ. ປັບປຸງບັນຊີຍ້ອນຫຼັງແມ່ນມີຄວາມຈຳເປັນ ແຕ່ວ່າຂໍ້ມູນປຽບທຽບແມ່ນບໍ່ໄດ້ບັງຄັບໃນການນຳສະເໜີ. ການນຳໃຊ້ IFRS 9 ມີຜົນກະທົບຕໍ່ການຈັດປະເພດ ແລະ ການວັດແທກຊັບສິນທາງການເງິນຂອງທະນາຄານ ແຕ່ຈະບໍ່ມີຜົນກະທົບຕໍ່ໜີ້ສິນທາງການເງິນຂອງທະນາຄານ.

ໃນປີ 2019, ທະນາຄານໄດ້ປະຕິບັດຕາມຄຳແນະນຳໃນໜັງສືແຈ້ງການສະບັບເລກທີ 1659/ທຫລ ລົງວັນທີ 14 ທັນວາ 2018 ໂດຍທະນາຄານແຫ່ງ ສປປ ລາວ ແລະ ແຈ້ງການເລກທີ 19/ສຄຄຊ ລົງວັນທີ 23 ພະຈິກ 2018 ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມນະໂຍບາຍການບັນຊີສຳລັບການຮັບຮູ້ ແລະ ການຕີລາຄາເຄື່ອງມືທາງການເງິນຕາມ IAS 39: "ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການຕີລາຄາ" ແທນ IFRS 9: "ເຄື່ອງມືການເງິນ".

5.23 ມາດຕະຖານທີ່ອອກແລ້ວ ແຕ່ຍັງບໍ່ທັນມີຜົນບັງຄັບໃຊ້

ມາດຕະຖານ ແລະ ການຕີຄວາມໝາຍທີ່ໄດ້ວາງອອກ, ແຕ່ວ່າຍັງບໍ່ທັນມີຜົນບັງຄັບໃຊ້, ຈົນເຖິງມື້ອອກເອກະສານລາຍງານການເງິນສະເພາະກິດຈະການ ຂອງທະນາຄານ ແມ່ນໄດ້ເປີດເຜີຍດັ່ງຕໍ່ໄປນີ້. ທະນາຄານຈະຮັບຮອງເອົາມາດຕະຖານເຫຼົ່ານີ້, ຖ້າສາມາດນຳໃຊ້ໄດ້ໃນເວລາທີ່ມາດຕະຖານດັ່ງກ່າວໄດ້ມີຜົນບັງຄັບໃຊ້.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.23 *ມາດຕະຖານທີ່ຍັງບໍ່ທັນບັງຄັບໃຊ້ (ຕໍ່)*

ການປັບປຸງ IFRS 3: ນິຍາມທຸລະກິດ

ໃນເດືອນຕຸລາ 2018, IASB ໄດ້ອອກແຈ້ງການດັດແກ້ ຄຳນິຍາມຂອງທຸລະກິດໃນ IFRS 3 ການປະສົມປະສານທຸລະກິດ ເພື່ອຊ່ວຍໃຫ້ບັນດາອົງກອນ ກຳນົດວ່າບັນດາກິດຈະກຳ ແລະ ຊັບສິນທີ່ໄດ້ມານັ້ນແມ່ນທຸລະກິດ ຫຼື ບໍ່. ພວກເຂົາຊີ້ແຈງຂໍ້ກຳນົດຂັ້ນຕ່ຳສຸດສຳລັບທຸລະກິດ, ລຶບລ້າງການປະເມີນວ່າຜູ້ເຂົ້າຮ່ວມຕະຫຼາດມີຄວາມສາມາດປ່ຽນແທນອົງປະກອບໃດໜຶ່ງທີ່ຂາດຫາຍໄປ ຫຼື ບໍ່, ເພີ່ມຄຳແນະນຳ ເພື່ອຊ່ວຍໃຫ້ອົງກອນປະເມີນວ່າຂະບວນການທີ່ໄດ້ມານັ້ນມີຄວາມສຳຄັນ, ຈຳກັດຄຳນິຍາມຂອງທຸລະກິດ ແລະ ຜົນໄດ້ຮັບໃຫ້ແຄບລົງ, ແລະ ແນະນຳການທົດສອບຄວາມເອົາໃຈໃສ່ຕໍ່ມູນຄ່າຍຸຕິທຳແບບທາງເລືອກ. ແບບຢ່າງທີ່ໄດ້ສະແດງໃໝ່ແມ່ນຖືກສະໜອງພ້ອມກັບການດັດແກ້.

ເນື່ອງຈາກວ່າການປັບປຸງດັ່ງກ່າວມີຜົນບັງຄັບໃຊ້ໃນການເຮັດທຸລະກຳ ຫຼື ເຫດການອື່ນໆທີ່ເກີດຂຶ້ນໃນວັນທີ ຫຼື ຫຼັງຈາກການນຳໃຊ້ຄັ້ງທຳອິດ, ທະນາຄານຈະບໍ່ໄດ້ຮັບຜົນກະທົບຈາກການປັບປຸງເຫຼົ່ານີ້ໃນວັນປ່ຽນແປງ.

ການປັບປຸງ IAS 1 ແລະ IAS 8: ນິຍາມຂອງຄ່າສຳຄັນທຽບຖານ

ໃນເດືອນຕຸລາ 2018, IASB ໄດ້ອອກການປັບປຸງ IAS 1 ການນຳສະເໜີບົດລາຍງານດ້ານການເງິນ ແລະ IAS 8 ນະໂຍບາຍການບັນຊີ, ການປ່ຽນແປງການຄາດຄະເນການບັນຊີ ແລະ ຂໍ້ຜິດພາດເພື່ອໃຫ້ສອດຄ່ອງກັບຄຳນິຍາມຂອງ 'ຄ່າສຳຄັນທຽບຖານ' ໃນທົ່ວມາດຕະຖານ ແລະ ເພື່ອຊີ້ແຈງບາງດ້ານຂອງ ຄຳນິຍາມ. ຄຳນິຍາມໃໝ່ລະບຸວ່າ, 'ຂໍ້ມູນແມ່ນມີຄວາມສຳຄັນຖ້າຫາກວ່າການລະເວັ້ນ, ການລະບຸທີ່ບໍ່ຖືກຕ້ອງ ຫຼື ການປິດບັງຂໍ້ມູນມັນອາດຈະເປັນສາຍເຫດທີ່ຈະມີອິດທິພົນຕໍ່ການຕັດສິນໃຈທີ່ຜູ້ນຳໃຊ້ຕົ້ນຕໍຕາມຈຸດປະສົງຂອງບົດລາຍງານການເງິນທີ່ໄດ້ສ້າງຂຶ້ນບົນພື້ນຖານຂອງບົດລາຍງານການເງິນເຫຼົ່ານັ້ນ, ເຊິ່ງໄດ້ສະໜອງຂໍ້ມູນທາງການເງິນກ່ຽວກັບອົງກອນທີ່ລາຍງານໂດຍສະເພາະ.

ການປັບປຸງຄຳນິຍາມຂອງຄ່າສຳຄັນທຽບຖານບໍ່ໄດ້ຖືກຄາດວ່າຈະມີຜົນກະທົບທີ່ສຳຄັນຕໍ່ເອກະສານລາຍງານເງິນສະເພາະກິດຈະການຂອງທະນາຄານ.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງຂໍ້ສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນສະເພາະກິດຈະການຂອງທະນາຄານ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີການພິ ຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວ ຂ້ອງ, ລວມທັງການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາອາດຈະເຮັດໃຫ້ເກີດມີຄວາມຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງທະນາຄານ, ຄະນະບໍລິຫານໄດ້ພິຈາລະນາດັ່ງນີ້ ເຊິ່ງມີຜົນກະທົບອັນສຳຄັນໃຫ້ແກ່ຕົວເລກການຮັບຮູ້ທີ່ມີຄວາມສ່ຽງຫຼາຍ ເຊິ່ງຜົນມາຈາກເຄື່ອງມືການດັດແກ້ທີ່ສຳຄັນຂອງມູນຄ່າຕົວຈິງຂອງຊັບສິນ ແລະ ໜີ້ສິນພາຍໃນໄລຍະການເງິນ ຕໍ່ໜ້າ. ທະນາຄານໄດ້ອີງໃສ່ຂໍ້ສົມມຸດຖານ ແລະ ການຄາດຄະເນຂອງຕົນ ກ່ຽວກັບການກຳນົດເວລາທີ່ມີການລາຍງານທາງດ້ານການເງິນທີ່ຖືກກະກຽມ. ສະພາບການ ແລະ ສົມມຸດຖານກ່ຽວກັບການພັດທະນາໃນອະນາຄົດ, ຢ່າງໃດກໍ່ຕາມ, ອາດຈະມີການປ່ຽນແປງ ເນື່ອງມາຈາກການປ່ຽນແປງຂອງຕະຫຼາດ ຫຼື ສະພາບການທີ່ຄວບຄຸມທະນາຄານ. ການປ່ຽນແປງດັ່ງກ່າວໄດ້ສະທ້ອນໃຫ້ເຫັນໃນຂໍ້ສົມມຸດຖານໃນເວລາທີ່ເກີດຂຶ້ນ.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

6.1 *ຄວາມສົບເນື່ອງໃນການດຳເນີນທຸລະກິດ*

ຄະນະອຳນວຍການຂອງທະນາຄານໄດ້ປະເມີນຄວາມອາດສາມາດຂອງທະນາຄານ ກໍ່ຄືຄວາມສົບເນື່ອງໃນການດຳເນີນທຸລະກິດ ແລະ ເປັນທີ່ໜ້າພໍໃຈວ່າທະນາຄານມີແຫລ່ງທຶນ ເພື່ອສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດ. ຍິ່ງໄປກວ່ານັ້ນ, ຄະນະອຳນວຍການບໍ່ມີສິ່ງຜິດປົກກະຕິໃດໆເປັນທີ່ໜ້າສົງໃສຕໍ່ກັບຄວາມອາດສາມາດຂອງທະນາຄານ ເພື່ອສືບຕໍ່ດຳເນີນງານ ກໍ່ຄືຄວາມສົບເນື່ອງໃນການດຳເນີນທຸລະກິດ. ເພາະສະນັ້ນ, ເອກະສານລາຍງານການເງິນສະເພາະກິດຈະການ ແມ່ນຍັງສືບຕໍ່ສ້າງຂຶ້ນບົນພື້ນຖານ ຄວາມສົບເນື່ອງໃນການດຳເນີນທຸລະກິດ.

6.2 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 5.2.3, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຄິງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໄໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

6.3 *ການຂາດທຶນຈາກຄ່າເສື່ອມມູນຄ່າຂອງເງິນກູ້ ແລະ ເງິນລ່ວງໜ້າ*

ທະນາຄານໄດ້ມີການທົບທວນເງິນໃຫ້ກູ້ ແລະ ເງິນລ່ວງໜ້າທີ່ສຳຄັນເປັນແຕ່ລະບຸກຄົນຕາມແຕ່ລະວັນທີລາຍງານ ເພື່ອປະເມີນວ່າການຂາດທຶນຈາກຄ່າເສື່ອມມູນຄ່າ ຄວນຖືກບັນທຶກລົງໃນໃບລາຍງານຜົນການດຳເນີນງານ ຫຼື ບໍ່.

ວິທີການປະເມີນຄ່າເສື່ອມມູນຄ່າຂອງທະນາຄານສຳລັບຊັບສິນທີ່ບັນທຶກໂດຍວິທີຫັກລົບຕົ້ນທຶນ ເປັນຜົນໃຫ້ມີການບັນທຶກເງິນແຮສຳລັບ:

- ການເສື່ອມມູນຄ່າສະເພາະຕາມຄວາມສຳຄັນແບບລາຍການ ຫຼື ຊັບສິນສ່ຽງທີ່ຖືກກຳນົດວ່າສຳຄັນ;
- ການເສື່ອມມູນຄ່າເປັນກຸ່ມ

ລາຍລະອຽດຂອງແຕ່ລະປະເພດໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 5.4.1 ເຊິ່ງປະກອບດ້ວຍການຕັດສິນໃຈຂອງຄະນະອຳນວຍການ, ໂດຍສະເພາະແລ້ວຈະມີການປະເມີນມູນຄ່າ ແລະ ກຳນົດເວລາຂອງກະແສເງິນສົດໃນອະນາຄົດ ແລະ ມູນຄ່າຫຼັກຊັບຄ້ຳປະກັນ ເມື່ອມີການຂາດທຶນຈາກຄ່າເສື່ອມມູນຄ່າ. ການປະເມີນດັ່ງກ່າວມາຈາກຈຳນວນຂອງປັດໄຈ, ການປ່ຽນແປງຂອງລາຍການທີ່ເຮັດໃຫ້ເກີດຄວາມແຕກຕ່າງຂອງຜົນຕອບແທນ.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

6.4 ການເສື່ອມມູນຄ່າຂອງຊັບສິນມີໄວ້ເພື່ອຂາຍ

ທະນາຄານທົບທວນຄືນຕາສານໜີ້ຂອງຕົນທີ່ຈັດປະເພດເປັນການລົງທຶນທີ່ມີໄວ້ເພື່ອຂາຍໃນແຕ່ລະວັນທີ່ລາຍງານເພື່ອປະເມີນວ່າພວກມັນໄດ້ເຊື່ອມມູນຄ່າ ຫຼື ບໍ່ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 5.4.2

ການປະເມີນຜົນດັ່ງກ່າວນີ້, ລວມທັງການຄາດຄະເນກະແສເງິນສົດໃນອະນາຄົດ ແລະ ຂໍ້ມູນທີ່ປະກອບເຂົ້າອື່ນໆເຂົ້າໃນຮູບແບບກະແສເງິນສົດແບບສ່ວນຫຼຸດ ແລະ ໃນກໍລະນີຂອງຕາສານທຶນ, ການຕີມູນຄ່າຂອງສິ່ງທີ່ເປັນ 'ທີ່ສຳຄັນ' ຫຼື 'ເປັນເວລາດົນ' ແມ່ນຮຽກຮ້ອງໃຫ້ມີການຕັດສິນໃຈ. ໃນການຕັດສິນໃຈດັ່ງກ່າວນີ້, ທະນາຄານການປະເມີນ, ໃນບັນດາປັດໄຈອື່ນໆ, ປະຫວັດການເຄື່ອນໄຫວຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ຂອບເຂດທີ່ມູນຄ່າຍຸຕິທຳຂອງການລົງທຶນແມ່ນຕ່ຳກ່ວາຕົ້ນທຶນ.

7. ລາຍຮັບສຸດທິດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

	2019 *ລ້ານກີບ*	*2018* *ລ້ານກີບ*
ລາຍຮັບດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ ຈາກ:		
ດອກເບ້ຍເງິນກູ້ຢືມໃຫ້ກັບລູກຄ້າ	1.924.038	1.722.144
ດອກເບ້ຍເງິນຝາກຢູ່ທະນາຄານອື່ນໆ	61.795	43.935
ການລົງທຶນໃນຫຼັກຊັບ	166.478	165.015
ກິດຈະກຳອື່ນໆ	146	470
	2.152.457	**1.931.564**
ລາຍຈ່າຍດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສຳລັບ:		
ດອກເບ້ຍຄ້າງຈ່າຍໃຫ້ແກ່ທະນາຄານ	(283.997)	(184.996)
ດອກເບ້ຍຄ້າງຈ່າຍໃຫ້ແກ່ລູກຄ້າ	(909.704)	(815.581)
	(1.193.701)	**(1.000.577)**
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	**958.756**	**930.987**

8. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	2019 *ລ້ານກີບ*	*2018* *ລ້ານກີບ*
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	181.324	157.223
ທຸລະກຳທຳດ້ານການເງິນ	40.924	86.808
ຄ່າທຳນຽມ ແລະຄ່າບໍລິການອື່ນໆ	23.634	14.650
	245.882	**258.681**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ບໍລິການຊຳລະສະສາງ	(25.694)	(20.396)
ທຸລະກຳທາງດ້ານການເງິນ	(4.281)	(1.621)
	(29.975)	**(22.017)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**215.907**	**236.664**

9. ກຳໄລສຸດທິຈາກການແລກປ່ຽນເງິນຕາ

	2019 *ລ້ານກີບ*	*2018* *ລ້ານກີບ*
ກຳໄລຈາກການຊື້ຂາຍເງິນຕາ ແລະ ການຕີມູນຄ່າລາຍການທີ່ເປັນເງິນ	4.622.077	4.727.302
ຂາດທຶນຈາກການຊື້ຂາຍເງິນຕາ ແລະ ການຕີມູນຄ່າລາຍການທີ່ເປັນເງິນ	(4.587.328)	(4.677.583)
	34.749	**49.719**

10. ຂາດທຶນສຸດທິຈາກອະນຸພັນທາງການເງິນ

	2019 *ລ້ານກີບ*	*2018* *ລ້ານກີບ*
ກຳໄລຈາກອະນຸພັນທາງການເງິນ	1.518	-
ຂາດທຶນຈາກອະນຸພັນທາງການເງິນ	(2.722)	-
	(1.204)	**-**

11. ລາຍຮັບອື່ນໆຈາກການດຳເນີນງານ

	2019 *ລ້ານກີບ*	*2018* *ລ້ານກີບ*
ລາຍຮັບເງິນປັນຜົນ	10.133	32.638
ລາຍຮັບຈາກການຂາຍເງິນລົງທຶນໃນບໍລິສັດຮ່ວມທຶນ	-	6.977
ລາຍຮັບຈາກການຂາຍຊັບສິນບັດຄົງທີ່	922	-
ເກັບຄືນໜີ້ສູນທີ່ສະສາງອອກ	58.758	4.879
ຕົ້ນທຶນການບໍລິການທີ່ຜ່ານມາສຳລັບການດັດແກ້ແຜນຜົນປະໂຫຍດທີ່ກຳນົດ	25.874	-
ອື່ນໆ	20.325	2.613
	116.012	**47.107**

12. ຄ່າເສື່ອມມູນຄ່າການລົງທຶນທາງດ້ານການເງິນ

	2019 *ລ້ານກີບ*	*2018* *ລ້ານກີບ*
ຄ່າເສື່ອມມູນຄ່າ ສຳລັບການລົງທຶນຫຼັກຊັບມີໄວ້ເພື່ອຂາຍ	(21.860)	(29.721)
ເກັບຄືນແຮຄ່າເສື່ອມ ສຳລັບການລົງທຶນຫຼັກຊັບຖືໄວ້ຄົບກຳນົດ *(ບົດອະທິບາຍເລກທີ 20)*	1.210	2.475
	(20.650)	**(27.246)**

13. ລາຍຈ່າຍພະນັກງານ

	2019 *ລ້ານກີບ*	*2018* *ລ້ານກີບ*
ເງິນເດືອນ	161.128	146.989
ເງິນບຳເນັດ ແລະ ເງິນອຸດໜູນອື່ນໆ	124.842	153.896
ເງິນອຸດໜູນພາຍຫຼັງອອກການ *(ບົດອະທິບາຍເລກທີ 30)*	7.325	24.134
ຄ່າໃຊ້ຈ່າຍອື່ນໆຂອງພະນັກງານ	7.317	6.756
	300.612	**331.775**

14. ລາຍຈ່າຍອື່ນໆຈາກການດຳເນີນງານ

	2019 *ລ້ານກີບ*	*2018* *ລ້ານກີບ*
ຄ່າສ້ອມແປງ ແລະ ບຳລຸງຮັກສາ	23.399	23.228
ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	13.270	8.274
ຄ່າເຊົ່າຫ້ອງການ	-	8.027
ຄ່າການສື່ສານ	9.613	7.662
ຄ່າການຝຶກອົບຮົມ, ປະຊຸມ ແລະ ສຳມະນາ	15.840	17.087
ຄ່າເບ້ຍປະກັນໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	30.794	27.038
ລາຍຈ່າຍດອກເບ້ຍໜີ້ສິນຕາມສັນຍາເຊົ່າ	443	-
ຄ່າອາກອນ ແລະ ພັນທະອື່ນໆ	14.220	162
ຄ່າປະກັນໄພ	8.256	6.230
ຄ່າສາທາລະນຸປະໂພກ	9.501	8.232
ຄ່ານ້ຳມັນ	2.406	2.276
ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ	21.024	16.966
ຄ່າທີ່ປຶກສາ ແລະ ການບໍລິການທາງການເງິນ	5.992	4.012
ການສະສາງຊັບສິນພວມກໍ່ສ້າງ	13.351	-
ລາຍຈ່າຍເງິນຖືກລັກໂລບ	-	4.011
ອື່ນໆ	11,175	19.047
	179.284	**152.252**

15. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນສົດໃນຄັງເປັນເງິນກີບ	1.235.425	961.723
ເງິນສົດໃນຄັງເປັນເງິນຕາຕ່າງປະເທດ	814.671	681.517
ຍອດເຫຼືອຢູ່ ທຫລ		
- ເງິນຝາກແຮບັງຄັບ (*)	1.399.542	1.294.828
- ເງິນຝາກກະແສລາຍວັນ	5.752.407	2.396.172
	9.202.045	**5.334.240**

ຍອດເຫຼືອກັບທະນາຄານກາງປະກອບດ້ວຍບັນຊີເງິນຝາກເພື່ອການຊຳລະສະສາງ ແລະ ເງິນຝາກແຮບັງຄັບ. ຍອດເຫຼືອເຫຼົ່ານີ້ ບໍ່ມີດອກເບ້ຍ.

(*) ພາຍໃຕ້ລະບຽບການຂອງທະນາຄານກາງ, ທະນາຄານຖືກຮຽກຮ້ອງໃຫ້ຮັກສາຄັງສະສົມເງິນສົດກັບທະນາຄານກາງໃນຮູບແບບເງິນຝາກແຮບັງຄັບ, ເຊິ່ງຖືກຄິດໄລ່ 5,00% ສຳລັບສະກຸນເງິນກີບ ແລະ 10,00% ສຳລັບສະກຸນເງິນຕ່າງປະເທດ, ສອງອາທິດຕໍ່ຄັ້ງ (2018: 5,00% ແລະ 10,00%) ຂອງເງິນຝາກລູກຄ້າທີ່ມີມື້ຄົບການິດຕ່ຳກວ່າ 12 ເດືອນ. ພາຍໃນປີ, ທະນາຄານໄດ້ຮັກສາຍອດເງິນຝາກແຮບັງຄັບໃນມູນຄ່າທີ່ຖືກຕ້ອງຕາມລະບຽບຂອງ ທຫລ.

16. ໜີ້ຕ້ອງຮັບຈາກທະນາຄານອື່ນ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	**3.919.881**	**2.698.317**
- ເປັນເງິນກີບ	23	1.229
- ເປັນເງິນຕາຕ່າງປະເທດ	3.919.858	2.697.088
ເງິນຝາກມີກຳນົດ	**573.655**	**1.035.102**
- ເປັນເງິນກີບ	219.775	291.068
- ເປັນເງິນຕາຕ່າງປະເທດ	353.880	744.034
	4.493.536	**3.733.419**

ອັດຕາດອກເບ້ຍສຳລັບໜີ້ຕ້ອງຮັບທະນາຄານອື່ນພາຍໃນປີມີດັ່ງລຸ່ມນີ້:

	2019 *% ຕໍ່ປີ*	*2018* *% ຕໍ່ປີ*
ເງິນຝາກກະແສລາຍວັນ	0,00% - 3,10%	0,00% - 0,80%
ເງິນຝາກປະຢັດ	0,00% - 0,80%	0,00% - 0,80%
ເງິກຝາກມີກຳນົດ	0,85% - 4,95%	0,85% - 4,00%

17. ເງິນກູ້ໃຫ້ລູກຄ້າ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນກູ້ໃຫ້ລູກຄ້າທັງໝົດ	28.141.033	24.845.276
ປະກອບມີ:		
ເງິນກູ້ທີ່ໄດ້ຮັບທຶນຈາກການກູ້ຢືມເງິນຈາກ ທຫລ *(ບົດອະທິບາຍເລກທີ 28)*	*1.825.039*	*2.063.243*
ລົບ: ເງິນແຮຂາດທຶນຈາກການເສື່ອມຄ່າ *(ບົດອະທິບາຍເລກທີ 18)*	(650.541)	(478.416)
	27.490.492	**24.366.860**

ອັດຕາດອກເບ້ຍສຳລັບເງິນກູ້ທຸລະກິດພາຍໃນໄລຍະມີ ດັ່ງລຸ່ມນີ້:

	2019 *ອັດຕາດອກເບ້ຍ* *% ຕໍ່ປີ*	*2018* *ອັດຕາດອກເບ້ຍ* *% ຕໍ່ປີ*
ເງິນກູ້ເປັນເງິນ ກີບ	6,00% - 16,00%	6,00% - 16,00%
ເງິນກູ້ເປັນເງິນ ໂດລາ	5,80% - 16,00%	4,00% - 16,00%
ເງິນກູ້ເປັນເງິນ ບາດ	6,00% - 10,00%	6,00% - 11,50%

17. ເງິນກູ້ໃຫ້ລູກຄ້າ (ຕໍ່)

ເງິນກູ້ໄຈ້ແຍກຕາມສະກຸນເງິນ:

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ເງິນກູ້ເປັນເງິນ ກີບ	12.649.118	10.988.474
ເງິນກູ້ເປັນເງິນ ໂດລາ	12.054.073	10.842.780
ເງິນກູ້ເປັນເງິນ ບາດ	3.437.842	3.014.022
	28.141.033	**24.845.276**

ເງິນກູ້ໄຈ້ແຍກຕາມມື້ຄົບກຳນົດເດີມ:

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ເງິນກູ້ໄລຍະສັ້ນ	1.581.901	1.825.034
ເງິນກູ້ໄລຍະກາງ	16.311.131	14.431.801
ເງິນກູ້ໄລຍະຍາວ	10.248.001	8.588.441
	28.141.033	**24.845.276**

ການວິເຄາະຖານະເງິນກູ້ຂອງລູກຄ້າສຳລັບແຕ່ລະຂະແໜງອຸດສາຫະກຳ ດັ່ງລຸ່ມນີ້:

	31/12/2019		*31/12/2018*	
	ລ້ານກີບ	*%*	*ລ້ານກີບ*	*%*
ຂະແໜງ ອຸດສາຫະກຳ	14.778.834	52,52%	12.931.637	52,05%
ຂະແໜງ ກໍ່ສ້າງ	4.319.800	15,35%	3.374.610	13,58%
ຂະແໜງ ປະກອບວັດຖຸເຕັກນິກ	75.996	0,27%	85.352	0,34%
ຂະແໜງ ກະສິກຳ - ປ່າໄມ້	64.855	0,23%	74.248	0,30%
ຂະແໜງ ການຄ້າ	4.272.155	15,18%	4.336.508	17,45%
ຂະແໜງ ຂົນສົ່ງໄປສະນີ	726.588	2,58%	688.078	2,77%
ຂະແໜງ ບໍລິການ	3.575.691	12,71%	2.875.026	11,57%
ຂະແໜງ ຫັດຖະກຳ	3.187	0,01%	3.456	0,01%
ຂະແໜງ ອື່ນໆ	323.927	1,15%	476.361	1,92%
	28.141.033	**100%**	**24.845.276**	**100%**

18. ເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ

ສ່ວນປ່ຽນແປງໃນເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ກັບລູກຄ້າ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2019 ມີດັ່ງລຸ່ມນີ້:

	2019 *ລ້ານກີບ*	*2018* *ລ້ານກີບ*
ຍອດເຫຼືອ ນະວັນທີ 1 ມັງກອນ	**478.416**	**481.013**
ປ່ຽນແປງສຸດທິພາຍໃນໄລຍະ	314.919	221.957
ສະສາງໜີ້ຕ້ອງຮັບທວງຍາກ	(164.410)	(232.259)
ສ່ວນຕ່າງຈາກອັດຕາແລກປ່ຽນ	21.616	7.705
ຍອດເຫຼືອນະວັນທີ 31 ທັນວາ	**650.541**	**478.416**

ລາຍລະອຽດເງິນແຮສຳລັບການເສື່ອມຄ່າຂອງເງິນກູ້ໃຫ້ກັບລູກຄ້າ ນະວັນທີ 31 ທັນວາ 2019 ແລະ ວັນທີ 31 ທັນວາ 2018 ມີດັ່ງລຸ່ມນີ້:

	31/12/2019		*31/12/2018*	
	ຍອດເຫຼືອທ້າຍ *ລ້ານກີບ*	*ຄ່າເສື່ອມ* *ລ້ານກີບ*	*ຍອດເຫຼືອທ້າຍ* *ລ້ານກີບ*	*ຄ່າເສື່ອມ* *ລ້ານກີບ*
ຄ່າເສື່ອມຈາກການປະເມີນເງິນກູ້ແບບດ່ຽວ	4.008.282	401.513	1.859.522	291.960
ຄ່າເສື່ອມຈາກການປະເມີນເງິນກູ້ແບບກຸ່ມ	22.979.708	249.028	22.478.847	186.456
	26.987.990	**650.541**	**24.338.369**	**478.416**

19. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ຫຼັກຊັບປະເພດທຶນຂອງ ບໍລິສັດ ຜະລິດໄຟຟ້າລາວ (*)	129.623	151.483
	129.623	**151.483**

(*) ນະວັນທີ 31 ທັນວາ 2019, ມູນຄ່າຮຸ້ນແມ່ນມີການດ້ອຍຄ່າຕ່ຳກວ່າມູນຄ່າຕົ້ນທຶນ 181.204 ລ້ານກີບ ຈຳນວນ 51.581 ລ້ານກີບ.

20. ການລົງທຶນປະເພດຖືໄວ້ຈົນຄົບກຳນົດ

	31/12/2019 ລ້ານກີບ	*31/12/2018 ລ້ານກີບ*
ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດຄັງເງິນທີ່ອອກໂດຍ ກະຊວງການເງິນ	900.930	1.916.549
ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດທີ່ອອກໂດຍກະຊວງ ການເງິນ	2.552.979	1.737.433
	3.453.937	**3.653.982**
ຄ່າເສື່ອມມູນຄ່າຂອງການຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ	-	(1.210)
- ຄ່າເສື່ອມມູນຄ່າຈາກພັນທະບັດຄັງເງິນທີ່ອອກໂດຍ ກະຊວງການ ເງິນ	-	-
- ຄ່າເສື່ອມມູນຄ່າຈາກພັນທະບັດທີ່ອອກໂດຍ ກະຊວງການເງິນ	-	*(1.210)*
	3.453.937	**3.652.772**

ການປ່ຽນແປງໃນເງິນແຮຄ່າເສື່ອມຈາກ ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ມີດັ່ງນີ້:

	2019 ລ້ານກີບ	*2018 ລ້ານກີບ*
ຍອດເຫຼືອ ນະວັນທີ 1 ມັງກອນ	**(1.210)**	**(3.685)**
ເກັບຄືນເງິນແຮຄ່າເສື່ອມສຸດທິພາຍໃນປີ	1.210	2.475
ຍອດເຫຼືອນະວັນທີ 31 ທັນວາ	**-**	**(1.210)**

20.1 ພັນທະບັດຄັງເງິນ ທີ່ອອກໂດຍ ກະຊວງການເງິນ

ຫົວໜ່ວຍ: ລ້ານກີບ

ໄລຍະເວລາ	*ມື້ທີ່ຊື້*	*ມື້ຄົບກຳນົດ*	*ມູນຄ່າໜ້າບັດ*	*ມູນຄ່າຕາມວິທີ ຫຼຸດຕົ້ນທຶນລົງ ມູນຄ່າ*	*ອັດຕາດອກເບ້ຍ ຕໍ່ປີ*
1 ປີ	22 ກຸມພາ 19	22 ກຸມພາ 20	300.000	312.776	5,00%
1 ປີ	7 ມີນາ 19	7 ມີນາ 20	73.000	75.968	5,00%
1 ປີ	22 ມີນາ 19	22 ມີນາ 20	68.600	71.247	5,00%
1 ປີ	5 ເມສາ 19	5 ເມສາ 20	150.000	151.853	5,30%
1 ປີ	12 ເມສາ 19	12 ເມສາ 20	50.000	51.784	5,00%
1 ປີ	26 ເມສາ 19	26 ເມສາ 20	20.000	20.675	5,00%
1 ປີ	31 ພຶດສະພາ 19	31 ພຶດສະພາ 20	68.000	69.968	5,00%
1 ປີ	14 ມິຖຸນາ 19	14 ມິຖຸນາ 20	100.000	102.702	5,00%
1 ປີ	28 ມິຖຸນາ 19	28 ມິຖຸນາ 20	42.880	43.957	5,00%
			872.480	**900.929**	

20. ການລົງທຶນປະເພດຖືໄວ້ຄົບກຳນົດ (ຕໍ່)

20.2 ພັນທະບັດທີ່ອອກໂດຍກະຊວງການເງິນ

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ພັນທະບັດເພີ່ມທຶນ	-	70.600
ພັນທະບັດອື່ນໆ	2.553.008	1.666.833
	2.553.008	**1.737.433**

20.2.1 ພັນທະບັດອື່ນໆ

ລາຍລະອຽດຂອງພັນທະບັດອື່ນໆ ຕາມມື້ຄົບກຳນົດຂອງສັນຍາ ມີດັ່ງຕໍ່ໄປນີ້:

	ມູນຄ່າໜ້າບັດ	*ມູນຄ່າຕາມວິທີຫຼຸດຕົ້ນທຶນລົງ*
	ລ້ານກີບ	*ລ້ານກີບ*
ພາຍໃນ 1 ປີ	50.000	45.683
1 ຫາ 5 ປີ	1.697.049	1.724.318
ຫຼາຍກວ່າ 5 ປີ	755.634	782.978
	2.502.683	**2.552.979**

ລາຍລະອຽດຂອງດອກເບ້ຍພັນທະບັດອື່ນໆ ຕາມມື້ຄົບກຳນົດຂອງສັນຍາ ມີດັ່ງຕໍ່ໄປນີ້:

	2019	*2018*
	(% ຕໍ່ປີ)	*(% ຕໍ່ປີ)*
ພາຍໃນ 1 ປີ	4,00%	3,00 - 5,30%
1 ຫາ 5 ປີ	3,00 - 6,95%	3,00 - 6,95%
ຫຼາຍກວ່າ 5 ປີ	4,00 - 4,80%	4,00 - 4,80%

ພັນທະບັດອື່ນໆ ເປັນພັນທະບັດທີ່ອອກໂດຍກະຊວງການເງິນໃຫ້ເພື່ອ (i) ຊຳລະໜີ້ທີ່ໄດ້ຮັບຈາກກະຊວງການເງິນ ຫຼື (ii) ຊຳລະໜີ້ໃຫ້ແກ່ທະນາຄານໂດຍລູກຄ້າທີ່ເປັນເຈົ້າໜີ້ຂອງກະຊວງການເງິນ.

21. ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ

	31/12/2019		*31/12/2018*	
	ມູນຄ່າລົງທຶນ ລ້ານກີບ	*ຄວາມເປັນເຈົ້າ ຂອງ %*	*ມູນຄ່າລົງທຶນ ລ້ານກີບ*	*ຄວາມເປັນເຈົ້າ ຂອງ %*
ການລົງທຶນໃນບໍລິສັດໃນເຄືອ				
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	70.000	70%	70.000	70%
ການລົງທຶນໃນການຮ່ວມທຶນ				
ທະນາຄານຮ່ວມທຸລະກິດລາວ-ຫວຽດ	197.839	25%	197.839	25%
ບໍລິສັດປະກັນໄພລາວ-ຫວຽດ	9.168	35%	9.168	35%
ທະນາຄານ ລາວ-ຈີນ ຈຳກັດ	147.000	49%	147.000	49%
ທະນາຄານ ລາວ-ຝຣັ່ງ ຈຳກັດ	90.000	30%	90.000	30%
ບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ	2.040	20%	-	-
	516.047		**514.007**	

- ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ເປັນທຸລະກິດໜຶ່ງທີ່ຈົດທະບຽນຢູ່ ສປປ ລາວ ແລະ ດຳເນີນທຸລະກິດ ພາຍໃຕ້ໃບທະບຽນວິສະຫະກິດເລກທີ 180-10 ລົງວັນທີ 14 ທັນວາ 2010 ອອກໂດຍກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ແຫ່ງ ສປປ ລາວ, ວຽກງານຕົ້ນຕໍຂອງບໍລິສັດດັ່ງກ່າວ ແມ່ນສະໜອງການບໍລິການທາງດ້ານນາຍໜ້າ, ການຄ້ຳກຳມະສິດ, ໃຫ້ຄຳປຶກສາດ້ານການເງິນ ແລະ ການລົງທຶນໃນຫຼັກຊັບ, ບໍລິການທາງດ້ານການຄຸ້ມຄອງ, ຄ້ຳປະກັນ ການອອກຮຸ້ນ ແລະ ບໍລິການອື່ນໆ.

- ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ (LVB) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ, ເຊິ່ງມີສຳນັກງານໃຫຍ່ ຕັ້ງຢູ່ ນະຄອນຫລວງວຽງຈັນ ແລະ ດຳເນີນທຸລະກິດສະໜອງການບໍລິການທາງດ້ານທະນາຄານ. ເປັນບໍລິສັດທີ່ຮ່ວມທຶນ ກັບທະນາຄານເພື່ອການລົງທຶນ ແລະ ການພັດທະນາຂອງຫວຽດນາມ, ເຊິ່ງເປັນທະນາຄານທຸລະກິດລັດທີ່ດຳເນີນທຸລະກິດ ຢູ່ ສສ ຫວຽດນາມ. LVB ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 31 ມີນາ 2000 ອອກ ໂດຍທະນາຄານແຫ່ງ ສປປ ລາວ ເປັນໄລຍະເວລາ 30 ປີ. ໃນປີ 2015, LVB ໄດ້ເພີ່ມທຶນຈົດທະບຽນເປັນ 791.357.560.000 ກີບ. ອັດຕາສ່ວນການຮ່ວມທຶນຂອງທະນາຄານໃນ ທຄລ ພາຍຫຼັງທຶນເພີ່ມຂຶ້ນ 25% ອີງຕາມ ໃບ ອະນຸຍາດການລົງທຶນ ເລກທີ 004-15/KH-DDT4 ທີ່ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ, ວັນທີ 24 ສິງຫາ 2015 ທຽບເທົ່າເງິນກີບເທົ່າກັບ 197.839.390.000 ກີບ.

- ບໍລິສັດປະກັນໄພລາວຫວຽດ (LVI) ເປັນທຸລະກິດທີ່ຈົດທະບຽນເປັນບໍລິສັດຮ່ວມທຶນ ຢູ່ ສປປ ລາວ, ສະໜອງການ ບໍລິການທາງດ້ານການປະກັນໄພ ພາຍໃຕ້ໃບອະນຸຍາດການລົງທຶນເລກທີ 077/08/FIMC ອອກໂດຍຄະນະກຳມະການຄຸ້ມ ຄອງການລົງທຶນຕ່າງປະເທດ, ລົງວັນທີ 09 ມິຖຸນາ 2008. ເປັນການຮ່ວມທຶນກັບບໍລິສັດຫຸ້ນສ່ວນປະກັນໄພ BIDV ແລະ ທະນາຄານຮ່ວມທຸລະກິດລາວຫວຽດ. ນະວັນທີ 31 ທັນວາ 2019, ທະນາຄານໄດ້ປະກອບທຶນທັງໝົດໃນມູນຄ່າ 1.050.000 ໂດລາ ຫຼື ທຽບເທົ່າກັບ 9.168 ລ້ານກີບ.

- ທະນາຄານ ລາວ-ຈີນ ຈຳກັດ (LCNB) ເປັນທຸລະກິດທີ່ດຳເນີນກ່ຽວກັບການບໍລິການດ້ານການທະນາຄານຢູ່ໃນ ສປປ ລາວ. ທະນາຄານລາວ-ຈີນ ເປັນທະນາຄານຮ່ວມທຶນກັບ ທະນາຄານ ຟູດ້ຽນ ຈີນ ເຊິ່ງແມ່ນທະນາຄານທຸລະກິດຂອງລັດທີ່ດຳເນີນ ການຢູ່ປະເທດຈີນ. LCNB ດຳເນີນທຸລະກິດ ພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 20 ມັງກອນ 2014 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຂອງ LCNB ແມ່ນ 300.000 ລ້ານກີບ ແລະ ນະວັນທີ 31 ທັນວາ 2019 ຂາຮຸ້ນໄດ້ປະກອບທຶນຄົບຕາມຈຳນວນດັ່ງກ່າວ.

21. ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ (ຕໍ່)

- ທະນາຄານ ລາວ-ຝຣັ່ງ ຈຳກັດ (BFL) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫລວງວຽງຈັນ ແລະ ສະໜອງການບໍລິການທາງດ້ານການທະນາຄານ. ທະນາຄານ ລາວ-ຝຣັ່ງ ຖືກສ້າງຂຶ້ນໂດຍໄດ້ ຮ່ວມທຶນກັບ Cofibred Company Frances De La Bred ເຊິ່ງເປັນທະນາຄານທຸລະກິດລັດ ທີ່ດຳເນີນທຸລະກິດຢູ່ ປາຣີ, ປະເທດ ຝຣັ່ງ. BFL ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນ ການທະນາຄານຊົ່ວຄາວ ລົງວັນທີ 01 ຕຸລາ 2009 ແລະ ໃບອະນຸຍາດຖາວອນ ລົງວັນທີ 16 ກໍລະກົດ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຕາມກົດ ໝາຍຂອງທະນາຄານ BFL ແມ່ນ 20 ລ້ານໂດລາ ເຊິ່ງໄດ້ເພີ່ມເປັນ 37 ລ້ານໂດລາ, ອີງຕາມບົດບັນຍັດຂອງປະທານປະເທດ ອອກໃນ ວັນທີ 24 ກັນຍາ 2009 ແລະ ໜັງສືເລກທີ. 01/ທຫລ ລົງວັນທີ 28 ມັງກອນ 2010 ຈາກ ທຫລ.

- ບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ (LAPNet) ແມ່ນເປັນບໍລິສັດໜຶ່ງທີ່ສ້າງຕັ້ງໃນ ສປປ ລາວ ພາຍໃຕ້ໃບ ທະບຽນວິສາຫະກິດ ເລກທີ 0349 ອອກໂດຍ ກົມຄຸ້ມຄອງທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ ລົງວັນທີ 12 ມີນາ 2019 ເຊິ່ງໃຫ້ບໍລິການທາງການເງິນ. ເປັນການຮ່ວມມືລະຫວ່າງທະນາຄານ ແຫ່ງ ສປປ ລາວ, Union Pay International, ທະນາຄານພັດທະນາລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານຮ່ວມ ພັດທະນາ ແລະ ທະນາຄານລາວ-ຫວຽດ ແລະ ທະນາຄານ. ບໍລິສັດມີທຶນຈົດທະບຽນ ມູນຄ່າ 34.000 ລ້ານກີບ. ນະວັນທີ 31 ທັນວາ 2019, ການປະກອບທຶນທັງໝົດຂອງທະນາຄານໃນບໍລິສັດນີ້ມີ ຈຳນວນ 2.040 ລ້ານກີບ.

22. ຊັບສິນບັດ ແລະ ອຸປະກອນ

ຕົ້ນທຶນ:	*ອາຄານ ແລະ ການປັບປຸງ ລ້ານກີບ*	*ອຸປະກອນ ຫ້ອງການ ລ້ານກີບ*	*ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ*	*ພາຫະນະ ລ້ານກີບ*	*ລວມ ລ້ານກີບ*
ວັນທີ 1 ມັງກອນ 2019	474.933	151.886	39.575	19.756	686.150
ຊື້ເພີ້ມໃໝ່	29.725	44.161	4.109	3.513	81.508
ຈົດລ້າງອອກ	(10.921)	(34.046)	(6.132)	(5.232)	(56.331)
ວັນທີ 31 ທັນວາ 2019	493.737	162.001	37.552	18.037	711.327
ຄ່າຫຼ້ຍຫ້ຽນສະສົມ:					
ວັນທີ 1 ມັງກອນ 2019	134.055	67.446	25.426	9.985	236.912
ຫັກຄ່າຫຼ້ຍຫ້ຽນໃນປີ	26.785	31.594	5.823	3.886	68.088
ຈົດລ້າງອອກ	(6.710)	(31.702)	(6.012)	(4.970)	(49.394)
ວັນທີ 31 ທັນວາ 2019	154.130	67.338	25.237	8.901	255.606
ມູນຄ່າຍັງເຫຼືອສຸດທິ:					
ວັນທີ 1 ມັງກອນ 2019	340.878	84.440	14.149	9.771	449.238
ວັນທີ 31 ທັນວາ 2019	339.607	94.663	12.315	9.136	455.721

23. ຊັບສິນບັດຖຶງທີ່ບໍ່ມີຕົວຕົນ

	ສິດນຳໃຊ້ທີ່ດິນ ລ້ານກີບ	*ໂປຼແກຼມຄອມພິວເຕີ ລ້ານກີບ*	*ລວມ ລ້ານກີບ*
ຕົ້ນທຶນ:			
ນະວັນທີ 1 ມັງກອນ 2019	240.619	16.505	257.124
ຊື້ເພີ່ມ	14.374	4.985	19.359
ຈົດລ້າງອອກ	(17.382)	(7.444)	(24.826)
ວັນທີ 31 ທັນວາ 2019	237.611	14.046	251.657
ຄ່າເສື່ອມສະສົມ:			
ວັນທີ 1 ມັງກອນ 2019	-	10.528	10.528
ຫັກຄ່າເສື່ອມພາຍໃນປີ	-	3.531	3.531
ຈົດລ້າງອອກ	-	(7.444)	(7.444)
ວັນທີ 31 ທັນວາ 2019	-	6.615	6.615
ມູນຄ່າຍັງເຫຼືອສຸດທິ:			
ວັນທີ 1 ມັງກອນ 2019	240.619	5.977	246.596
ວັນທີ 31 ທັນວາ 2019	237.611	7.431	245.042

24. ສິດນຳໃຊ້ຊັບສິນ

	ທີ່ດິນ ແລະ ອາຄານ ລ້ານກີບ
ຕົ້ນທຶນ:	
ນະວັນທີ 1 ມັງກອນ 2019	50.503
ຊື້ເພີ່ມ	20.561
ວັນທີ 31 ທັນວາ 2019	71.064
ຄ່າຫຼ້ຍຫ້ຽນສະສົມ:	
ວັນທີ 1 ມັງກອນ 2019	9.600
ຫັກຄ່າຫຼ້ຍຫ້ຽນພາຍໃນປີ	6.650
ວັນທີ 31 ທັນວາ 2019	16.250
ມູນຄ່າຍັງເຫຼືອສຸດທິ:	
ວັນທີ 1 ມັງກອນ 2019	40.903
ວັນທີ 31 ທັນວາ 2019	54.814

25. ຊັບສິນອື່ນໆ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ຊັບສິນມີໄວ້ເພື່ອຂາຍ	250.272	255.438
ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນອື່ນໆ	5.165	8.558
ແຊ້ກາພອມຮຽກເກັບ	13.734	6.671
ຊັບສິນພວມກໍ່ສ້າງ ແລະ ຊັບສິມບັດພວມຊື້ (*)	75.072	65.079
ລາຍຈ່າຍລ່ວງໜ້າແບ່ງສ່ວນຈ່າຍ	33.951	61.557
ເງິນຈ່າຍລ່ວງໜ້າສຳລັບການດຳເນີນງານອື່ນໆ	31.014	27.233
ເງິນຈ່າຍລ່ວງໜ້າສຳລັບຜູ້ສະໜອງ	58.231	34.565
ອື່ນໆ	3.991	5.830
	471.430	**464.931**

(*) ການເຄື່ອນໄຫວຂອງຊັບສິນພວມກໍ່ສ້າງ ແລະ ຊັບສິມບັດພວມຊື້ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ມີດັ່ງນີ້:

	ສິດນຳໃຊ້ທີ່ດິນ *ລ້ານກີບ*	*ອາຄານ ແລະ ການປັບປຸງ* *ລ້ານກີບ*	*ອື່ນໆ* *ລ້ານກີບ*	*ລວມ* *ລ້ານກີບ*
ວັນທີ 1 ມັງກອນ 2019	**541**	**38.630**	**25.908**	**65.079**
ຊື້ເພີ່ມ	17.684	26.241	76.787	120.712
ໂອນໄປຊັບສິນຄົງທີ່	(14.374)	(26.666)	(50.987)	(92.027)
ໂອນໄປຊັບສິນອື່ນໆ	-	(5.341)	-	(5.341)
ຈົດລ້າງອອກ	(3.851)	(181)	(9.319)	(13.351)
ວັນທີ 31 ທັນວາ 2019	**-**	**32.683**	**42.389**	**75.072**

26. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນຝາກກະແສລາຍວັນ	**3.522.988**	**2.517.029**
- ເປັນເງິນກີບ	1.127.264	800.136
- ເປັນເງິນຕາຕ່າງປະເທດ	2.395.724	1.716.893
ເງິນຝາກປະຢັດ	**302.654**	**119.495**
- ເປັນເງິນກີບ	45.567	21.954
- ເປັນເງິນຕາຕ່າງປະເທດ	257.087	97.541
ເງິນຝາກມີກຳນົດ	**215.345**	**754.543**
- ເປັນເງິນກີບ	137.359	195.581
- ເປັນເງິນຕາຕ່າງປະເທດ	77.986	558.962
ອື່ນໆ	**22.648**	**22.062**
- ເປັນເງິນກີບ	15.166	9.009
- ເປັນເງິນຕາຕ່າງປະເທດ	7.482	13.053
	4.063.635	**3.413.129**

ອັດຕາດອກເບ້ຍສຳລັບເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນພາຍໃນປີ ມີດັ່ງລຸ່ມນີ້:

	2019 *%ຕໍ່ປີ*	*2018* *%ຕໍ່ປີ*
ເງິນຝາກກະແສລາຍວັນ	0,00% - 0,30%	ບໍ່ມີດອກເບ້ຍ
ເງິນຝາກປະຢັດ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກມີກຳນົດ	0,56% - 6,65%	0,00% - 5,52%

27. ໜີ້ຕ້ອງສົ່ງລູກຄ້າ

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ເງິນຝາກກະແສລາຍວັນ	**5.851.192**	**5.447.954**
ເງິນຝາກກະແສລາຍວັນເປັນເງິນກີບ	2.828.297	2.141.221
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	3.022.895	3.306.733
ເງິນຝາກປະຢັດ	**16.422.065**	**13.092.788**
ເງິນຝາກປະຢັດເປັນເງິນກີບ	8.015.243	5.788.652
ເງິນຝາກປະຢັດເປັນເງິນຕາຕ່າງປະເທດ	8.406.822	7.304.136
ເງິນຝາກກຳນົດ	**13.900.002**	**11.159.134**
ເງິນຝາກມີກຳນົດເປັນເງິນກີບ	7.640.736	6.671.234
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	6.259.266	4.487.900
ເງິນຝາກມັດຈຳ	**104.854**	**103.279**
ເງິນຝາກມັດຈຳເປັນເງິນກີບ	33.832	33.629
ເງິນຝາກມັດຈຳເປັນເງິນຕາຕ່າງປະເທດ	71.022	69.650
ໜີ້ຕ້ອງສົ່ງອື່ນໆ	**141.815**	**111.987**
	36.419.928	**29.915.142**

ອັດຕາດອກເບ້ຍພາຍໃນປີສຳລັບເງິນຝາກດັ່ງກ່າວ ມີດັ່ງລຸ່ມນີ້:

	2019	*2018*
	% ຕໍ່ປີ	*% ຕໍ່ປີ*
ເງິນຝາກກະແສລາຍວັນ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກປະຢັດເປັນເງິນກີບ	1,25% - 1,89%	1,25% - 1,89%
ເງິນຝາກປະຢັດເປັນເງິນໂດລາ	0,90% - 1,15%	0,90% - 1,15%
ເງິນຝາກປະຢັດເປັນເງິນບາດ	0,45% - 0,90%	0,45% - 0,90%
ເງິນຝາກມີກຳນົດເປັນເງິນກີບ	3,16% - 13,00%	3,16% - 6,90%
ເງິນຝາກມີກຳນົດເປັນເງິນໂດລາ	1,65% - 7,75%	1,65% - 6,65%
ເງິນຝາກມີກຳນົດເປັນເງິນບາດ	1,40% - 7,50%	1,40% - 6,40%

28. ເງິນກູ້ຍືມຈາກ ທະນາຄານອື່ນ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ເງິນກູ້ຍືມໄລຍະຍາວຈາກທະນາຄານແຫ່ງ ສປປ ລາວ	1.825.039	2.063.243
ເງິນກູ້ຍືມຈາກທະນາຄານອື່ນ	1.880.339	1.286.023
	3.705.378	**3.349.266**

ເງິນກູ້ຍືມຈາກທະນາຄານແຫ່ງ ສປປ ລາວ ນະວັນທີ 31 ທັນວາ 2019 ລວມມີ:

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 3.265.713 ໂດລາ (ມູນຄ່າເດີມຂອງເງິນກູ້ ແມ່ນ 9.200.000 ໂດລາ ໂດຍອັດຕາດອກເບ້ຍແມ່ນ 0,25% ຕໍ່ປີ) ຈຸດປະສົງແມ່ນເພື່ອ ລົງທຶນໃນ ທະນາຄານ ລາວ - ຝລັ່ງ ຈຳກັດ. ຕົ້ນທຶນເງິນກູ້ແມ່ນຈະຊຳລະເປັນປີ ເລີ່ມແຕ່ປີ 2010 ຫາ 2023 ສຳລັບດອກເບ້ຍແມ່ນຈ່າຍທຸກໆ 6 ເດືອນ.

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 99.854.000 ໂດລາ (ສະກຸນເງິນເດີມແມ່ນ 100.000.000 ໂດລາ ໂດຍອັດຕາດອກເບ້ຍ 5,50% ຕໍ່ປີ.) ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ ໂຄງການເຄື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜຸນຈາກລັດຖະບານ. ຕົ້ນທຶນເງິນກູ້ແມ່ນຊຳລະທຸກໆປີ ເລີ່ມຈາກວັນທີ 1 ມັງກອນ 2016 ຫາ ວັນທີ 27 ສິງຫາ 2025. ດອກເບ້ຍແມ່ນຊຳລະເປັນໄຕມາດ.

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 99.900.000 ໂດລາ (ສະກຸນເງິນເດີມແມ່ນ 100.000.000 ໂດລາ ໂດຍມີອັດຕາດອກເບ້ຍ 5,30% ຕໍ່ປີ) ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ ໂຄງການເຄື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜຸນຈາກລັດຖະບານ. ຕົ້ນທຶນແມ່ນຊຳລະທຸກໆປີເລີ່ມແຕ່ວັນທີ 3 ພຶດສະພາ 2016 ຫາ 3 ພຶດສະພາ 2026. ດອກເບ້ຍແມ່ນຊຳລະເປັນໄຕມາດ.

ເງິນກູ້ຍືມຈາກທະນາຄານພາຍໃນປະເທດ ແລະ ສະຖາບັນການເງິນອື່ນ ນະວັນທີ 31 ທັນວາ 2019 ລວມມີ ເງິນກູ້ຍືມໄລຍະໜຶ່ງປີ ຈຳນວນ 80.000.000 ໂດລາ ຈາກ ICBC ວຽງຈັນ ໂດຍອັດຕາດອກເບ້ຍແມ່ນ 5,5% ຕໍ່ປີ. ຕົ້ນທຶນເງິນກູ້ ແລະ ດອກເບ້ຍແມ່ນຊຳລະເມື່ອຄົບກຳນົດ.

ເງິນກູ້ຍືມຈາກທະນາຄານຕ່າງປະເທດ ແລະ ສະຖາບັນການເງິນອື່ນ ນະວັນທີ 31 ທັນວາ 2019 ລວມມີ ເງິນກູ້ຍືມໄລຍະສີ່ປີ ຈຳນວນ 126.055.000 ໂດລາ (ສະກຸນເງິນເດີມແມ່ນ 148.300.000 ໂດລາ ກູ້ຍືມໄລຍະ 4 ປີ ໂດຍອັດຕາດອກເບ້ຍແມ່ນ 4% + 3 ເດືອນ LIBOR) ສຳລັບຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ກັບໂຄງການຕ່າງໆພາຍໃນປະເທດ. ຕົ້ນທຶນເງິນກູ້ແມ່ນຊຳລະເປັນລາຍປີ ແລະ ດອກເບ້ຍແມ່ນຊຳລະເປັນໄຕມາດ.

29. ອາກອນ

29.1 *ລາຍຈ່າຍອາກອນກຳໄລ*

ອົງປະກອບສຳຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

	2019	*2018*
	ລ້ານກີບ	*ລ້ານກີບ*
ລາຍຈ່າຍອາກອນກຳໄລພາຍໃນປີ	106.644	124.020
ລາຍຈ່າຍ/(ລາຍຮັບ)ອາກອນກຳໄລລໍຖ້າຊຳລະສະສາງ	(5.640)	(18.420)
ລາຍຈ່າຍອາກອນທັງໝົດພາຍໄລຍະ	**101.004**	**105.600**

29.2 *ໜີ້ຕ້ອງສົ່ງອາກອນ*

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ໜີ້ຕ້ອງສົ່ງອາກອນກຳໄລ *(ບົດອະທິບາຍເລກທີ 29.3)*	28.553	31.264
ໜີ້ຕ້ອງສົ່ງອາກອນທີ່ຫັກໄວ້	12.156	-
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	358	4.529
ໜີ້ຕ້ອງສົ່ງອາກອນອື່ນໆ	242	-
	41.309	**35.793**

29.3 *ອາກອນກຳໄລໃນປີ*

ທະນາຄານມີພັນທະຕ້ອງຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລກ່ອນອາກອນ ໂດຍໃຫ້ສອດຄ່ອງກັບກົດໝາຍອາກອນສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ແຕ່ ຫຼື ຫຼັງຈາກວັນທີ 24 ພຶດສະພາ 2016.

29. ອາກອນ (ຕໍ່)

29.3 ອາກອນກຳໄລໃນປີ (ຕໍ່)

ການຄິດໄລ່ຂອງອາກອນກຳໄລພາຍສຳລັບປີ 2019 ແລະ 2018 ແມ່ນມີດັ່ງຕໍ່ໄປນີ້:

	2019 *ລ້ານກີບ*	*2018* *ລ້ານກີບ*
ກຳໄລກ່ອນຫັກອາກອນອີງຕາມ IFRS	**430.486**	**459.256**
ດັດແກ້ສຳລັບ:		
- ບັນທຶກສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຂອງພັນທະບັດພາຍໃຕ້ມາດຕະຖານ LAS ແລະ ມູນຄ່າຫຼຸດຕົ້ນທຶນພາຍໃຕ້ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	2.689	(3.647)
- ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຂອງເງິນກູ້ໃຫ້ແກ່ທະນາຄານ ແລະ ລູກຄ້າພາຍໃຕ້ມາດຕະຖານ LAS ແລະ ມູນຄ່າຫຼຸດຕົ້ນທຶນຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	58.512	-
- ສ່ວນຕ່າງລະຫວ່າງເງິນແຮ່ຄ່າສື່ອມມູນຄ່າຂອງເງິນກູ້ໃຫ້ແກ່ທະນາຄານ ແລະ ລູກຄ້າພາຍໃຕ້ມາດຕະຖານ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	56.666	31.729
- ສ່ວນຕ່າງລະຫວ່າງເງິນອຸດໜູນສຳລັບຜົນປະໂຫຍດພາຍຫຼັງອອກການພາຍໃຕ້ມາດຕະຖານ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	(63.436)	21.425
- ສ່ວນຜິດຕ່ຽງລະຫວ່າງລາຍຈ່າຍຄ່າເສື່ອມມູນຄ່າໃນການລົງທຶນພາຍໃຕ້ມາດຕະຖານ LAS ແລະ ຂອບຂ່າຍການລາຍງານສາລັບຈຸດປະສົງພິເສດ	(30.931)	27.246
ລາຍຮັບທີ່ຖືກຄິດໄລ່ອາກອນອີງຕາມ LAS	**453.986**	**536.009**
ເພີ່ມຂຶ້ນ/(ຫຼຸດລົງ)		
- ລາຍການທີ່ບໍ່ໃຫ້ຖືເປັນລາຍຮັບ	(23.164)	(34.220)
- ລາຍຈ່າຍທີ່ບໍ່ໃຫ້ຖືເປັນລາຍຈ່າຍ	13.529	14.965
ກຳໄລຖືກເສຍອາກອນຕາມ LAS	**444.351**	**516.754**
ອາກອນກຳໄລໃນອັດຕາ 24%	**106.644**	**124.020**
ລາຍຈ່າຍອາກອນທັງໝົດໃນປີ	**106.644**	**124.020**
ອາກອນກຳໄລຕ້ອງຈ່າຍຕົ້ນປີ	31.264	9.491
ການດັດແກ້ອາກອນສຳລັບປີທີ່ຜ່ານມາອີງຕາມຜົນການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ	(446)	-
ອາກອນທີ່ຈ່າຍພາຍໃນປີ	(108.909)	(102.247)
ອາກອນກຳໄລຕ້ອງຈ່າຍທ້າຍປີ	**28.553**	**31.264**

29. ອາກອນ (ຕໍ່)

29.3 ອາກອນກຳໄລໃນປີ (ຕໍ່)

ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບ ທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງ ກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນສະເພາະກິດຈະການ ສຳລັບປີອາດຈະຖືກປ່ຽນແປງຫຼັງຈາກ ມື້ໄລ່ລຽງຂອງກົມສ່ວຍສາອາກອນ.

29.4 ໜີ້ສິນທີ່ອາດເກີດຂຶ້ນ

ນະວັນທີ 6 ພະຈິກ 2019, ກະຊວງການເງິນໄດ້ອອກແຈ້ງການເລກທີ 4475/ກງ ຮຽກຮ້ອງໃຫ້ທະນາຄານທຸລະກິດຄິດໄລ່ ອາກອນກຳໄລຄືນໃໝ່ສຳລັບປີ 2016 ເຖິງ 2019 ເຊິ່ງວ່າເງິນແຮສຳລັບການສູນເສຍສິນເຊື່ອຄວນຖືກພິຈາລະນາເປັນລາຍ ຈ່າຍທີ່ບໍ່ຖືວ່າເປັນລາຍຈ່າຍ. ທະນາຄານໄດ້ສົ່ງໜັງສືທາງການເລກທີ 003/ທຄຕລ ລົງວັນທີ 06 ທັນວາ 2019 ເຖິງກະຊວງ ການເງິນ ແລະ ໜັງສືທາງການເລກທີ 037/ທຄຕລ ລົງວັນທີ 23 ມັງກອນ 2020 ເຖິງ ທະນາຄານແຫ່ງ ສປປ ລາວ ເພື່ອ ຊອກຫາຄວາມກະຈ່າງແຈ້ງ ແລະ ຄຳແນະນຳອັນລະອຽດເພີ່ມເຕີມໃນການຈັດຕັ້ງປະຕິບັດຕາມແຈ້ງການດັ່ງກ່າວ. ຈົນເຖິງ ວັນທີໃນເອກະສານລາຍງານຖານະທາງການເງິນສະເພາະກິດຈະການ, ທະນາຄານຍັງບໍ່ໄດ້ຮັບຄຳຕອບຈາກກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ແລະ ຜົນກະທົບຂອງບັນຫານີ້ (ຖ້າມີ) ແມ່ນຍັງບໍ່ໄດ້ຖືກກຳນົດ. ສະນັ້ນ, ທະນາຄານບໍ່ ໄດ້ບັນທຶກການດັດແກ້ໃດໃນເອກະສານລາຍງານຖານະທາງການເງິນສະເພາະກິດຈະການສຳລັບປີ 2019.

29. ອາກອນ (ຕໍ່)

29.5 ຊັບສິນ/(ໜີ້ສິນ) ອາກອນລໍຖ້າຊຳລະສະສາງ

	ໃບລາຍງານຖານະການເງິນ		*ໃບລາຍງານຜົນການດຳເນີນງານ*		*ໃບລາຍງານຜົນການດຳເນີນງານນອກການທຸລະກິດ*	
	31 ທັນວາ 2019 ລ້ານກີບ	*31 ທັນວາ 2018 ລ້ານກີບ*	*2019 ລ້ານກີບ*	*2018 ລ້ານກີບ*	*2019 ລ້ານກີບ*	*2018 ລ້ານກີບ*
ຊັບສິນອາກອນລໍຖ້າຊຳລະສະສາງ	33.282	29.099	368	11.144	3.815	-
ຜົນກະທົບຈາກການຈັດຕັ້ງປະຕິບັດ IFRS 16 ນະວັນທີ 01 ມັງກອນ 2019	1.239	-	-	-	-	-
ໜີ້ສິນອາກອນລໍຖ້າຊຳລະສະສາງ	-	(5.272)	5.272	7.276	-	1.028
ອາກອນລໍຖ້າຊຳລະສະສາງສຸດທິທີ່ຕ້ອງບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ			**5.640**	**18.420**		
ອາກອນລໍຖ້າຊຳລະສະສາງສຸດທິທີ່ຕ້ອງບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານນອກການທຸລະກິດສະເພາະກິດຈະການ					**3.815**	**1.028**

29. ອາກອນ (ຕໍ່)

29.5 *ຊັບສິນ/(ໜີ້ສິນ) ອາກອນລໍຖ້າຊຳລະສະສາງ* (ຕໍ່)

ລາຍລະອຽດຂອງຊັບສິນ ແລະ ໜີ້ສິນອາກອນລໍຖ້າຊຳລະສະສາງແມ່ນມີດັ່ງຕໍ່ໄປນີ້:

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ສ່ວນຜິດຊົ່ວຄາວທີ່ສາມາດຫັກໄດ້ຊົ່ວຄາວ	143.839	121.247
ໃນນັ້ນ:		
ຜົນກະທົບຈາກການຈັດຕັ້ງປະຕິບັດ IFRS 16 ນະວັນທີ 01 ມັງກອນ 2019	*5.162*	-
ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຂອງພັນທະບັດຕາມ LAS ແລະ ມູນຄ່າຫຼຸດພາຍໃຕ້ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	*5.019*	*2.331*
ສ່ວນຕ່າງ ໃນລາຍຈ່າຍເງິນແຮຂອງການລົງທຶນຕາມ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	-	*30.931*
ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຂອງເງິນກູ້ ໃຫ້ແກ່ ທະນາຄານ ແລະ ລູກຄ້າພາຍໃຕ້ມາດຕະຖານ LAS ແລະ ມູນຄ່າຫຼຸດຕົ້ນທຶນຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	*58.512*	-
ສ່ວນຕ່າງເງິນແຮຄ່າເສື່ອມສຳລັບໜີ້ເສຍຂອງເງິນກູ້ ໃຫ້ແກ່ ລູກຄ້າຕາມ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	*34.700*	-
ສ່ວນຕ່າງ ໃນຜົນປະໂຫຍດຂອງພະນັກງານຫຼັງອອກການຕາມ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	*40.446*	*87.985*
ຊັບສິນອາກອນລໍຖ້າຊຳລະສະສາງ (ໃນອັດຕາ 24%)	**34.521**	**29.099**
ສ່ວນຕ່າງຊົ່ວຄາວລະຫວ່າງໜີ້ຕ້ອງສົ່ງອາກອນ	-	(21.965)
ໃນນັ້ນ:		
ສ່ວນຕ່າງເງິນແຮຄ່າເສື່ອມສຳລັບໜີ້ເສຍຂອງເງິນກູ້ ໃຫ້ແກ່ ລູກຄ້າຕາມ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	-	*(21.965)*
ປ່ຽນແປງ ໃນມູນຄ່າຍຸຕິທຳຂອງເຄື່ອງມືທາງການເງິນຫຼັກຊັບມີໄວ້ເພື່ອຂາຍ ຂອງ ທຄຕລ ຕາມ LAS ແລະ ຂອບຂ່າຍການລາຍງານສຳລັບຈຸດປະສົງພິເສດ	-	-
ໜີ້ສິນອາກອນລໍຖ້າຊຳລະສະສາງ (ໃນອັດຕາ 24%)	-	**(5.272)**

30. ໜີ້ສິນອື່ນໆ

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ໜີ້ຕ້ອງສົ່ງພະນັກງານ	52.477	86.612
ໜີ້ຕ້ອງສົ່ງຜູ້ສະໜອງ	27.832	21.513
ແຜນການກຳນົດຜົນປະໂຫຍດຫຼັງອອກການ (*)	79.219	87.985
ໜີ້ສິນຕາມສັນຍາເຊົ່າ	14.249	-
ອື່ນໆ	51.049	43.423
	224.826	**239.533**

(*) ແຜນງານກຳນົດຜົນປະໂຫຍດຫຼັງອອກການ

ປ່ຽນແປງໃນແຜນງານກຳນົດຜົນປະໂຫຍດຫຼັງອອກການມີດັ່ງລຸ່ມນີ້:

	2019	*2018*
	ລ້ານກີບ	*ລ້ານກີບ*
ນະອັນທີ 1 ມັງກອນ	87.985	65.149
ຄ່າບໍລິການທີ່ຜ່ານມາ	(25.874)	-
ຄ່າບໍລິການນະປັດຈຸບັນ	3.643	18.875
ລາຍຈ່າຍດອກເບ້ຍ	3.682	5.259
ສ່ວນຕ່າງທີ່ເກີດຈາກການປ່ຽນແປງຂໍ້ສົມມຸດຖານທາງການເງິນ	15.897	1.411
ລາຍຈ່າຍຜົນປະໂຫຍດ	(6.114)	(2.709)
ນະອັນທີ 31 ທັນວາ	**79.219**	**87.985**

ລາຍຈ່າຍທາງດ້ານຜົນປະໂຫຍດສຸດທິ (ຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ):

	2019	*2018*
	ລ້ານກີບ	*ລ້ານກີບ*
ຄ່າບໍລິການນະປັດຈຸບັນ	3.643	18.875
ລາຍຈ່າຍດອກເບ້ຍ	3.682	5.259
	7.325	**24.134**

ຂໍ້ສົມມຸດຖານຫຼັກທີ່ໃຊ້ໃນການກຳນົດພາລະຜູກມັດຜົນປະໂຫຍດຂອງພະນັກງານຫຼັງອອກຈາກງານສຳລັບແຜນການຂອງທະນາຄານມີດັ່ງຕໍ່ໄປນີ້.

	2019	*2018*
	%	*%*
ອັດຕາສ່ວນຫຼຸດ	4,68 - 6,11	5,00 - 8,47
ການເພີ່ມຂຶ້ນເງິນເດືອນໃນອະນາຄົດ	0,76	1,03
ອັກຕາພະນັກງານລາອອກ	0,00	0,00

30. ໜີ້ສິນອື່ນໆ (ຕໍ່)

ການວິເຄາະຄວາມອ່ອນໄຫວທາງດ້ານປະລິມານສຳລັບຂໍ້ສົມມຸດຖານທີ່ສຳຄັນ ນະວັນທີ 31 ທັນວາ ແມ່ນສະແດງດັ່ງລຸ່ມນີ້:

	2019 LAKm	*2018 LAKm*
ອັດຕາສ່ວນຫຸ້ດ		
ເພີ່ມຂຶ້ນ 50 ຈຸດ	(6.175)	(7.301)
ຫຼຸດລົງ 50 ຈຸດ	5.596	8.340
ການເພີ່ມເງິນເດືອນໃນອະນາຄົດ		
ເພີ່ມຂຶ້ນ 50 ຈຸດ	(6.448)	(6.001)
ຫຼຸດລົງ 50 ຈຸດ	5.874	5.517

31. ທຶນຈົດທະບຽນ

ບໍ່ມີການປ່ຽນແປງຂອງທຶນຈົດທະບຽນໃນລະຫວ່າງປີ 2019.

32. ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ

	ຄັງສະສົມຕາມລະບຽບການ ລ້ານກີບ	*ຄັງຂະຫຍາຍທຸລະກິດ ລ້ານກີບ*	*ລວມ ລ້ານກີບ*
ນະວັນທີ 1 ມັງກອນ 2018	100.090	280.292	380.382
ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2017	29.584	29.584	59.168
ນະວັນທີ 31 ທັນວາ 2018	**129.674**	**309.876**	**439.550**
ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2018	41.218	123.655	164.873
ນະວັນທີ 31 ທັນວາ 2019	**170.892**	**433.531**	**604.423**

ພາຍໃຕ້ຂໍ້ກຳນົດຂອງກົດໝາຍທະນາຄານທຸລະກິດ, ສະບັບລົງວັນທີ 16 ມັງກອນ 2007 ໄດ້ກຳນົດໃຫ້ ທະນາຄານທຸລະກິດຕ່າງໆຕ້ອງໄດ້ແບ່ງສ່ວນຂອງກຳໄລຫຼັງອາກອນເພື່ອເຂົ້າຄັງແຮຕ່າງໆດັ່ງນີ້:

- ຄັງສະສົມຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມມາດຕາ 156, ກົດໝາຍວິສາຫະກິດ ລົງວັນທີ 26 ທັນວາ 2013, ທະນາຄານຕ້ອງໄດ້ຫັກເງິນແຮສະສົມ 10% ຂອງ ກຳໄລຫຼັງອາກອນຂອງແຕ່ລະປີ ເຂົ້າຄັງສະສົມຕາມລະບຽບການ. ເມື່ອຄັງສະສົມດັ່ງກ່າວມີຍອດເຖິງ 50% ຂອງທຶນຈົດ ທະບຽນ, ທະນາຄານສາມາດຢຸດສະສົມເງິນແຮດັ່ງກ່າວ, ຍົກເວັ້ນກໍລະນີທີ່ກົດໝາຍກຳນົດໄວ້ຢ່າງອື່ນ.

ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆຕ້ອງໄດ້ມີການສ້າງຂຶ້ນບົນພື້ນຖານການຕັດສິນໃຈຂອງຄະນະອຳນວຍການ.

33. ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ

	2019	*2018*
	ລ້ານກີບ	*ລ້ານກີບ*
ຍອດຍົກມາ	-	2.186
ສ່ວນປ່ຽນແປງໃນມູນຄ່າຍຸຕິທຳຂອງ ການລົງທຶນຫຼັກຊັບມີໄວ້ເພື່ອຂາຍ	-	-
ສ່ວນປ່ຽນແປງຈາກເງິນແຮຄ່າເສື່ອມຂອງ ການລົງທຶນຫຼັກຊັບມີໄວ້ເພື່ອຂາຍ	-	(2.875)
ອາກອນກຳໄລທີ່ກ່ຽວຂ້ອງກັບຂາດທຶນສຸດຊັບສິນທາງການເງິນທີ່ມີໄວ້ເພື່ອຂາຍ	-	689
	-	-

34. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດລວມຢູ່ໃນໃບລາຍງານກະແສເງິນສົດສະເພາະກິດຈະການ ປະກອບມີມູນຄ່າຂອງເອກະສານລາຍງານຖານະທາງການເງິນສະເພາະກິດຈະການ ເຊິ່ງມີລາຍລະອຽດດັ່ງນີ້:

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ	2.050.096	1.643.240
ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ	5.752.407	2.396.172
ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ	3.919.881	2.698.317
ເງິນຝາກມີກຳນົດ ພາຍໃນ 90 ມື້	-	464.040
	11.722.384	**7.201.769**

35. ໜີ້ສິນ ແລະ ຄຳໝັ້ນສັນຍາທີ່ອາດເກີດຂຶ້ນ

	31/12/2019	*31/12/2018*
	ລ້ານກີບ	*ລ້ານກີບ*
ໜັງສືຄ້ຳປະກັນທາງການເງິນ	400.347	255.094
ໜັງສືສິນເຊື່ອກັບທີ່	350.346	39.978
ໜັງສືສິນເຊື່ອລໍຖ້າຊຳລະສະສາງ	95.254	162.423
ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ	2.434.380	3.349.575
ວົງເງິນສິນເຊື່ອໃຫ້ແກ່ທະນາຄານອື່ນ	548	548
	3.280.875	**3.807.618**

35. ໜີ້ສິນ ແລະ ຄ່າໜັ້ນສັນຍາທີ່ອາດເກີດຂຶ້ນ (ຕໍ່)

ການຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ. ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້. ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃບບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫຼຸດ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ).

ຂໍ້ຜູກພັນຍັງບໍ່ໄດ້ຖືກຖອນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝຸນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກຳນົດທີ່ໄດ້ກຳນົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ, ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ໄດ້ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈຳເປັນຕ້ອງລາຍງານຢູ່ໃນລາຍງານກະແສເງິນສົດ.

ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນແມ່ນຕ່ຳກວ່າມູນຄ່າທັງໝົດຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້. ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອແມ່ນຄວາມບັງເອີນ ໃນເມື່ອລູກຄ້າຍັງຮັກສາມາດຕະຖານສະເພາະທີ່ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາທີ່ຍາວນານ ແມ່ນມີຄວາມສ່ຽງຫຼາຍກວ່າ ຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

36. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບສະພາບໍລິຫານ ແລະ ຄະນະອຳນວຍການຄົນສຳຄັນຂອງທະນາຄານ

ຜົນປະໂຫຍດໃຫ້ແກ່ສະພາບໍລິຫານ ແລະ ຄະນະອຳນວຍການ ແມ່ນມີລາຍລະອຽດດັ່ງລຸ່ມນີ້:

	2019 *ລ້ານກີບ*	*2018* *ລ້ານກີບ*
ເງິນເດືອນ	1.589	1.557
ເງິນບຳເນັດ	518	499
ເງິນອຸດໜູນຕຳແໜ່ງ	988	1.000
ຜົນປະໂຫຍດອື່ນໆ	48	1.001
	3.143	**4.057**

36. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວທີ່ສຳຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃນປີ 2019 ມີລາຍລະອຽດດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ບົດອະທິບາຍ ເລກທີ*	*ລາຍການເຄື່ອນໄຫວ*	*ລາຍຮັບ ລ້ານກີບ*	*ລາຍຈ່າຍ ລ້ານກີບ*
ທະນາຄານແຫ່ງ ສປປ ລາວ	(i)	ລາຍຈ່າຍດອກເບ້ຍຈາກເງິນກູ້ຢືມ ສຳລັບ ທຫລ	-	124.579
ກະຊວງການເງິນແຫ່ງ ສປປ ລາວ	(ii)	ລາຍຮັບດອກເບ້ຍຈາກການລົງທຶນໃນພັນທະບັດຂອງກະຊວງການເງິນ	169.167	-

ພາກສ່ວນທີ່ກ່ຽວຂ້ອງ	*ບົດອະທິບາຍ ເລກທີ*	*ລາຍການເຄື່ອນໄຫວ*	*ເພີ່ມຂຶ້ນ ລ້ານກີບ*	*ຫຼຸດລົງ ລ້ານກີບ*
ທະນາຄານແຫ່ງ ສປປ ລາວ	(i)	ສ່ວນປ່ຽນແປງສຸດທິໃນເງິນກູ້ຢືມຈາກ ທຫລ	-	(238.204)
		ສ່ວນປ່ຽນແປງສຸດທິໃນເງິນຝາກຢູ່ ທຫລ	3.356.235	
		ສ່ວນປ່ຽນແປງສຸດທິໃນເງິນຝາກຈາກ ທຫລ	464	
ກະຊວງການເງິນແຫ່ງ ສປປ ລາວ	(ii)	ສ່ວນປ່ຽນແປງສຸດທິໃນການລົງທຶນໃນພັນທະບັດຂອງກະຊວງການເງິນ	-	(116.937)
ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ	(iii)	ສ່ວນປ່ຽນແປງສຸດທິໃນເງິນຝາກຢູ່ BCEL - KT	178	-
ທະນາຄານ ຮ່ວມທຸລະກິດລາວ-ຫວຽດ	(iv)	ສ່ວນປ່ຽນແປງສຸດທິໃນເງິນຝາກຢູ່ LVB	171.556	-
		ສ່ວນປ່ຽນແປງສຸດທິໃນເງິນຝາກຈາກ LVB	878.005	-
ທະນາຄານ ລາວ-ຝຣັ່ງ	(iv)	ສ່ວນປ່ຽນແປງສຸດທິໃນເງິນຝາກຢູ່ BFL	-	(9.965)
		ສ່ວນປ່ຽນແປງສຸດທິໃນເງິນຝາກຈາກ BFL	3.144	-
ທະນາຄານ ລາວ-ຈີນ	(iv)	ສ່ວນປ່ຽນແປງສຸດທິໃນເງິນຝາກຢູ່ LCNB	13.792	-

(i) ຜູ້ຄຸ້ມຄອງໂດຍກົງ
(ii) ເຈົ້າຂອງໂດຍກົງ
(iii) ບໍລິສັດໃນເຄືອ
(iv) ບໍລິສັດຮ່ວມທຶນ

36. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອທີ່ສຳຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2019 ມີລາຍລະອຽດດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ບົດອະທິບາຍ ເລກທີ*	*ລາຍການເຄື່ອນໄຫວ*	*ໜີ້ຕ້ອງຮັບ ລ້ານກີບ*	*ໜີ້ຕ້ອງສົ່ງ ລ້ານກີບ*
ທະນາຄານແຫ່ງ ສປປ ລາວ	(i)	ເງິນກູ້ຢືມ ຈາກ ທຫລ	-	1.825.039
		ເງິນຝາກກະແສລາຍວັນ	5.752.407	6.810
		ເງິນຝາກແຮບັງຄັບ	1.399.542	-
ກະຊວງການເງິນ	(ii)	ລົງທຶນໃນພັນທະບັດຂອງ ກະຊວງການເງິນ (ຕົ້ນທຶນ)	3.375.163	-
		ດອກເບ້ຍຄ້າງຮັບ	83.793	-
ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ	(iii)	ບັນຊີເງິນຝາກປະຢັດ	-	1.860
ທະນາຄານ ຮ່ວມທຸລະກິດລາວ-ຫວຽດ	(iv)	ບັນຊີເງິນຝາກກະແສລາຍວັນ	1.195.623	1.072.822
ທະນາຄານ ລາວ-ຝຣັ່ງ	(iv)	ບັນຊີເງິນຝາກກະແສລາຍວັນ	908	10.718
		ບັນຊີເງິນຝາກມີກຳນົດ		10.642
ທະນາຄານ ລາວ-ຈີນ	(iv)	ບັນຊີເງິນຝາກກະແສລາຍວັນ	-	19.379

(i) ຜູ້ຄຸ້ມຄອງໂດຍກົງ
(ii) ເຈົ້າຂອງໂດຍກົງ
(iii) ບໍລິສັດໃນເຄືອ
(iv) ບໍລິສັດຮ່ວມທຶນ

37. ລາຍໄດ້ຕໍ່ຮຸ້ນ

ມູນຄ່າຂອງລາຍໄດ້ຕໍ່ຮຸ້ນ ແມ່ນຄິດໄລ່ຈາກຜົນກຳໄລສຸດທິ ຫຼັງຫັກອາກອນທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນ ຂອງທະນາຄານ ກັບ ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນ.

ລາຍການດັ່ງລຸ່ມນີ້ສະແດງໃຫ້ເຫັນຂໍ້ມູນ ທີ່ໃຊ້ເຂົ້າໃນການຄິດໄລ່ ລາຍໄດ້ຕໍ່ຮຸ້ນ:

	2019	*2018*
ກຳໄລສຸດທິຫຼັງຫັກອາກອນທີ່ຄາດວ່າຈະຕ້ອງໄດ້ຈ່າຍໃຫ້ກັບຜູ້ຖືຮຸ້ນ ສາມັນບົນພື້ນຖານລາຍໄດ້ຕໍ່ຮຸ້ນທົ່ວໄປ (ລ້ານກີບ)	329.482	353.656
ຈຳນວນສະເລ່ຍຂອງຮຸ້ນສາມັນສຳລັບລາຍໄດ້ພື້ນຖານຕໍ່ຮຸ້ນ (ຫົວໜ່ວຍ)	207.723.300	207.723.300
ມູນຄ່າຕໍ່ຮຸ້ນ (ກີບ)	5.000	5.000
ກຳໄລຕໍ່ຮຸ້ນ (ກີບ)	1.586	1.703

38. ນະໂຍບາຍບໍລິຫານຄວາມສ່ຽງ

ຄຳນຳ

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນກັບກິດຈະກຳຂອງທະນາຄານ ໂດຍຜ່ານຕົວຊີ້ບອກທີ່ຊັດເຈນ, ຜ່ານການວັດແທກ ແລະ ການຄວບຄຸມ, ຂອບເຂດຄວາມສ່ຽງ ແລະ ການຄຸ້ມຄອງອື່ນໆ. ການບໍລິຫານຄວາມສ່ຽງ ແມ່ນສິ່ງທີ່ສຳຄັນຕໍ່ຄວາມສາມາດສ້າງກຳໄລຢ່າງຕໍ່ເນື່ອງຂອງທະນາຄານ ແລະ ພະນັກງານແຕ່ລະຄົນພາຍໃນທະນາຄານ ແມ່ນຕ້ອງຮັບຜິດຊອບຕໍ່ຄວາມສ່ຽງທີ່ເກີດຂຶ້ນ ເຊິ່ງກ່ຽວຂ້ອງກັບໜ້າທີ່ຂອງຕົນ.

ຈຸດປະສົງສຳຄັນຂອງທະນາຄານໃນການບໍລິຫານຄວາມສ່ຽງແມ່ນເພື່ອໃຫ້ສອດຄ່ອງກັບລະບຽບຂອງທະນາຄານກາງ ແລະ ອີກເຫດຜົນໜຶ່ງແມ່ນຍ້ອນທະນາຄານໄດ້ຮັບຮູ້ເຖິງຄວາມສຳຄັນຂອງການບໍລິຫານຄວາມສ່ຽງເພື່ອໃຫ້ສອດຄ່ອງຕາມການປະຕິບັດຂອງມາດຕະຖານສາກົນທີ່ດີທີ່ສຸດໃນການບໍລິຫານຄວາມສ່ຽງ. ຄະນະບໍລິຫານ ແລະ ຄະນະອຳນວຍການ, ພ້ອມດ້ວຍການສະໜັບສະໜຸນຈາກຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ແມ່ນກຳລັງກຳນົດຕົວຜັນແປທີ່ຊັດເຈນຂອງຄວາມສ່ຽງທີ່ສາມາດຍອມຮັບໄດ້ຂອງທະນາຄານ ແລະ ຄວບຄຸມການປະຕິບັດທີ່ກົງກັນຂ້າມກັບຕົວຜັນແປນີ້.

ສະພາໄດ້ແຕ່ງຕັ້ງຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມການຈັດການຄວາມສ່ຽງໂດຍລວມຂອງທະນາຄານ.

ທະນາຄານມີຄວາມສ່ຽງທາງດ້ານສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫຼາດ, ຫຼັງຈາກນັ້ນໄດ້ແບ່ງອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ທະນາຄານຍັງມີຄວາມສ່ຽງອື່ນໆອີກທີ່ເກີດຈາກການດຳເນີນງານ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດ ບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດ ເຊັ່ນ: ການປ່ຽນແປງຂອງສະພາບແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງທະນາຄານແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງທະນາຄານ.

ໂຄງສ້າງຂອງການຄຸ້ມຄອງຄວາມສ່ຽງ

ສະພາບໍລິຫານແມ່ນມີຄວາມຮັບຜິດຊອບສຳລັບການບໍລິຫານຄວາມສ່ຽງໂດຍລວມ ແລະ ສຳລັບການອະນຸມັດ ກົນລະຍຸດ ແລະ ຫຼັກການບໍລິຫານຄວາມສ່ຽງ.

ຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ມີຄວາມຮັບຜິດຊອບໃນການພັດທະນາກົນລະຍຸດ ແລະ ຫຼັກການໂດຍລວມ , ຂອບເຂດວຽກ, ນະໂຍບາຍ ແລະ ຂອບເຂດ. ພະແນກປະຕິບັດຕາມ ແລະ ຄວາມສ່ຽງ ແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາບໍລິຫານຮັບຮູ້.

ນະໂຍບາຍຂອງທະນາຄານແມ່ນຂັ້ນຕອນການຈັດການຄວາມສ່ຽງໂດຍທີ່ທະນາຄານໄດ້ຖືກກວດສອບປະຈຳປີ. ເຊິ່ງຜ່ານການ ກວດສອບນີ້ຈະຮູ້ໄດ້ວ່າທະນາຄານສາມາດປະຕິບັດໄດ້ຕາມຂັ້ນຕອນທີ່ວາງໄວ້ ຫຼື ບໍ່. ພະແນກກວດກາພາຍໃນໄດ້ປຶກສາຫາລື ຜົນຂອງການປະເມີນຄວາມສ່ຽງ ແລະ ລາຍງານສິ່ງທີ່ພົບເຫັນ ແລະ ຄຳແນະນຳໃຫ້ຄະນະກຳມະການກວດກາ.

39. ການບໍລິຫານທຶນ

ທະນາຄານໄດ້ຮັກສາທຶນສຳຮອງຕ່ຳສຸດຕາມລະບຽບການເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ລົງວັນທີ 14 ຕຸລາ 2009 ອອກໂດຍຮັກສາການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳອື່ນໆ. ຈຸດປະສົງເບື້ອງຕົ້ນຂອງການບໍລິຫານທຶນຂອງທະນາຄານແມ່ນເພື່ອຮັບປະກັນວ່າ ທະນາຄານໄດ້ປະຕິບັດຕາມຂໍ້ກຳນົດທາງດ້ານເງິນທຶນຂອງທະນາຄານກາງ. ທະນາຄານຮັບຮູ້ເຖິງຄວາມຈຳເປັນຂອງ ທະນາຄານເພື່ອຮັກສາການ

ບໍລິຫານຊັບສິນ ແລະ ໜີ້ສິນໃຫ້ມີປະສິດທິພາບເພື່ອສ້າງສົມດຸນລະຫວ່າງການສ້າງກຳໄລ ແລະ ຄວາມພຽງພໍຂອງທຶນ.

ອີງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ທຶນຕາມລະບຽບການຂອງທະນາຄານກາງຖືກວິເຄາະເປັນ 2 ລະດັບຄື:

- ທຶນຊັ້ນ 1 ປະກອບດ້ວຍ: ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອການຂະຍາຍທຸລະກິດ ແລະ ທຶນອື່ນໆ ແລະ ກຳໄລລໍຖ້າແບ່ງປັນ;
- ທຶນຊັ້ນ 2 ແມ່ນມູນຄ່າເທົ່າກັບ 45% ຂອງການຕີມູນຄ່າຄືນເງິນແຮ ຫຼື ຕ່ຳກວ່າ 1,25% ຂອງຍອດລວມຄວາມສ່ຽງ ຂອງລາຍການໃນໃບລາຍງານຖານະການເງິນສະເພາະກິດຈະການ ແລະ ຍອດເຫຼືອຂອງເງິນແຮທີ່ຈ່າໄປພາຍໃນໄລຍະ

ຂອບເຂດຕ່າງໆແມ່ນຖືກນຳໃຊ້ເພື່ອເປັນອົງປະກອບຂອງທຶນອີງໃສ່: ທຶນຊັ້ນ 2 ບໍ່ສາມາດເກີນທຶນຊັ້ນ 1 ໄດ້ ແລະ ໜີ້ສິນ ສຳຮອງບໍ່ສາມາດເກີນ 50% ຂອງທຶນຊັ້ນ 1.

ການວິເຄາະທຶນແມ່ນອີງຕາມຂໍ້ມູນທາງການເງິນທີ່ໄດ້ຈາກເອກະສານລາຍງານການເງິນສະເພາະກິດຈະການ ພາຍໃຕ້ຂອບ ຂ່າຍການລາຍງານສຳລັບຈຸດປະສົງພິເສດເຊິ່ງມີດັ່ງຕ່ຳໄປນີ້ :

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ທຶນຊັ້ນ 1	2.092.132	1.984.510
ທຶນຊັ້ນ 2	-	-
ລວມທຶນ	**2.092.132**	**1.984.510**
ລົບ: ຫັກອອກຈາກທຶນ (ການລົງທຶນໃນນິຕິບຸກຄົນອື່ນ)	(516.047)	(514.007)
ທຶນສຳລັບການຄິດໄລ່ CAR (A)	**1.576.085**	**1.470.503**
ຄວາມສ່ຽງສຳຄັນຢູ່ໃບລາຍງານຖານະການເງິນ	13.352.734	11.939.639
ຄວາມສ່ຽງສຳຄັນຢູ່ລາຍການນອກໃບລາຍງານຖານະການເງິນ	1.595.547	1.880.710
ລວມຄວາມສ່ຽງສຳຄັນຢູ່ຊັບສິນ (B)	**14.948.281**	**13.814.394**
ອັດຕາສ່ວນຄວາມພຽງພໍຂອງທຶນ (A/B)	**10,54%**	**10,64%**

40. ມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ

ມູນຄ່າຍຸຕິທຳໝາຍເຖິງ ມູນຄ່າຊັບສິນທີ່ສາມາດແລກປ່ຽນເປັນເງິນ ຫຼື ການຊຳລະໜີ້ສິນບົນພື້ນຖານລາຍການເຄື່ອນໄຫວໃນເງື່ອນໄຂແຂ່ງຂັ້ງປົກກະຕິ. ເນື່ອງຈາກວ່າບໍ່ມີລາຄາສົມທຽບຂອງຕະຫຼາດ, ຊັບສິນ ແລະ ໜີ້ສິນ ຂອງທະນາຄານຈຶ່ງບໍ່ສາມາດປະເມີນລາຄາຕາມຕະຫຼາດໄດ້. ດັ່ງນັ້ນ, ມູນຄ່າຍຸຕິທຳຈຶ່ງຖືກປະເມີນແບບສົມມຸດຕິຖານອີງຕາມລັກສະນະຂອງຊັບສິນ ແລະ ໜີ້ສິນ. ຕາມຄຳເຫັນຂອງຄະນະບໍລິຫານ ເງິນທີ່ກູ້ຢືມຈາກ ທຫລ, ມູນຄ່າຕາມບັນຊີຂອງ ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ຢູ່ໃນ ໃບລາຍງານຖານະການເງິນສະເພາະກິດຈະການແມ່ນຖືກຄາດຄະເນຢ່າງສົມເຫດສົມຜົນກັບມູນຄ່າຍຸຕິທຳ. ໃນການປະເມີນດັ່ງກ່າວ, ຄະນະບໍລິຫານຂອງທະນາຄານ ສົມມຸດຖານວ່າ ເງິນກູ້ ສ່ວນໃຫຍ່ຖືຈົນຄົບກຳນົດ ດ້ວຍມູນຄ່າຍຸຕິທຳ ເທົ່າກັບ ມູນຄ່າຕາມບັນຊີຂອງເງິນກູ້ທີ່ຖືກດັດແກ້ເງິນແຮຈາກການຫັກຄ່າເສື່ອມ.

41. ເຫດການທີ່ເກີດຂຶ້ນຫຼັງມື້ທີ່ອອກເອກະສານລາຍງານ

ບໍ່ມີເຫດການໃດເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2019 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງທະນາຄານ.

ໃນວັນທີ 24 ມີນາ 2020, ປະເທດລາວຢືນຢັນພະຍາດອັກເສບປອດຮຸນແຮງຈາກການຕິດເຊື້ອຈຸລະໂລກ ໂກໂລນາ ສາຍພັນໃໝ່ (Covid-19) 2 ກໍລະນີທຳອິດ. ນັບແຕ່ນັ້ນມາ, ລັດຖະບານລາວໄດ້ຈັດຕັ້ງປະຕິບັດມາດຕະການເພື່ອປ້ອງກັນ ແລະ ຕອບໂຕ້ການລະບາດຂອງພະຍາດດັ່ງກ່າວໃນປະເທດລາວ. ໃນຕອນຕົ້ນຂອງເດືອນ ເມສາ 2020, ໄດ້ມີມາດຕະການໃນການຕໍ່ສູ້ກັບການລະບາດທີ່ອາດຈະເກີດຂຶ້ນລວມທັງການປະຕິບັດນະໂຍບາຍໄລຍະຫ່າງທາງສັງຄົມເປັນເວລາ 15 ວັນ.

ເຖິງແມ່ນວ່າປະເທດລາວເປັນປະເທດໜຶ່ງທີ່ຈັດຕັ້ງຄວບຄຸມການແຜ່ລະບາດໄດ້ດີທີ່ສຸດ, ແຕ່ກໍຍັງປະສົບຄວາມຫຍຸ້ງຍາກຈາກການລະບາດຍ້ອນການຖິດຖອຍຂອງອຸດສາຫະກຳເກືອບທັງໝົດທົ່ວປະເທດ.

ຈົນມາເຖິງວັນທີຂອງບົດລາຍງານການເງິນ, ທະນາຄານກຳລັງການປະເມີນຜົນກະທົບຂອງ Covid-19 ຕໍ່ການດຳເນີນງານຂອງທະນາຄານ ພ້ອມທັງ ການດຳເນີນງານ, ກະແສເງິນສົດ ແລະ ເງື່ອນໄຂທາງການເງິນຂອງລູກຄ້າຂອງທະນາຄານເພື່ອນຳໃຊ້ໃນການປັບປຸງໂຄງສ້າງການຊຳລະເງິນກູ້, ການຍົກເວັ້ນ, ການຫຼຸດອັດຕາດອກເບ້ຍ ແລະ ຄ່າທຳນຽມແກ່ລູກຄ້າຂອງທະນາຄານ. ການເພີ່ມຂຶ້ນອັນມີຄ່າສຳຄັນທຽບຖານໃນຄວາມສ່ຽງສິນເຊື່ອ ແລະ ຂໍ້ມູນທີ່ກ່ຽວຂ້ອງອື່ນໆຈະຖືກສະທ້ອນໃຫ້ເຫັນໃນການກະກຽມບົດລາຍງານທາງການເງິນສຳລັບໄລຍະ 6 ເດືອນ ທີ່ສິ້ນສຸດວັນທີ 30 ມິຖຸນາ 2020.

42. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວໃນທ້າຍປີ

	31/12/2019 *ລ້ານກີບ*	*31/12/2018* *ລ້ານກີບ*
ໂດລາ ສະຫະລັດ	8.868,00	8.538,00
ເອີໂຣ	9.915,00	9.753,00
ບາດໄທ	298,59	265,48
ປອນ ອັງກິດ	11.474,00	10.702,00
ເຢນ ຍີ່ປຸ່ນ	79,95	75,80
ໂດລາ ອົດສະຕາລີ	6.104,00	5.966,00
ຢວນ ຈີນ	1.263,00	1.229,00

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ພູແສງທອງ ອານຸລັກຄຳ	ທ່ານ ກິງສັກ ສຸພອນສີ	ທ່ານ ວຽງສຸກ ຈຸນທະວົງ
ຫົວໜ້າພະແນກບັນຊີສັງລວມ	ຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

30 ເມສາ 2020